3.2.3. ການທຳລາຍປ່າໄມ້: ການຂຸດຄົ້ນບໍ່ແຮ່.....31

3.2.4. ການທຳລາຍປ່າໄມ້: ການພັດທະນາພື້ນຖານໂຄງລ່າງ.....31

3.2.5. ການເຮັດໃຫ້ປ່າໄມ້ເສື່ອມໂຊມ: ການປູກໄມ້ໃນເຂດປ່າທຳມະຊາດ.....32

3.2.6. ການເຮັດໃຫ້ປ່າໄມ້ເສື່ອມໂຊມ: ການຂຸດຄົ້ນໄມ້ທີ່ຜິດກົດໝາຍ.....32

3.2.7. ການເຮັດໃຫ້ປ່າໄມ້ເສື່ອມໂຊມ: ໄຟໄໝ້ລາມປ່າ.....32

3.3. **ພາກສ່ວນກ່ຽວຂ້ອງກັບການທຳລາຍປ່າໄມ້ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ**.....32

3.4. **ສາຍເຫດທາງອ້ອມຂອງການທຳລາຍປ່າໄມ້ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ**.....33

3.4.1. ປັດຈັຍດ້ານປະຊາກອນ.....33

3.4.2. ປັດຈັຍດ້ານເສດຖະກິດ.....33

3.4.3. ປັດຈັຍດ້ານນະໂຍບາຍ ແລະ ການຈັດຕັ້ງ.....34

3.5. ການປະເມີນສາເຫດຫຼັກແລະ ວິທີແກ້ໄຂສຳລັບວຽກງານREDD+.....35

ການພັດທະນາພື້ນຖານໂຄງລ່າງ: ການກໍ່ສ້າງເຂື່ອນໄຟຟ້າ.....36

ການປູກໄມ້ອຸດສາຫະກຳໃນເຂດປ່າໄມ້ທຳມະຊາດ.....37

ການຂຸດຄົ້ນໄມ້ທີ່ຜິດກົດໝາຍ.....37

ໄຟໄໝ້ລາມປ່າ.....38

4. ລາຍລະອຽດນະ�โยบาย ແລະ ມາດຕະການຕ່າງໆ (PAMs).....39

4.1. **ເປົ້າໝາຍຂອງPRAP**.....39

4.2. **ຈຸດປະສົງດ້ານການຄຸ້ມຄອງຂອງPRAP**.....39

4.3. **ລາຍລະອຽດນະໂຍບາຍ ແລະ ມາດຕະການຕ່າງໆ**(PAMs)……..39
ອົງປະກອບ 1: ການຄຸ້ມຄອງທີ່ດິນແບບຄົບວົງຈອນ……..39
ອົງປະກອບ 2: ການຄຸ້ມຄອງປ່າໄມ້……43
ອົງປະກອບ 3: ການຄຸ້ມຄອງທາງສັງຄົມ(ຊີວິດການເປັນຢູ່)……50
4.4. ການວິເຄາະຜົນປະໂຫຍດ ແລະ ຄວາມສ່ຽງຂອງນະໂຍບາຍ ແລະ ມາດຕະການ (PAMs)……53
4.4.1. ຜົນປະໂຫຍດທີ່ບໍ່ໄດ້ຈາກການກບອນປ່າໄມ້ທີຕິດພັນກັບ PAMs……53
4.4.2. ຄວາມສ່ຽງທີ່ຕິດພັນກັບ PAMs ແລະ ມາດຕະການແກ້ໄຂ……..53
4.5. ການວິເຄາະກົດໝາຍ, ກົດລະບຽບ ແລະ ນິຕິກຳອື່ນໆ……..54
5. ແຜນຈັດຕັ້ງປະຕິບັດ……...59
6. ການສ້າງແຜນດຳເນີນງານ ແລະ ແຜນການເງິນ...……...……..67
6.1. ການກະກຽມອົງການຈັດຕັ້ງປະຕິບັດ ແລະ ການຈັດຕັ້ງປະຕິບັດ……67
6.1.1. ພາກສ່ວນຮັບຜິດຊອບໃນການຄຸ້ມຄອງບໍລິຫານ PRAP……..67
6.1.2. ສະຖາບັນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ PRAP……68
6.2. ງົບປະມານສຳລັບການຈັດຕັ້ງປະຕິບັດ PRAP……70
6.3. ແຫຼ່ງທຶນ……70
6.4. ການວິເຄາະດ້ານເສດຖະກິດຂອງໂຄງການ……..71
6.5. ການວິເຄາະຄວາມອ່ອນໄຫວ……71
7. ລະບົບການຕິດຕາມກວດກາ ແລະ ປະເມີນຜົນ…...……73
ເອກະສານຊ້ອນທ້າຍ 1: ຕາຕະລາງເພີ່ມເຕີມ……...74
ເອກະສານຊ້ອນທ້າຍ 2: ຕາຕະລາງເພີ່ມເຕີມ ສຳລັບແຜນງົບປະມານເພື່ອຈັດຕັ້ງປະຕິບັດ PRAP……..86

ຄຳສັບຫຍໍ້

ADB	ທະນາຄານພັດທະນາອາຊີ
CBA	ການວິເຄາະຜົນຕອບແທນ
CF	ກອງທຶນການກວບອນ
CliPAD	ໂຄງການປົກປັກຮັກສາດິນຟ້າອາກາດ ໂດຍຫຼີກຫຼ່ຽງການທຳລາຍປ່າໄມ້ (ເຢັຍລະມັນ)
DAFO	ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
DONRE	ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ
DPIO	ຫ້ອງການແຜນການ ແລະ ການລົງທຶນເມືອງ
DRAP	ຄະນະຮັບຜິດຊອບສ້າງແຜນປະຕິບັດງານ REDD+ ຂັ້ນເມືອງ
ER-P	ແຜນງານຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ
ERR	ອັດຕາຜົນຕອບແທນການລົງທຶນທີ່ຄາດຫວັງ
ER-PD	ເອກະສານແຜນງານຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ
ER-PIN	ເອກະສານແນວຄວາມຄິດສຳລັບແຜນງານຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ
ESMMP	ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ-ສັງຄົມ
FCPF	ໂຄງການຄວາມຮ່ວມມືຫຸ້ນສ່ວນການກວບອນໃນປ່າ
FLEGT	ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າ
F-REDD	ໂຄງການສະໜັບສະໜູນການຄຸ້ມຄອງປ່າໄມ້ແບບຍືນນານ ແລະ REDD+
FSC	ສະພາບໍລິຫານປ່າໄມ້ (ອົງການສາກົນອອກໃບຢັ້ງຢືນປ່າໄມ້)
GIZ	ອົງການຮ່ວມມືສາກົນຂອງລັດຖະບານເຢັຍລະມັນ
IRR	ອັດຕາຜົນຕອບແທນການລົງທຶນພາຍໃນ
JICA	ອົງການຮ່ວມມືສາກົນຍີ່ປຸ່ນ
kfw	ອົງການຮ່ວມມືປະເທດເຢັຍລະມັນ
Lao PDR	ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ)
LDC	ປະເທດດ້ອຍພັດທະນາ
LFNC	ແນວລາວສ້າງຊາດ
LPTP	ໂຄງການຄຸ້ມຄອງໄມ້ສັກຫຼວງພະບາງ
LUP	ການວາງແຜນນຳໃຊ້ທີ່ດິນ
LWU	ສະຫະພັນຍິງ
M&E	ການຕິດຕາມກວດກາ ແລະ ປະເມີນຜົນ
MAF	ກະຊວງກະສິກຳ ແລະ ປ່າໄມ້ (ກປ)
MEM	ກະຊວງພະລັງງານ ແລະ ບໍ່ແຮ່
MONRE	ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ)
MOs	ຈຸດປະສົງການຄຸ້ມຄອງ
MPI	ກະຊວງແຜນການ ແລະ ການລົງທຶນ
MRV	ການວັດແທກ, ລາຍງານ ແລະ ພິສູດຢັ້ງຢືນ
NDC	ເອກະສານການປະກອບສ່ວນຂອງລັດຖະບານ ສປປ ລາວ
NEC	ຄະນະກຳມະການສິ່ງແວດລ້ອມແຫ່ງຊາດ
NPV	ມູນຄ່າສຸດທິປະຈຸບັນ
NSCC	ຍຸດທະສາດການປ່ຽນແປງດິນຟ້າອາກາດແຫ່ງຊາດ
NTFP	ເຄື່ອງປ່າຂອງດົງ
PAMs	ນະໂຍບາຍ ແລະ ມາດຕະການ
PPIO	ພະແນກແຜນການ ແລະ ການລົງທຶນແຂວງ

PLUP	ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຢູ່ ຂັ້ນບ້ານ
PONRE	ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ (ພຊສ)
PRAP	ແຜນປະຕິບັດງານ REDD+ ຂັ້ນແຂວງ
PRO	ຫ້ອງການ REDD+ ຂັ້ນແຂວງ
REDD+	ການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ, ການອະນຸລັກການກວນປ່າໄມ້, ຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ເພີ່ມທະວີການເກັບກັກການກວນໃນປ່າໄມ້
RL/REL	ເສັ້ນລະດັບທຽບຖານ/ລະດັບທຽບຖານການປ່ອຍອາຍພິດເຮືອນແກ້ວ
R-Package	ເອກະສານການກຽມຄວາມພ້ອມ (RPP)
R-PIN	ເອກະສານແຜນກຽມຄວາມພ້ອມ (R-PIN)
SEDP	ແຜນພັດທະນາເສດຖະກິດ-ສັງຄົມ
SIDA	ອົງການຮ່ວມມືສາກົນແຫ່ງປະເທດຊູແອດ
SDC	ອົງການຮ່ວມມືປະເທດສະວິດ (Swiss)
UNFCCC	ສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດຂອງສະຫະປະຊາຊາດ
UN-REDD	ແຜນງານ REDD ຂອງສະຫະປະຊາຊາດ
VFM	ການຄຸ້ມຄອງປ່າໄມ້ບ້ານ
WG	ກຸ່ມເຮັດວຽກສະເພາະ

ບົດຄັດຫຍໍ້

ແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP)	
ໄລຍະເວລາຂອງ PRAP: 2018 – 2025 (8 ປີ)	
ເປົ້າໝາຍຂອງ PRAP: ປະກອບສ່ວນເຂົ້າໃນວຽກງານການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໂດຍຜ່ານກິດຈະກຳ REDD+ ຄຽງຄູ່ກັບການປົກປັກຮັກສາ ແລະ ເພີ່ມທະວີການບໍລິຫານຈັດການລະບົບນິເວດ ແລະ ຊີວະນາໆພັນຂອງປ່າໄມ້, ການພັດທະນາທີ່ສາມາດປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ ແລະ ຮັບປະກັນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.	ຈຸດປະສົງຂອງ PRAP: 1. ຫຼຸດຜ່ອນການທຳລາຍປ່າໄມ້ ຢູ່ ໃນເຂດປ່າໄມ້ທີ່ຍັງມີໃນປະຈຸບັນ. 2. ຫຼຸດຜ່ອນການເຮັດໃຫ້ປ່າໄມ້ເສື່ອມໂຊມ ຢູ່ ໃນເຂດປ່າໄມ້ທີ່ຍັງມີໃນປະຈຸບັນ. 3. ຊຸກຍູ້ສິ່ງເສີມການຟື້ນຟູປ່າແບບທຳມະຊາດ ແລະ ການປູກໄມ້ຟື້ນຟູປ່າໃນເຂດປ່າໄມ້ທີ່ເສື່ອມໂຊມ. 4. ຊຸກຍູ້ສິ່ງເສີມ ແລະ ຄຸ້ມຄອງການປູກໄມ້ແບບຍືນຍົງໃນເຂດປ່າໄມ້ທີ່ເສື່ອມໂຊມ. 5. ເພີ່ມທະວີການບໍລິຫານຈັດການລະບົບນິເວດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.
ເນື້ອທີ່ປະເມີນການກວບຄຸມປ່າໄມ້ຂອງແຂວງຫຼວງພະບາງ	ລາຍຊື່ຜູ້ທີ່ມີສ່ວນຮ່ວມໃນການສ້າງ PRAP: • ທ່ານ ຫຸມຈິດສະຫວາດ ໂສດາຣັກ, ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້/ຄະນະຊີ້ນຳ REDD+ ຂັ້ນແຂວງ • ທ່ານ ພອນແກ້ວ ຜົນຜາລິ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫົວໜ້າຫ້ອງການ REDD+ ຂັ້ນແຂວງ/ຄະນະຮັບຜິດຊອບສ້າງ PRAP • ທ່ານ ຊ້າງ ຊະນະຜົນ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຮອງຫົວໜ້າຫ້ອງການ REDD+ ຂັ້ນແຂວງ/ຄະນະຮັບຜິດຊອບສ້າງ PRAP • ທ່ານ ຫົງຄຳ ແສນອານາຈັກ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ສະມາຊິກຫ້ອງການ REDD+ ຂັ້ນແຂວງ/ຄະນະຮັບຜິດຊອບສ້າງ PRAP • ທ່ານ ສຸລິເດດ ບຸນມະນີ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ສະມາຊິກຫ້ອງການ REDD+ ຂັ້ນແຂວງ/ຄະນະຮັບຜິດຊອບສ້າງ PRAP • ທ່ານ ສົມຈິດ ມາລາລອຍ, ປະສານງານດ້ານວິຊາການໂຄງການ F-REDD/JICA • ທ່ານ ທາກາຢູກິ ນາມູຣະ, ຊ່ຽວຊານໂຄງການ F- REDD /JICA
ເມືອງທີ່ເຂົ້າຮ່ວມ: 12 ເມືອງ (ຫຼວງພະບາງ, ຈອມເພັດ, ຊຽງເງີນ, ນານ, ປາກອູ, ປາກແຊງ, ໂພນໄຊ, ນ້ຳບາກ, ງອຍ, ວຽງຄຳ, ໂພນທອງ, ພູຄູນ)	
ກຸ່ມບ້ານທີ່ເຂົ້າຮ່ວມ:	
ກຳນົດຂອງການຈັດຕັ້ງປະຕິບັດ PRAP: 1 ມັງກອນ 2018 – 31 ທັນວາ 2025	
ພາບລວມຂອງແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP) ສະພາບລວມທາງດ້ານເສດຖະກິດ-ສັງຄົມຂອງແຂວງ: ແຂວງຫຼວງພະບາງ ຕັ້ງຢູ່ທາງພາກເໜືອຂອງລາວ, ມີເນື້ອທີ່ທັງໝົດ 20.009 ກິໂລຕາແມັດ, ເນື້ອທີ່ສ່ວນໃຫຍ່ເປັນພູ , ພູດອຍ ແລະ ຜາຫີນສູງຊັນ ກວມ 85%. ບ່ອນທີ່ສູງສຸດແມ່ນຢູ່ຈອມພູໝ້ຽງເມືອງຈອມເພັດ ມີຄວາມສູງ 2.257 ແມັດ ແລະ ບ່ອນຕ່ຳສຸດ ຢູ່ຈຸດປາກຄານ ເມືອງຫຼວງພະບາງ ມີປະມານ 260 ແມັດທຽບໃສ່ລະດັບໜ້ານ້ຳທະເລ ໂດຍແບ່ງອອກເປັນ 12 ເມືອງເຊັ່ນ: ເມືອງຫຼວງພະບາງ ,	

ຊຽງເງິນ, ນານ, ປາກອູ, ນ້ຳບາກ, ງອຍ, ໂພນທອງ, ວຽງຄຳ, ປາກແຊງ, ໂພນໄຊ, ຈອມເພັດ ແລະ ພູຄູນ, ມີ 96 ກຸ່ມບ້ານ, 10 ເຂດ, 752 ບ້ານ ມີ 77 .717 ຄອບຄົວ ແລະ ພົນລະເມືອງ 454 .095 ຄົນ, ຍິງ 278 .000 ຄົນ ໃນປີ 2015. ແຂວງຫຼວງພະບາງປະກອບ ດ້ວຍຫຼາຍຊົນເຜົ່າເຊັ່ນ: ລາວ, ໄຕ, ຜູ້ໄທ, ລື້, ยอน, ໄທ ເໜືອ, ກົມມຸ, ໄປຣ, ແທ່ນ, ມົ້ງ, ອິວມຽນ, ພູນ້ອຍ ແລະ ຫໍ້. ການຜະລິດກະສິກຳແມ່ນກົດຈະກຳຫຼັກໃນການດຳລົງຊີວິດຂອງປະຊາຊົນ ເປັນຕົ້ນແມ່ນເຮັດໄຮ່, ເຮັດນາ ແລະ ປູກຝັງລ້ຽງສັດ. ເນື່ອງຈາກ ວ່າເປັນແຂວງພູດອຍ ເນື້ອທີ່ນາຈຶ່ງມີຈຳກັດ. ການເຮັດໄຮ່ປູກພືດໃນໄລຍະຜ່ານມາ ຈຶ່ງໄດ້ເຂົ້າມາທົດແທນການປູກເຂົ້າຢ່າງເປັນຂະບວນ ເປັນຕົ້ນແມ່ນ: ສາລີ, ໝາກເດືອຍ, ໝາກງາ ແລະ ອື່ນໆ ສົມທົບກັບຄວາມພະຍາຍາມຂອງລັດຖະບານໃນການຢຸດຕິການຖາງປ່າເຮັດໄຮ່ ແບບເລື່ອນລອຍ ຫັນມາເຮັດໄຮ່ຄົງທີ່ດ້ວຍການປູກເຂົ້າ ແລະ ພືດທີ່ເປັນສິນຄ້າ. ການພັດທະນາພື້ນຖານໂຄງລ່າງອື່ນໆເຊັ່ນ: ການສ້າງ ເຂື່ອນໄຟຟ້າແມ່ນໜຶ່ງໃນບັນດາກົດຈະກຳທີ່ເປັນບູລິມະສິດໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງແຂວງ ໂດຍສະເພາະແຜນພັດ ທະນາເສດຖະກິດ-ສັງຄົມ 5 ປີ (2015-2020) ຂອງແຂວງ. ຄາດໝາຍສູ້ຊົນຮອດປີ 2020 ໃຫ້ມີເຂື່ອນໄຟຟ້າພະລັງງານນ້ຳທັງໝົດ 9 ແຫ່ງ, ສາມາດຜະລິດກະແສໄຟຟ້າໄດ້ 733,2 ເມກາວັດ ເພື່ອສະໜອງໃຫ້ສາຍສົ່ງໄຟຟ້ຳແຫ່ງຊາດ.

ສັງລວມຊັບພະຍາກອນປ່າໄມ້ຂອງແຂວງ:
ໃນປີ 2015, ແຂວງຫຼວງພະບາງ ມີເນື້ອທີ່ປ່າໄມ້ທັງໝົດປະມານ 1.824.795 ເຮັກຕາ ກວມ 91.7%, ໃນນັ້ນ 48.4% ເປັນປ່າທຳມະ ຊາດ ແລະ 43.3% ເປັນປ່າເລົ່າ. ເນື້ອທີ່ປ່າເລົ່າທີ່ມີເປີເຊັນສູງນີ້ ສາເຫດແມ່ນມາກຈາກການຖາງປ່າເຮັດໄຮ່ ຊຶ່ງແມ່ນຮູບແບບວິທີໃນ ການດຳລົງຊີວິດຂອງປະຊາຊົນໂດຍທົ່ວໄປ. ເນື້ອທີ່ປ່າທຳມະຊາດທີ່ຍັງມີສ່ວນໃຫຍ່ແມ່ນເປັນປ່າປະສົມ.

ສັງລວມການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ:
ສາເຫດຫຼັກຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ຢູ່ ແຂວງຫຼວງພະບາງ ແມ່ນການຂະຫຍາຍເນື້ອທີ່ຜະລິດກະສິກຳ ແລະ ການຖາງປ່າເຮັດໄຮ່ແບບເລື່ອນລອຍ. ນອກນັ້ນ, ຍັງມີສາເຫດອື່ນເຊັ່ນການພັດທະນາພື້ນຖານໂຄງລ່າງ , ການສ້າງເຂື່ອນໄຟຟ້າພະລັງ ງານນ້ຳ, ການຂຸດຄົ້ນບໍ່ແຮ່, ການກໍ່ສ້າງເສັ້ນທາງ ແລະ ຊົນລະປະທານ. ສ່ວນສາເຫດຂອງການເຮັດໃຫ້ປ່າໄມ້ເສື່ອມໂຊມ ແມ່ນມາຈາກການ ປູກໄມ້ອຸດສາຫະກຳໃນເຂດປ່າທຳມະຊາດ, ການຂຸດຄົ້ນໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ໄຟໄໝ້ລາມປ່າ ຊຶ່ງໃນນັ້ນການຂຸດຄົ້ນໄມ້ທີ່ບໍ່ ຖືກຕ້ອງຕາມກົດໝາຍ ແມ່ນສາເຫດຫຼັກຂອງການເຮັດໃຫ້ປ່າໄມ້ເສື່ອມໂຊມ. ສຳລັບສາເຫດທາງອ້ອມຂອງການທຳລາຍປ່າໄມ້ ແລະ ການ ເຮັດໃຫ້ປ່າໄມ້ເສື່ອມໂຊມນັ້ນ ແມ່ນມາຈາກປັດໄຈຫຼາຍດ້ານເຊັ່ນ: ດ້ານປະຊາກອນ, ເສດຖະກິດ, ນະ�โยบาย ແລະ ອົງການຈັດຕັ້ງ ຊຶ່ງຜົນ ກະທົບຈາກແຕ່ລະດ້ານລວມມີ: ການເພີ່ມຂຶ້ນຂອງປະຊາກອນ, ຄວາມທຸກຍາກ, ຄວາມຕ້ອງການຂອງຕະຫຼາດ, ຂາດທາງເລືອກໃນການ ດຳລົງຊີວິດ, ການຈັດຕັ້ງຄຸ້ມຄອງ ແລະ ການນຳໃຊ້ລະບຽບກົດໝາຍ ຍັງບໍ່ເຂັ້ມງວດ, ທິດທາງນະ�โยบายด้านการพัฒนาของลัดถะ บານ. ພາກສ່ວນທີ່ເປັນຕົ້ນເຫດຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ສ່ວນໃຫຍ່ແມ່ນຊາວກະສິກອນຂະໜາດ ນ້ອຍ ແລະ ພາກສ່ວນທຸລະກິດ. ບ່ອນທີ່ປ່າໄມ້ຖືກທຳລາຍ ແລະ ເສື່ອມໂຊມ ສ່ວນຫຼາຍແມ່ນເຂດປ່າປ້ອງກັນ ແລະ ພື້ນທີ່ປ່າໄມ້ທີ່ບໍ່ທັນ ໄດ້ຈັດສັນ ຊຶ່ງສອງເຂດນີ້ຕ້ອງໄດ້ພິຈາລະນາໃຫ້ເປັນເຂດບູລິມະສິດຂອງການຈັດຕັ້ງປະຕິບັດນະ�โยบาย ແລະ ມາດຕະການ (PAMs) ເພື່ອແກ້ໄຂບັນຫາການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ.

ສັງລວມການແກ້ໄຂບັນຫາການທຳລາຍປ່າໄມ້:
ນະ�โยบาย ແລະ ມາດຕະການ ໃນ 3 ຂະແໜງການ ທີ່ເປັນຈຸດສຸມມີດັ່ງນີ້:
<u>ອົງປະກອບ 1: ການຄຸ້ມຄອງທີ່ດິນແບບຄົບວົງຈອນ</u>

- ການປັບປຸງການວາງແຜນນຳໃຊ້ທີ່ດິນຂັ້ນແຂວງ
- ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຢູ່ ຂັ້ນບ້ານ
- ການຂຶ້ນທະບຽນ ແລະ ອອກໃບຕາດິນ
- ການຄຸ້ມຄອງ ແລະ ການປະຕິບັດກົດໝາຍສຳລັບການສຳປະທານທີ່ດິນ, ການຜະລິດກະສິກຳ ແລະ ການປູກໄມ້ຕາມຂໍ້ຜູກພັນສັນຍາ
- ການຄຸ້ມຄອງ ແລະ ການປະຕິບັດກົດໝາຍສຳລັບຂະແໜງການທີ່ນຳໃຊ້ທີ່ດິນ

ອົງປະກອບ 2: ການຄຸ້ມຄອງປ່າໄມ້

- ການກຳນົດຄືນຂອບເຂດຂອງ 3 ປະເພດປ່າ ລະດັບຊາດ, ແຂວງ ແລະ ເມືອງ ແບບພູມີທັດ
- ການຄຸ້ມຄອງປ່າໄມ້ແບບພູມີທັດໃນເຂດປ່າປ້ອງກັນ
- ການຄຸ້ມຄອງປ່າໄມ້ບ້ານ
- ການຟື້ນຟູປ່າໄມ້ ແລະ ການປູກໄມ້ໃຫ້ເປັນປ່າ
- ການຄຸ້ມຄອງການປູກໄມ້ສັກແບບຍືນຍົງ ແລະ ການປັບປຸງຕ່ອງໂສ້ມູນຄ່າ
- ການນຳໃຊ້ກົດໝາຍ ແລະ ການຄວບຄຸມການຕັດໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ
- ການປ້ອງກັນໄຟໄໝ້ລາມປ່າ
- ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້

ອົງປະກອບ 3: ການຄຸ້ມຄອງທາງສັງຄົມ (ປັບປຸງຊີວິດການເປັນຢູ່)

- ທາງເລືອກໃນການປູກພືດເສດຖະກິດເຂດພູດອຍ
- ການລ້ຽງສັດ ແລະ ການປູກຫຍ້າອາຫານສັດ
- ການພັດທະນາທ່ອງທ່ຽວທຳມະຊາດໂດຍປະຊາຊົນມີສ່ວນຮ່ວມ

ສັງລວມກອງປະຊຸມປຶກສາຫາລື:

PRAP ໄດ້ຖືກສ້າງຂຶ້ນໂດຍຜ່ານການປຶກສາຫາລືໃນກອງປະຊຸມຫຼາຍລະດັບ ແລະ ຫຼາຍຄັ້ງ ຢູ່ ຂັ້ນແຂວງ, ເມືອງ ແລະ ກຸ່ມບ້ານ.

ການປຶກສາຫາລື	ຄັ້ງວັນທີ	ລາຍລະອຽດການປຶກສາຫາລື
ການປຶກສາຫາລືຄັ້ງທີ 1 ຢູ່ຂັ້ນເມືອງ	ກຸມພາ 2016	• ເກັບກຳຂໍ້ມູນເບື້ອງຕົ້ນຈຸດທີ່ມີການທຳລາຍປ່າໄມ້ຢ່າງຮ້າຍແຮງ, ສາເຫດ ແລະ ມາດຕະການທີ່ເປັນໄປໄດ້ເພື່ອແກ້ໄຂບັນຫາດັ່ງກ່າວ
ກອງປະຊຸມປຶກສາຫາລືຄັ້ງທີ 1 ຢູ່ຂັ້ນແຂວງ	ສິງຫາ 2016	• ສະເໜີຜົນຂອງການວິເຄາະສາເຫດຂອງການທຳລາຍປ່າໄມ້ • ປຶກສາຫາລືແນວທາງ ແລະ ວິທີແກ້ໄຂ ຢູ່ ແຂວງຫຼວງພະບາງ
ກອງປະຊຸມປຶກສາຫາລືຄັ້ງທີ 2 ຢູ່ຂັ້ນແຂວງ	ຕຸລາ 2016	• ກຳນົດນະໂຍບາຍ ແລະ ມາດຕະການທີ່ເປັນໄປໄດ້ເພື່ອຫຼຸດຜ່ອນການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ, ການປົກປັກຮັກສາອະນຸລັກປ່າໄມ້ ແລະ ການປູກໄມ້ຟື້ນຟູປ່າ ຢູ່ ແຂວງຫຼວງພະບາງ
ການປຶກສາຫາລືຄັ້ງທີ 2 ຢູ່ຂັ້ນເມືອງ	ມີນາ 2017	• ກຳນົດສາເຫດທາງກົງ ແລະ ທາງອ້ອມຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ອີງໃສ່ຄວາມຮ້າຍແຮງຂອງສາເຫດເພື່ອຈັດບູລິມະສິດ • ກຳນົດນະໂຍບາຍ ແລະ ມາດຕະການທີ່ເປັນໄປໄດ້ເພື່ອຫຼຸດຜ່ອນການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ແລະ ການປູກໄມ້ຟື້ນຟູປ່າ ຢູ່ ແຂວງຫຼວງພະບາງ
ການປຶກສາຫາລືຢູ່ຂັ້ນກຸ່ມບ້ານ	ມີນາ 2017	• ກຳນົດສາເຫດທາງກົງ ແລະ ທາງອ້ອມຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ອີງໃສ່ຄວາມຮ້າຍແຮງຂອງສາເຫດເພື່ອຈັດບູລິມະສິດ • ກຳນົດນະໂຍບາຍ ແລະ ມາດຕະການທີ່ເປັນໄປໄດ້ເພື່ອຫຼຸດຜ່ອນການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ແລະ ການປູກໄມ້ຟື້ນຟູປ່າ ຢູ່ ແຂວງຫຼວງພະບາງ
ກອງປະຊຸມປຶກສາຫາລື ຄັ້ງສຸດທ້າຍ ຢູ່ ຂັ້ນແຂວງ	ກັນຍາ 2017	• ປຶກສາຫາລືຜົນໄດ້ຮັບຈາກກອງປະຊຸມລະດັບເມືອງ ແລະ ກຸ່ມບ້ານ ແລະ ຜ່ານຮ່າງ PRAP ເພື່ອປະກອບຄຳຄິດເຫັນ ແລະ ເປັນເອກະພາບ

ການຈັດຝຶກອົບຮົມເພື່ອສ້າງຄວາມເຂັ້ມແຂງກ່ຽວກັຍ REDD+ ເພື່ອສ້າງ PRAP ໄດ້ຈັດຂຶ້ນຫຼາຍຄັ້ງລະຫວ່າງສົກປີ 2016-2017 ເພື່ອ ໃຫ້ພາກສ່ວນທີ່ກ່ຽວຂ້ອງເຂົ້າໃຈກ່ຽວກັບ REDD, ການປົກປ້ອງ ແລະ ບົດບາດຍິງຊາຍ. ການຝຶກອົບຮົມແມ່ນຈັດຂຶ້ນ ຢູ່ ຫຼວງພະບາງ ແລະ ບາງກອກ , ປະເທດໄທ ລວມທັງໝົດ 126 ທ່ານ ຊຶ່ງແມ່ນພະນັກງານມາຈາກແຂວງ ແລະ ເມືອງ ຜູ້ທີ່ມີສ່ວນຮ່ວມໃນວຽກງານ REDD+ ທັງລະດັບຊີ້ນຳ ແລະ ຜູ້ປະຕິບັດກິດຈະກຳຕົວຈິງ.	
ສັງລວມດ້ານງົບປະມານ ແລະ ແຫຼ່ງທຶນ	
ງົບປະມານໃຊ້ຈ່າຍທັງໝົດໃນການຈັດຕັ້ງປະຕິບັດ PRAP ໃນໄລຍະ 8 ປີ (2018-2025) ແມ່ນ 20.14 ລ້ານໂດລາສະຫະລັດ ຫຼື ເທົ່າ ກັບ 161.09 ຕື້ກີບ. ໃນນີ້, 3.73 ລ້ານໂດລາ ແມ່ນສຳລັບວຽກງານການຄຸ້ມຄອງທີ່ດິນແບບຄົບວົງຈອນ (PAMs/ອົງປະກອບ 1), 11.16 ລ້ານໂດລາ ແມ່ນສຳລັບວຽກງານຄຸ້ມຄອງປ່າໄມ້ (PAMs/ອົງປະກອບ 2) ແລະ 5.25 ລ້ານໂດລາ ແມ່ນສຳລັບວຽກງານການຄຸ້ມຄອງທາງ ສັງຄົມ/ປັບປຸງຊີວິດການເປັນຢູ່ (PAMs/ອົງປະກອບ 3). ໃນຂະນະທີ່ PRAP ຈະປະກອບສ່ວນເຂົ້າໃນແຜນງານຫຼຸດຜ່ອນອາຍພິດເຮືອນແກ້ວ (ER programme) ທີ່ຄວບຄຸມໃນປະຈຸບັນນັ້ນ ການຊອກຫາແຫຼ່ງທຶນອື່ນມາເພີ່ມ ເພື່ອໃຫ້ການຈັດຕັ້ງປະຕິບັດ PRAP ປະສົບຜົນສຳເລັດໂດຍໄວ ເພື່ອເປີດຊ່ອງທາງໃຫ້ການຊຳລະ ອີງໃສ່ຜົນງານຂອງການປົກປັກສາປ່າໄມ້ (results-based payments) ປະກົດຜົນເປັນຈິງ. ຂໍ້ຈຳກັດທາງດ້ານງົບປະມານຂອງແຂວງ ຈະເປັນອຸປະສັກອັນໃຫຍ່ຫຼວງ ສຳລັບການຈັດຕັ້ງປະຕິບັດ PRAP ແລະ ຈຳເປັນຕ້ອງໄດ້ຄົ້ນຄ້ວາຊອກຫາແຫຼ່ງທຶນ ເພີ່ມຈາກພາຍນອກ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ PRAP ໃຫ້ສຳເລັດ.	
ການຈັດຕັ້ງພາກສ່ວນຮັບຜິດຊອບ ແລະ ການດຳເນີນງານ	
ຄະນະຊີ້ນຳ REDD+ ຂັ້ນແຂວງ ແມ່ນການຈັດຕັ້ງໜຶ່ງທີ່ມີໜ້າທີ່ຊີ້ນຳໆພາໃນການຈັດຕັ້ງປະຕິບັດ REDD+ ພາຍໃນແຂວງ. ການບໍລິ ຫານຄຸ້ມຄອງ ແລະ ການປະຕິບັດໜ້າທີ່ໃນແຕ່ລະວັນ ພາຍໃຕ້ຄວາມຮັບຜິດຊອບຂອງຄະນະຊີ້ນຳ ແມ່ນ ຫ້ອງການ REDD+ ຂັ້ນແຂວງ ຊຶ່ງມີໜ້າທີ່ປະສານງານ ແລະ ຄຸ້ມຄອງທຸກໆວຽກງານທີ່ກ່ຽວຂ້ອງກັບ REDD+. ພະແນກກະສິກຳ ແລະ ປ່າໄມ້ ສົມທົບກັບ ພະແນກ ແຜນການ ແລະ ການລົງທຶນແຂວງເປັນໃຈກາງໃນການຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ REDD+. ນອກນັ້ນ, ອົງ ການຈັດຕັ້ງລັດອື່ນໆ ລວມທັງພາກເອກະຊົນ ເປັນຜູ້ຮັບຜິດຊອບປະຕິບັດຕົວຈິງບັນດານະໂຍບາຍ ແລະ ມາດຕະການ (PAMs) ທີ່ໄດ້ກຳ ນົດ.	

ແຂວງຫຼວງພະບາງ, ວັນທີ_____

ເຈົ້າແຂວງໆຫຼວງພະບາງ

1. ຄວາມເປັນມາ ແລະ ພາກສະເໜີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ (ສປປ ລາວ) ເປັນປະເທດພາຄີຂອງ ສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ຂອງສະຫະປະຊາຊາດ (UNFCCC). ວຽກງານ REDD+ ເປັນຍຸດທະສາດຕົ້ນຕໍຂອງປະເທດທີ່ໄດ້ສະແດງເຖິງການຈັດຕັ້ງປະຕິບັດ ພັນທະໃນການປະກອບສ່ວນເພື່ອຈັດຕັ້ງປະຕິບັດຕາມຈຸດປະສົງຂອງສົນທິສັນຍາດັ່ງກ່າວ. ລັດຖະບານ ສປປ ລາວ ໄດ້ລົງນາມໃນຂໍ້ຕົກລົງ ປາຣີ, ຝະລັ່ງ ໃນປີ 2016, ໃນຂະນະດຽວກັນການປະກອບສ່ວນຂອງ ສປປ ລາວ ຕໍ່ກັບການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດແມ່ນ ໄດ້ຍົກໃຫ້ເຫັນຢູ່ບ່ອນວ່າ ສປປ ລາວ ໄດ້ມີການກຳນົດເອົາວຽກງານ REDD+ ເປັນຜົນສຳເລັດທີ່ສຳຄັນສຳລັບການຫຼຸດຜ່ອນການປ່ຽນ ແປງດິນຟ້າອາກາດ ແລະ ເປັນເປົ້າໝາຍສຳລັບການພັດທະນາແບບຍືນຍົງ . ສປປ ລາວ ໄດ້ເຂົ້າຮ່ວມເປັນສະມາຊິກຂອງກອງທຶນການກະ ກຽມຄວາມພ້ອມ ແລະ ກອງທຶນການກອນຂອງທະນາຄານໂລກ ແລະ ແຜນງານ REDD ຂອງສະຫະປະຊາຊາດ (UN-REDD)[1].

ສປປ ລາວ ໄດ້ໃຫ້ຄວາມສົນໃຈໃນການເຂົ້າຮ່ວມ ແຜນງານຄູ່ຮ່ວມການກອນປ່າໄມ້ (FCPF) ໂດຍການຍື່ນຄຳຮ້ອງ ເພື່ອຂໍເຂົ້າຮ່ວມເປັນ ປະເທດພາຄີຂອງກອງທຶນການກະກຽມຄວາມພ້ອມ ໃນປີ 2007. ປີ 2008, ສປປ ລາວ ໄດ້ຍື່ນບົດສະເໜີແນວຄວາມຄິດກ່ຽວກັບ ແຜນການກຽມຄວາມພ້ອມ (R-PIN) ຂອງຕົນໃຫ້ແກ່ທະນາຄານໂລກ, ແລະ ໃນປີ 2009, ແຜນງານຄູ່ຮ່ວມການກອນປ່າໄມ້ (FCPF) ຂອງທະນາຄານໂລກໄດ້ອະນຸມັດໃຫ້ ສປປ ລາວ ເຂົ້າເປັນປະເທດພາຄີໃນການກະກຽມຄວາມພ້ອມກ່ຽວກັບ REDD+ (R-PP). ມາຮອດປີ 2010 ສປປ ລາວ ໄດ້ຍື່ນບົດສະເໜີການກະກຽມຄວາມພ້ອມກ່ຽວກັບ REDD+ ໃຫ້ແກ່ແຜນງານຄູ່ຮ່ວມການກອນ ປ່າໄມ້ (FCPF) ຂອງທະນາຄານໂລກ, ແລະ ບົດສະເໜີການກະກຽມຄວາມພ້ອມດັ່ງກ່າວ ແມ່ນ ໄດ້ຖືກຮັບຮອງແບບມີເງື່ອນໄຂໃນປີ 2012 ແລະ ໄດ້ເຊັນຮັບຮອງເອົາຢ່າງເປັນທາງການໃນເດືອນສິງຫາ ປີ 2014. ປັດຈຸບັນນີ້ຊຸດເອກະສານການກະກຽມຄວາມພ້ອມຂອງ ສປປ ລາວ (R-package) ກຳລັງຖືກກະກຽມ ແລະ ຄາດວ່າຈະໄດ້ຍື່ນສະເໜີຕໍ່ ແຜນງານຄູ່ຮ່ວມການກອນປ່າໄມ້ (FCPF) ຂອງ ທະນາຄານໂລກໃນປີ 2017. ນອກຈາກນັ້ນ, ສປປ ລາວ ຍັງໄດ້ຍື່ນບົດແນວຄວາມຄິດກ່ຽວກັບແຜນງານຫຼຸດຜ່ອນການປ່ອຍອາຍພິດ (ER-PIN) ຂອງຕົນໃຫ້ແກ່ແຜນງານຄູ່ຮ່ວມການກອນປ່າໄມ້ (FCPF) ຂອງທະນາຄານໂລກໃນປີ 2015, ແລະ ມາຮອດປີ 2016 ສປປ ລາວ ໄດ້ຮັບທຶນຊ່ວຍເຫຼືອຈຳນວນ US$650.000 ເພື່ອສະໜັບສະໜູນການສ້າງເອກະສານແຜນງານຫຼຸດຜ່ອນການປ່ອຍອາຍພິດ (ER-PD) ຊຶ່ງເອກະສານດັ່ງກ່າວແມ່ນຄາດວ່າຈະຖືກຍື່ນສະເໜີຕໍ່ກອງທຶນການກອນຂອງແຜນງານຄູ່ຮ່ວມການກອນປ່າໄມ້ (FCPF) ຂອງທະນາຄານໂລກກ່ອນເດືອນມັງກອນ ປີ 2018. ຖ້າວ່າເອກະສານແຜນງານຫຼຸດຜ່ອນການປ່ອຍອາຍພິດ (ER-PD) ຫາກຖືກຍອມ ຮັບ, ສປປ ລາວ ຈະມີເງື່ອນໄຂໄດ້ຮັບເງິນຊົດເຊີຍສຳລັບການຈັດຕັ້ງປະຕິບັດກິດຈະກຳ REDD+ ໃນເງື່ອນໄຂທີ່ຖືກຄັດເລືອກ[2].

ແຜນງານຫຼຸດຜ່ອນການປ່ອຍອາຍພິດຂອງ ສປປ ລາວ (2018-2023) ແມ່ນສ້າງຂຶ້ນບົນພື້ນຖານ ກິດຈະກຳຕົ້ນຕໍດັ່ງຕໍ່ໄປນີ້[3]:

- ການຄຸ້ມຄອງ ແລະ ການປະຕິບັດກົດໝາຍ.
- ການວາງແຜນຈັດສັນຄຸ້ມຄອງພູມສັນຖານປ່າໄມ້ ແລະ ການວາງແຜນພື້ນທີ່ແບບປະສົມປະສານ.
- ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ການພັດທະນາຊີວິດການເປັນຢູ່ແບບຍືນຍົງ.
- ການຈ່າຍຄ່າບໍລິການດ້ານສິ່ງແວດລ້ອມ.
- ການຍັ້ງຢືນການຈັດສັນຄຸ້ມຄອງປ່າໄມ້.
- ການຟື້ນຟູປ່າໄມ້ ແລະ ການປູກໄມ້ໃຫ້ເປັນປ່າ

---

[1]ໃນປີ 2012, ແຜນງານເຣດຂອງສະຫະປະຊາຊາດ (UN-REDD) ໄດ້ຮັບເອົາ ສປປ ລາວ ເປັນປະເທດພາຄີ, ແລະ ແຜນງານເຣດຂອງສາທະປະຊາຊາດ ໄດ້ ຊ່ວຍເຫຼືອ ສປປ ລາວ ໃນການກະກຽມຄວາມພ້ອມກ່ຽວກັບເຣດ. ໃນປີ 2015, ແຜນງານເຣດຂອງສາທະປະຊາຊາດ (UN-REDD) ໄດ້ຮັບຮອງໃຫ້ການສະໜັບສະ ໜູນກ່ຽວກັບການເສີມສ້າງຄວາມອາດສາມາດໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງຢູ່ລະດັບສູນກາງ ແລະ ລະດັບແຂວງທີ່ມີສ່ວນກ່ຽວຂ້ອງກັບການຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ການມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້[1].

[2]ໃນວັກທີ 70 ຂອງຂໍ້ຕົກລົງແຄນຄູນໄດ້ກ່າວວ່າກິດຈະກຳເຣດ+ ແມ່ນມີເງື່ອນໄຂຕໍ່ໄປນີ້ (FCCC/CP/2010/7/Add.1): a) ຫຼຸດຜ່ອນການປ່ອຍອາຍພິດຈາກການທຳ ລາຍປ່າໄມ້; b) ຫຼຸດຜ່ອນການປ່ອຍອາຍພິດຈາກການເຮັດໃຫ້ປ່າໄມ້ເສື່ອມໂຊມ; c) ການອະນຸລັກການກອນປ່າໄມ້, d) ການຈັດສັນຄຸ້ມຄອງປ່າໄມ້ແບບຍືນຍົງ; e) ເພີ່ມການເກັບກັກການກອນປ່າໄມ້.

[3]ສປປ ລາວ ປີ 2015, ເອກະສານອະທິບາຍແນວຄວາມຄິດຂອງແຜນງານຫຼຸດຜ່ອນການປ່ອຍອາຍພິດ (ER-PIN). ກອງທຶນຄູ່ຮ່ວມການກອນປ່າໄມ້ (FCPF-CF)

ລັດຖະບານໄດ້ກຳນົດເອົາ 6 ແຂວງພາກເໜືອຂອງ ສປປ ລາວ ໃຫ້ເປັນແຂວງເປົ້າໝາຍສຳລັບການສ້າງແຜນງານການປ່ອຍອາຍພິດ (ER-PD) ໃນນັ້ນລວມມີ: ແຂວງບໍ່ແກ້ວ, ຫົວພັນ, ຫຼວງນ້ຳທາ, ຫຼວງພະບາງ, ອຸດົມໄຊ ແລະ ໄຊຍະບູລີ ເພື່ອເປັນການສະໜັບສະໜູນການສ້າງແຜນງານການຫຼຸດຜ່ອນການປ່ອຍອາຍພິດ (ER-PD), ສປປ ລາວ ໄດ້ຕັດສິນໃຈໃນການສ້າງແຜນປະຕິບັດງານ REDD+ ຂັ້ນແຂວງ (PRAPs) ສຳລັບ 6 ແຂວງເປົ້າໝາຍ ຊຶ່ງແຜນປະຕິບັດງານ REDD+ ຂັ້ນແຂວງນີ້ ແມ່ນຈະເປັນກອບການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນການກ່ຽວກັບ REDD+ ຢູ່ຂັ້ນສູນກາງ ແລະ ຈະເປັນແນວທາງໃນການຈັດຕັ້ງປະຕິບັດບັນດານະໂຍບາຍ, ຍຸດທະສາດ ແລະ ແຜນການທີ່ກ່ຽວຂ້ອງ ຢູ່ ໃນລະດັບແຂວງ. ສະນັ້ນ, ແຜນປະຕິບັດງານ REDD+ ຂັ້ນແຂວງ ແມ່ນຈະຕ້ອງໃຫ້ສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ຂອງເມືອງ. ໃນຂະນະດຽວກັນນັ້ນ ແຜນປະຕິບັດງານ REDD+ ຂັ້ນແຂວງ ກໍຕ້ອງໄດ້ສະແດງໃຫ້ເຫັນເຖິງວິທີທາງໃນການແກ້ໄຂບັນດາສາເຫດຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມຢູ່ໃນລະດັບແຂວງ.

ແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP) ຂອງແຂວງຫຼວງພະບາງ ແມ່ນໄດ້ປະກອບມີຂໍ້ມູນທີ່ລະອຽດຈະແຈ້ງ ແລະ ກ່ຽວຂ້ອງ ກັບກອບວຽກງານການຫຼຸດຜ່ອນການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມໃນລະດັບແຂວງ ແລະ ເມືອງ, ຊຶ່ງເປັນແນວທາງ ໃຫ້ແກ່ການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການ ສຳລັບວຽກງານ REDD+. ແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP) ສະບັບນີ້ໄດ້ສັງລວມເອົາຂໍ້ມູນພື້ນຖານທີ່ຈຳເປັນ, ລວມທັງຂໍ້ມູນກ່ຽວກັບເສດຖະກິດ-ສັງຄົມ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ໃນລະດັບແຂວງ. ໃນເອກະສານດັ່ງກ່າວແມ່ນໄດ້ນຳສະເໜີພື້ນຖານການວິເຄາະຂໍ້ມູນທີ່ຈຳເປັນເພື່ອສ້າງຄວາມເຂົ້າໃຈຕໍ່ກັບສາເຫດຂອງ ການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມຢູ່ໃນລະດັບແຂວງ , ພ້ອມທັງສັງລວມເອົາບັນດານະໂຍບາຍ ແລະ ມາດຕະການທີ່ ເປັນບູລິມະສິດ (PAMs) ເພື່ອແກ້ໄຂບັນດາສາເຫດຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ. ນະໂຍບາຍ ແລະ ມາດຕະການຕ່າງໆທີ່ກ່ຽວຂ້ອງແມ່ນໄດ້ນຳມາພິຈາລະນາ ແລະ ສິ່ງສຳຄັນແມ່ນອີງໃສ່ຄວາມກ່ຽວຂ້ອງກັບແຜນພັດທະນາເສດຖະກິດ-ສັງ ຄົມຕົ້ນຕໍ ແລະ ບັນດາຍຸດທະສາດຂອງລັດ, ຊຶ່ງມີຄວາມເປັນໄປໄດ້ທີ່ຈະຖືກນຳໄປຈັດຕັ້ງປະຕິບັດເພື່ອແກ້ໄຂສາເຫດຫຼັກຂອງການທຳລາຍ ປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມຢ່າງມີປະສິດທິຜົນ , ລວມທັງການແກ້ໄຂບັນດາອຸປະສັກຕ່າງໆທີ່ຈະມີຜົນຕໍ່ການຈັດຕັ້ງປະຕິ ບັດວຽກງານ REDD+.

ນອກຈາກນັ້ນ, ເອກະສານສະບັບນີ້ກໍໄດ້ພິຈາລະນາ ແລະ ວາງແຜນສຳລັບການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການເພື່ອແກ້ໄຂ ບັນດາສາເຫດຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ, ຊຶ່ງລວມມີການວາງແຜນການດຳເນີນງານ, ການວາງແຜນດ້ານ ອົງການຈັດຕັ້ງ ແລະ ແຜນການທາງການເງິນສຳລັບການຈັດຕັ້ງປະຕິບັດແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP). ພ້ອມດຽວ ກັນນັ້ນກໍໄດ້ມີການສະເໜີກຳນົດລະບົບການຕິດຕາມກວດກາ ແລະ ປະເມີນຜົນ (M&E) ເພື່ອໃຫ້ມີການປະເມີນການຈັດຕັ້ງປະຕິບັດ ແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP) ຢ່າງຈິງຈັງ ແລະ ມີປະສິດທິຜົນສູງ ສາມາດປະກອບຄຳຄິດເຫັນຕໍ່ກັບການຈັດຕັ້ງປະ ຕິບັດແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP) ໃຫ້ທັນກັບເວລາທີ່ກຳນົດໄວ້ (ໃນຊ່ວງໄລຍະການຈັດຕັ້ງປະຕິບັດ).

1.1. ສະພາບທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ໃນຂົງເຂດຂອງ PRAP

ແຂວງຫຼວງພະບາງ ຕັ້ງ ຢູ່ ທາງພາກເໜືອຂອງລາວ ມີສາຍແດນຕິດກັບ ແຂວງວຽງຈັນ ທາງພາກໃຕ້, ແຂວງຊຽງຂວາງ ທາງພາກຕາເວັນ ອອກສ່ຽງໃຕ້, ແຂວງຫົວພັນ ທາງພາກຕາເວັນອອກສ່ຽງເໜືອ, ແຂວງຜົ້ງສາລີ ແລະ ຫວຽດນາມ ທາງພາກເໜືອ, ແຂວງໄຊຍະບູລີ ທາງ ພາກຕາເວັນຕົກສ່ຽງໃຕ້ ແລະ ແຂວງອຸດົມໄຊ ທາງພາກຕາເວັນຕົກສ່ຽງເໜືອ.

ແຂວງຫຼວງພະບາງມີເນື້ອທີ່ທັງໝົດ 20.009 ກິໂລຕາແມັດ, ເນື້ອທີ່ສ່ວນໃຫຍ່ເປັນພູ, ພູດອຍ ແລະ ຜາຫີນສູງຊັນ ກວມ 85% ສ່ວນ ເນື້ອທີ່ນາບ່ອນຮາບພຽງແມ່ນມີຈຳກັດທີສຸດ. ບ່ອນທີ່ສູງສຸດແມ່ນຢູ່ຈອມພູໝ້ຽງເມືອງຈອມເພັດ ມີຄວາມສູງ 2.257 ແມັດ ແລະ ບ່ອນ ຕ່ຳສຸດ ຢູ່ຈຸດປາກຄານ ເມືອງຫຼວງພະບາງ ມີປະມານ 260 ແມັດທຽບໃສ່ລະດັບໜ້ານ້ຳທະເລ ໂດຍແບ່ງອອກເປັນ 12 ເມືອງເຊັ່ນ: ເມືອງ ຫຼວງພະບາງ, ຊຽງເງີນ, ນານ, ປາກອູ, ນ້ຳບາກ, ງອຍ, ໂພນທອງ, ວຽງຄຳ, ປາກແຊງ, ໂພນໄຊ, ຈອມເພັດ ແລະ ພູຄູນ, ມີ 96 ກຸ່ມບ້ານ, 10 ເຂດ, 752 ບ້ານ ມີ 77 .717 ຄອບຄົວ ແລະ ພົນລະເມືອງ 454 .095 ຄົນ, ຍິງ 278 .000 ຄົນ ໃນປີ 2015. ແຂວງຫຼວງພະບາງ ປະກອບດ້ວຍຫຼາຍຊົນເຜົ່າເຊັ່ນ: ລາວ, ໄຕ, ຜູ້ໄທ, ລື້, ຍວນ, ໄທ ເໜືອ, ກຶມມຸ, ໄປຣ, ແທ່ນ, ມົ້ງ, ອີວມຽນ, ພູນ້ອຍ ແລະ ຫໍ້.

ການຜະລິດກະສິກຳແມ່ນກິດຈະກຳຫຼັກໃນການດຳລົງຊີວິດຂອງປະຊາຊົນ ເປັນຕົ້ນແມ່ນເຮັດໄຮ່, ເຮັດນາ ແລະ ປູກຝັງລ້ຽງສັດ. ນອກນັ້ນ,

ປະຊາຊົນຍັງອາໄສຜົນຜະລິດຈາກປ່າໃນການລ້ຽງຊີບເຊັ່ນ: ການເກັບຜັກຫັກໜໍ່ ແລະ ເຄື່ອງປ່າຂອງດົງ. ການດຳລົງຊີວິດຂອງປະຊາຊົນ ແມ່ນຢູ່ແບບກະແຈກກະຈາຍ ເຮັດໃຫ້ຊັບພະຍາກອນປ່າໄມ້ເກືອບທຸກບ່ອນພາຍໃນແຂວງແມ່ນສາມາດເຂົ້າເຖິງ ຊຶ່ງສັງເ ກດເຫັນໄດ້ຈາກ ການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມແມ່ນມີໃນທົ່ວແຂວງ.

ໃນປີ 2015, ແຂວງຫຼວງພະບາງ ມີເນື້ອທີ່ປ່າໄມ້ທັງໝົດປະມານ 1.824.795 ເຮັກຕາ ກວມ 91.7%, ໃນນັ້ນ 48.4% ເປັນປ່າທຳມະ ຊາດ ແລະ 43.3% ເປັນປ່າ ເລົ່າ. ເນື້ອທີ່ປ່າເລົ່າທີ່ມີເປີເຊັນສູງນີ້ ສາເຫດແມ່ນມາກຈາກການຖາງປ່າເຮັດໄຮ່ເລື່ອນລອຍ ຊຶ່ງແມ່ນຮູບແບບ ວິທີໃນການດຳລົງຊີວິດຂອງປະຊາຊົນໂດຍທົ່ວໄປ. ເນື້ອທີ່ປ່າທຳມະຊາດທີ່ຍັງມີສ່ວນໃຫຍ່ແມ່ນປ່າປະສົມ. ລາຍລະອຽດກ່ຽວກັບສະພາບ ປ່າໄມ້ ແລະ ການປ່ຽນແປງແມ່ນຢູ່ໃນ ໝວດ 3.1.1.

ແຂວງຫຼວງພະບາງ ມີປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ລະດັບຊາດ, ແຂວງ ແລະ ເມືອງ ຊຶ່ງໃນນັ້ນປ່າປ້ອງກັນກວມເອົາເນື້ອທີ່ ຫຼາຍທີສຸດ ຄື 61.4% ຂອງເນື້ອທີ່ດິນທັງໝົດ ແລະ 60.4% ຂອງເນື້ອທີ່ປ່າທັງໝົດໃນປະຈຸບັນ. ປ່າສະຫງວນແຫ່ງຊາດ ນ້ຳແອດ-ພູເລີຍ ແມ່ນແຫ່ງດຽວທີ່ມີການປົກປັກຮັກສາອະນຸລັກຊີວະນາໆພັນທີ່ມີຄວາມຫຼາກຫຼາຍ.

ຕາຕະລາງ 1: 3 ປະເພດປ່າ ຢູ່ ແຂວງຫຼວງພະບາງ

	ຊື່	ເນື້ອທີ່ (ຮຕ)	ເມືອງ	ໝາຍເຫດ
	ປ່າສະຫງວນແຫ່ງຊາດ			
1	ນ້ຳແອດ-ພູເລີຍ	11.448	ວຽງທອງ ວຽງຄຳ	
	ປ່າສະຫງວນລະດັບແຂວງ			
1	ກົ່ວຕະລຸນໃຫຍ່ (ລາວສູງ)	1.370	ຊຽງເງີນ	
	ປ່າສະຫງວນລະດັບເມືອງ			
1	ຖ້ຳແຂ້ວ	114	ໂພນໄຊ	
2	ຜາດົງຄວາຍ	2.450	ນານ	
3	ເຂດຜາວິ	5.000	ໂພນໄຊ	ກຳນົດແລ້ວແຕ່ແຂວງ ຍັງບໍ່ທັນໄດ້ຮັບຮູ້
4	ເຂດລ້ອງລັນ	5.000	ຫຼວງພະບາງ	
5	ເຂດສາຍນ້ຳຕ່ານ (ພູຫຼວງໃຕ້)	690	ຈອມເພັດ	
6	ຜາແອ່ນ-ມົກເຫຼັກ	213	ປາກອູ	
7	ເຂດຜານາກ-ຜາທົ່ງ	1.340	ປາກອູ	
8	ເຂດຜາພູນ້ຳຕາ	1.560	ປາກອູ	
9	ເຂດຖ້ຳຕົ່ງ	60	ຈອມເພັດ	
10	ພູຜາເງີນ	394	ພູຄູນ	
11	ເຂດພູກົ່ວຢວກ	3.330	ພູຄູນ	
12	ເຂດພູຟ້າ-ໜອງຜີ	54.300	ພູຄູນ	
13	ເຂດພູຈອມແງ	3.530	ຊຽງເງີນ	
14	ພູວຽງ	315	ຊຽງເງີນ	
15	ພູຜາແຜ້ວ	1.100	ຊຽງເງີນ	
16	ເຂດແກ້ງຫຼວງ	1.260	ຊຽງເງີນ	
17	ຜາກວາງ	1.950	ງອຍ	
18	ຜາໜໍ່	1.870	ງອຍ	
19	ເຂດພູຫ້ວຍ-ຕະຫຼວງ	30	ນ້ຳບາກ	

20	ເຂດພູສີ້ນຂວາ	105	ນ້ຳບາກ	
21	ເຂດພູກູ້-ພູວຽງ	1.050	ນ້ຳບາກ	
	ປ່າຍອດນ້ຳຍາວ	3.000	ໂພນທອງ	ກຳນົດໃໝ່ຍັງບໍ່ທັນ ສະເໜີ
ປ່າປ້ອງກັນແຫ່ງຊາດ				
1	ແຫຼ່ງນ້ຳເມິກ-ນ້ຳມັດ	84.524	ໂພນທອງ	
2	ແຫຼ່ງນ້ຳບາກ-ນ້ຳພາກ	112.547	ນ້ຳບາກ, ງອຍ	
3	ແຫຼ່ງນ້ຳງາວ-ນ້ຳອູໃຕ້	127.994	ງອຍ, ນ້ຳບາກ, ປາກອູ	
4	ແຫຼ່ງນ້ຳເຊືອງ-ນ້ຳແຊງ	491.274	ງອຍ, ໂພນທອງ, ວຽງຄຳ, ປາກແຊງ, ໂພນໄຊ	
5	ພູໝ້ຽງ-ພູແກ້ວອຸດອນ	14.072		
6	ແຫຼ່ງນ້ຳຄານ	205.379	ພູຄູນ, ໂພນໄຊ, ຊຽງ ເງີນ	
7	ແຫຼ່ງນ້ຳພາດ-ນ້ຳຕົ່ງ	66.400	ພູຄູນ	
8	ແຫຼ່ງນ້ຳເຟື່ອງ-ຜາເຫຼັກ	91.405	ນານ	
ປ່າປ້ອງກັນແຂວງ				
1	ພູພົ້ງ-ຜາທູນ-ຕາດກວາງຊີ-ພູຈອງ	34.934	ຫຼວງພະບາງ	
ປ່າປ້ອງກັນເມືອງ				
1	ຫ້ວຍງື	10.388	ນ້ຳບາກ	
2	ພູດຳ	187	ຈອມເພັດ	
3	ຫ້ວຍດໍ້	1.862	ຈອມເພັດ	
4	ເຂດປ່າກຸກ-ເຂດຜາງົວ	971	ຈອມເພັດ	
5	ພູທ້າວ-ພູນາງ	528	ຈອມເພັດ	
6	ພູເຫຼັກ	1.394	ຫຼວງພະບາງ	
7	ພູຊວງ + ພູນາຫຼວງ	744	ຫຼວງພະບາງ	
8	ພູໝອງໄຄ້	410	ຫຼວງພະບາງ	
9	ພູແທ່ນເສືອ	146	ຫຼວງພະບາງ	
10	ເຂດໄຟຟ້າ	360	ຫຼວງພະບາງ	
11	ຫ້ວຍແສ້	256	ຫຼວງພະບາງ	
12	ເຂດຫ້ວຍຫຼວງ-ຫ້ວຍສາ	848	ໂພນໄຊ	ຫ້ວຍລຸ້ງ

ແຫຼ່ງຂໍ້ມູນ: ບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບການຢັ້ງຢືນປ່າປ້ອງກັນ, ປ່າສະຫງວນແຫ່ງຊາດ, ລະດັບແຂວງ ແລະ ເມືອງ ແຂວງຫຼວງພະບາງ ສະບັບເລກທີ 1171/ພຊສ.ຫຼບ, ລົງວັນທີ 19/3/2014 (ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ).

	ຊື່	ເນື້ອທີ່ (ຮຕ)	ເມືອງ	ໝາຍເຫດ
ປ່າຜະລິດແຫ່ງຊາດ				
1	ສາຍນ້ຳຄານ	64.038	ໂພນໄຊ	
2	ພູຫຼວງໃຕ້	83.004	ຈອມເພັດ	

ເນື້ອທີ່ປ່າທັງໝົດຂອງແຂວງຈະຖືກພິຈາລະນາ ຕາມຈຸດປະສົງຂອງ ERPD ແລະ ຈະບໍ່ມີເນື້ອທີ່ໃດທີ່ບໍ່ໄດ້ເອົາເຂົ້າໃນການພິຈາລະນາ.

1.2. ໄລຍະເວລາຂອງການຈັດຕັ້ງປະຕິບັດPRAP ສຳລັບແຂວງຫຼວງພະບາງ

ໄລຍະເວລາຂອງການຈັດຕັ້ງປະຕິບັດ PRAP ສຳລັບແຂວງຫຼວງພະບາງແມ່ນ 8 ປີ ເລີ່ມແຕ່ ປີ 2018 - 2025. ເພື່ອໃຫ້ການຈັດຕັ້ງປະຕິບັດ PRAP ສອດຄ່ອງກັບແຜນພັດທະນາຂອງລັດຖະບານ ແລະ ແຜນຕິດຕາມກວດກາການ ຈັດຕັ້ງປະຕິບັດ PRAP ສຳລັບແຂວງຫຼວງພະບາງ ລວມທັງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2016 – 2020) ຂອງແຂວງໃນປະຈຸບັນ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 9 ປີ 2021 - 2025. ເນື່ອງຈາກວ່າແຜນການ 5 ປີ ໄດ້ຜັນຂະຫຍາຍອອກເປັນແຜນການປະຈຳປີ ສະນັ້ນ PRAP ໃນເບື້ອງຕົ້ນຕ້ອງໄດ້ເຊື່ອມໂຍງໃຫ້ສອດຄ່ອງກັບແຜນການຂອງ ປີ 2018 , 2019 ແລະ 2020 ຈາກນັ້ນຈຶ່ງເຊື່ອມໂຍງໃຫ້ສອດຄ່ອງກັບແຜນການ 5 ປີ ຄັ້ງຕໍ່ໄປ.

2. ສະພາບທາງດ້ານອົງການຈັດຕັ້ງ

2.1. ສະພາບທາງດ້ານອົງການຈັດຕັ້ງ ແລະ ການປະສານງານລະຫວ່າງຂະແໜງການ

2.1.1. ສະພາບທາງດ້ານອົງການຈັດຕັ້ງສຳລັບວຽກງານ REDD+ ໃນລະດັບຊາດ

ຢູ່ ສປປ ລາວ ແມ່ນໄດ້ມີການສ້າງຕັ້ງຄະນະຮັບຜິດຊອບວຽກງານ REDD+ ແຫ່ງຊາດ ໂດຍອີງຕາມດຳລັດຂອງລັດຖະບານ ເລກທີ 1313/ ລບ (2008), ຄະນະຮັບຜິດຊອບດັ່ງກ່າວນີ້ແມ່ນໄດ້ປະກອບດ້ວຍຜູ້ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງເຂົ້າມາມີສ່ວນຮ່ວມໃນການພັດທະນາວຽກງານ REDD+ ຢູ່ໃນ ສປປ ລາວ. ໃນນັ້ນລວມທັງການພັດທະນາ ແລະ ຈັດຕັ້ງປະຕິບັດວຽກງານ REDD+ ຢູ່ພາຍໃນປະເທດ,ສະໜັບສະໜູນການພັດທະນາຄວາມອາດສາມາດທີ່ກ່ຽວຂ້ອງກັບວຽກງານ REDD+, ພ້ອມທັງຮັບປະກັນໃຫ້ມີການສື່ສານ ແລະ ປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງ ແລະ ຮັບປະກັນການເຂົ້າຮ່ວມໃນການປຶກສາຫາລື ແລະ ການເຈລະຈາກ່ຽວກັບນະໂຍບາຍການປ່ຽນແປງດິນຟ້າອາກາດລະດັບສາກົນ. ສະມາຊິກຂອງຄະນະຮັບຜິດຊອບວຽກງານ REDD+ ແຫ່ງຊາດ ເປັນຕົວແທນຈາກຂະແໜງເສດຖະກິດຕົ້ນຕົ້ນຫຼາຍຂະແໜງການເຊັ່ນ: ຂະແໜງການກະສິກຳ, ປ່າໄມ້, ບໍ່ແຮ່, ພະລັງງານ ແລະ ການວາງແຜນນຳໃຊ້ທີ່ດິນ. ໃນປີ 2011, ໄດ້ມີການເພີ່ມຈຳນວນສະມາຊິກຄະນະຮັບຜິດຊອບວຽກງານ REDD+ ແຫ່ງຊາດ ໂດຍມີຕົວແທນຈາກກະຊວງຍຸດຕິທຳ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ແນວລາວສ້າງຊາດ, ສະຫະພັນແມ່ຍິງ ແລະ ກຳມະບານລາວ.

ໜ່ວຍງານວິຊາການສະເພາະດ້ານທັງ 6 ໜ່ວຍງານ ແມ່ນໄດ້ຮັບການແຕ່ຕັ້ງຂຶ້ນໃນປີ 2015 ເພື່ອເປັນເສນາທິການໃຫ້ແກ່ຄະນະຮັບຜິດຊອບ REDD+ ຂັ້ນສູນກາງ ແລະ ຫ້ອງການ REDD+ ແຫ່ງຊາດ ໃນການເຮັດໜ້າທີ່ອັນສຳຄັນຕົ້ນຕໍໃນການສ້າງຍຸດທະສາດREDD+ ແຫ່ງຊາດ. ໃນນັ້ນລວມມີໜ່ວຍງານວິຊາສະເພາະດ້ານນິຕິກຳ, ການຖືຄອງທີ່ດິນ, ການສ້າງເສັ້ນທຽບຖານການປ່ອຍອາຍພິດ (REL) ການຕິດຕາມກວດກາ, ລາຍງານ ແລະ ພິສູດຢັ້ງຢືນ (MRV), ການປົກປ້ອງ, ກົນໄກການແບ່ງປັນຜົນປະໂຫຍດ ແລະ ການຈັດຕັ້ງປະຕິບັດກົດໝາຍ. ຢູ່ຂັ້ນແຂວງ ຄະນະຊີ້ນຳວຽກງານ REDD+ ຂັ້ນແຂວງ ແລະ ຫ້ອງການ REDD+ ຂັ້ນແຂວງ ເປັນຜູ້ຮັບຜິດຊອບໃນການປະສານງານວຽກງານ REDD+ ຢູ່ ຂັ້ນແຂວງ. ໂຄງຮ່າງການຈັດຕັ້ງຂອງ ຄະນະຊີ້ນຳວຽກງານ REDD+ ຂັ້ນແຂວງ ແມ່ນຄ້າຍຄືກັນກັບ ຄະນະຊີ້ນຳ REDD+ ແຫ່ງຊາດ ຊຶ່ງສະມາຊິກແມ່ນມາຈາກຫຼາຍຂະແໜງການກ່ຽວຂ້ອງອ້ອມຂ້າງແຂວງ. ແຂວງຫຼວງພະບາງ ຖືວ່າເປັນແຂວງທີສອງຕໍ່ຈາກແຂວງຫົວພັນ ໃນບັນດາແຂວງພາກເໜືອທີ່ໄດ້ສ້າງຕັ້ງ ຄະນະຊີ້ນຳວຽກງານ REDD+ ຂັ້ນແຂວງຂຶ້ນ ໃນວັນທີ 20 ພຶດສະພາ 2016 ເພື່ອສະໜັບສະໜູນວຽກງານ REDD+. ໃນເດືອນທັນວາ ປີ 2016 ສະມາຊິກທຸກຄົນໃນຄະນະຊີ້ນຳ REDD+ ຂັ້ນແຂວງ ພ້ອມດ້ວຍພະນັກງານຮັບຜິດຊອບຂັ້ນເມືອງ ກໍໄດ້ຮັບການຝຶກອົບຮົມຢ່າງເລິກເຊິ່ງກ່ຽວກັບ REDD+ ເພື່ອກະກຽມໃຫ້ແກ່ການສ້າງແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP).

2.1.2. ໂຄງຮ່າງການຈັດຕັ້ງສຳລັບການສ້າງ ແຜນປະຕິບັດງານ REDD+ ຂັ້ນແຂວງ ຢູ່ ແຂວງຫຼວງພະບາງ

ແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP) ນີ້ຈະໄດ້ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດຍຸດທະສາດ, ການກະກຽມອົງການຈັດຕັ້ງຮັບຜິດຊອບ ແລະ ການຈັດສັນງົບປະມານການເງິນເພື່ອວຽກງານການຫຼຸດຜ່ອນການປ່ອຍອາຍພິດຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ຢູ່ຂັ້ນແຂວງ. ແຜນປະຕິບັດງານ REDD+ ຂັ້ນແຂວງໄດ້ກຳນົດຄວາມຮັບຜິດຊອບໃນການອອກແບບ ແລະ ການຈັດຕັ້ງປະຕິບັດກິດຈະກຳຂອງຫຼາຍຂະແໜງການຮ່ວມທີ່ກ່ຽວຂ້ອງກັບການຫຼຸດຜ່ອນການປ່ອຍອາຍພິດ (ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ) ແລະ ເພື່ອເປົ້າໝາຍໃນການເພີ່ມການເກັບກັກກາດການບອນໃນພື້ນທີ່ປ່າໄມ້. ສະນັ້ນ, ຈຶ່ງມີຄວາມ

ຈຳເປັນສຳລັບການກຳນົດຮູບແບບໃນການປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງໂດຍອີງໃສ່ຂະບວນການທີ່ໂປ່ງໃສ ແລະ ມີສ່ວນຮ່ວມ. ຢູ່ ແຂວງຫຼວງພະບາງ ແມ່ນ ຫ້ອງການ REDD+ ປະຈຳແຂວງ ແລະ ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການສ້າງ ແຜນປະຕິບັດງານ REDD+ ຂັ້ນແຂວງ ໂດຍການສະໜັບສະໜູນຈາກໂຄງການ F-REDD/JICA ພາຍໃຕ້ການຊີ້ນຳຈາກ ພະແນກ REDD+ ຂອງກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້.

ການກະກຽມເພື່ອສ້າງ ແຜນປະຕິບັດງານ REDD+ ຂັ້ນແຂວງ ຢູ່ ຂັ້ນເມືອງ ແມ່ນ ຄະນະຮັບຜິດຊອບ ສ້າງ ແຜນປະຕິບັດງານຂັ້ນເມືອງ (DRAP) ເປັນເຈົ້າການ ໂດຍອີງໃສ່ຂໍ້ຕົກລົງຂອງເຈົ້າເມືອງວ່າດ້ວຍການສ້າງຕັ້ງຄະນະຮັບຜິດຊອບ REDD+ ຂັ້ນເມືອງ. ຄະນະຮັບຜິດຊອບດັ່ງກ່າວເປັນໃຈກາງໃນການປະສານງານກັບທຸກໆພາກສ່ວນທີ່ກ່ຽວຂ້ອງ ຢູ່ ຂັ້ນເມືອງ ແລະ ຂັ້ນກຸ່ມບ້ານ. ສະມາຊິກຄະນະຮັບຜິດຊອບຂັ້ນເມືອງ ສ່ວນໃຫຍ່ແມ່ນມາຈາກ ຫ້ອງການກະສິກຳ ແລະ ປ່າໄມ້, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການແຜນການ ແລະ ການລົງທຶນ. ຄະນະດັ່ງກ່າວມີໜ້າທີ່ຮັບຜິດຊອບຈັດກອງປະຊຸມຄົ້ນຄ້ວາ ແລະ ປຶກສາຫາລື ຢູ່ ແຕ່ລະເມືອງ ແລະ ກຸ່ມບ້ານ. ນອກນັ້ນ, ຄະນະດັ່ງກ່າວຍັງມີໜ້າທີ່ປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງເມືອງເຊັ່ນ: ຫ້ອງວ່າການເມືອງ, ຫ້ອງການກະສິກຳ ແລະ ປ່າໄມ້, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການແຜນການ ແລະ ການລົງທຶນ, ພາກສ່ວນປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ, ສະຫະພັນຍິງ, ຫ້ອງການພະລັງງານ ແລະ ບໍ່ແຮ່, ແນວລາວສ້າງຊາດ ຢູ່ ຂັ້ນເມືອງ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເພື່ອສະໜອງຂໍ້ມູນໃຫ້ ຄະນະຮັບຜິດຊອບສ້າງແຜນປະຕິບັດງານຂັ້ນແຂວງ.

ກອງປະຊຸມຄົ້ນຄ້ວາ ແລະ ປຶກສາຫາລື ເພື່ອສ້າງແຜນປະຕິບັດງານ REDD+ຂັ້ນແຂວງ ແມ່ນຈັດຂຶ້ນເປັນຫຼາຍຮອບ ຢູ່ ລະດັບແຂວງ. ໃນກອງປະຊຸມແຕ່ລະເທື່ອ ພາກສ່ວນທີ່ມີສ່ວນຮ່ວມຈາກຂະແໜງການຕ່າງໆ ກໍໄດ້ຄົ້ນຄ້ວາ ແລະ ປຶກສາຫາລືໃນລວງເລິກ ລວມທັງ ສະຫະພັນຍິງ ກໍມີຄຳຄິດເຫັນເພື່ອຮັບປະກັນໃຫ້ບົດບາດຂອງແມ່ຍິງຖືກຍົກສູງຂຶ້ນ ແລະ ມີສ່ວນຮ່ວມໃນການສ້າງແຜນປະຕິບັດງານ REDD+ ຂັ້ນແຂວງເຊັ່ນດຽວກັນກັບແນວລາວສ້າງຊາດທີ່ເນັ້ນໃສ່ບັນຫາຊົນເຜົ່າເປັນສຳຄັນ.

ໃນເດືອນກຸມພາ 2016 ໄດ້ເລີ່ມສຳຫຼວດເກັບກຳຂໍ້ມູນໂດຍເລັ່ງໃສ່ຈຸດທີ່ມີການທຳລາຍປ່າໄມ້ທີ່ຮ້າຍແຮງ (hotspot)ໃນ 12 ເມືອງທົ່ວ ແຂວງຫຼວງພະບາງ. ຫຼັງຈາກນັ້ນ, ໃນເດືອນສິງຫາ 2016 ໄດ້ເປີດກອງປະຊຸມປຶກສາຫາລືຄັ້ງທີ 1 ເພື່ອສະເໜີຜົນຂອງການສຳຫຼວດເກັບກຳ ຂໍ້ມູນ ໂດຍການເຂົ້າຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງໃນທົ່ວແຂວງ. ກອງປະຊຸມຍັງໄດ້ສ້າງຄວາມເຂັ້ມແຂງ ແລະ ທຳຄວາມເຂົ້າໃຈ ກ່ຽວກັບໂຄງສ້າງ ແລະ ຂະບວນການສ້າງແຜນປະຕິບັດງານ REDD+ ຂັ້ນແຂວງ. ກອງປະຊຸມຄັ້ງທີ 2 ໄດ້ເປີດຂຶ້ນ ຢູ່ ແຂວງ ໃນເດືອນ ຕຸລາ 2016 ໂດຍເລັ່ງໃສ່ການປຶກສາຫາລື ແລະ ລະດົມແນວຄວາມຄິດ ກ່ຽວກັບນະໂຍບາຍທີ່ສຳຄັນ ແລະ ມາດຕະການ (PaMs) ເພື່ອ ແກ້ໄຂບັນຫາການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ອີງໃສ່ຜົນຂອງການສຳຫຼວດເກັບກຳຂໍ້ມູນ. ຕໍ່ມາໃນເດືອນມີນາ 2017 ກໍໄດ້ຈັດກອງປະຊຸມປຶກສາຫາລື ຢູ່ ແຕ່ລະເມືອງ ແລະ ໄດ້ລົງຫາກຸ່ມບ້ານ ເພື່ອເກັບກຳຂໍ້ມູນເພີ່ມເຕີມ. ຈຸດປະສົງຫຼັກຂອງກອງ ປະຊຸມເຫຼົ່ານີ້ແມ່ນເພື່ອກຳນົດ ແລະ ຈັດບູລິມະສິດສາເຫດທາງກົງ ແລະ ທາງອ້ອມຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມ ໂຊມ ແລະ ຊອກຫາວິທີແກ້ໄຂໂດຍການກຳນົດນະໂຍບາຍ ແລະ ມາດຕະການຕ່າງໆທີ່ເປັນໄປໄດ້. ຫຼັງຈາກນັ້ນ, ກໍໄດ້ເປີດກອງປະຊຸມ ຢູ່ ຂັ້ນແຂວງ ໃນເດືອນເມສາ 2017 ເພື່ອຢັ້ງຢືນຜົນຂອງການສຳຫຼວດເກັບກຳຂໍ້ມູນ ພ້ອມນະໂຍບາຍ ແລະ ມາດຕະການທີ່ກຳນົດ ເພື່ອເປັນ ພື້ນຖານໃຫ້ແກ່ການສ້າງຮ່າງສະບັບທີ 1 ຂອງແຜນປະຕິບັດງານ REDD+ ຂັ້ນແຂວງ. ລາຍລະອຽດວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າ ຮ່ວມກອງປະຊຸມໃນແຕ່ລະຄັ້ງ ແມ່ນຢູ່ໃນຕາຕະລາງ A1 ຂອງເອກະສານຊ້ອນທ້າຍ 1.

2.2. ການເຊື່ອມໂຍງແຜນປະຕິບັດງານເຂົ້າກັບຍຸດທະສາດ ແລະ ແຜນການແຫ່ງຊາດ

2.2.1. ການເຊື່ອມໂຍງແຜນປະຕິບັດງານເຂົ້າກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ຍຸດທະສາດຂອງຂະແໜງການຕ່າງໆ ແຜນປະຕິບັດງານ REDD+ ຂອງແຂວງຫຼວງພະບາງ ໄດ້ອອກແບບໂດຍເນັ້ນໃສ່ຈຸດສຳຄັນຄືຕ້ອງຮັບປະກັນໃຫ້ແຜນດັ່ງກ່າວ ສາມາດ ເຊື່ອມໂຍງເຂົ້າກັບຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຊຶ່ງໃນນັ້ນລວມທັງແຜນຍຸດທະສາດຂອງ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮອດປີ 2025, ວິໄສທັດຮອດປີ 2030 ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 (2016 – 2020). ນອກນັ້ນ, ຍຸດທະສາດທີ່ສຳຄັນອີກຢ່າງໜຶ່ງ ແມ່ນຍຸດທະສາດປ່າໄມ້ຮອດປີ 2020 ຊຶ່ງໄດ້ກຳນົດຈຸດປະສົງ, ລະດັບຄາດໝາຍ ແລະ ແຜນການທີ່ແນ່ນອນສຳລັບຂະແໜງການປ່າໄມ້. ນອກນັ້ນ, ຍຸດທະສາດດັ່ງກ່າວຍັງເຊື່ອມໂຍງກັບຍຸດທະສາດຂອງ ຂະແໜງການອື່ນໆ ລວມທັງຍຸດທະສາດການພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດຮອດປີ 2030 ແລະ ແຜນງານກະສິກຳ-ຊີວະນາງພັນແຫ່ງຊາດ ແລະ ແຜນປະຕິບັດງານ (2016 – 2025). ຕາຕະລາງ 2 ສະແດງໃຫ້ເຫັນສະພາບລວມ ແລະ ການເຄື່ອນໄຫວ ວຽກງານຂອງລັດຖະບານທີ່ພົວພັນກັບ REDD+ ຢູ່ ສປປ ລາວ ແລະ ແຜນປະຕິບັດງານ REDD+ ຂັ້ນແຂວງທີ່ສ້າງຂຶ້ນ. ອີງໃສ່

ແນວທາງທີ່ລະອຽດຖີ່ຖ້ວນດັ່ງກ່າວ ແຜນປະຕິບັດ ງານ REDD+ ຂັ້ນແຂວງ ຈະຊ່ວຍລັດຖະບານໃນການຈັດຕັ້ງປະຕິບັດດ້ວຍຄວາມກ້າວໜ້າ ແລະ ນຳໄປສູ່ຜົນສຳເລັດ ສາມາດບັນລຸເປົ້າໝາຍຂອງການພັດທະນາປະເທດ ໂດຍສະເພາະການປ້ອງກັນ ແລະ ຄຸ້ມຄອງນຳໃຊ້ຊັບພະຍາກອນທຳມະຊາດໃຫ້ເກີດຜະໂຫຍດສູງສຸດ ແລະ ຍືນຍົງ.

ຕາຕະລາງ 2: ເປົ້າໝາຍຂອງຍຸດທະສາດ ແລະ ແຜນພັດທະນາແຫ່ງຊາດ ຂອງຂະແໜງການກ່ຽວຂ້ອງ

ຍຸດທະສາດ/ແຜນພັດທະນາ	**ລາຍລະອຽດກິດຈະກຳ/ຈຸດປະສົງ/ເປົ້າໝາຍ**
ວິໄສທັດ 2030[4]	ຂ້າມຜ່ານໄປສູ່ປະເທດກຳລັງພັດທະນາທີ່ມີລາຍຮັບປານກາງຫາສູງ ແລະ ມີອັດຕາການຂະຫຍາຍຕົວຂອງເສດຖະກິດທີ່ໝັ້ນຄົງ ແລະ ຍືນຍົງ. ການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ມີຄວາມສົມດູນກັນ. ຂະແໜງກະສິກຳ ແລະ ປ່າໄມ້ ໄດ້ຮັບການພັດທະນາແບບຍືນຍົງ ສາມາດຮັບປະກັນທາງດ້ານສະບຽງອາຫານ ແລະ ປົກປັກຮັກສາສິ່ງແວດລ້ອມໄປພ້ອມໆກັນ. ການນຳໃຊ້ຊັບພະຍາກອນທຳມະຊາດມີປະສິດທິຜົນຫຼາຍຂຶ້ນ.
ຍຸດທະສາດ 2025	ຫຼຸດພົ້ນອອກຈາກປະເທດທີ່ດ້ອຍພັດທະນາໃນປີ 2025. ເສດຖະກິດຂະຫຍາຍ ຕົວຢ່າງກ້ວາງຂວາງ, ສາມາດຫຼຸດພົ້ນອອກຈາກຄວາມທຸກຍາກ, ການເພີ່ມຂຶ້ນຂອງພົນລະເມືອງສະໝ່ຳສະເໝີ. ຜະລິດຕະພາບສູງຂຶ້ນກະຕຸກຊຸກຍູ້ໃຫ້ການຜະລິດຂະຫຍາຍຕົວ. ການຄຸ້ມຄອງດ້ານສິ່ງແວດລ້ອມ ຕ້ອງສາມາດແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ທົນທານຕໍ່ສະພາບການເກີດໄພທຳມະຊາດ ທັງຮັບປະກັນໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ຜົນກະທົບທາງດ້ານສັງຄົມ, ສິ່ງແວດລ້ອມ ແລະ ເສດຖະກິດ ຈາກກິດຈະກຳຂອງຂະແໜງຊັບພະຍາກອນ.
ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 (2016-2020)	ການຈັດສັນການນຳໃຊ້ທີ່ດິນປະຕິບັດສຳເລັດໃນທຸກພາກຂອງປະເທດ. ການຈັດສັນທີ່ດິນເພື່ອທຳການຜະລິດໃຫ້ປະຊາຊົນມີຄວາມຖືກຕ້ອງ ແລະ ແທດເໝາະ ດ້ວຍການກຳນົດເຂດນຳໃຊ້ທີ່ດິນຢ່າງຈະແຈ້ງ. ເນື້ອທີ່ປົກຫຸ້ມປ່າໄມ້ບັນລຸຄາດໝາຍ 70% ຂອງເນື້ອທີ່ທັງໝົດໃນປີ 2020 (ໃນນັ້ນປ່າຟື້ນຟູທຳມະຊາດ 6 ລ້ານເຮັກຕາ, ປ່າປູກ 500.000 ເຮັກຕາ ໃນເນື້ອທີ່ປ່າທີ່ບໍ່ທັນໄດ້ຈັດສັນ; ໂດຍໄດ້ກຳນົດໃນຍຸດທະສາດປ່າໄມ້ 2020). ຮອດປີ 2020 ຟື້ນຟູປ່າໃຫ້ໄດ້ 1.5 ລ້ານ ເຮັກຕາ . ສ້າງກົນໄກເພື່ອຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ຢ່າງມີປະສິດທິພາບ ແລະ ມີຄວາມຍືນຍົງ. ສ້າງກົນໄກດ້ານການເງິນ, ລະບຽບການ ແລະ ຖານຂໍ້ມູນ ເພື່ອສຶກສາຄົ້ນຄ້ວາ ແລະ ຄຸ້ມຄອງແນໃສ່ເພື່ອຫຼຸດຜ່ອນການປ່ອບອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ຮັບປະກັນລາຍຮັບຈາກຂະແໜງການປ່າໄມ້ ຖືກນຳໃຊ້ເພື່ອຟື້ນຟູ ແລະ ຄຸ້ມຄອງປ່າໄມ້.
ຍຸດທະສາດປ່າໄມ້ ຮອດປີ 2020	**ທິດທາງການຈັດຕັ້ງປະຕິບັດນະໂຍບາຍ** - ເພື່ອກຳນົດນະໂຍບາຍທີ່ດິນແຫ່ງຊາດ ແລະ ແນະນຳການວ າງແຜນນຳໃຊ້ທີ່ດິນລະດັບມະຫາພາກ ແລະ ລະດັບທ້ອງຖິ່ນ. - ເພື່ອເພີ່ມທະວີວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ໂດຍອີງໃສ່ຊຸມຊົນທ້ອງຖິ່ນເປັນເຈົ້າການ ແນໃສ່ເພື່ອຫຼຸດຜ່ອນຄວາມທຸກຍາກ. - ເພື່ອຄວບຄຸມການເກັບກ່ຽວ ແລະ ການສົ່ງອອກເຄື່ອງປ່າຂອງດົງໃຫ້ມີຄວາມຍືນຍົງ ພ້ອງທັງຊຸກຍູ້ສົ່ງເສີມວຽກງານຄຸ້ມຄອງ ແລະ ປຸງແຕ່ງເຄື່ອງປ່າຂອງດົງແບບມີສ່ວນຮ່ວມ ແລະ ຍາວນານ. - ເພື່ອປັບປຸງການເຄື່ອນໄຫວຂອງອຸດສາຫະກຳໄມ້ ແນໃສ່ເພື່ອຮັບປະກັນໃຫ້ກຳລັງການຜະລິດ ແລະ ການຂຸດຄົ້ນໄມ້ ມີຄວາມດຸ່ນດ່ຽງ ແລະ ສົມດູນຊຶ່ງກັນແລະກັນ. - ເພື່ອຊຸກຍູ້ການປູກໄມ້ ແລະ ການຄຸ້ມຄອງບົວລະບັດຮັກສາ ໂດຍກຳນົດເປົ້າໝາຍໃຫ້ຈະແຈ້ງ ໂດຍສະເພາະແມ່ນເຈົ້າຂອງຜູ້ປູກໄມ້, ຕະຫຼາດຮອງຮັບ ແລະ ແຜນການລົງທຶນປູກໄມ້ ເພື່ອສະໜອງໄມ້ໃນລະດັບຊາດ ແລະ ຮັບປະກັນລາຍຮັບຂອງຊາວກະສິກອນຜູ້ປູກໄມ້. - ເພື່ອປ້ອງກັນການບຸກລຸກພື້ນທີ່ປ່າໄມ້, ການເຄື່ອນໄຫວກິດຈະກຳທີ່ບໍ່ໄດ້ຮັບອະນຸຍາດໃນເຂດປ່າໄມ້ ແລະ ປ້ອງ

[4]ລວມຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8

ຕາຕະລາງ 2: ເປົ້າໝາຍຂອງຍຸດທະສາດ ແລະ ແຜນພັດທະນາແຫ່ງຊາດ ຂອງຂະແໜງການກ່ຽວຂ້ອງ

ຍຸດທະສາດ/ແຜນ ພັດທະນາ	ລາຍລະອຽດກິດຈະກຳ/ຈຸດປະສົງ/ເປົ້າໝາຍ
	ກັນການເຮັດໃຫ້ຊີວະນາໆພັນເສື່ອມໂຊມ ໂດຍການບັງຄັບໃຊ້ລະບຽບກົດໝາຍຢ່າງເຄັ່ງຄັດ ຄຽງຄູ່ກັບການສ້າງ ຄວາມເຂັ້ມແຂງໃຫ້ຊາວບ້ານ ເຂົ້າມາມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້.
ຍຸດທະສາດການ ພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030	- ການຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ມາດຕະການການປັບຕົ ວເຂົ້າກັບການປ່ຽນແປງດິນຟ້າ ອາກາດ ຈະຖືກດັດປັບໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມ ແລະ ລະ ບົບນິເວດກະສິກຳຂອງແຕ່ລະເຂດ. - ຊຸກຍູ້ສິ່ງເສີມໃຫ້ກ້ວາງຂວາງການຜະລິດໃນເຊິງນິເວດແບບຍືນຍົງ ໂດຍອີງໃສ່ຈຸດພິເສດຂອງແຕ່ລະຂົງເຂດ. - ເພີ່ມຜະລິດຕະພາບ ແລະ ປັບປຸງການຜະລິດກະສິກຳຫັນໄປສູ່ທັນສະໄໝ ກ້າວໄປສູ່ການຜະລິດສີຂຽວໃນຕ່ອງໂສ້ ຄຸນຄ່າ ເພື່ອຊ່ວຍຊາວກະສິກອນຜູ້ທຸກຍາກ ໂດຍເນັ້ນເປົ້າໝາຍໄປທີ່ຕະຫຼາດພາຍໃນປະເທດ, ປະຈຳພາກພື້ນ ແລະ ສາກົນ ອີງໃສ່ທ່າແຮງຂອງອົງການຈັດຕັ້ງຊາວກະສິກຳລະດັບຄອບຄົວ ສົມທົບກັບພາກເອກະຊົນ ເພື່ອລົງທຶນໃນ ຂະແໜງການຜະລິດດັ່ງກ່າວ. - ການຄຸ້ມຄອງປ່າໄມ້ແບບຍືນຍົງຈະຊ່ວຍອະນຸລັກຊີວະນາໆພັນ ແລະ ນຳໄປສູ່ການເພີ່ມຂຶ້ນຂອງເນື້ອທີ່ປົກຫຸ້ມ ປ່າໄມ້ໃນທົ່ວປະເທດ ກໍຄືເພີ່ມຄວາມອຸດົມສົມບູນໃຫ້ປ່າໄມ້ ເຮັດໃຫ້ການບໍລິການດ້ານສິ່ງແວດລ້ອມມີຄຸນຄ່າ ນຳ ຜົນປະໂຫຍດມາສູ່ປະຊາຊົນທ້ອງຖິ່ນ, ພາກລັດ ແລະ ເອກະຊົນ ຕະຫຼອດຮອດຜູ້ລົງທຶນ ແລະ ຜູ້ປະກອບການໃນ ຂະແໜງປ່າໄມ້ຢ່າງທົ່ວເຖິງ ແລະ ຍຸດຕິທຳ.
ຍຸດທະສາດຊີວະ ນາໆພັນແຫ່ງຊາດ ແລະ ແຜນ ປະຕິບັດງານ (2016-2025)	- ການປົກປັກຮັກສາລະບົບນິເວດທີ່ອຸດົມສົມບູນ, ມີຄວາມຫຼາກຫຼາຍ ແລະ ສຳຄັນຕໍ່ເສດຖະກິດ (ເຊັ່ນ: ການຕິດ ຕາມກວດກາ ແລະ ການເພີ່ມທະວີການນຳໃຊ້ລະ ບຽບກົດໝາຍປ່າໄມ້, ການເພີ່ມຈຳນວນຄອບຄົວທີ່ໄດ້ຮັບຜົນປະ ໂຫຍດຈາກການຄຸ້ມຄອງປ່າໄມ້ ໂດຍປະຊາຊົນ ມີສ່ວນຮ່ວມ ໃນເຂດທີ່ມີການທຳລາຍປ່າໄມ້ ແລະ ຊີວະນາໆພັນທີ່ ຮ້າຍແຮງ). - ການເຊື່ອມໂຍງຄຸນຄ່າຂອງຊີວະນາໆພັນເຂົ້າກັບເສດຖະກິດ-ສັງຄົມໃນການຕັດສິນບັນຫາ (ເຊັ່ນ: ການວາງແຜນ ໂດຍອີງໃສ່ພື້ນທີ່ໃນການພັດທະນາ ຫຼື ວາງແຜນກິດຈະກຳ). - ເພີ່ມທະວີພື້ນຖານຄວາມຮູ້ກ່ຽວກັບຂໍ້ມູນຂ່າວສານ ແລະ ຄຸນຄ່າທາງດ້ານຊີວະນາໆພັນ. - ປັບປຸງການຕິດຕໍ່ສື່ສານ, ການສຶກສາໃຫ້ຄວາມຮູ້ ແລະ ການສ້າງຈິດສຳນຶກໃຫ້ມະຫາຊົນ ກ່ຽວກັບຊີວະນາໆພັນ. - ກະກຽມ ແລະ ຈັດຕັ້ງປະຕິບັດແຜນການ ແລະ ແຜນງານຢ່າງມີປະສິດທິພາບ.

2.2.2. ການເຊື່ອມໂຍງແຜນປະຕິບັດງານເຂົ້າກັບ ບັນດາຍຸດທະສາດ ແລະ ແຜນການ ກ່ຽວກັບການປ່ຽນແປງດິນຟ້າອາກາດ *ຍຸດທະສາດແຫ່ງຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ* ໄດ້ກຳນົດບັນດາກອບໜ້າວຽກເບື້ອງຕົ້ນ ທີ່ເປັນແນວທາງໃຫ້ແກ່ການຈັດຕັ້ງປະ ຕິບັດຈຸດປະສົງ ແລະ ມາດຕະການ ອັນສຳຄັນຂອງຂະແໜງການກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ. ສປປ ລາວ ກຳລັງສ້າງ *ກົດ ໝາຍວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ* ຊຶ່ງຄາດວ່າຈະສຳເລັດໃນປີ 2017 . ແຜນປະຕິບັດງານ REDD+ ຂັ້ນແຂວງ (PRAP) ແມ່ນຊ່ວຍສະໜັບສະໜູນເປົ້າໝາຍ ແລະ ຄາດໝາຍທີ່ໄດ້ກຳນົດໄວ້ໃນຍຸດທະສາດວ່າດ້ວຍການປ່ຽນແປງດິນຟ້າອາກາດແຫ່ງ ຊາດ ແລະ ຊ່ວຍປະຕິບັດຕາມຄຳໝັ້ນສັນຍາຂອງລັດຖະບານທີ່ລະບຸໄວ້ໃນເອກະສານການປະກອບສ່ວນຂອງ ສປປ ລາວ (NDC) ທີ່ໄດ້ ສະເໜີຕໍ່ສົນທິສັນຍາຂອງສະຫະປະຊາຊາດວ່າດ້ວຍການປ່ຽນດິນຟ້າອາກາດ (UNFCCC).

ເອກະສານການປະກອບສ່ວນຂອງ ສປປ ລາວ (NDC) ແມ່ນໄດ້ເນັ້ນເຖິງການຕົກລົງເຫັນດີ ແລະ ຄວາມພະຍາຍາມ ຂອງ ສປປ ລາວ ຕໍ່ ກັບວຽກງານການປ່ຽນແປງດິນຟ້າອາກາດ ທີ່ມີສ່ວນກ່ຽວຂ້ອງຂອງຫຼາຍຂະແໜງການ. ການຈັດຕັ້ງປະຕິບັດຕາມພັນທະຂອງລັດຖະບານ ແມ່ນໄດ້ສະແດງອອກ ຢູ່ໃນແຜນຍຸດທະສາດແຫ່ງຊາດ ແລະ ຍຸດທະສາດຂອງຂະແໜງການ, ພ້ອມທັງຍຸດທະສາດແຫ່ງຊາດ ວ່າດ້ວຍການ ປ່ຽນແປງດິນຟ້າອາກາດ. ໃນດ້ານຂອງການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ, ລັດຖະບານໄດ້ອອກຍຸດທະສາດປ່າໄມ້ຮອດປີ 2020 ເພື່ອເພີ່ມຄວາມປົກຫຸ້ມຂອງປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ດິນທົ່ວປະເທດ, ເພີ່ມການສິ່ງອອກພະລັງງານໄຟຟ້ານ້ຳຕົກໄປຍັງປະ ເທດເພື່ອນບ້ານ ແລະ ເພີ່ມອັດຕາສ່ວນການນຳໃຊ້ເຊື້ອເພີງຊີວະພາບເຂົ້າໃນການຂົນສົ່ງ ແລະ ເພີ່ມມາດຕະການອື່ນໆ. ໃນດ້ານການປັບ

ຕົວ, ໃນເອກະສານການປະກອບສ່ວນຂອງ ສປປ ລາວ (NDC) ສະທ້ອນໃຫ້ເຫັນເຖິງຄວາມຕັ້ງໃຈຂອງລັດຖະບານໃນການເພີ່ມຄວາມສາມາດ ຂອງຂະແໜງການເສດຖະກິດ ແລະ ຂະແໜງການຊັບພະຍາກອນທຳມະຊາດ ຕໍ່ກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ. ພ້ອມກັນນັ້ນ ກໍເພີ່ມທະວີການພົວພັນຮ່ວມມື ແລະ ການເປັນຄູ່ຮ່ວມງານໃນການຫຼຸດຜ່ອນຄວາມສ່ຽງ ຂອງ ສປປ ລາວ ຈາກການປ່ຽນແປງຂອງດິນຟ້າອາກາດ . ສະຫຼຸບໄດ້ວ່າ, ຈຸດປະສົງທົ່ວໄປ ຂອງເອກະສານການປະກອບສ່ວນຂອງປະເທດແມ່ນເພື່ອ *"... ສ້າງຄວາມ ອາດສາມາດ ໃນການຕິດຕາມກວດກາ ແລະ ການປະເມີນ ໃນການຈັດຕັ້ງປະຕິບັດ ນະໂຍບາຍໃຫ້ສຳເລັດໂດຍການສ້າງນະໂຍບາຍ, ບົດແນະນຳ ແລະ ຂໍ້ມູນໃໝ່ ... ພ້ອມທັງ ພັດທະນາ ແລະ ຈັດຕັ້ງປະຕິບັດ ມາດຕະການ ຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ແລະ ການປັບຕົວໃຫ້ເຂົ້າກັບ ການປ່ຽນແປງດິນຟ້າອາກາດ ທີ່ປະ ຫຍັດງົບປະມານ ແຕ່ຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ".* ມາຮອດປັດຈຸບັນ, ລັດຖະບານ ໄດ້ຈັດສັນງົບປະມານ 12.5 ລ້ານ ໂດລາ ເພື່ອຈັດຕັ້ງປະຕິບັດ ບັນດາມາດຕະການ ທີ່ໄດ້ລະບຸໄວ້ໃນເອກະສານ ການປະກອບສ່ວນຂອງປະເທດ (NDC), ແຕ່ພ້ອມດຽວກັນກໍໄດ້ສະແດງໃຫ້ເຫັນເຖິງຄວາມຈຳເປັນໃນການສະໜັບສະໜູນດ້ານການເງິນຈາກພາຍນອກປະມານ 1.5 ຕື້ໂດລາ ເພື່ອນຳ ມາຈັດຕັ້ງປະຕິບັດ ພັນທະຂອງລັດຖະບານ ຕໍ່ກັບການຄຸ້ມຄອງການປ່ຽນແປງດິນຟ້າອາກາດ.

ຕາຕະລາງ 3. ເປົ້າໝາຍຂອງຂະແໜງການກ່ຽວຂ້ອງ ອີງໃສ່ຍຸດທະສາດການປ່ຽນແປງດິນຟ້າອາກາດຂອງ ສປປ ລາວ (2010)[5]

ຂະແໜງການ	ລາຍລະອຽດເປົ້າໝາຍ
ກະສິກຳ	- ເຊື່ອມໂຍງການປ່ຽນແປງດິນຟ້າອາກາດເຂົ້າກັບຂະແໜງການກ່ຽວຂ້ອງ ແລະ ເພີ່ມທະວີສ້າງຄວາມເຂັ້ມແຂງໃຫ້ຂະແໜງກະສິກຳ. - ຊຸກຍູ້ການກະສິກຳແບບອະນຸລັກ ແລະ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ. - ປັບປຸງ ແລະ ຕິດຕາມກວດກາຊັບພະຍາກອນນ້ຳ, ລະບົບສະໜອງນ້ຳ ແລະ ລະບົບປ້ອງກັນໄພນ້ຳຖ້ວມ. - ເພີ່ມທະວີຄວາມເຂັ້ມແຂງດ້ານການເງິນ ແລະ ສ້າງຄວາມເຂັ້ມແຂງໃຫ້ຊາວກະສິກອນ, ສະໜັບສະໜູນຊຸມຊົນທ້ອງຖິ່ນໃນການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ. - ເພີ່ມທະວີການສຶກສາຄົ້ນຄ້ວາໃນຂະແໜງການກ່ຽວຂ້ອງ ເພື່ອປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ. - ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ແລະ ຊຸກຍູ້ວຽກງານສົ່ງເສີມ (ໃຫ້ພະນັກງານ ແລະ ຊາວກະສິກອນ). - ເພີ່ມທະວີການຮ່ວມມື ແລະ ການປະສານງານລະຫວ່າງຂະແໜງການ.
ປ່າໄມ້ ແລະ ການນຳໃຊ້ທີ່ດິນ	- ເຊື່ອມໂຍງການປ່ຽນແປງດິນຟ້າອາກາດເຂົ້າກັບຍຸດທະສາດປ່າໄມ້ ແລະ ກົດຈະກຳການຄຸ້ມຄອງປ່າໄມ້. - ຊຸກຍູ້ສົ່ງເສີມກົດຈະກຳທີ່ປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ. - ປັບປຸງລະບົບການຄຸ້ມຄອງປ່າໄມ້ ເພື່ອຊຸກຍູ້ຊີວິດການເປັນຢູ່ຂອງຊາວຊົນນະບົດໃຫ້ດີຂຶ້ນ. - ເພີ່ມທະວີວຽກງານສ້າງຄວາມເຂັ້ມແຂງໃຫ້ປະຊາຊົນທີ່ດຳລົງຊີວິດຕິດພັນກັບປ່າໄມ້. - ເພີ່ມທະວີການຄຸ້ມຄອງ ແລະ ປົກປັກຮັກສາອະນຸລັກຊີວະນາໆພັນ. - ຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ ຫັນໄປສູ່ການຄຸ້ມຄອງ ແລະ ຟື້ນຟູປ່າໄມ້. - ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ ແລະ ແຫຼ່ງເກັບກັກກາກບອນ ດ້ວຍການຊຸກຍູ້ສົ່ງເສີມທາງເລືອກໃນການນຳໃຊ້ທີ່ດິນແບບຍືນຍົງ ສອດຄ່ອງກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຊຸກຍູ້ສ້າງອາຊີບທີ່ມີຄວາມໝັ້ນຄົງ. - ຊຸກຍູ້ສົ່ງເສີມການນຳໃຊ້ເຊື້ອເພີງທົດແທນໃຫ້ປະຊາຊົນທີ່ອາໄສປ່າ ລວມທັງການນຳໃຊ້ສິ່ງເສດເຫຼືອຈາກພືດກະສິກຳ ຫຼື ໄມ້ອຸດສາຫະກຳທີ່ປູກ. - ສະກັດກັ້ນໄຟໄໝ້ລາມປ່າ ໂດຍສ້າງກົດລະບຽບ ແລະ ວາງມາດຕະການ ເພື່ອສ້າງຈິດສຳນຶກ, ສະກັດກັ້ນ ແລະ ປ້ອງກັນໄຟປ່າ. - ເຊື່ອມໂຍງວຽກງານຄຸ້ມຄອງປ່າໄມ້ ເຂົ້າກັບການຜະລິດກະສິກຳ-ປ່າໄມ້ແບບຄົບວົງຈອນ, ເຄື່ອງປ່າຂອງດົງ ແລະ ການຄຸ້ມຄອງປ່າໄມ້ໂດຍປະຊາຊົນມີສ່ວນຮ່ວມ. - ກຳນົດເຂດນຳໃຊ້ທີ່ດິນ ແລະ ວາງແຜນນຳໃຊ້ທີ່ດິນດ້ວຍຫຼາຍຮູບແບບໃນໄລຍະກາງ ແລະ ໄລຍະຍາວ, ຈຳກັດການບຸກລຸກ

[5]ສ.ປ.ປ.ລາວ (2010)

ຕາຕະລາງ 3. ເປົ້າໝາຍຂອງຂະແໜງການກ່ຽວຂ້ອງ ອີງໃສ່ຍຸດທະສາດການປ່ຽນແປງດິນຟ້າອາກາດຂອງ ສປປ ລາວ(2010)[5]

ຂະແໜງການ	ລາຍລະອຽດເປົ້າໝາຍ
	ເຂົ້າໃນເຂດປ່າປອ້ງກັນ ແລະ ປ່າສະຫງວນແຫ່ງຊາດ. - ຕິດຕາມການເຂົ້າຫາຕະຫຼາດການາກບອນ ແລະ ເຊື່ອມໂຍງເຂົ້າກັບວຽກງານ REDD+ ໂດຍໄວ ດ້ວຍການສ້າງ ແລະ ຈັດຕັ້ງປະຕິບັດແຜນງານຟື້ນຟູ ແລະ ປູກປ່າໃຫ້ຫຼາຍຂຶ້ນ.
ນ້ຳ/ເຂື່ອນ ໄຟຟ້າ	- ປະເມີນຄວາມບໍ່ໝັ້ນຄົງຂອງອຸດສາຫະກຳດ້ານເຂື່ອນໄຟຟ້າທີ່ມີຕໍ່ການປ່ຽນແປງດິນຟ້າອາກາດ. - ສ້າງຍຸດທະສາດການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເພື່ອເພີ່ມຄວາມຄ່ອງແຄ້ວ ແລະ ຂີດຄວາມສາມາດໃນການປັບຕົວ. - ເຊື່ອມໂຍງມາດຕະການແກ້ໄຂການປ່ຽນແປງດິນຟ້າອາກາດ ເຂົ້າກັບຍຸດທະສາດການຄຸ້ມຄອງດ້ານຄວາມສ່ຽງ ແລະ ຂັ້ນຕອນການອອກແບບ/ວາງແຜນ.

2.2.3. ການເຊື່ອມໂຍງແຜນປະຕິບັດງານເຂົ້າກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ແລະ ເມືອງ

ແຜນປະຕິບັດງານ REDD+ ຂັ້ນແຂວງ ແມ່ນເອກະສານຍຸດທະສາດ ທີ່ມີຈຸດປະສົງຊຸກຍູ້ວຽກງານຄຸ້ມຄອງປ່າໄມ້ໃຫ້ດີຂຶ້ນ ເປັນການປະກອບສ່ວນເຂົ້າໃນການຫຼຸດຜ່ອນ/ແກ້ໄຂສະພາບການປ່ຽນແປງດິນຟ້າອາກາດ ໂດຍສອດຄ່ອງກັບແຜນງານດ້ານວຽກງານປ່າໄມ້ແຫ່ງຊາດ ແລະ ລະດັບແຂວງ. ເອກະສານຍຸດທະສາດດັ່ງກ່າວຍັງເປັນແຜນແມ່ບົດສຳລັບວຽກງານຄຸ້ມຄອງປ່າໄມ້ຂອງແຂວງອີກດ້ວຍ. ແຜນພັດທະນາກະສິກຳ ແລະ ປ່າໄມ້ ຂອງແຂວງ ແລະ ເມືອງ ປີ 2016 – 2020 ແມ່ນຍຸດທະສາດທີ່ສຳຄັນຂອງແຂວງ ຊຶ່ງໄດ້ກຳນົດເປົ້າໝາຍຢ່າງຄັກແນ່ຂອງຂະແໜງປ່າໄມ້ໃນລະດັບແຂວງ. ນອກນັ້ນ, ສາເຫດຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ມັກຈະຕິດພັນ ຫຼື ເກີດຈາກປັດຈັ ຍອື່ນໆທີ່ຢູ່ນອກຂະແໜງປ່າໄມ້. ແຜນປະຕິບັດງານ REDD+ ຂັ້ນແຂວງ ຈຶ່ງຮຽກຮ້ອງໃຫ້ຕ້ອງມີການຮ່ວມມືປະສານງານຢ່າງໃກ້ສິດລະຫວ່າງຂະແໜງການຕ່າງໆ ເພື່ອໃຫ້ແຜນງານ ແລະ ເປົ້າໝາຍໄປໃນທິດທາງດຽວກັນ. ສະນັ້ນ, ການທົບທວນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງ, ຍຸດທະສາດຮອດປີ 2025 ແລະ ວິໄສທັດ ປີ 2030 ຈຶ່ງມີຄວາມຈຳເປັນ ບໍ່ພຽງແຕ່ເພື່ອຫຼີກຫຼ່ຽງຂໍ້ຂັດແຍ່ງລະຫວ່າງບັນດາຂະແໜງການຕ່າງໆ ແຕ່ຍັງເປັນຊ່ອງທາງໃຫ້ເກີດມີການຮ່ວມມືປະສານງານກັນຫຼາຍຂຶ້ນ.

ຂະແໜງກະສິກຳ ແລະ ປ່າໄມ້

ແຜນພັດທະນາກະສິກຳ ແລະ ປ່າໄມ້ (2016-2020) ຂອງແຂວງຫຼວງພະບາງ

ຂະແໜງການ	ຈຸດປະສົງລະດັບຄາດໝາຍແລະ ກິດຈະກຳ
ປ່າໄມ້	• ກຳນົດເຂດຟື້ນຟູປ່າໄມ້ ແລະ ເຂດປູກໄມ້ ເພື່ອປະກອບສ່ວນເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນ 70% ໃນປີ 2020. • ປູກໄມ້ໃຫ້ໄດ້ໃນເນື້ອທີ່ 12.500 ເຮັກຕາ ແລະ ປົກປັກຮັກສາເນື້ອທີ່ 255,271 ເຮັກຕາ ເພື່ອໃຫ້ປ່າຟື້ນຟູ. • ກຳນົດເຂດນຳໃຊ້ທີ່ດິນ ແລະ ຈັດສັນເຂດທຳການຜະລິດກະສິກຳໃຫ້ສຳເລັດໃນທົ່ວແຂວງ. • ສົ່ງເສີມປູກໄມ້ສັກ, ໄມ້ນ້ຳມັນ, ໄມ້ໃຫ້ໝາກ, ໄມ້ອຸດສາຫະກຳຊະນິດພັນຕ່າງໆ ເພື່ອສ້າງລາຍຮັບໃຫ້ປະຊາຊົນໃນປະຈຸບັນ ກໍຄືອະນາຄົດ.
ການຜະລິດກະສິກຳສຳລັບສະບຽງອາຫານ	ປີ 2020, ຜະລິດເຂົ້າໃຫ້ໄດ້ 120.659 ໂຕນໃນເນື້ອທີ່ 34.108 ເຮັກຕາທັງສອງລະດູ, ເນື້ອທີ່ສຳລັບນາປີ ມີ 15.370 ເຮັກຕາ, ນາແຊງ 2.338 ເຮັກຕາ, ເນື້ອທີ່ໄຮ່ຄົງທີ່ 16.500 ເຮັກຕາ.
ການຜະລິດກະສິກຳເປັນສິນຄ້າ	ຊຸກຍູ້ສິ່ງເສີມການຜະລິດກະສິກຳເປັນສິນຄ້າເຊັ່ນ: ປູກສາລີໃຫ້ໄດ້ 44.391 ໂຕນ ໃນເນື້ອທີ່ 10.320 ເຮັກຕາ, ໝາກເດືອຍ 28.874 ໂຕນ ເນື້ອທີ່ 11.511 ເຮັກຕາ, ໝາກງາ 4.823 ໂຕນ ເນື້ອທີ່ 3.711 ເຮັກຕາ.

ການລ້ຽງສັດ	• ຄາດໝາຍຂະຫຍາຍຝູງສັດມີດັ່ງນີ້: ງົວ 94.932 ໂຕ ຫຼື ເທົ່າກັບ 2 ເປີເຊັນ, ຄວາຍ 56.799 ໂຕ ຫຼື 1.5 ເປີເຊັນ, ໝູ 225.796 ໂຕ ຫຼື 2 ເປີເຊັນ, ແບ້ 137.260 ໂຕ ຫຼື 12 ເປີເຊັນ ແລະ ສັດປີກ 3.216.949 ໂຕ ຫຼື 6 ເປີເຊັນ. • ຊຸກຍູ້ສົ່ງເສີມການລ້ຽງສັດລະດັບຄອບຄົວອີງໃສ່ເງື່ອນໄຂຂອງຄອບຄົວ ແລະ ການລ້ຽງສັດເປັນຟາມຂະໜາດນ້ອຍ-ກາງ ແລະ ໃຫຍ່.
ຊົນລະປະທານ	• ກໍ່ສ້າງລະບົບຊົນລະປະທານ 8 ແຫ່ງ ໃນປີ 2016-2020. ສ້ອມແປງອ່າງເກັບນ້ຳ ແລະ ຄອງນ້ຳທຳມະຊາດ (ຄອງດິນ), ກໍ່ສ້າງຄອງນ້ຳຄອນກົດຍາວ 12.600 ແມ່ດ. ໃນປີ 2020, ລະບົບຊົນລະປະທານສາມາດສະໜອງນ້ຳໃຫ້ເນື້ອທີ່ກະສິກຳ 13.928 ເຮັກຕາ ລວມທັງເນື້ອທີ່ນາແຊງ 3.768 ເຮັກຕາ.
(ການຮ່ວມມືກັບຂະແໜງການອື່ນ)	• ຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ແລະ ການລ້ຽງສັດ (ຮູບແບບ: ປູກ 2 ລ້ຽງ 1 ຫຼື ປູກ 1 ລ້ຽງ 2) ແລະ ປູກໄມ້ອຸດສາຫະກຳໄລຍະສັ້ນ, ກາງ ແລະ ຍາວ ຄຽງຄູ່ກັບການລ້ຽງສັດ.

ຂະແໜງປ່າໄມ້

ແຜນຈັດຕັ້ງປະຕິບັດວຽກງານປ່າໄມ້ (2016-2020) ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ (ສະບັບເລກທີ 452/ ຂປມ.ຫຼບ, ລົງວັນທີ 23 ມີຖຸນາ 2016)

	ຈຸດປະສົງ, ລະດັບຄາດໝາຍ ແລະ ກິດຈະກຳ
1	ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ໄດ້ 70%
2	ຫຼຸດຜ່ອນອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້
3	ສ້າງ ແລະ ປັບປຸງນິຕິກຳກ່ຽວກັບປ່າໄມ້ ເພື່ອຮັບປະກັນໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ໂຄສະນາເຜີຍແຜ່ທິດທາງ ແລະ ນະ�โยบายຂອງພັກ, ລະບຽບກົດໝາຍຂອງລັດໃຫ້ສັງຄົມຮັບຮູ້
4	ກຳນົດເຂດປູກໄມ້ຟື້ນຟູປ່າໃຫ້ໄດ້ 128.000 ເຮັກຕາ ໃນເຂດປ່າຜະລິດ 2 ແຫ່ງ
5	ສົ່ງເສີມພາກລັດ ແລະ ເອກະຊົນປູກໄມ້ໃຫ້ໄດ້ 12.500 ເຮັກຕາ ໃນເຂດປ່າຜະລິດ 2 ແຫ່ງ
6	ສຳຫຼວດ ແລະ ກຳນົດ 3 ປະເພດປ່າ ແລະ ປ່າທີ່ຍັງບໍ່ທັນໄດ້ຈັດສັນໃຫ້ໄດ້ 686.475 ເຮັກຕາ ຫຼື ເທົ່າກັບ 34% (ເຂດຮັກສາແຫຼ່ງນ້ຳ – ທັງໝົດ 498.237,41 ເຮັກຕາ ຊຶ່ງເປັນສາຂາຂອງແມ່ນ້ຳຂອງໃນທົ່ວແຂວງ)
7	ປົກປັກຮັກສາສິ່ງແວດລ້ອມ, ດິນ, ແຫຼ່ງນ້ຳ ແລະ ດິນຟ້າອາກາດ
8	ປົກປັກຮັກສາຊະນິດພັນພືດ ແລະ ສັດ ພ້ອມຖິ່ນທີ່ຢູ່ອາໄສຂອງພວກມັນ ໂດຍສະເພາະຈຳພວກທີ່ກຳລັງຖືກໄພຂົ່ມຂູ່
9	ປັບປຸງການຈັດຕັ້ງ ແລະ ພັດທະນາຊັບພະຍາກອນມະນຸດ ໃນຂະແໜງປ່າໄມ້ແຕ່ລະດັບແຂວງລົງຫາຮາກຖານ (ລະດັບບ້ານ)

ແຜນການ 5 ປີ (2016-2020) ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຫຼວງພະບາງ ສະບັບເລກທີ 793/ ພຊສ, ລົງວັນທີ 4 ກຸມພາ 2015

	ຈຸດປະສົງ, ລະດັບຄາດໝາຍ ແລະ ກິດຈະກຳ
1	ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ໄດ້ 70%
2	ຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+)
3	ເຜີຍແຜ່ກົດໝາຍປ່າໄມ້, ກົດໝາຍອື່ນໆ ແລະ ຂໍ້ກຳນົດກົດລະບຽບ ເພື່ອຄຸ້ມຄອງປ່າໄມ້ແບບຍືນຍົງ, ປົກປັກຮັກສາ, ຟື້ນຟູປ່າ ແລະ ຊັບພະຍາກອນທຳມະຊາດ ພ້ອມທັງບັງຄັບໃຊ້ກົດໝາຍ
4	ກຳນົດເຂດຟື້ນຟູປ່າເນື້ອທີ່ 434.153 ເຮັກຕາ, ໃນນັ້ນປ່າຟື້ນຟູທຳມະຊາດ433.953 ເຮັກຕາ ແລະ ປ່າປູກ 200 ເຮັກຕາ
5	ຊຸກຍູ້ສົ່ງເສີມການຄຸ້ມຄອງແບບຍືນຍົງ ແລະ ຕິດຕາມກວດກາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ
6	ສຳຫຼວດ ແລະ ຂຶ້ນບັນຊີຊີວະນາໆພັນ, ສັດນ້ຳ-ສັດປ່າ ລວມທັງບັນຊີຊະນິດທີ່ຫວງຫ້າມ, ຫາຍາກ ແລະ ໃກ້ຈະສູນພັນ
7	ສຳຫຼວດແລະ ປັກຫຼັກໝາຍເຂດແດນປ່າສະຫງວນ ແລະ ປ່າປ້ອງກັນ ຢູ່ 12 ເມືອງ

ຂະແໜງທີ່ດິນ

ເປົ້າໝາຍ ແລະ ຈຸດສຸມຂອງກິດຈະກຳຂອງແຜນການ 5 ປີ (2016 – 2020) ສຳລັບການຄຸ້ມຄອງ ແລະ ພັດທະນາທີ່ດິນ ຢູ່ ແຂວງຫຼວງພະບາງ (ຂໍ້ມູນຂະແໜງທີ່ດິນ)

	ຈຸດປະສົງ, ລະດັບຄາດໝາຍ ແລະ ກິດຈະກຳ
1	ສຳຫຼວດຈັດສັນທີ່ດິນ ຢູ່ ຂັ້ນແຂວງ ແລະ ເມືອງ
2	ສຳຫຼວດຈັດສັນທີ່ດິນ ຢູ່ ຂັ້ນບ້ານ, ກຸ່ມບ້ານ ຢູ່ 8 ເມືອງ: ຫຼວງພະບາງ, ຈອມເພັດ, ຊຽງເງີນ, ນານ, ປາກອູ, ນ້ຳບາກ, ງອຍ, ວຽງຄຳ
3	ທົບທວນແຜນຈັດສັນການນຳໃຊ້ທີ່ດິນ ຢູ່ 4 ເມືອງ: ພູຄູນ, ໂພນໄຊ, ປາກແຊງ ແລະ ໂພນທອງ
4	ອອກໃບຕາດິນ 30.000 ໃບໃນທົ່ວແຂວງ
5	ເຮັດສຳມະໂນທີ່ດິນສຳລັບທີ່ດິນບ້ານ ແລະ ຄອບຄົວ ໃນ 12 ເມືອງ
6	ຕິດຕາມກວດກາການສຳປະທານທີ່ດິນ, ການເຊົ່າທີ່ດິນຂອງໂຄງການ ເພື່ອຈັດຕັ້ງປະຕິບັດຕາມເງື່ອນໄຂ ແລະ ຂໍ້ກຳນົດຂອງສັນຍາ
7	ປັບປຸງລະບົບຄຸ້ມຄອງຂໍ້ມູນກ່ຽວກັບທີ່ດິນຈາກການເກັບຮັກສາລະບົບເອກະສານມາເປັນລະບົບດິຈິຕອນ ຫຼື LLMS ເພື່ອສາມາດນຳໃຊ້ໃນທົ່ວແຂວງ
8	ປະເມີນລາຄາ ແລະ ສ້າງແຜນທີ່ໆດິນ ໃນ 12 ເມືອງ
9	ເກັບຄ່າທຳນຽມ/ພາສີທີ່ດິນໃນທົ່ວແຂວງໃຫ້ໄດ້ 24.630.939.000 ກີບ

ການປ່ຽນແປງດິນຟ້າອາກາດ ແລະ ການຄວບຄຸມໄພພິບັດ

ແຜນການ 5 ປີ (2016-2020) ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ ສະບັບເລກທີ 793/ ພຊສ.ຫຼບ ລົງວັນທີ 4 ກຸມພາ 2015

	ຈຸດປະສົງ, ລະດັບຄາດໝາຍ ແລະ ກິດຈະກຳ
1	ແຜນການ ແລະ ຍຸດທະສາດຄວບຄຸມໄພພິບັດຂອງແຂວງ (2016-2020), ສ້າງແຜນປະຕິບັດງານຂອງແຂວງກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນໄລຍະຍາວ ແລະ ແຜນປະຕິບັດງານກ່ຽວກັບ REDD+
2	ຄະນະກຳມະການຄວບຄຸມ ແລະ ປ້ອງກັນໄພພິບັດແຫ່ງຊາດ, ຄະນະກຳມະການກ່ຽວກັບການປ່ຽນແປງດິນຟ້າອາກາດຂັ້ນແຂວງ ຈະໄດ້ຮັບການແຕ່ງຕັ້ງ ເພື່ອດຳເນີນການສຳຫຼວດເກັບກຳຂໍ້ມູນເຂດທີ່ຫຼໍ່ແຫຼມ ແລະ ກະທົບງ່າຍຕໍ່ການປ່ຽນແປງດິນຟ້າອາກາດ ແລະ ສ່ຽງຕໍ່ໄພພິບັດ ເປັນການປະກອບສ່ວນເຂົ້າໃນແຜນການປັບຕົວ ແລະ ການກະກຽມຄວາມພ້ອມສຳລັບການປ່ຽນແປງດິນຟ້າອາກາດ ແລະ ການຄວບຄຸມ/ປ້ອງກັນໄພພິບັດຂັ້ນແຂວງ ແລະ ເມືອງ
3	ກິດຈະກຳກ່ຽວກັບການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດ ແລະ REDD+ ຈະເຊື່ອມເຂົ້າໃນຍຸດທະສາດ ແລະ ແຜນປະຕິບັດງານຂອງຂະແໜງປ່າໄມ້ ແລະ ໂຍທາທິການ-ຂົນສົ່ງ ແນໃສ່ເພື່ອສ້າງຂີດຄວາມສາມາດ ກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ REDD+
4	ແຜນຄວບຄຸມ ແລະ ປ້ອງກັນໄພພິບັດ (ລະບົບເຕືອນໄພ, ມາຕະການຕອບໂຕ້, ການບັນເທົາທຸກໃນຍາມສຸກເສີນ, ການຍົກຍ້າຍປະຊາຊົນ ແລະ ຊັບສິນ, ການຟື້ນຟູຫຼັງໄພພິບັດ) ຈະຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ຢູ່ ຂັ້ນແຂວງ
5	ໂຄງການທົດລອງປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດ ຈະເຊື່ອມໂຍງເຂົ້າກັບແຜນຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ
6	ສ້າງຈິດສຳນຶກກ່ຽວກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ເພື່ອຮັບປະກັນໃຫ້ການນຳໃຊ້ຊັບພະຍາກອນທຳມະຊາດມີປະສິດທິຜົນ ແລະ ຍືນຍົງ, ໂຄສະນາເຜີຍແຜ່ທິດທາງນະ�โยบายຂອງລັດ ກ່ຽວກັບການຄຸ້ມຄອງນຳໃຊ້ຊັບພະຍາກອນທຳມະຊາດ ຊຸກຍູ້ໃຫ້ປະຊາຊົນຢູ່ທ້ອງຖິ່ນເຂົ້າຮ່ວມໃນຂະບວນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການແກ້ໄຂບັນຫາຕ່າງໆ

ຂະແໜງການອື່ນໆ

ນະໂຍບາຍ	ຈຸດປະສົງ, ລະດັບຄາດໝາຍ ແລະ ກິດຈະກຳ
ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຮອດປີ 2025 ແລະ ວິໄສທັດປີ 2030 ຂອງແຂວງຫຼວງພະບາງ	[ວິໄສທັດ 2030] · ຮອດປີ 2030: ຮັບປະກັນໃຫ້ການເປັນສູນກາງແຫ່ງການທ່ອງທ່ຽວດ້ວຍມາດຕະຖານສາກົນ ໂດຍຕິດພັນກັບການປົກປັກຮັກສາ ແລະ ອະນຸລັກເປັນເມືອງມໍລະດົກໂລກ, ຮັກສາຄວາມຮູ້ທາງດ້ານວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ, ຊຸກຍູ້ສົ່ງເສີມການຜະລິດກະສິກຳສະອາດປອດສານພິດ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ການເປັນຄອບຄົວທີ່ຢູ່ດີກິນດີ. [ຍຸດທະສາດ 2025] · ສົ່ງເສີມການທ່ອງທ່ຽວ, ສ້າງເຂື່ອນໄຟຟ້າ ແລະ ການຜະລິດກະສິກຳສະອາດ ເພື່ອພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ມີຄວາມຍືນຍົງ. · ຊຸກຍູ້ການປູກໄມ້ຟື້ນຟູປ່າ, ການຜະລິດກະສິກຳສະອາດ, ການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອໃຫ້ຫຼວງພະບາງກາຍເປັນເມືອງສີຂຽວ ແລະ ສິ່ງແວດລ້ອມສະອາດຍືນຍົງ. · ຫຼຸດຜ່ອນຄວາມທຸກຍາກ ແລະ ບັນລຸເປົ້າໝາຍ GDP ຕໍ່ຫົວຄົນ: 3.500 - 4.000 ໂດລາສະຫະລັດ ໃນປີ 2025 ແລະ 5.500ໃນປີ 2030.
ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 7 ຂອງແຂວງ (2016-2020)	[ເຂື່ອນໄຟຟ້າ] · ຮອດປີ 2020, ມີທັງໝົດ 9 ໂຄງການທີ່ອອກແບບ ສາມາດຜະລິດກະແສໄຟຟ້າໄດ້ປະມານ 733.2 MW ເພື່ອສະໜອງໃຫ້ຕາຂ່າຍໄຟຟ້າແຫ່ງຊາດ. [ເສັ້ນທາງ] · 95% ຂອງຈຳນວນບ້ານທັງໝົດ ມີເສັ້ນທາງເຂົ້າເຖິງ ແລະ 85% ສາມາດໃຊ້ໄດ້ຕະຫຼອດປີ. [ການທ່ອງທ່ຽວ] · ສົ່ງເສີມການທ່ອງທ່ຽວແບບຍືນຍົງ ດ້ວຍການຍົກສູງຄຸນນະພາບມາດຕະຖານສາກົນ ຕິດພັນກັບທຳມະຊາດ, ປະຫວັດສາດ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ. · ຊຸກຍູ້ປະຊາຊົນເຂົ້າຮ່ວມໃນການສົ່ງເສີມການທ່ອງທ່ຽວ.
ແຜນພັດທະນາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງແຂວງ 2016-2020	[ຊັບພະຍາກອນນ້ຳ, ອຸຕຸນິຍົມ ແລະ ອຸທົກກະສາດ] · ສ້າງແລະ ທົບທວນ ແຜນຄຸ້ມຄອງອ່າງຮັບນ້ຳ (ອ່າງໂຕ່ງ). ສຳຫຼວດ ແລະ ຕິດຕາມກວດກາສະພາບຂອງຊັບພະຍາກອນນ້ຳ ລວມທັງປະລິມານນ້ຳ, ຄຸນນະພາບ, ສະພາບທາງອຸທົກວິທະຍາ ແລະ ພູມີສາດ, ສະພາບທາງເຄມີສາດ ແລະ ຊີວະຟິສິກຂອງນ້ຳເທິງໜ້າດິນ ແລະ ໃຕ້ດິນ. · ສຳຫຼວດຈັດສັນແມ່ນ້ຳ, ອ່າງຮັບນ້ຳ ແລະ ຄຸນນະພາບນ້ຳ ເພື່ອຮັບປະກັນໃຫ້ການຄຸ້ມຄອງຊັບພະຍາກອນນ້ຳມີຄວາມຍືນຍົງ. ຮ່ວມມືກັບຂະແໜງການກ່ຽວຂ້ອງ ແລະ ບັນດາແຂວງທີ່ມີອ່າງເກັບນ້ຳ ເພື່ອປົກປັກຮັກສາລະບົບນິເວດ ໂດຍສະເພາະເລັ່ງໃສ່ອ່າງເກັບນ້ຳໃນ 2 ເຂດບູລິມະສິດຄື: ນ້ຳອູ ແລະ ນ້ຳງື່ມ ຫຼື ເຂດທີ່ມີອ່າງເກັບນ້ຳອື່ນໆ. · ສ້າງຖານຂໍ້ມູນຊັບພະຍາກອນນ້ຳ ແລະ ເຄືອຂ່າຍທີ່ເຊື່ອມຕໍ່ກັນ ຢູ່ ຂັ້ນສູນກາງ ແລະ ທ້ອງຖິ່ນ. · ກໍ່ສ້າງສູນເຕືອນໄພພິບັດຂັ້ນແຂວງ ຢູ່ ເມືອງຫຼວງພະບາງ. [ຊັບພະຍາກອນບໍ່ແຮ່] · ສືບຕໍ່ສົ່ງເສີມການຂຸດຄົ້ນບໍ່ແຮ່ຂອງບໍລິສັດທັງພາຍໃນ ແລະ ຕ່າງປະເທດ, ອຳນວຍຄວາມສະດວກ, ຕິດຕາມ, ກວດກາ ແລະ ປະເມີນຜົນ ເພື່ອຫຼຸດຜ່ອນຜົນກະທົບໃນທາງລົບຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ. ນອກນັ້ນ, ຮັບປະກັນລະບົບນິເວດໃຫ້ອຸດົມສົມບູນ, ປ້ອງກັນສິ່ງແວດລ້ອມ, ປ້ອງກັນການເຊາະເຈື່ອນ, ປ້ອງກັນ ແລະ ປັບປຸງດິນ ຢູ່ 8 ເມືອງເຊັ່ນ: ໂພນທອງ, ວຽງຄຳ, ງອຍ, ປາກອູ, ຈອມເພັດ, ນານ, ຊຽງເງີນ ແລະ ພູຄູນ.

3. ການວິເຄາະສາເຫດທາງກົງ ແລະ ທາງອ້ອມຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ

3.1. ການທຳລາຍປ່າໄມ້ແລະການເຮັດໃຫ້ປ່າໄມ້ເສື່ອມໂຊມຢູ່ແຂວງຫຼວງພະບາງ

3.1.1. ສະພາບປ່າໄມ້ໃນປະຈຸບັນ ແລະ ການປ່ຽນແປງຂອງທີ່ດິນ ແລະ ປ່າໄມ້ ຢູ່ ແຂວງຫຼວງພະບາງ

ອີງໃສ່ການປະເມີນກ່ຽວກັບການນຳໃຊ້ທີ່ດິນ ແລະ ເນື້ອທີ່ປົກຫຸ້ມປ່າໄມ້ ແຂວງຫຼວງພະບາງມີເນື້ອທີ່ປ່າໄມ້ທັງໝົດ 963,837 ເຮັກຕາ ຫຼື ເທົ່າກັບ 48,4 % ຂອງເນື້ອທີ່ທັງໝົດ 1.990.128 ເຮັກຕາ ຂອງແຂວງໃນປີ 2015 (**ຕາຕະລາງ 4**). ນັບແຕ່ປີ 2005 ເປັນຕົ້ນມາ, ເນື້ອທີ່ປ່າໄມ້ໄດ້ຫຼຸດລົງເລື້ອຍໆ ສົງລວມແລ້ວເນື້ອທີ່ປ່າໄມ້ຖືກສູນເສຍທັງໝົດແມ່ນ 34 .428 ເຮັກຕາ ຫຼື ເທົ່າກັບ 1 ,73% ຂອງເນື້ອທີ່ທັງໝົດ ຂອງແຂວງໃນຊ່ວງເວລາ 10 ປີ. ການຟື້ນຟູຂອງປ່າໄມ້ຕາມທຳມະຊາດ ແມ່ນເພີ່ມຂຶ້ນເລັກນ້ອຍແຕ່ປີ 2005 ເປັນຕົ້ນມາ ສ່ວນໃຫຍ່ແມ່ນ ປ່າເລົ່າບ່ອນທີ່ມີການຖາງປ່າເຮັດໄຮ່ແບບເລື່ອນລອຍ. ອີກດ້ານໜຶ່ງ, ປ່າປູກກໍເພີ່ມຂຶ້ນເຊັ່ນກັນຄື 2.366 ເຮັກຕາ ນັບແຕ່ປີ 2005 ເປັນຕົ້ນມາ ກວມເອົາ 0,12% ຂອງເນື້ອທີ່ປ່າໄມ້ໃນທົ່ວແຂວງຫຼວງພະບາງ.

ຕາຕະລາງ 4: ການປ່ຽນແປງຂອງທີ່ດິນ ແລະ ປ່າໄມ້ ຢູ່ ແຂວງຫຼວງພະບາງ2005 - 2015

		ຮຫ	2015		%	2010		%	2005		%
ພື້ນທີ່ປ່າໄມ້	ປ່າດົງດິບ	EF	19,518			19,554			19,647		
	ປ່າພັດໃບປະສົມ	MD	928,211			958,397			964,803		
	ປ່າໂຄກ	DD	8,098			8,153			8,170		
	ປ່າໄມ້ໃບເຂັ້ມ	CF	5			5			5		
	ປ່າໃບກວ້າງປະສົມໃບເຂັ້ມ	MCB	0			0			0		
	ປ່າປູກ	P	8,005	963,837	48.4%	8,028	994,138	50.0%	5,640	998,264	50.2%
ເຂດທີ່ຈະກາຍ ເປັນ ປ່າ	ປ່າໄມ້ປ່ອງ	B	2,725			2,792			2,229		
	ປ່າເລົ່າ	RV	858,234	860,959	43.3%	819,297	822,089	41.3%	801,007	803,236	40.4%
ພື້ນທີ່ພືດພັນອື່ນໆ	ໄຄກາແຈ້ງ	SA	229			229			229		
	ປ່າຕ້ຳ	SR	18,289	18,518	0.9%	18,299	18,528	0.9%	18,231	18,460	0.9%
	ທົ່ງຫຍ້າ	G	43,637			44,072			44,077		
	ດິນທາມ	SW	0	43,637	2.2%	0	44,072	2.2%	0	44,077	2.2%
ພື້ນທີ່ກະສິກຳ	ພື້ນທີ່ກະສິກຳເນີນສູງ	UC	17,054	17,054	0.9%	36,384	36,384	1.8%	65,249	65,249	3.3%
	ທົ່ງນາ	RP	12,020			11,932			10,447		
	ພື້ນທີ່ກະສິກຳອື່ນໆ	OA	51,807			40,844			28,821		
	ພື້ນທີ່ປູກພືດກະສິກຳ/ປູກໄມ້ໃຫ້ໝາກ	AP	328	64,155	3.2%	514	53,289	2.7%	174	39,442	2.0%
ເຂດກໍສ້າງພື້ນຖານ ໂຄງລ່າງ	ເຂດທີ່ຢູ່ອາໄສ	U	4,565			4,250			4,214		
	ດິນປອກໂລ້ນ ແລະ ດານຫີນ	BR	114	4,680	0.2%	114	4,364	0.2%	114	4,328	0.2%
ເນື້ອທີ່ດິນອື່ນໆ	ເນື້ອທີ່ດິນອື່ນໆ	O	2,339	2,339	0.1%	2,323	2,323	0.1%	2,133	2,133	0.1%
ດິນບໍ່ລິເວນນ້ຳ	ນ້ຳ	W	14,950	14,950	0.8%	14,940	14,940	0.8%	14,937	14,937	0.8%
	ລວມ		1,990,128	1,990,128	100%	1,990,128	1,990,128	100%	1,990,128	1,990,128	100%

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້ (2017)

ຮູບ 1: ປ່າໃນປະຈຸບັນ ແລະ ປ່າຟື້ນຟູ ແຕ່ລະໄລຍະ ຢູ່ ແຂວງຫຼວງພະບ2000 - 2015



ຕາຕະລາງການປ່ຽນແປງຂອງເນື້ອທີ່ປ່າມີດັ່ງຕໍ່ໄປນີ້.

ຕາຕະລາງ 5: ການປ່ຽນແປງຂອງທີ່ດິນ ແລະ ປ່າໄມ້ 2005- 2015 ຢູ່ ແຂວງຫຼວງພະບາງ

			2015										
			ພື້ນທີ່ປ່າ		ພື້ນທີ່ຈະ ກາຍເປັນປ່າ	ພື້ນທີ່ກະສິກຳ		ດິນ ບໍລິເວນນ້ຳ	ພື້ນທີ່ ພືດອື່ນໆ	ທີ່ດິນອື່ນໆ	ລວມ	ການ ປ່ຽນແປງ 2005-2015
		ຮຕ	1) ປ່າທຳ ມະຊາດ	2) ປ່າປູກ		1) ພື້ນທີ່ ກະສິກຳ ເນີນສູງ	2) ພື້ນທີ່ ກະສິກຳ ຖາວອນ					
2005	ພື້ນທີ່ປ່າ	1) ປ່າທຳມະຊາດ	945,483	102	35,489	4,929	6,423	0	1	197	992,625	(36,793)
		2) ປ່າປູກ	0	5,404	24	4	206	0	0	2	5,640	2,366
	ພື້ນທີ່ຈະກາຍເປັນປ່າ		10,305	243	756,248	9,959	26,046	31	6	399	803,236	57,722
	ພື້ນທີ່ກະສິກຳ	1) ພື້ນທີ່ກະສິກຳເນີນສູງ	37	0	62,659	1,113	1,342	0	89	10	65,249	(48,196)
		2) ພື້ນທີ່ກະສິກຳຖາວອນ	7	2,257	6,497	953	29,693	0	0	36	39,442	24,713
	ດິນບໍລິເວນນ້ຳ		0	0	0	0	15	14,919	0	3	14,937	13
	ພື້ນທີ່ພືດອື່ນໆ		0	0	20	83	363	0	62,060	11	62,537	(381)
	ທີ່ດິນອື່ນໆ		0	0	22	11	67	0	0	6,362	6,461	557
ລວມ			955,831	8,005	860,959	17,054	64,155	14,950	62,155	7,019	1,990,128	-

ຄຸນນະພາບປ່າເພີ່ມຂຶ້ນ
ເນື້ອທີ່ປ່າເພີ່ມຂຶ້ນ
ປ່າເສື່ອມໂຊມ
ປ່າຖືກທຳລາຍ

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້ (2017)

ຮູບ 2: ການປ່ຽນແປງຂອງທີ່ດິນປ່າໄມ້ 2005 - 2015



ເນື້ອທີ່ປ່າໄມ້ຖືກທຳລາຍມີ 48.203 ຮຕ ສ່ວນເນື້ອທີ່ປ່າໄມ້ເພີ່ມຂຶ້ນແມ່ນ 71.498 ຮຕ (ຕົວຈິງເພີ່ມຂຶ້ນ 23.294 ຮຕ). ຕາຕະລາງ 5 ສະແດງໃຫ້ເຫັນວ່າເນື້ອທີ່ໄຮ່ປູກພືດຫຼຸດລົງລະຫວ່າງປີ 2005-2015 ສ່ວນເນື້ອທີ່ປ່າເລົ່າໄດ້ຮັບການຟື້ນຟູເຮັດໃຫ້ເນື້ອທີ່ປ່າຟື້ນຟູເພີ່ມຂຶ້ນ. ນອກນັ້ນ, ເນື້ອທີ່ປ່າເສື່ອມໂຊມມີ 35.513 ຮຕ ສ່ວນຄຸນນະພາບຂອງປ່າເພີ່ມຂຶ້ນມີ 10.548 ຮຕ.

ຮູບ 3: ການປ່ຽນແປງການນຳໃຊ້ທີ່ດິນ ແລະ ເນື້ອທີ່ປົກຫຸ້ມປ່າໄມ້ ໄລຍະແຕ່ປີ2000 - 2015 ຢູ່ ແຂວງຫຼວງພະບາງ



3.1.2. ສະພາບການຄຸ້ມຄອງປ່າໄມ້ ແລະ ການປ່ຽນແປງໄລຍະຜ່ານມາ ຢູ່ ແຂວງຫຼວງພະບາງ

ແຂວງຫຼວງພະບາງໄດ້ມີການສົ່ງເສີມການຄຸ້ມຄອງປ່າໄມ້ແບບຍືນຍົງໂດຍເນັ້ນໃສ່ 3 ປະເພດປ່າຄື: ປ່າສະຫງວນ, ປ່າປ້ອງກັນແລະປ່າຜະລິດ. ເນື້ອທີ່ປ່າປະຈຸບັນໄດ້ແບ່ງອອກຄື: ປ່າສະຫງວນ 34.943,0 ເຮັກຕາ (3,6%), ປ່າປ້ອງກັນ 582.550,1 ເຮັກຕາ (60,4%), ປ່າຜະລິດ 75.931,7 ເຮັກຕາ (7,9%) ແລະ ເນື້ອທີ່ປ່າທີ່ຍັງບໍ່ທັນໄດ້ຈັດສັນ 270.347,3 ເຮັກຕາ (28,1%). ແຂວງຫຼວງພະບາງມີ ເນື້ອທີ່ປ່າປ້ອງກັນກວມ 61,4% ຂອງເນື້ອທີ່ທັງໝົດຂອງແຂວງ ຫຼື 60,4% ຂອງເນື້ອທີ່ປ່າໄມ້ທີ່ມີໃນປະຈຸບັນ.

ຮູບ 4: ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ຢູ່ ແຂວງຫຼວງພະບາງ

3 ປະເພດປ່າ ຢູ່ ແຂວງຫຼວງພະບາງ



1:1,000,000 0 5 10 20 30 40 50 Kilometers ແຫຼ່ງຂໍ້ມູນ: ກອງສຳຫຼວດ/ກົມປ່າໄມ້

ຕາຕະລາງ 6: ເນື້ອທີ່ດິນ ແລະ ປ່າໄມ້ອີງໃສ່ 3 ປະເພດປ່າ

		ຣຫ	ປ່າສະຫງວນ	ປ່າປ້ອງກັນ	ປ່າຜະລິດ	ຍັງບໍ່ທັນໄດ້ຈັດສັນ
ພື້ນທີ່ປ່າໃນປະຈຸບັນ	ປ່າດົງດິບ	EF	5,212.2	11,654.9	86.8	2,563.7
	ປ່າພັດໃບປະສົມ	MD	29,725.8	567,901.0	69,386.9	261,132.6
	ປ່າໂຄກ	DD		957.7	6,345.0	795.1
	ປ່າໄມ້ໃບເຂັ້ມ	CF	4.9			
	ປ່າປຸກ	P		2,036.6	113.0	5,855.9
ເຂດທີ່ຈະກາຍເປັນປ່າ	ປ່າໄມ້ປ່ອງ	B	16.9	1,844.1	345.2	518.7
	ປ່າເລີ່ມ	RV	1,377.0	549,815.5	62,721.4	244,245.7
ພື້ນທີ່ພືດພັນອື່ນໆ	ໂຄກແຈ້ງ	SA		225.7		3.3
	ປ່າຕ່ຳ	SR		3,850.2	15.9	14,423.6
	ທົ່ງຫຍ້າ	G	941.1	41,247.4	52.5	1,396.2
ພື້ນທີ່ກະສິກຳ	ພື້ນທີ່ກະສິກຳເນີນສູງ	UC	48.0	10,454.4	1,841.1	4,706.5
	ທົ່ງນາ	RP		2,370.1	1,094.0	8,555.4
	ພື້ນທີ່ກະສິກຳອື່ນໆ	OA	3.6	21,246.3	4,480.0	26,074.4
	ພື້ທີ່ປູກພືດກະສິກຳ/ປໄມ້ໃຫ້ໝາກ	AP		246.4	31.3	50.6
ເຂດກໍ່ສ້າງພື້ນຖານໂຄງລ່າງ	ເຂດທີ່ຢູ່ອາໄສ	U		981.9	109.4	3,474.3
	ດິນປອກໃຫ້ງົ້ນ ແລະ ດານຫີນ	BR		114.3		
ເນື້ອທີ່ດິນອື່ນໆ	ເນື້ອທີ່ດິນອື່ນໆ	O		1,378.8	132.4	827.9
ດິນບໍ່ລິເວນນ້ຳ	ນ້ຳ	W	4.6	5,795.3	274.1	8,875.1
	ລວມ:		37,334	1,222,121	147,029	583,499
	ເນື້ອທີ່ %		1.9%	61.4%	7.4%	29.3%

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້ (2017)

ຮູບ 5: ສັດສ່ວນຂອງປະເພດປ່າໃນປະຈຸບັນ



ຕາຕະລາງ 7: ການປ່ຽນແປງຂອງເນື້ອທີ່ປ່າໄມ້ ລະຫວ່າງ 2005 - 2015 ໃນເຂດປ່າສະຫງວນ

				2015									
				ພື້ນທີ່ປ່າ		ພື້ນທີ່ຈະ	ພື້ນທີ່ກະສິກຳ		ດິນ	ພື້ນທີ	ທີດິນອື່ນໆ	ລວມ	ການ
			ຮຕ	1) ປ່າທຳ	2) ປ່າປູກ	ກາຍເປັນປ່າ	1) ພື້ນທີ	2) ພື້ນທີ	ບໍລິເວນນ້ຳ	ພິດອື່ນໆ			ປ່ຽນແປງ
				ມະຊາດ			ກະສິກຳ	ກະສິກຳ					2005-
							ເນີນສູງ	ຖາວອນ					2015
2005	ພື້ນທີ່ປ່າ	1) ປ່າທຳມະຊາດ		945,483	102	35,489	4,929	6,423	0	1	197	992,625	(36,793)
		2) ປ່າປູກ		0	5,404	24	4	206	0	0	2	5,640	2,366
	ພື້ນທີ່ຈະກາຍເປັນປ່າ			10,305	243	756,248	9,959	26,046	31	6	399	803,236	57,722
	ພື້ນທີ່ກະສິກຳ	1) ພື້ນທີ່ກະສິກຳເນີນສູງ		37	0	62,659	1,113	1,342	0	89	10	65,249	(48,196)
		2) ພື້ນທີ່ກະສິກຳຖາວອນ		7	2,257	6,497	953	29,693	0	0	36	39,442	24,713
	ດິນບໍລິເວນນ້ຳ			0	0	0	0	15	14,919	0	3	14,937	13
	ພື້ນທີ່ພິດອື່ນໆ			0	0	20	83	363	0	62,060	11	62,537	(381)
	ທີດິນອື່ນໆ			0	0	22	11	67	0	0	6,362	6,461	557
ລວມ				955,831	8,005	860,959	17,054	64,155	[illegible]	[illegible]	[illegible]	[illegible]	

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້ (2017)

ຄຸນນະພາບປ່າເພີ່ມຂຶ້ນ
ເນື້ອທີ່ປ່າເພີ່ມຂຶ້ນ
ປ່າເສື່ອມໂຊມ
ປ່າຖືກທຳລາຍ

ຕາຕະລາງ 8: ການປ່ຽນແປງຂອງເນື້ອທີ່ປ່າໄມ້ ລະຫວ່າງ 2005 - 2015 ໃນເຂດປ່າປ້ອງກັນ

				2015									
				ພື້ນທີ່ປ່າ		ພື້ນທີ່ຈະ	ພື້ນທີ່ກະສິກຳ		ດິນ	ພື້ນທີ	ທີດິນອື່ນໆ	ລວມ	ການ
			ຮຕ	1) ປ່າທຳ	2) ປ່າປູກ	ກາຍເປັນປ່າ	1) ພື້ນທີ	2) ພື້ນທີ	ບໍລິເວນນ້ຳ	ພິດອື່ນໆ			ປ່ຽນແປງ
				ມະຊາດ			ກະສິກຳ	ກະສິກຳ					2005-
							ເນີນສູງ	ຖາວອນ					2015
2005	ພື້ນທີ່ປ່າ	1) ປ່າທຳມະຊາດ		945,483	102	35,489	4,929	6,423	0	1	197	992,625	(36,793)
		2) ປ່າປູກ		0	5,404	24	4	206	0	0	2	5,640	2,366
	ພື້ນທີ່ຈະກາຍເປັນປ່າ			10,305	243	756,248	9,959	26,046	31	6	399	803,236	57,722
	ພື້ນທີ່ກະສິກຳ	1) ພື້ນທີ່ກະສິກຳເນີນສູງ		37	0	62,659	1,113	1,342	0	89	10	65,249	(48,196)
		2) ພື້ນທີ່ກະສິກຳຖາວອນ		7	2,257	6,497	953	29,693	0	0	36	39,442	24,713
	ດິນບໍລິເວນນ້ຳ			0	0	0	0	15	14,919	0	3	14,937	13
	ພື້ນທີ່ພິດອື່ນໆ			0	0	20	83	363	0	62,060	11	62,537	(381)
	ທີດິນອື່ນໆ			0	0	22	11	67	0	0	6,362	6,461	557
ລວມ				955,831	8,005	860,959	17,054	64,155	14,950	62,155	7,019	1,990,128	-

ຄຸນນະພາບປ່າເພີ່ມຂຶ້ນ
ເນື້ອທີ່ປ່າເພີ່ມຂຶ້ນ
ປ່າເສື່ອມໂຊມ
ປ່າຖືກທຳລາຍ

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້ (2017)

ຕາຕະລາງ 9: ການປ່ຽນແປງຂອງເນື້ອທີ່ປ່າໄມ້ ລະຫວ່າງ 2005 - 2015 ໃນເຂດປ່າຜະລິດ

				2015									
				ພື້ນທີ່ປ່າ		ພື້ນທີ່ຈະ	ພື້ນທີ່ກະສິກຳ		ດິນ	ພື້ນທີ			ການ
			ຮຕ	1) ປ່າທຳ	2) ປ່າປູກ	ກາຍເປັນປ່າ	1) ພື້ນທີ	2) ພື້ນທີ					ປ່ຽນແປງ
				ມະຊາດ			ກະສິກຳ	ກະສິກຳ					2005-
							ເນີນສູງ	ຖາວອນ					2015
2005	ພື້ນທີ່ປ່າ	1) ປ່າທຳມະຊາດ		945,483	102	35,489	4,929	6,423	0	1	197	992,625	(36,793)
		2) ປ່າປູກ		0	5,404	24	4	206	0	0	2	5,640	2,366
	ພື້ນທີ່ຈະກາຍເປັນປ່າ			10,305	243	756,248	9,959	26,046	31	6	399	803,236	57,722
	ພື້ນທີ່ກະສິກຳ	1) ພື້ນທີ່ກະສິກຳເນີນສູງ		37	0	62,659	1,113	1,342	0	89	10	65,249	(48,196)
		2) ພື້ນທີ່ກະສິກຳຖາວອນ		7	2,257	6,497	953	29,693	0	0	36	39,442	24,713
	ດິນບໍລິເວນນ້ຳ			0	0	0	0	15	14,919	0	3	14,937	13
	ພື້ນທີ່ພິດອື່ນໆ			0	0	20	83	363	0	62,060	11	62,537	(381)
	ທີດິນອື່ນໆ			0	0	22	11	67	0	0	6,362	6,461	557
ລວມ				955,831	8,005	860,959	17,054	64,155	14,950	62,155	7,019	1,990,128	-

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້ (2017

ຄຸນນະພາບປ່າເພີ່ມຂຶ້ນ
ເນື້ອທີ່ປ່າເພີ່ມຂຶ້ນ
ປ່າເສື່ອມໂຊມ
ປ່າຖືກທຳລາຍ

ຕາຕະລາງ 10: ການປ່ຽນແປງຂອງເນື້ອທີ່ປ່າໄມ້ ລະຫວ່າງ 2005 - 2015 ນອກ 3 ປະເພດປ່າ (ບໍ່ທັນໄດ້ຈັດສັນ)

			2015										
			ພື້ນທີ່ປ່າ		ພື້ນທີ່ຈະ ກາຍເປັນປ່າ	ພື້ນທີ່ກະສິກຳ		ດິນ ບໍລິເວນນ້ຳ	ພື້ນທີ່ ພິດອື່ນໆ	ທີ່ດິນອື່ນໆ	ລວມ	ການ ປ່ຽນແປງ 2005-2015
		ຮຕ	1) ປ່າທຳ ມະຊາດ	2) ປ່າປູກ		1) ພື້ນທີ່ ກະສິກຳ ເນີນສູງ	2) ພື້ນທີ່ ກະສິກຳ ຖາວອນ					
2005	ພື້ນທີ່ປ່າ	1) ປ່າທຳມະຊາດ	945,483	102	35,489	4,929	6,423	0	1	197	992,625	(36,793)
		2) ປ່າປູກ	0	5,404	24	4	206	0	0	2	5,640	2,366
	ພື້ນທີ່ຈະກາຍເປັນປ່າ		10,305	243	756,248	9,959	26,046	31	6	399	803,236	57,722
	ພື້ນທີ່ກະສິກຳ	1) ພື້ນທີ່ກະສິກຳເນີນສູງ	37	0	62,659	1,113	1,342	0	89	10	65,249	(48,196)
		2) ພື້ນທີ່ກະສິກຳຖາວອນ	7	2,257	6,497	953	29,693	0	0	36	39,442	24,713
	ດິນບໍລິເວນນ້ຳ		0	0	0	0	15	14,919	0	3	14,937	13
	ພື້ນທີ່ພິດອື່ນໆ		0	0	20	83	363	0	62,060	11	62,537	(381)
	ທີ່ດິນອື່ນໆ		0	0	22	11	67	0	0	6,362	6,461	557
ລວມ			955,831	8,005	860,959	17,054	64,155	14,950	62,155	7,019	1,990,128	-

ຄຸນນະພາບປ່າເພີ່ມຂຶ້ນ
ເນື້ອທີ່ປ່າເພີ່ມຂຶ້ນ
ປ່າເສື່ອມໂຊມ
ປ່າຖືກທຳລາຍ

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້ (2017)

ຕາຕະລາງ 11: ການປ່ຽນແປງຂອງປ່າໄມ້ໃນໄລຍະຜ່ານມາ ອີງໃສ່ 3 ປະເພດປ່າ 2005 - 2015

ປະເພດປ່າ (ເຮັກຕາ)	ການທຳລາຍປ່າໄມ້	%	ປ່າເສື່ອມໂຊມ	%	ເນື້ອທີ່ປ່າ ເພີ່ມຂຶ້ນ	%	ຄຸນນະພາບປ່າເພີ່ມ ຂຶ້ນ	%
ປ່າສະຫງວນ	52	0%	57	0%	0	0%	28	0%
ປ່າປ້ອງກັນ	22.950	48%	21.419	60%	42.123	59%	7.565	72%
ປ່າຜະລິດ	5.349,3	11%	3.293,4	9%	5.168,4	7%	445,0	4%
ລວມ	28.351,4	59%	24.769,7	70%	47.291,4	66%	8.038,8	76%
ນອກ 3 ປະເພດປ່າ	19.845,4	41%	10.670,8	30%	24.205,2	34%	2.489,5	24%

ແຫຼ່ງຂໍ້ມູນ: ແຜນທີ່ປະເພດປ່າ/ກົມປ່າໄມ້ (2017)

ການປ່ຽນແປງຂອງແຕ່ລະປະເພດປ່າ ແມ່ນຖືກສັງລວມໃນຕາຕະລາງ ແລະ ຮູບ 6 ດັ່ງລຸ່ມນີ້. ການທຳລາຍປ່າໄມ້ສ່ວນຫຼາຍແມ່ນເກີດຂຶ້ນ ຢູ່ ໃນເຂດປ່າປ້ອງກັນ, ປ່າຜະລິດ ແລະ ຢູ່ນອກ 3 ປະເພດປ່າ (**ຕາຕະລາງ 11**). ຕາມການສຳຫຼວດເຫັນວ່າການທຳລາຍປ່າໄມ້ແມ່ນຢູ່ໃນ **ເຂດປ່າປ້ອງກັນ**ປັນສ່ວນໃຫຍ່ ໂດຍກວມເອົາ 48% ຂອງອັດຕາການທຳລາຍປ່າໄມ້ໃນທົ່ວແຂວງ ຫຼື 22.950 ຮຕ ຖືກສູນເສັຍ ລະຫວ່າງ 2005-2015. ຕໍ່ ມາແມ່ນການທຳລາຍປ່າໄມ້ໃນ **ເຂດປ່າໄມ້ທີ່ຍັງບໍ່ທັນໄດ້ຈັດສັນ**ຫຼື ຢູ່ນອກ 3 ປະເພດປ່າ ຊຶ່ງກວມ 41% ຫຼື ເທົ່າກັບ 19.845 ຮຕ ຖືກສູນເສັຍລະຫວ່າງ 2005-2015. ໃນໄລຍະດັ່ງກ່າວນີ້ ເນື້ອທີ່ກະສິກຳ ລວມທັງເຂດເນີນສູງ ແລະ ເນື້ອທີ່ກະສິກຳຖາວອນ ໄດ້ເຮັດໃຫ້ເນື້ອທີ່ປ່າມີການປ່ຽນແປງຢ່າງໃຫຍ່ຫຼວງ ໂດຍສະເພາະທາງດ້ານເນື້ອທີ່ ແລະ ຄຸນນະພາບຂອງປ່າ. ສະນັ້ນ, ການນຳໃຊ້ທີ່ດິນ ກະສິກຳເຂດເນີນສູງ ແລະ ທີ່ດິນກະສິກຳຖາວອນ ຈຶ່ງເປັນສາເຫດຫຼັກຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ. ໃນສະພາບດັ່ງກ່າວນີ້ ຈຶ່ງພິຈາລະນາເອົາເຂດປ່າປ້ອງກັນ ແລະ ເຂດປ່າໄມ້ທີ່ຍັງບໍ່ທັນໄດ້ຈັດສັນ ຫຼື ນອກ 3 ປະເພດປ່າ ເປັນເຂດບູລິມະສິດ ໃນການຈັດຕັ້ງປະຕິບັດແຜນປະຕິບັດງານ REDD+ ຂອງແຂວງຫຼວງພະບາງ ແນໃສ່ເພື່ອສາມາດປະກອບສ່ວນຢ່າງແທ້ຈິງໃນການຫຼຸດຜ່ອນ ການປ່ອຍອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ເຮັດໃຫ້ການຄຸ້ມຄອງປ່າໄມ້ມີຄວາມຍືນຍົງ ແລະ ການພັດ ທະນາເສດຖະກິດ-ສັງຄົມຂອງແຂວງບັນລຸເປົ້າໝາຍທີ່ໄດ້ວາງໄວ້.

3.2. ສັງລວມສາເຫດຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ

ເພື່ອກຳນົດສາເຫດທາງກົງ ແລະ ທາງອ້ອມຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ກອງປະຊຸມປຶກສາຫາລືໄດ້ຈັດຂຶ້ນ ຫຼາຍຄັ້ງໃນປີ 2016 ແລະ 2017. ກ່ອນເປີດກອງປະຊຸມປຶກສາຫາລື, ໄດ້ນຳໃຊ້ຂໍ້ມູນພາບຖ່າຍດາວທຽມຂອງຮັນເຊັນ (Hansen) ກ່ຽວ ກັບການສູນເສັຍປ່າໄມ້ໃນທົ່ວໂລກ ລະຫວ່າງປີ 2010 - 2014 ມາກຽມເຮັດການວິເຄາະໃນແຕ່ລະເມືອງຂອງແຂວງຫຼວງພະບາງ. ອີງໃສ່ຂໍ້ ມູນດັ່ງກ່າວ ຜູ້ເຂົ້າຮ່ວມກອງປະຊຸມສາມາດປຶກສາຫາລື ແລະ ກຳນົດຈຸດທີ່ມີການທຳລາຍປ່າໄມ້ຢ່າງຮ້າຍແຮງ (hotspot) ແລະ ພ້ອມກັນ ຄົ້ນຄ້ວາເຖິງສາເຫດທາງກົງ ແລະ ທາງອ້ອມຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ.

ຮູບ 6: ແຜນທີ່ການສູນເສັຍປ່າໄມ້ ຢູ່ ແຂວງຫຼວງພະບາງ ລະຫວ່າງປີ2010 - 2014



ສາເຫດຫຼັກຂອງການທຳລາຍປ່າໄມ້ ແມ່ນມາຈາກການຜະລິດກະສິກຳເປັນຕົ້ນແມ່ນການເຮັດໄຮ່ເລື່ອນລອຍ ແລະ ການຂະຫຍາຍເນື້ອທີ່ກະສິກຳ. ການພັດທະນາໂຄງລ່າງພື້ນຖານເຊັ່ນ: ກໍ່ສ້າງເສັ້ນທາງ, ເຂື່ອນໄຟຟ້າ ແລະ ຂຸດຄົ້ນບໍ່ແຮ່ ກໍແມ່ນສາເຫດທີ່ສຳຄັນເຮັດໃຫ້ປ່າໄມ້ຖືກທຳລາຍເຊັ່ນກັນ. ການປູກໄມ້ອຸດສາຫະກຳໃນເຂດປ່າທຳມະຊາດ, ການຕັດໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ, ໄຟໄໝ້ລາມປ່າ ແມ່ນ ສາເຫດພາໃຫ້ປ່າໄມ້ເສື່ອມໂຊມ. ຮູບ 7 ສະແດງໃຫ້ເຫັນການຈັດບູລິມະສິດສາເຫດຫຼັກຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ ເສື່ອມໂຊມ ຢູ່ ຂັ້ນເມືອງ ພາຍຫຼັງດຳເນີນກອງປະຊຸມປຶກສາຫາລື ຢູ່ ຂັ້ນເມືອງ.

ຮູບ 7: ການຈັດບູລິມະສິດສາເຫດຫຼັກຂອງການທຳລາຍປ່າໄມ້



ໝາຍເຫດ: ເປີເຊັນແມ່ນຄິດໄລ່ອີງໃສ່ຈຳນວນຂອງຄຳຕອບລວມເຂົ້າກັນໃນແຕ່ລະຈຸດທີ່ມີການທຳລາຍປ່າໄມ້ຢ່າງຮ້າຍແຮງ.

3.2.1. ສາເຫດຂອງການທຳລາຍປ່າໄມ້: ການເຮັດໄຮ່ເລື່ອນລອຍ ແລະ ການຂະຍາຍເນື້ອທີ່ກະສິກຳ

ຜ່ານກອງປະຊຸມປຶກສາຫາລື ຢູ່ ຂັ້ນເມືອງ ແລະ ກຸ່ມບ້ານ ຕາມຂະບວນການສ້າງ PRAP ນັ້ນ ເຫັນວ່າການຜະລິດກະສິກຳຕົ້ນຕໍແມ່ນການເຮັດໄຮ່ປູກເຂົ້າ ແລະ ການຂະຫຍາຍເນື້ອທີ່ກະສິກຳ ເປັນສາເຫດຫຼັກຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ. ຕາມການສຳຫຼວດຫວ່າງບໍ່ດົນມານີ້ ຂໍ້ມູນການປ່ຽນແປງການປົກຫຸ້ມຂອງດິນ ແລະ ປ່າໄມ້ ລະຫວ່າງ ປີ 2005-2015 ໄດ້ຊີ້ໃຫ້ເຫັນວ່າພື້ນທີ່ກະສິກຳຖາວອນ ລວມທັງເນື້ອທີ່ນາ ແລະ ເນື້ອທີ່ປູກພືດກະສິກຳ ໄດ້ຂະຫຍາຍຢ່າງໄວວາຈາກ 39 .442 ຮຕ ໃນປີ 2005 ເປັນ 64 .155 ຮຕ ໃນປີ 2015. ເນື້ອທີ່ປ່າຖືກບຸກເບີກ ເພື່ອປູກພືດເຂດເນີນສູງ ລະຫວ່າງ 2005-2015 ມີ 4 .893 ຮຕ ແລະ ເຮັດການກະສິກຳຖາວອນ 32.675 ຮຕ ລວມທັງເນື້ອທີ່ຟື້ນຟູຂອງປ່າເລົ່າ. ຂໍ້ມູນທາງການດ້ານສະຖິຕິ ຊີ້ໃຫ້ເຫັນວ່າລວມຍອດຜະລິດຕະພັນກະສິກຳ-ປ່າໄມ້ເພີ່ມຂຶ້ນສະເລັ່ຍ 3,47% ຕໍ່ປີ (ຂໍ້ມູນເສດຖະກິດ-ສັງຄົມ 2011 -2015) ຄຽງຄູ່ກັບການເພີ່ມຂຶ້ນຂອງດິນກະສິກຳ. ຕົວເລກນີ້ຊີ້ໃຫ້ເຫັນວ່າການຜະລິດກະສິກຳ ໂດຍສະເພາະການປູກພືດເສດຖະກິດ ໄດ້ເພີ່ມຂຶ້ນຢ່າງໄວວາທຽບໃສ່ການປູກເຂົ້າ ນຳໄປສູ່ການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມພາຍໃນແຂວງ. ພືດ ອື່ນໆເຊັ່ນ: ສາລີ, ໝາກເດືອຍ, ໝາກກ່ຽ, ໝາກຖົ່ວ ແລະ ພືດຜັກ ແມ່ນພືດເສດຖະກິດທີ່ສ້າງລາຍຮັບສູງສົມຄວນໃຫ້ແຂວງຫຼວງພະບາງ. ສາລີແມ່ນພືດທີ່ ຢູ່ ແຖວໜ້າ ແລະ ປູກກັນຫຼາຍນັບແຕ່ເລີ່ມນຳເຂົ້າມາຕາມລະບົບຂໍ້ຜູກພັນສັນຍາຜະລິດກະສິກຳ (contract farming). ປະຈຸບັນ, ເນື້ອທີ່ປູກສາລີທັງໝົດພາຍໃນແຂວງມີ 20 .160 ເຮັກຕາ, ທຽບໃສ່ໝາກເດືອຍ 9 .430 ເຮັກຕາ, ໝາກກ່ຽ 9 .090 ເຮັກຕາ, ໝາກຖົ່ວ 2 .901 ເຮັກຕາ ແລະ ພືດຜັກ 12 .198 ເຮັກຕາ. ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ຊຸກຍູ້ສົ່ງເສີມໃຫ້ຂະແໜງກະສິກຳເພີ່ມເນື້ອທີ່ການຜະລິດ ແລະ ຍົກສະມັດຕະພາບການຜະລິດໃຫ້ສູງຂຶ້ນ ໂດຍເນັ້ນໃສ່ພືດເສດຖະກິດໃນທົ່ວແຂວງ. ເພາະສະນັ້ນ, ຄວາມກົດດັນຂອງການຂະຫຍາຍເນື້ອທີ່ການຜະລິດກະສິກຳເຂົ້າໃນເຂດປ່າໄມ້ ມີທ່າອ່ຽງເພີ່ມຂຶ້ນໃນອະນາຄົດ.

3.2.2. ສາເຫດຂອງການທຳລາຍປ່າໄມ້: ການກໍ່ສ້າງເຂື່ອນໄຟຟ້າ

ອີງຕາມແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 7 ຂອງແຂວງ, ຮອດປີ 2020 ຈະມີທັງໝົດ 9 ໂຄງການເຂື່ອນໄຟຟ້າ ທີ່ອອກແບບ ແລະ ສາມາດຜະລິດກະແສໄຟຟ້າໄດ້ທັງໝົດປະມານ 733.2 MW ເພື່ອສະໜອງໃຫ້ສາຍສົ່ງ ໄຟຟ້າຂອງລັດ. ຄຽງຄູ່ກັບການ ກໍ່ສ້າງເຂື່ອນໄຟຟ້າ, ເຂດກໍ່ສ້າງເຂື່ອນ, ເຂດນ້ຳຖ້ວມ, ເສັ້ນທາງ, ລະບົບສາຍສົ່ງ ແລະ ເຂດຍົກຍ້າຍປະຊາຊົນ ກໍພາໃຫ້ເກີດການສູນເສັຍປ່າໄມ້ ແລະ ປ່າໄມ້ເສື່ອມໂຊມ. ການຂຸດຄົ້ນໄມ້ໃນເຂດນ້ຳຖ້ວມຂອງໂຄງການກໍ່ສ້າງເຂື່ອນໄຟຟ້າແມ່ນອະນຸມັດ ແຕ່ບາງກໍລະນີມີການຂຸດຄົ້ນເກີນຂອບເຂດທີ່ກຳນົດ. ເຖິງແມ່ນວ່າມີການປະເມີນຜົນຢ່າງຊັດເຈນຕໍ່ຜົນກະທົບກັບປ່າໄມ້ ຈາກໂຄງການກໍ່ສ້າງເຂື່ອນໄຟຟ້າກໍຕາມ, ສ່ວນຫຼາຍບັນດາໂຄງການກໍ່ສ້າງເຂື່ອນໄຟຟ້າ ຍັງມີຊ່ອງວ່າງໃຫ້ຫົດການຂຸດຄົ້ນໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ ຢູ່ ແຂວງຫຼວງພະບາງ.

3.2.3. ສາເຫດຂອງການທຳລາຍປ່າໄມ້: ການຂຸດຄົ້ນບໍ່ແຮ່

ໃນໄລຍະ 5 ປີຜ່ານມາ, ການຂຸດຄົ້ນ ແລະ ຜະລິດຫີນແຂງມີ 657.000 ແມ່ດກ້ອນ ເພື່ອສະໜອງໃຫ້ແກ່ການກໍ່ສ້າງພາຍໃນ. ມີທັງໝົດ 22 ຫົວໜ່ວຍທຸລະກິດຂຸດຄົ້ນຫີນແຂງໃນທົ່ວແຂວງ. ຮອດຕົ້ນປີ 2015 , ລັດຖະບານກໍໄດ້ອະນຸມັດໃຫ້ບໍລິສັດເອກະຊົນສຳປະທານຂຸດຄົ້ນຄຳ ຢູ່ ເຂດບ້ານຜາປົ່ນ, ເມືອງປາກອູ, ແຂວງຫຼວງພະບາງ ໃນເນື້ອທີ່ປະມານ 6 ກມ ມົນທົນ.

3.2.4. ສາເຫດຂອງການທຳລາຍປ່າໄມ້: ການພັດທະນາພື້ນຖານໂຄງລ່າງ

ສຳລັບການພັດທະນາພື້ນຖານໂຄງລ່າງ ຮອດປີ 2015 ທາງແຂວງໄດ້ກໍ່ສ້າງເສັ້ນທາງສຳເລັດ 4 .061 ກມ ແລະ ຍັງຈະສືບຕໍ່ກໍ່ສ້າງໃນອະນາຄົດ. ການທຳລາຍປ່າໄມ້ຈາກການກໍ່ສ້າງພື້ນຖານໂຄງລ່າງ ໂດຍສະເພາະແມ່ນເສັ້ນທາງ, ສາຍສົ່ງໄຟຟ້າ, ລະບົບຊົນລະປະທານ, ການຂະຫຍາຍຕົວເມືອງ ແລະ ການກໍ່ສ້າງເສັ້ນທາງລົດໄຟ ແມ່ນມີຈຳກັດ ແຕ່ຜົນກະທົບທີ່ຮ້າຍແຮງນັ້ນແມ່ນການປັບປຸງພື້ນຖານໂຄງລ່າງເຂົ້າຫາເຂດທີ່ຢູ່ຫ່າງໄກສອກຫຼີກ. ຢ່າງໃດກໍດີ ການເຊື່ອມຕໍ່ເສັ້ນທາງໄປຫາຕະຫຼາດ, ເຂດເທດສະບານ ແລະ ຕົວເມືອງອື່ນໆ ແມ່ນຍຸດທະສາດທີ່ສຳຄັນອັນໜຶ່ງຂອງລັດຖະບານ. ລັດຖະບານໄດ້ລົງທຶນຢ່າງມະຫາສານໃນການປັບປຸງຕາໜ່າງເສັ້ນທາງຄົມມະນາຄົມ ແລະ ການຂົນສົ່ງໃນຂອບເຂດທົ່ວປະເທດ ແນໃສ່ເພື່ອກະຕຸກຊຸກຍູ້ ແລະ ສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມໃນເຂດຊົນນະບົດໃຫ້ປະສົບຜົນສຳເລັດຕາມຄາດໝາຍ. ບໍລິສັດຂຸດຄົ້ນໄມ້ຈະໄດ້ຮັບອະນຸຍາດໃຫ້ຂຸດຄົ້ນຕາມໂກຕ້າ ເພື່ອແລກປ່ຽນກັບການຕົກລົງສ້າງເສັ້ນທາງ ຊຶ່ງໃນບາງກໍລະນີການຂຸດຄົ້ນແມ່ນເກີນໂກຕ້າທີ່ອະນຸຍາດ. ຍ້ອນການຄຸ້ມຄອງບໍ່ທັນຮັດກຸມ, ການຈັດຕັ້ງປະຕິບັດກົດໝາຍບໍ່ເຂັ້ມງວດ ແລະ ການຕິດ

ຕາມກວດກາບໍ່ປົກກະຕິ ຈຶ່ງນຳໄປສູ່ການຕັດໄມ້ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ການຂຸດຄົ້ນໄມ້ບໍ່ໄປຕາມແຜນມີທ່າ ອ່ຽງເພີ່ມຂຶ້ນ. ການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ໂດຍທາງກົງ ຫຼື ທາງອ້ອມນັ້ນ ຈະໄດ້ຮັບການແກ້ໄຂ ຂຶ້ນຢູ່ກັບການວາງແຜນທີ່ດີ ບັນດາໂຄງການພັດທະນາພື້ນຖານໂຄງລ່າງໃນອະນາຄົດ.

3.2.5. ສາເຫດຂອງການເຮັດໃຫ້ປ່າໄມ້ເສື່ອມໂຊມ: ການປູກໄມ້ໃນເຂດປ່າທຳມະຊາດ

ລັດຖະບານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມຢ່າງຕັ້ງໜ້າ ການປູກໄມ້ອຸດສາຫະກຳ ແນໃສ່ເພື່ອຫຼຸດຜ່ອນຄວາມກົດດັນທີ່ມີຕໍ່ປ່າທຳມະຊາດ ແລະ ສະໜອງວັດຖຸດິບໃຫ້ແກ່ໂຮງງານປຸງແຕ່ງໄມ້ ສ້າງວຽກເຮັດງານທຳໃຫ້ປະຊາຊົນ ເພື່ອທົດແທນການຖາງປ່າເຮັດໄຮ່ແບບເລື່ອນລອຍ. ຕາມຕົວເລກສະຖິຕິຂອງແຂວງ, ການປູກໄມ້ສັກແມ່ນມີເນື້ອທີ່ 27.481 ເຮັກຕາ, ຢາງພາລາ 18.191 ເຮັກຕາ ແລະ ໄມ້ນ້ຳມັນ 7.241 ເຮັກຕາ ໃນທົ່ວແຂວງໃນປີ 2015. ການປູກໄມ້ອຸດສາຫະກຳ ສາມາດເປັນແຫຼ່ງສະໜອງໄມ້ໃນໄລຍະຍາວ ແລະ ບໍ່ສົ່ງຜົນກະທົບໃຫ້ປ່າທຳມະຊາດ ເຮັດໃຫ້ປ່າໄມ້ສາມາດດູດຊັບ ແລະ ເກັບກັກກາກບອນໃນແງ່ມຸນຂອງ REDD+. ອີກຢ່າງໜຶ່ງ, ໃນບາງກໍລະນີການປູກໄມ້ອຸດສາຫະກຳກໍບໍ່ສົມຄວນ ໂດຍສະເພາະການຖາງປ່າແກ່ທັງເປັນປ່າທຳມະຊາດເພື່ອມາປູກ ທັ້ງໆທີ່ກົດໝາຍປ່າໄມ້ໄດ້ລະບຸຢ່າງລະອຽດ ແລະ ຈະແຈ້ງແລ້ວວ່າ: ການປູກໄມ້ແມ່ນສາມາດປູກໄດ້ໃນທີ່ດິນປ່າໄມ້ທີ່ເສື່ອມໂຊມ ຫຼື ດິນປອກໂຫຼ້ນເທົ່ານັ້ນ.

3.2.6. ສາເຫດຂອງການເຮັດໃຫ້ປ່າໄມ້ເສື່ອມໂຊມ: ການຂຸດຄົ້ນໄມ້ທີ່ຜິດກົດໝາຍ

ການຂຸດຄົ້ນໄມ້ທີ່ຜິດກົດໝາຍ ຢູ່ ແຂວງຫຼວງພະບາງ ມີຫຼາຍປານໃດກໍບໍ່ຈະແຈ້ງ ແຕ່ຕ້ອງຍອມຮັບວ່າມີຜົນກະທົບບໍ່ໜ້ອຍຕໍ່ກັບປ່າໄມ້. ໃນກອງປະຊຸມປຶກສາຫາລື ຢູ່ ຂັ້ນເມືອງ, ແຕ່ລະເມືອງກໍໄດ້ຍົກໃຫ້ເຫັນບັນຫາການລັກລອບຕັດໄມ້ ເປັນບັນຫາໜຶ່ງທີ່ເຮັດໃຫ້ປ່າໄມ້ເສື່ອມໂຊມ ຢູ່ ໃນເມືອງຂອງເຂົາເຈົ້າ ແລະ ຕ້ອງໄດ້ຊອກຫາວິທີແກ້ໄຂຢ່າງເໝາະສົມໃນການສ້າງ ແຜນປະຕິບັດງານ REDD+ ຂັ້ນແຂວງ. ການລັກລອບຕັດໄມ້ສ່ວນໃຫຍ່ແມ່ນເກີດຂຶ້ນ ຢູ່ ເມືອງ ບ່ອນທີ່ມີໂຄງການພັດທະນາພື້ນຖານໂຄງລ່າງ ຊຶ່ງລັດຖະບານເປັນຜູ້ອະນຸມັດ ຫຼື ຢູ່ ບັນດາເມືອງທີ່ມີສາຍແດນຕິດຈອດກັບປະເທດເພື່ອນບ້ານ ອັນເນື່ອງມາຈາກຄວາມຕ້ອງການໄມ້ຂອງຕະຫຼາດ ແລະ ການສູນເສັຍເນື້ອທີ່ປ່າທຳມະຊາດ ຫຼື ນັບມື້ນັບຫຼຸດລົງ ເຮັດໃຫ້ລາຄາໄມ້ສູງຂຶ້ນ ໂດຍສະເພາະແມ່ນໄມ້ຊະນິດພັນພື້ນເມືອງ.

3.2.7. ສາເຫດຂອງການເຮັດໃຫ້ປ່າໄມ້ເສື່ອມໂຊມ: ໄຟໄໝ້ລາມປ່າ

ການຫັນປ່ຽນທີ່ດິນປ່າໄມ້ເປັນທີ່ດິນກະສິກຳເພື່ອທຳການຜະລິດ ດ້ວຍການຖາງ ແລະ ຈູດ ແມ່ນວິທີທາງໃນການດຳລົງຊີວິດແບບດັ້ງເດີມຂອງປະຊາຊົນ ຢູ່ ເຂດຊົນນະບົດພູດອຍທາງພາກເໜືອຂອງລາວ. ບັນຫາໄຟໄໝ້ລາມປ່າ ຢູ່ ແຂວງຫຼວງພະບາງ ສາເຫດຫຼັກແມ່ນເກີດມາຈາກການຈູດໄຮ່ ເພື່ອທຳການຜະລິດ, ການຈູດເພື່ອລ້ຽງສັດ (ສວນໄມ້ສັກ) ແລະ ຈູດເພື່ອລ່າສັດ. ການປຶກສາຫາລື ຢູ່ ບັນດາເມືອງ ໄດ້ໃຫ້ຮູ້ວ່າການເກີດໄຟໄໝ້ລາມປ່າ ແມ່ນສົ່ງຜົນກະທົບຢ່າງຮ້າຍແຮງໃຫ້ຊັບພະຍາກອນປ່າໄມ້ຂອງເມືອງເຂົາເຈົ້າ. ປະຈຸບັນ , ການປ້ອງກັນໄຟໄໝ້ລາມປ່າ ແມ່ນມີແຈ້ງການກ່ອນຈະເຂົ້າສູ່ລະດູການຜະລິດ ໂດຍສະເພາະບ້ານທີ່ມີຄວາມສ່ຽງສູງຕໍ່ໄຟໄໝ້ລາມປ່າ ແຕ່ກໍບໍ່ທັນພຽງພໍ ເນື່ອງຈາກວ່າຍັງມີຂໍ້ຈຳກັດທາງດ້ານພະນັກງານ ຫຼື ວິທີການບໍລິຫານຈັດການຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ. ສະນັ້ນ , ເພື່ອປ້ອງກັນ ແລະ ສະກັດກັ້ນບັນຫາໄຟໄໝ້ລາມປ່າ ຈຳເປັນຕ້ອງໄດ້ຝຶກອົບຮົມໃຫ້ເມືອງ ແລະ ບ້ານຕື່ມອີກ.

3.3. ພາກສ່ວນກ່ຽວຂ້ອງກັບການທຳລາຍປ່າໄມ້ແລະການເຮັດໃຫ້ປ່າໄມ້ເສື່ອມໂຊມ

ການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ຢູ່ ແຂວງຫຼວງພະບາງ ແມ່ນຕິດພັນກັບພາກສ່ວນທີ່ເປັນຕົ້ນເຫດສະເພາະ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆດັ່ງລຸ່ມນີ້:

ຊາວກະສິກອນຂະໜາດນ້ອຍ ແລະ ປະຊາຊົນທ້ອງຖິ່ນ (ຊາວບ້ານ)

ພາກສ່ວນທີ່ເປັນຕົ້ນເຫດແມ່ນຊາວກະສິກອນຂະໜາດນ້ອຍ ແລະ ປະຊາຊົນທ້ອງຖິ່ນ (ຊາວບ້ານ) ຜູ້ທີ່ຖາງປ່າເຮັດໄຮ່ປູກເຂົ້າ ແລະ ຂະຫຍາຍເນື້ອທີ່ກະສິກຳ ເຮັດການຜະລິດເພື່ອກຸ້ມກິນ ແລະ ຂາຍເປັນສິນຄ້າ. ນອກຈາກການຜະລິດກະສິກຳແລ້ວ ເຂົາເຈົ້າຍັງນຳໃຊ້ຊັບພະຍາກອນປ່າໄມ້ ເພື່ອການປຸກສ້າງ, ເປັນໄມ້ຟືນ ແລະ ຂາຍ ຢູ່ ຕາມບ່ອນທີ່ຢູ່ອາໄສ.

ການພັດທະນາດ້ານພື້ນຖານໂຄງລ່າງ

ການພັດທະນາພື້ນຖານໂຄງລ່າງບໍ່ສະເພາະແຕ່ການກໍ່ສ້າງເຂື່ອນໄຟຟ້າ, ເສັ້ນທາງ , ຂຸດຄົ້ນບໍ່ແຮ່ , ລະບົບຊົນລະປະທານ ແມ່ນໄປຕາມແຜນພັດທະນາຂອງລັດຖະບານ ໂດຍໄດ້ຮັບອະນຸຍາດຈາກທຸກຂັ້ນ ນັບແຕ່ຂັ້ນສູນກາງລົງມາຫາທ້ອງຖິ່ນເຊັ່ນ: ແຂວງ ແລະ ເມືອງ. ການພັດທະນາພື້ນຖານໂຄງລ່າງທີ່ມີແຜນ ສາມາດ ເບິ່ງເຫັນພື້ນທີ່ປ່າໄມ້ທີ່ຈະຖືກສູນເສັຍ ຈຶ່ງຈຳເປັນຕ້ອງມີແຜນຄຸ້ມຄອງຈັດສັນຊັບພະຍາກອນປ່າໄມ້ຢ່າງຄັກແນ່ ເພື່ອໃຫ້ການຈັດຕັ້ງປະຕິບັດໄປຕາມແຜນ ແລະ ຖືກຕ້ອງຕາມລະບຽບກົດໝາຍທີ່ວາງໄວ້.

ການຜະລິດເປັນສິນຄ້າ

ການຜະລິດເປັນສິນຄ້າໄດ້ປະກອບສ່ວນເຮັດໃຫ້ພືດເສດຖະກິດ ແລະ ພືດອຸດສາຫະກຳເປັນຕົ້ນແມ່ນຢາງພາລາ ແລະ ໄມ້ນ້ຳມັນເພີ່ມຂຶ້ນຢ່າງໄວວາ. ຜູ້ລົງທຶນສາມາດສຳປະທານທີ່ດິນຈາກລັດໃນໄລຍະຍາວ, ເຊົ່າທີ່ດິນຕາມສັນຍາ ຫຼື ຜະລິດຕາມສັນຍາ (Contract farming). ການສຳປະທານທີ່ດິນໝາຍເຖິງການລົງທຶນປະເພດໜຶ່ງ ຊຶ່ງໃນນັ້ນທີ່ດິນຂອງລັດຖືກໂອນໃຫ້ພາກເອກະຊົນ (ບໍລິສັດ) ທີ່ລົງທຶນເພື່ອນຳໃຊ້ໃນການປູກຝັງ ຫຼື ກໍ່ສ້າງ. ການສຳປະທານທີ່ດິນຂະໜານໃຫຍ່ແມ່ນເປັນທີ່ຕ້ອງການຂອງຜູ້ລົງທຶນ ເພາະມັນເຮັດໃຫ້ຜູ້ລົງທຶນສາມາດຄຸ້ມຄອງນຳໃຊ້ໄດ້ຕາມຄວາມຕ້ອງການທຸກຢ່າງຂອງເຂົາເຈົ້າ. ການຜະລິດກະສິກຳຕາມສັນຍາ (Contract farming) ແມ່ນຮູບແບບໜຶ່ງຂອງການລົງທຶນ ໃນນັ້ນຊາວກະສິກອນຈະມີຄວາມສ່ຽງໃນການຮັບປະກັນຜົນປະໂຫຍດ ແລະ ຜົນຜະລິດຂອງເຂົາເຈົ້າ ຊຶ່ງຕ່າງຈາກການສຳປະທານທີ່ດິນ ເພື່ອທຳການຜະລິດ ຊຶ່ງຊາວກະສິກອນມີສິດໃນທີ່ດິນຂອງເຂົາເຈົ້າ. ການຜະລິດກະສິກຳຕາມສັນຍາ ໂດຍສະເພາະການປູກພືດເສດຖະກິດ ຢູ່ ແຂວງຫຼວງພະບາງ ໄດ້ເລີ່ມຂະຫຍາຍຕົວນັບແຕ່ຕົ້ນປີ 2000 ເປັນຕົ້ນມາ ພາຍຫຼັງທີ່ລັດຖະບານສົ່ງເສີມການຜະລິດຮູບແບບ 2+3. ພາກສ່ວນທຸລະກິດໄມ້ຈາກບັນດາປະເທດໃກ້ຄຽງກໍໄດ້ມີການເຄື່ອນໄຫວຢ່າງແຂງແຮງພາຍໃນແຂວງເຊັ່ນກັນ ອັນເຮັດໃຫ້ໄມ້ທີ່ຜິດກົດໝາຍຈຳນວນບໍ່ໜ້ອຍຖືກຂຸດຄົ້ນ ແລະ ຂົນສົ່ງຂ້າມແດນໄປຍັງປະເທດເຫຼົ່ານັ້ນ.

3.4. ສາຍເຫດທາງອ້ອມຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ

3.4.1. ປັດຈັຍດ້ານປະຊາກອນ

ຈຳນວນປະຊາກອນຂອງແຂວງຫຼວງພະບາງນັບມື້ນັບເພີ່ມຂຶ້ນໃນອັດຕາສະເລັ່ຍ 2,4% ຕໍ່ປີ (2005). ປີ 2015 ຈຳນວນປະຊາກອນຂອງແຂວງຫຼວງພະບາງແມ່ນ 454.095 ຄົນ, ໃນນັ້ນປະຊາກອນຂອງເມືອງປາກແຊງ ແລະ ຊຽງເງີນ ແມ່ນຫຼຸດລົງ , ສ່ວນເມືອງອື່ນແມ່ນເພີ່ມຂຶ້ນ ດ້ວຍອັດຕາທີ່ແຕກຕ່າງກັນ. ການເພີ່ມຂຶ້ນຂອງປະຊາກອນ ແມ່ນພາໃຫ້ເກີດຄວາມກົດດັນຕໍ່ຊັບພະຍາກອນປ່າໄມ້ ພາຍໃນແຂວງ. ໃນເຂດຊົນນະບົດ, ການດຳລົງຊີວິດຂອງປະຊາຊົນສ່ວນໃຫຍ່ແມ່ນອາໄສທຳມະຊາດ ລວມທັງຊັບພະຍາກອນປ່າໄມ້ ໂດຍສະເພາະການນຳໃຊ້ໄມ້ເພື່ອເປັນສິ່ງປຸກສ້າງທີ່ຢູ່ອາໄສ ແລະ ສິ່ງອຳນວຍຄວາມສະດວກອື່ນໆຂອງບ້ານ, ການນຳໃຊ້ໄມ້ຟືນເພື່ອແຕ່ງຢູ່ຄົວກົນ, ໃຫ້ຄວາມອົບອຸ່ນ ແລະ ອື່ນໆ. ເນື່ອງຈາກວ່າພື້ນທີ່ບ່ອນຮາບພຽງເໝາະສົມແກ່ການເຮັດນາມີຈຳກັດໃນທົ່ວແຂວງ ການເຮັດໄຮ່ຈຶ່ງຄອງອັນດັບໜຶ່ງໃນການຮັບປະກັນທາງດ້ານສະບຽງອາຫານ ແລະ ສ້າງລາຍຮັບໃຫ້ປະຊາຊົນ. ນອກນັ້ນ, ການເພີ່ມຂຶ້ນຂອງປະຊາກອນຍັງເຮັດໃຫ້ການນຳໃຊ້ທີ່ດິນບໍ່ມີຄວາມຍືນຍົງ ໂດຍສະເພາະການຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ການຂຸດຄົ້ນຜະລິດຕະພັນຈາກປ່າທີ່ເກີນຂອບເຂດ ອັນນຳໄປສູ່ການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເສື່ອມໂຊມໃນທີສຸດ.ເຊັ່ນດຽວກັນ , ການເພີ່ມຂຶ້ນຂອງປະຊາກອນ ບວກກັບການແຂ່ງຂັນດ້ານການຜະລິດກະສິກຳ ເຮັດໃຫ້ຮອບວຽນຂອງການເຮັດໄຮ່ສັ້ນເຂົ້າ ພາໃຫ້ຜົນຜະລິດຕົກຕ່ຳ ແລະ ດິນເສື່ອມຄຸນນະພາບ ຊາວກະສິກອນຈຶ່ງຈຳເປັນຕ້ອງໄດ້ຖາງປ່າບ່ອນໃໝ່ເພື່ອເຮັດການຜະລິດ.

3.4.2. ປັດຈັຍດ້ານເສດຖະກິດ

ຄວາມທຸກຍາກ ແມ່ນສາເຫດທາງອ້ອມໜຶ່ງຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ. ສປປ ລາວ ເປັນປະເທດທີ່ຍັງດ້ອຍພັດທະນາຢູ່ ໂດຍທີ່ 80% ຂອງພົນລະເມືອງແມ່ນອາໄສການກະສິກຳ ແລະ ຊັບພະຍາກອນທຳມະຊາດໃນການສ້າງເສດຖະກິດ. ໃນໄລຍະຜ່ານມາ, ແຂວງຫຼວງພະບາງກໍໄດ້ພະຍາຍາມທຸກວິທີທາງ ເພື່ອແກ້ໄຂຄວາມທຸກຍາກ ໂດຍເອົາໃຈໃສ່ເປັນພິເສດຕໍ່ຄອບຄົວທີ່ທຸກຍາກ ແລະ ວາງຄາດໝາຍຮອດປີ 2015 ໃຫ້ຈຳນວນຄອບຄົວທຸກຍາກບໍ່ໃຫ້ເກີນ 4% ຂອງຈຳນວນຄອບຄົວທັງໝົດໃນທົ່ວແຂວງ. ຕົວຊີ້ວັດຄວາມທຸກຍາກໄດ້ຫຼຸດລົງໃນຊຸມປີຜ່ານມາ ຍ້ອນການສ້າງລາຍຮັບຂອງປະຊາຊົນ ໂດຍສະເພາະການຊຸກຍູ້ສົ່ງເສີມລາຍຮັບຈາກການຜະລິດກະສິກຳ ແລະ ການທ່ອງທ່ຽວ.

ການຂາດທາງເລືອກໃນການດຳລົງຊີວິດເປັນສາເຫດທາງອ້ອມໜຶ່ງທີ່ສຳຄັນຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ. ປະຊາຊົນຈຳເປັນຕ້ອງໄດ້ຖາງປ່າເພື່ອທຳການຜະລິດ ແນໃສ່ເພື່ອຮັບປະກັນທາງດ້ານສະບຽງອາຫານ ແລະ ການດຳລົງຊີວິດຂອງເຂົາເຈົ້າ.

ຄວາມຕ້ອງການຂອງຕະຫຼາດດ້ານຜະລິດຕະພັນກະສິກຳເພີ່ມຂຶ້ນໄດ້ເຮັດໃຫ້ມີການຂະຫຍາຍເນື້ອທີ່ການຜະລິດກະສິກຳອອກໄປຕື່ມໃນທົ່ວແຂວງ. ຄວາມຕ້ອງການຈາກພາຍນອກເຊັ່ນ: ຈີນ ແລະ ຫວຽດນາມ ສົ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ການນຳໃຊ້ທີ່ດິນ ຢູ່ ແຂວງຫຼວງພະບາງ ໂດຍສະເພາະການຜະລິດເປັນສິນຄ້າເພື່ອສົ່ງອອກ ແລະ ຊົມໃຊ້ພາຍໃນ. ລະບົບການຜະລິດກະສິກຳຕາມສັນຍາ ແມ່ນເລີ່ມມີໃນຕົ້ນປີ 2000 ເປັນຕົ້ນມາ, ຊາວກະສິກອນເລີ່ມຜະລິດເຂົ້າໜູດລົງ ແລະ ການລົງທຶນໃສ່ການປູກພືດເສດຖະກິດ ແລະ ໄມ້ອຸດສາຫະກຳຫຼາຍຂຶ້ນ ເພື່ອສົ່ງອອກໄປຈີນ, ຫວຽດນາມ ແລະ ສ່ວນໜຶ່ງຮັບໃຊ້ພາຍໃນ. ການຂະຫຍາຍເນື້ອທີ່ປູກພືດເສດຖະກິດ ແລະ ໄມ້ອຸດສາຫະກຳຢ່າງໄວວາ ເປັນສາເຫດໜຶ່ງເຮັດໃຫ້ປ່າໄມ້ຖືກທຳລາຍ ແລະ ປ່າໄມ້ເສື່ອມໂຊມ ຊຶ່ງທ່າອ່ຽງນີ້ໄດ້ພາໃຫ້ເກີດມີຄວາມສ່ຽງຕໍ່ການຮັບປະກັນທາງດ້ານສະບຽງອາຫານໃນອະນາຄົດ ຖ້າລາຄາຕະຫຼາດຫາກຕົກຕ່ຳ. ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ແຜນຂອງຂະແໜງການຕ່າງໆທີ່ກ່ຽວຂ້ອງ ກໍໄດ້ເວົ້າເຖິງບັນຫານີ້ ໂດຍຖືເອົາການປູກພືດເສດຖະກິດ ແລະ ໄມ້ອຸດສາຫະກຳເປັນບັນຫາສຳຄັນ ສຳລັບການເຕີບໂຕທາງດ້ານເສດຖະກິດ ແລະ ການຫຼຸດຜ່ອນຄວາມທຸກຍາກຂອງແຂວງ. ໃນຂະນະທີ່ຕະຫຼາດໃນພາກພື້ນຍັງມີຄວາມເຂັ້ມແຂງຢູ່ ຈະເປັນແຮງຊຸກຍູ້ໃຫ້ການຜະລິດເພື່ອສົ່ງອອກຂອງແຂວງຫຼວງພະບາງສືບຕໍ່ໃນອະນາຄົດ.

ຄວາມຕ້ອງການໄມ້ໃນພາກພື້ນເພີ່ມຂຶ້ນກໍເປັນສາເຫດທາງອ້ອມໜຶ່ງກະຕຸກຊຸກຍູ້ໃຫ້ມີການລັກລອບຕັດໄມ້ ໂດຍສະເພາະຄວາມຕ້ອງການໄມ້ຂອງຕະຫຼາດຈີນ ແລະ ຫວຽດນາມ. ອີກດ້ານໜຶ່ງ, ການນຳໃຊ້ລະບຽບກົດໝາຍບໍ່ທັນເຂັ້ມງວດ ແລະ ການຄຸ້ມຄອງບໍ່ທັນຮັດກຸມ ເຮັດໃຫ້ການລັກລອບຕັດໄມ້ ແລະ ການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມກົດໝາຍຍັງສືບຕໍ່ ຢູ່ ໃນຂະແໜງການປ່າໄມ້ ຢູ່ ສປປ ລາວ.

3.4.3. ປັດຈັຍດ້ານນະໂຍບາຍ ແລະ ການຈັດຕັ້ງ

ການວາງແຜນນຳໃຊ້ທີ່ດິນທີ່ບໍ່ທົ່ວເຖິງພາຍໃນແຂວງພາໃຫ້ມີການທຳລາຍປ່າໄມ້ຢ່າງກ້ວາງຂວາງໂດຍບໍ່ມີແຜນລ່ວງໜ້າ ຊຶ່ງອາດມາຈາກບໍ່ມີແຜນ ຫຼື ມີແຜນແຕ່ບໍ່ປະຕິບັດຕາມແຜນ. ການກຳນົດເຂດແດນບໍ່ຈະແจ້ງ ໂດຍສະເພາະໃນເຂດປ່າໄມ້ ພາໃຫ້ການກວດສອບຄວາມຖືກຕ້ອງທາງດ້ານກົດໝາຍຂອງແຜນທີ່ສະເໜີບໍ່ຖືກຕ້ອງ ເປີດຊ່ອງว่างໃຫ້ນັກທຸລະກິດ/ໂຄງການ ສວຍໂອກາດຂຸດຄົ້ນຊັບພະຍາກອນທຳມະຊາດເກີນຂອບເຂດທີ່ອະນຸຍາດ. ການຕິດຕາມກວດກາ ແລະ ປະເມີນຜົນ ການນຳໃຊ້ທີ່ດິນຕາມແຜນ ບໍ່ສາມາດປະຕິບັດໄດ້ຢ່າງເຕັມເມັດເຕັມໜ່ວຍ ໂດຍສະເພາະຢູ່ຂັ້ນເມືອງ ແລະ ຂັ້ນບ້ານ.

ການຈັດຕັ້ງປະຕິບັດລະບຽບກົດໝາຍບໍ່ເຂັ້ມງວດຮັດໃຫ້ມີການຖາງປ່າແບບຊະຊາຍ ແລະ ການລັກລອບຕັດໄມ້. ການຊຸກຍູ້ສົ່ງເສີມການປູກພືດເສດຖະກິດເປັນສິນຄ້າ, ການປູກໄມ້ອຸດສາຫະກຳ, ການກໍ່ສ້າງເຂື່ອນໄຟຟ້າ ຊຶ່ງເປັນສາເຫດຫຼັກຂອງການທຳລາຍປ່າໄມ້ແມ່ນນອນ ຢູ່ ໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ເມືອງ ແນໃສ່ເພື່ອພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ຈະເລີນເຕີບໂຕດ້ວຍບາດກ້າວທີ່ໄວ ແລະ ໜັກແໜ້ນ ຊຶ່ງແມ່ນທິດທາງນະ�โยบายການພັດທະນາຂອງລັດຖະບານ ແຕ່ຜ່ານມາກໍມີຫຼາຍກໍລະນີການປູກພືດເປັນສິນຄ້າ ແລະ ການປູກໄມ້ອຸດສາຫະກຳ ໄດ້ບຸກລຸກເຂົ້າໃນເຂດປ່າໄມ້ ຫຼື ບໍລິສັດຂຸດຄົ້ນໄມ້ເກີນໂກຕ້າທີ່ອະນຸມັດ ໂດຍສະເພາະແມ່ນເຂດທີ່ມີການກໍ່ສ້າງເຂື່ອນໄຟຟ້າ, ການກໍ່ສ້າງເສັ້ນທາງ ແລະ ສາຍສົ່ງໄຟຟ້າ. ຜ່ານມາພາກສ່ວນກ່ຽວຂ້ອງກໍພະຍາຍາມ ຊຸກຍູ້ໃຫ້ປະຕິບັດຖືກຕ້ອງຕາມສັນຍາ ແຕ່ບາງຄັ້ງຂັ້ນຕອນການອະນຸຍາດສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາ ບໍ່ປະຕິບັດຕາມລະບຽບຫຼັກການຢ່າງຖືກຕ້ອງ ໂດຍສະເພາະຢູ່ ຂັ້ນແຂວງ ແລະ ຂັ້ນເມືອງ ຍັງຂາດພະນັກງານທີ່ມີຄວາມຮູ້ຄວາມສາມາດດ້ານວິຊາການ ເພື່ອປະຕິບັດໜ້າທີ່ເຫຼົ່ານີ້.

ສິດນຳໃຊ້ທີ່ດິນ ແລະ ການມອບດິນ-ມອບປ່າບໍ່ຈະແจ້ງນັ້ງເປັນສິ່ງທ້າທາຍໃນການແກ້ໄຂບັນຫາການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ພາຍໃນແຂວງ. ນັບແຕ່ປີ 1990 ເປັນຕົ້ນມາ ລັດຖະບານກໍຄືແຂວງໄດ້ດຳເນີນການມອບດິນ-ມອບປ່າ ແລະ ອອກໃບຕາດິນໃຫ້ບຸກຄົນ, ຄອບຄົວ ແລະ ສ່ວນລວມ ໃນເຂດຊົນນະບົດ. ໃນ 5 ປີ ຜ່ານມາ ການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ ສາມາດອອກໃຫ້ໄດ້ 68.730 ຕອນ ໃນ 762 ບ້ານ ຂອງ 12 ເມືອງ. ຢ່າງໃດກໍດີ, ການອອກໃບຕາດິນສ່ວນຫຼາຍແມ່ນດິນປຸກສ້າງ, ດິນກະສິກຳເຂດທົ່ງພຽງ

ລວມທັງດິນນາ ແລະ ດິນປູກໄມ້ລຽບຕາມແຄມທາງ. ເນື່ອງຈາກວ່າການມອບດິນ-ມອບປ່າ ຢູ່ ເຂດພູດອຍ ຍັງບໍ່ທົ່ວເຖິງ ແລະ ເໝາະສົມ ເຮັດໃຫ້ບຸກຄົນ, ຄອບຄົວ ແລະ ຊຸມຊົນ ບໍ່ມີແຮງຈູງໃຈ ຫຼື ໝັ້ນໃຈໃນການລົງທຶນໄລຍະຍາວ ເພື່ອນຳໃຊ້ທີ່ດິນແບບຍືນຍົງ.

ວຽກງານສົ່ງເສີມການພັດທະນາຊົນນະບົດຢູ່ ຂັ້ນແຂວງ, ເມືອງ ແລະ ກຸ່ມບ້ານ
ການພິຈາລະນາໃນເບື້ອງຕົ້ນຂອງແຕ່ລະຂັ້ນຮັບຜິດຊອບ ມີຄວາມສຳຄັນໃນການອະນຸຍາດສຳປະທານທີ່ດິນ ກໍຄືການຜະລິດຕາມສັນຍາ. ວຽກງານສົ່ງເສີມກໍໄດ້ຊ່ວຍຊຸກຍູ້ດ້ານວິຊາການໃຫ້ການຜະລິດກະສິກຳ ແລະ ການຄຸ້ມຄອງປ່າໄມ້ ໂດຍສະເພາະການນຳໃຊ້ທີ່ດິນແບບຍືນ ຍົງ. ນອກນັ້ນ, ຍັງຊ່ວຍຊາວກະສິກອນເຂົ້າໃຈ, ສາມາດເຂົ້າຫາຕະຫຼາດ ແລະ ກຳນົດຕົວເອງຢ່າງຖືກຕ້ອງໃນຕ່ອງໂສ້ດ້ານມູນຄ່າຂອງການ ຜະລິດ ແລະ ຈຳໜ່າຍ ເພີ່ມຂີດຄວາມສາມາດ ແລະ ອຳນາດຂອງເຂົາເຈົ້າໃນການເຈລະຈາຕໍ່ລອງດ້ານການຕະຫຼາດ. ແຕ່ວຽກງານສົ່ງເສີມ ເຫຼົ່ານັ້ນ ຍັງມີຂໍ້ຈຳກັດ ເນື່ອງຈາກຂາດແຄນດ້ານງົບປະມານ ແລະ ບຸກຄະລະກອນ. ການໂຄສະນາເຜີຍແຜ່, ການນຳໃຊ້ທີ່ດິນແບບຍືນຍົງ, ການວາງແຜນນຳໃຊ້ທີ່ດິນທີ່ລະອຽດຈະແจ້ງ ແລະ ການນຳໃຊ້ລະບຽບກົດໝາຍປ່າໄມ້ຢ່າງເຂັ້ມງວດ ກໍແມ່ນວິທີໜຶ່ງເພື່ອຍົກຜະລິດຕະພາບ ໃຫ້ສູງຂຶ້ນ ເນື່ອງຈາກວ່າຂັ້ນຕອນເຫຼົ່ານີ້ສາມາດເຮັດໃຫ້ການຈັດຕັ້ງປະຕິບັດກິດຈະກຳຕ່າງໆຖືກຕ້ອງເໝາະສົມກັບພື້ນທີ່, ປະຕິບັດຖືກຕ້ອງ ຕາມຫຼັກວິຊາການ ແລະ ລະບຽບກົດໝາຍ.

3.5. ການປະເມີນສາເຫດຫຼັກ ແລະ ວິທີແກ້ໄຂສຳລັບວຽກງານREDD+

ອີງໃສ່ຜົນຂອງການວິເຄາະສາເຫດຫຼັກຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມໃນພາກ 3.2 ແລະ 3.4 ສາເຫດທາງກົງ, ສາເຫດທາງອ້ອມ ແລະ ວິທີແກ້ໄຂ ຖືກຈັດບູລິມະສິດດັ່ງ **ຕາຕະລາງ 12**ລຸ່ມນີ້.

ຕາຕະລາງ 12: ການປະເມີນສາເຫດທາງກົງ, ສາເຫດທາງອ້ອມ ແລະ ວິທີແກ້ໄຂ

	ສາເຫດທາງກົງ	ສາເຫດທາງອ້ອມ	ວິທີແກ້ໄຂ
ການທຳລາຍປ່າໄມ້			
1	ການຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ການຂະຫຍາຍເນື້ອທີ່ກະສິກຳ	· ການປະສານງານລະຫວ່າງການວາງແຜນນຳໃຊ້ທີ່ດິນ ແລະ ເປົ້າໝາຍຂອງການພັດທະນາເສດຖະກິດ-ສັງຄົມບໍ່ເຂັ້ມງວດ ຂາດຄວາມກົມກຽວ ເຮັດໃຫ້ການນຳໃຊ້ທີ່ດິນບໍ່ມີປະສິດທິພາບ.	· ປັບປຸງຂອດການປະສານງານຂັ້ນແຂວງ ແລະ ເມືອງ ໃຫ້ມີຄວາມກົມກຽວກັນ ໂດຍສະເພາະການເຊື່ອມໂຍງລະຫວ່າງຂະແໜງຄຸ້ມຄອງນຳໃຊ້ທີ່ດິນ ແລະ ຂະແໜງປ່າໄມ້. · ການຄຸ້ມຄອງປ່າໄມ້ໃນເຂດປ່າປ້ອງກັນ. · ການຄຸ້ມຄອງປ່າໄມ້ບ້ານ ແນໃສ່ເພື່ອຮັບປະກັນການປົກປັກຮັກສາ, ການປູກໄມ້ ແລະ ການຟື້ນຟູປ່າໄມ້ທີ່ບ້ານເປັນຜູ້ຄຸ້ມຄອງນຳໃຊ້ ຢູ່ ແຕ່ລະທ້ອງຖິ່ນ.
		· ການກຳນົດເຂດນຳໃຊ້ທີ່ດິນກະສິກຳບໍ່ລະອຽດຈະແจ້ງໃນເຂດປ່າເສື່ອມໂຊມ ເຮັດໃຫ້ການທຳລາຍປ່າໄມ້ຍັງສືບຕໍ່ເພີ່ມຂຶ້ນ. · ຄວາມຕ້ອງການຂອງຕະຫຼາດກ່ຽວກັບຜະລິດຕະພັນກະສິກຳເພີ່ມຂຶ້ນ ເຮັດໃຫ້ມີການຂະຫຍາຍເນື້ອທີ່ກະສິກຳ.	· ກຳນົດຄືນ 3 ປະເພດປ່າ ລະດັບຊາດ, ແຂວງ ແລະ ເມືອງ. · ການຄຸ້ມຄອງປ່າໄມ້ໃນເຂດປ່າປ້ອງກັນ.
		· ການຕິດຕາມກວດກາ ແລະ ການຈັດຕັ້ງປະຕິບັດກົດໝາຍ ຕໍ່ກັບການສຳປະທານທີ່ດິນກະສິກຳ ແລະ ການຜະລິດຕາມສັນຍາບໍ່ເຂັ້ມງວດ.	· ທົບທວນຄືນສັນຍາສຳປະທານທີ່ດິນກະສິກຳ, ປັບປຸງສັນຍາເພື່ອຮັບປະກັນບໍ່ໃຫ້ບຸກລຸກເຂົ້າໃນເຂດປ່າໄມ້ ອີງໃສ່ກົດໝາຍປ່າໄມ້.
		· ການມອບດິນ-ມອບປ່າຊັກຊ້າ ແລະ ສິດນຳໃຊ້ທີ່ດິນບໍ່ຈະແจ້ງ ພາໃຫ້ຂາດແຮງຈູງใจໃນການນຳໃຊ້ທີ່ດິນກະສິກຳແບບຍາວນານ.	· ຄຸ້ມຄອງປ່າໄມ້ບ້ານເພື່ອຮັບປະກັນການປົກປັກຮັກສາ, ການປູກໄມ້ ແລະ ການຟື້ນຟູປ່າໄມ້ທີ່ບ້ານຄຸ້ມຄອງນຳໃຊ້ໃນແຕ່ລະທ້ອງຖິ່ນ. · ຂຶ້ນທະບຽນ ແລະ ອອກໃບຕາດິນ.
		· ການປູກພືດເສດຖະກິດພາໃຫ້ດິນເສື່ອມຄຸນນະພາບ ເຮັດໃຫ້ຜົນຜະລິດຕົກຕ່ຳ ຈຳເປັນຕ້ອງໄດ້ບຸກເບີກເນື້ອທີ່ບ່ອນໃໝ່ເພື່ອທຳການຜະລິດ.	· ສົ່ງເສີມລະບົບການຜະລິດກະສິກຳເຂດພູດອຍແບບຍືນຍົງ.
		· ຄວາມທຸກຍາກ, ການເພີ່ມຂຶ້ນຂອງປະຊາກອນ ແລະ ຂາດທາງເລືອກໃນການດຳລົງຊີວິດ ພາໃຫ້ມີການບຸກລຸກເນື້ອທີ່ປ່າໄມ້ເພື່ອທຳການຜະລິດ.	· ສະເໜີແນະນຳທາງເລືອກໃນການດຳລົງຊີວິດ ຢູ່ ເຂດພູດອຍ.
2	ການກໍ່ສ້າງເຂື່ອນໄຟຟ້າ	· ການວາງແຜນບໍ່ຮອບຄອບເຮັດໃຫ້ມີການຂຸດຄົ້ນໄມ້ນອກເຂດນ້ຳຖ້ວມ, ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດລະບຽບກົດໝາຍບໍ່ເຂັ້ມງວດ ເຮັດໃຫ້ປ່າໄມ້ເສື່ອມໂຊມ. · ການປູກໄມ້ທົດແທນ, ການຟື້ນຟູປ່າ ແລະ ການຊົດເຊີຍບໍ່ມີແຜນຈະແจ້ງ ເຮັດໃຫ້ການປົກປັກຮັກສາອະນຸລັກຊີວະນາງາພັນ ແລະ ເຂດແຫຼ່ງນ້ຳ ໃນເຂດ	· ຮັບປະກັນການວາງແຜນ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ-ສັງຄົມ ຊຶ່ງເປັນສ່ວນໜຶ່ງຂອງການປະເມີນຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມຂອງຂໍ້ຕົກລົງສຳປະທານ. · ເພີ່ມທະວີການຕິດຕາມກວດກາການຂຸດຄົ້ນໄມ້ໃນເຂດນ້ຳຖ້ວມ. · ຊຸກຍູ້ລະບົບການຈ່າຍຄ່າບໍລິການສິ່ງແວດລ້ອມ(PFES) ເພື່ອປົກປັກຮັກສາປ່າໄມ້

		ກໍ່ສ້າງເຂື່ອນໄຟຟ້າ ບໍ່ຮູ້ວ່າການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ຖືກຕ້ອງຕາມຂໍ້ຕົກລົງສໍາປະທານ ຫຼື ບໍ່?	ແລະ ຄຸ້ມຄອງກົດຈະກໍາໃນເຂດອ່າງໂຕ່ງ.
3	ການຂຸດຄົ້ນບໍ່ແຮ່	• ການປົກປັກຮັກສາອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງປ່າໄມ້ ລວມທັງການຊົດເຊີຍ, ການປູກໄມ້ທົດແທນ, ການຟື້ນຟູປ່າ ໃນເຂດຂຸດຄົ້ນບໍ່ແຮ່ ບໍ່ຮູ້ວ່າການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາຖືກຕ້ອງຕາມຂໍ້ຕົກລົງສໍາປະທານ ຫຼື ບໍ່?	• ຮັບປະກັນການວາງແຜນ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ-ສັງຄົມ ຊຶ່ງເປັນສ່ວນໜຶ່ງຂອງການປະເມີນຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມຂອງຂໍ້ຕົກລົງສໍາປະທານ.
4	ການກໍ່ສ້າງຊົນລະປະທານ ແລະ ເສັ້ນທາງ	• ການປະສານງານລະຫວ່າງການວາງແຜນນໍາໃຊ້ທີ່ດິນ ແລະ ເປົ້າໝາຍຂອງການພັດທະນາເສດຖະກິດ-ສັງຄົມ ຂາດຄວາມກົມກຽວ ເຮັດໃຫ້ການນໍາໃຊ້ທີ່ດິນບໍ່ມີປະສິດທິພາບ, ການຕິດຕາມກວດກາ ແລະ ປະເມີນຜົນບໍ່ເຂັ້ມງວດ. • ການກໍານົດເຂດຫວງຫ້າມເດັດຂາດໃນເຂດປ່າປ້ອງກັນບໍ່ຈະແຈ້ງ ພາໃຫ້ມີການບຸກລຸກເຂົ້າໃນເຂດປ່າໄມ້. • ການຂຸດຄົ້ນໄມ້ເພື່ອແລກກັບໂຄງການກໍ່ສ້າງເສັ້ນທາງ ມັກຈະຂຸດຄົ້ນເກີນກໍານົດ.	• ປັບປຸງຂອດການປະສານງານຂັ້ນແຂວງ ແລະ ເມືອງ ໃຫ້ມີຄວາມກົມກຽວກັນ ໂດຍສະເພາະການເຊື່ອມໂຍງລະຫວ່າງຂະແໜງຄຸ້ມຄອງນໍາໃຊ້ທີ່ດິນ (ຊົນລະປະທານ ແລະ ເສັ້ນທາງ) ແລະ ຂະແໜງປ່າໄມ້. • ການຄຸ້ມຄອງປ່າໄມ້ໃນເຂດປ່າປ້ອງກັນ.
ການເຮັດໃຫ້ປ່າໄມ້ເສື່ອມໂຊມ			
5	ການປູກໄມ້ອຸດສາຫະກໍາໃນເຂດປ່າໄມ້ທໍາມະຊາດ	• ການກໍານົດເຂດປ່າເສື່ອມໂຊມເພື່ອປູກໄມ້ອຸດສາຫະກໍາບໍ່ຈະແຈ້ງ ພາໃຫ້ຍັງມີການບຸກລຸກເຂົ້າເຂດປ່າໄມ້.	• ກໍານົດຄືນ 3 ປະເພດປ່າ ລະດັບຊາດ, ແຂວງ ແລະ ເມືອງ. • ການຄຸ້ມຄອງປ່າໄມ້ໃນເຂດປ່າປ້ອງກັນ.
		• ການຈັດຕັ້ງປະຕິບັດກົດໝາຍ ແລະ ການຕິດຕາມກວດກາການປູກໄມ້ອຸດສາຫະກໍາບໍ່ເຂັ້ມງວດ. ການອະນຸຍາດສໍາປະທານປູກໄມ້ບໍ່ໄປຕາມຂັ້ນຕອນ/ເອກະສານບໍ່ຄົບຖ້ວນ.	• ສືບຕໍ່ປະຕິບັດຄໍາສັ່ງຂອງນາຍົກລັດຖະມົນຕີ ເລກທີ 13/ນຍ ວ່າດ້ວຍການຢຸດຊົ່ວຄາວສໍາປະທານປູກຢາງພາລາ ແລະ ໄມ້ວິກ ຈົນກ່ວາການກໍານົດເຂດສໍາປະທານລະອຽດຈະແຈ້ງ ແລະ ອົງການຈັດຕັ້ງຮັບຜິດຊອບຕ້ອງໄດ້ສ້າງຂຶ້ນ.
6	ການຂຸດຄົ້ນໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ	• ການຄຸ້ມຄອງ ແລະ ການນໍາໃຊ້ລະບຽບກົດໝາຍ ສໍາລັບການຂຸດຄົ້ນໄມ້ທີ່ຜິດກົດໝາຍບໍ່ເຂັ້ມງວດ.	• ປູກຈິດສໍານຶກ ແລະ ເຜີຍແຜ່ກົດໝາຍປ່າໄມ້ ແລະ ຂໍ້ກໍານົດກົດລະບຽບທີ່ກ່ຽວຂ້ອງ. • ນໍາໃຊ້ລະບຽບກົດໝາຍກ່ຽວກັບໂທດ້າຂຸດຄົ້ນໄມ້. • ປະຕິບັດຄໍາສັ່ງເລກທີ 15/ນຍ ລວມທັງປິດໂຮງເລື່ອຍ/ໂຮງຊອຍ ທີ່ບໍ່ມີໃບອະນຸຍາດຢ່າງຖືກຕ້ອງ. • ສ້າງລະບົບຕິດຕາມກວດກາການລັກລອບຕັດໄມ້.
		• ຄວາມຕ້ອງການໄມ້ (ໄມ້ທ່ອນ ແລະ ໄມ້ທີ່ຍັງບໍ່ໄດ້ປຸງແຕ່ງ) ຂອງຕະຫຼາດໃນ	• ພັດທະນາ ແລະ ປັບປຸງໃຫ້ທັນສະໄໝ ພ້ອມທັງເພີ່ມມູນຄ່າການປຸງແຕ່ງຜະລິດຕະ

		ພາກພື້ນເພີ່ມຂຶ້ນ.	ພັນໄມ້.
7	ໄຟໄໝ້ລາມປ່າ	· ການຖາງປ່າເຮັດໄຮ່ ໂດຍສະເພາະການຈູດໄຮ່ ເປັນສາເຫດພາໃຫ້ໄຟໄໝ້ລາມປ່າ. · ການຈູດປ່າເພື່ອລ່າສັດ. · ໄຟປ່າເກີດໂດຍບັງເອີນ. · ໄພທຳມະຊາດ.	· ປູກຈິດສຳນຶກ ກ່ຽວກັບການປ້ອງກັນໄຟປ່າ. · ສ້າງລະບົບຕິດຕາມກວດກາ ແລະ ສະກັດກັ້ນໄຟປ່າ.

4. ລາຍລະອຽດນະໂຍບາຍ ແລະ ມາດຕະການຕ່າງໆ(PAMs)

ເພື່ອແກ້ໄຂບັນຫາການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມຈາກສາເຫດຕ່າງໆ ແນໃສ່ເພື່ອຊຸກຍູ້ສິ່ງເສີມການຄຸ້ມຄອງປ່າໄມ້ແບບຍືນຍົງ, ນະໂຍບາຍ ແລະ ມາດຕະການຕ່າງໆ (PAMs) ໄດ້ຖືກກຳນົດຂຶ້ນກວມຫຼາຍຂະແໜງການ ໂດຍຜ່ານຂັ້ນຕອນການປຶກສາຫາລື ຢູ່ ຂັ້ນແຂວງ, ເມືອງ ແລະ ກຸ່ມບ້ານ. ການກຳນົດນະໂຍບາຍ ແລະ ມາດຕະການ ໄດ້ເນັ້ນໃສ່ 1) ການຄຸ້ມຄອງທີ່ດິນແບບຄົບວົງຈອນ, 2) ການຄຸ້ມຄອງປ່າໄມ້ ແລະ 3) ການຄຸ້ມຄອງທາງສັງຄົມ (ຊີວິດການເປັນຢູ່) ເພື່ອບັນລຸຈຸດປະສົງລະດັບຄາດໝາຍຂອງ PRAP.

4.1. ເປົ້າໝາຍຂອງPRAP

ເພື່ອປະກອບສ່ວນເຂົ້າໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດໃນລະດັບຊາດ ໂດຍການຈັດຕັ້ງປະຕິບັດກິດຈະກຳ REDD+ ຄຽງຄູ່ກັບການປົກປັກຮັກສາປ່າໄມ້, ການບໍລິການລະບົບນິເວດປ່າໄມ້ ແລະ ຊີວະນາໆພັນ , ເພີ່ມທະວີການປັບຕົວເຂົ້າກັບການພັດທະນາທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ ແນໃສ່ເພື່ອຮັບປະກັນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

4.2. ຈຸດປະສົງດ້ານການຄຸ້ມຄອງຂອງPRAP (MOs)

1. ເພື່ອຫຼຸດຜ່ອນການທຳລາຍປ່າໄມ້ໃນພື້ນທີ່ປ່າໄມ້ໃນປະຈຸບັນ.
2. ເພື່ອຫຼຸດຜ່ອນການເຮັດໃຫ້ປ່າໄມ້ເສື່ອມໂຊມໃນພື້ນທີ່ປ່າໄມ້ໃນປະຈຸບັນ.
3. ເພື່ອຊຸກຍູ້ສິ່ງເສີມປູກໄມ້ຟື້ນຟູປ່າ ໂດຍສະເພາະໃນເຂດທີ່ດິນປ່າໄມ້ທີ່ເສື່ອມໂຊມ.
4. ເພື່ອຊຸກຍູ້ສິ່ງເສີມ ແລະ ຄຸ້ມຄອງການປູກໄມ້ແບບຍືນຍົງ ໃນເຂດທີ່ດິນປ່າໄມ້ທີ່ເສື່ອມໂຊມ.
5. ເພີ່ມທະວີການປັບຕົວຂອງລະບົບນິເວດ ແລະ ປັບປຸງຊີວິດການເປັນຢູ່.

4.3. ລາຍລະອຽດນະໂຍບາຍ ແລະ ມາດຕະການຕ່າງໆ(PAMs)

ອົງປະກອບ 1: ການຄຸ້ມຄອງທີ່ດິນແບບຄົບວົງຈອນ

ດັ່ງທີ່ໄດ້ອະທິບາຍໃນພາກ 3.2 ການທຳລາຍປ່າໄມ້ແມ່ນມາຈາກການນຳໃຊ້ທີ່ດິນເຊັ່ນ: ການຜະລິດກະສິກຳ, ການຂຸດຄົ້ນບໍ່ແຮ່, ການກໍ່ສ້າງພື້ນຖານໂຄງລ່າງລວມທັງການກໍ່ສ້າງເຂື່ອນໄຟຟ້າ ແລະ ເສັ້ນທາງ ຈຶ່ງຈຳເປັນຕ້ອງເພີ່ມທະວີກົນໄກການປະສານງານລະຫວ່າງຂະແໜງການຕ່າງໆທີ່ນຳໃຊ້ທີ່ດິນ ແນໃສ່ເພື່ອຫຼຸດຜ່ອນການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ໃນເຂດປ່າໄມ້ປະຈຸບັນໃນທົ່ວແຂວງ. ນະໂຍບາຍ ແລະ ມາດຕະການ ເພື່ອຄຸ້ມຄອງປ່າໄມ້ແບບປະສົມປະສານ ທີ່ພົວພັນກັບທຸກຂະແໜງການທີ່ນຳໃຊ້ທີ່ດິນແມ່ນສຸມໃສ່ 5 ກິດຈະກຳຫຼັກ ຄື: 1) ການປັບປຸງການວາງແຜນນຳໃຊ້ທີ່ດິນຂັ້ນແຂວງ, 2) ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຢູ່ ຂັ້ນບ້ານ, 3) ການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ, 4) ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາ ສຳລັບການປູກພືດເສດຖະກິດ ແລະ ການປູກໄມ້ອຸດສາຫະກຳ ແລະ 5) ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງໂຄງການກໍ່ສ້າງພື້ນຖານໂຄງລ່າງ.

ອົງປະກອບຍ່ອຍ 1: ການປັບປຸງການວາງແຜນນຳໃຊ້ທີ່ດິນຂັ້ນແຂວງ

ການປັບປຸງການວາງແຜນນຳໃຊ້ທີ່ດິນຂັ້ນແຂວງ ແລະ ຂັ້ນເມືອງ ແມ່ນຄາດໝາຍທີ່ເປັນບູລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງ. ຂັ້ນຕອນການວາງແຜນນຳໃຊ້ທີ່ດິນຮຽກຮ້ອງໃຫ້ຂະແໜງປ່າໄມ້ ແລະ ທຸກຂະແໜງການທີ່ນຳໃຊ້ທີ່ດິນ ຕ້ອງໄດ້ຮ່ວມມື ແລະ ປະສານງານກັນຢ່າງໃກ້ສິດ ແນໃສ່ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານ ກໍຄືການຈັດຕັ້ງປະຕິບັດກິດຈະກຳຂອງແຕ່ລະຂະແໜງການ ຕ້ອງໄດ້ຫຼີກຫຼ່ຽງການທຳລາຍປ່າໄມ້. ພາຍຫຼັງສຳເລັດການກຳນົດ 3 ປະເພດປ່າຄືນໃໝ່ ແລະ ເຫັນດີເຫັນພ້ອມກັບທຸກຂະແໜງການກ່ຽວຂ້ອງ ຈະເອົາເຂົ້າແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນຂັ້ນແຂວງ.

ອົງປະກອບຍ່ອຍ 2: ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຢູ່ ຂັ້ນບ້ານ

ໃຫ້ການຮ່ວມມືດ້ານວິຊາການ ແລະ ສະໜອງງົບປະມານ ເພື່ອດຳເນີນການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຢູ່ ຂັ້ນບ້ານ (PLUP) ແນໃສ່ເພື່ອຄວບຄຸມການນຳໃຊ້ທີ່ດິນຂອງບ້ານບໍ່ໃຫ້ບຸກລຸກເຂົ້າເຂດປ່າໄມ້.

ອົງປະກອບຍ່ອຍ 3:ການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ

ຊຸກຍູ້ສິ່ງເສີມການຂຶ້ນທະບຽນທີ່ດິນ ແລະ ການອອກໃບຕາດິນ ກໍແມ່ນເປົ້າໝາຍໜຶ່ງທີ່ເປັນບູລິມະສິດໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງ ແລະ ຂະແໜງການຄຸ້ມຄອງທີ່ດິນ. ພະນັກງານລັດຈະໄດ້ຮັບການພັດທະນາຂີດຄວາມສາມາດ ແລະ ສ້າງຈິດສຳນຶກ ເພື່ອເຜີຍແຜ່ສິດນຳໃຊ້ທີ່ດິນ, ຈັດຕັ້ງປະຕິບັດການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ. ການຮັບຮູ້ສິດນຳໃຊ້ທີ່ດິນ ແລະ ການຈັດສັນທີ່ດິນ ຈະເຮັດໃຫ້ເຈົ້າຂອງທີ່ດິນມີແຮງຈູງໃຈໃນການລົງທຶນໃສ່ກິດຈະກຳໄລຍະຍາວ ແລະ ການນຳໃຊ້ທີ່ດິນມີຄວາມຍືນຍົງ ສາມາດຫຼີກຫຼ່ຽງການບຸກລຸກເຂົ້າໃນເຂດປ່າໄມ້.

ອົງປະກອບຍ່ອຍ 4: ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາ ສຳລັບການປູກພືດເສດຖະກິດ ແລະ ການປູກໄມ້ອຸດສາຫະກຳ

ການສຳປະທານທີ່ດິນເພື່ອປູກພືດເສດຖະກິດ ແລະ ປູກໄມ້ອຸດສາຫະກຳທີ່ບໍ່ແທດເໝາະ ໂດຍສະເພາະຂາດການຄົ້ນຄ້ວາພິຈາລະນາຢ່າງຖີ່ຖ້ວນ ກ່ຽວກັບການປົກປ້ອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ເຮັດໃຫ້ມີຊ່ອງว่างນຳໄປສູ່ການຖາງປ່າແບບບໍ່ຖືກຕ້ອງ. ຂີດຄວາມສາມາດຂອງພະນັກງານ ແລະ ງົບປະມານບໍ່ພຽງພໍ ເຮັດໃຫ້ຂາດມາດຕະການທີ່ເໝາະສົມໃນການສຳຫຼວດເບື້ອງຕົ້ນກ່ອນການອອກໃບອະນຸຍາດ. ເພື່ອແກ້ໄຂບັນຫາດັ່ງກ່າວ ກ່ອນອື່ນໝົດຕ້ອງໄດ້ເຮັດການປະເມີນລະອຽດ ແລະ ປັບປຸງຄືນກ່ຽວກັບສັນຍາສຳປະທານທີ່ດິນກະສິກຳ ແນໃສ່ເພື່ອຮັບປະກັນບໍ່ໃຫ້ມີການບຸກລຸກເຂົ້າໃນເຂດປ່າໄມ້ ໂດຍອີງໃສ່ກົດໝາຍປ່າໄມ້. ການປູກຈິດສຳນຶກ ແລະ ຝຶກອົບຮົມໃຫ້ພະນັກງານ ຕ້ອງໄດ້ຈັດຕັ້ງປະຕິບັດເພື່ອຄຸ້ມຄອງ ແລະ ຕິດຕາມກວດກາການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາ ໂດຍອີງໃສ່ເອກະສານທາງດ້ານນິຕິກຳທີ່ປັບປຸງຄືນໃໝ່ ແລະ ຈັດຕັ້ງປະຕິບັດຕົວຈິງກ່ຽວກັບການສຳປະທານ ແລະ ການຜະລິດຕາມສັນຍາ ຢູ່ ແຂວງຫຼວງພະບາງ.

ອົງປະກອບຍ່ອຍ 5:ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງໂຄງການກໍ່ສ້າງພື້ນຖານໂຄງລ່າງ

ຜ່ານການປຶກສາຫາລືກ່ຽວກັບ PRAP ເຫັນວ່າການສຳປະທານທີ່ດິນຍັງບໍ່ແທດເໝາະ ໂດຍສະເພາະຂາດການຄົ້ນຄ້ວາພິຈາລະນາຢ່າງຖີ່ຖ້ວນ ກ່ຽວກັບການປົກປ້ອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງນຳໄປສູ່ການຖາງປ່າແບບບໍ່ຖືກຕ້ອງ. ເຖິງແມ່ນວ່າມີນິຕິກຳຮອງຮັບແລ້ວ ແລະ ນິຕິກຳດັ່ງກ່າວແມ່ນເພື່ອຫຼີກຫຼ່ຽງຜົນກະທົບໃນທາງລົບຕໍ່ສິ່ງແວດລ້ອມ-ສັງຄົມ ແຕ່ດ້ານບຸກຄະລະກອນ ແລະ ຂີດຄວາມສາມາດຍັງບໍ່ພຽງພໍ ໃນການນຳໃຊ້ລະບຽບກົດໝາຍ ເພື່ອຕິດຕາມກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຢ່າງເໝາະສົມ. ການວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານ ຕິດຕາມກວດກາ ຜ່ານມາສ່ວນໃຫຍ່ແມ່ນຂະແໜງສິ່ງແວດລ້ອມທີ່ຂຶ້ນກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບ. ເຖິງຢ່າງໃດກໍດີ, ພະແນກກະສິກຳ ແລະ ປ່າໄມ້ ກໍຕ້ອງມີສ່ວນຮ່ວມ ໃນການເພີ່ມທະວີວຽກງານການວາງແຜນ, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການຄຸ້ມຄອງປ່າໄມ້ ພາຍໃຕ້ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ-ສັງຄົມ (ESMMP). ສ້າງຈິດສຳນຶກ ແລະ ຝຶກອົບຮົມໃຫ້ພະນັກງານ ໃນການນຳໃຊ້ລະບຽບກົດໝາຍ ແນໃສ່ເພື່ອປັບປຸງຂັ້ນຕອນການປະເມີນຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມ, ການວາງແຜນ ESMM, ຂັ້ນຕອນການປຶກສາຫາລື ແລະ ກົນໄກການຮ້ອງທຸກ ເພື່ອໃຫ້ການພັດທະນາພື້ນຖານໂຄງລ່າງ ຈັດຕັ້ງປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ແລະ ຫຼີກຫຼ່ຽງການທຳລາຍປ່າໄມ້. ພາຍຫຼັງສຳເລັດການພັດທະນາຂີດຄວາມສາມາດແລ້ວ ຕ້ອງໄດ້ທົດລອງຈັດຕັ້ງປະຕິບັດຕົວຈິງ ໃນການສ້າງແຜນ ESMMP, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ຢູ່ ໂຄງການເຂື່ອນໄຟຟ້າໃດໜຶ່ງທີ່ຈະມີແຜນກໍ່ສ້າງ.

ອົງປະກອບ 1: ການຄຸ້ມຄອງທີ່ດິນແບບຄົບວົງຈອນ

	ນະໂຍບາຍ ແລະ ມາດຕະການ(PAMs)	ລະດັບ	ຄາດໝາຍ
ອົງປະກອບຍ່ອຍ 1: ການປັບປຸງການວາງແຜນນຳໃຊ້ທີ່ດິນຂັ້ນແຂວງ ແລະ ເມືອງ *[MOs:1.2]*			
ກິດຈະກຳ 1.1	ສ້າງກົນໄກການປະສານງານກ່ຽວກັບທີ່ດິນ ໂດຍປະກອບມີກຳມະການຈາກຂະແໜງການ ປ່າໄມ້	ທົ່ວແຂວງ	ຈັດຕັ້ງຄະນະກຳມະການປະສານງານການວາງແຜນນຳໃຊ້ທີ່ດິນຂັ້ນ ແຂວງ
ກິດຈະກຳ 1.2	ສະໜັບສະໜູນດ້ານວິຊາການເພື່ອເຊື່ອມໂຍງ 3 ປະເພດປ່າ ເຂົ້າໃນແຜນຈັດສັນທີ່ດິນຂັ້ນ ແຂວງ, ແຜນນຳໃຊ້ທີ່ດິນ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ		ຈັດຝຶກອົບຮົມ 6 ຊຸດ ໃຫ້ພະນັກງານລັດ ເພື່ອໃຫ້ເຂົາເຈົ້າສາມາດວາງ ແຜນນຳໃຊ້ທີ່ດິນໄດ້ດ້ວຍຕົນເອງ
ກິດຈະກຳ 1.3	ຈັດຊື້ຈັດຫາເຄື່ອງມືອຸປະກອນ ເພື່ອສະໜັບສະໜູນການປັບປຸງວຽກງານວາງແຜນນຳໃຊ້ທີ່ດິນ		ສຳເລັດການຈັດຊື້ຈັດຫາ ແລະ ນຳໃຊ້ອຸປະກອນທີ່ຈຳເປັນເພື່ອປັບປຸງ ວຽກງານການວາງແຜນນຳໃຊ້ທີ່ດິນ
ກິດຈະກຳ 1.4	ຈັດຕັ້ງປະຕິບັດການປັບປຸງວຽກງານວາງແຜນນຳໃຊ້ທີ່ດິນຂັ້ນແຂວງ ແລະ ເມືອງ		ສຳເລັດແຜນຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນ ຢູ່ 12 ເມືອງ
ອົງປະກອບຍ່ອຍ 2: ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມຢູ່ຂັ້ນບ້ານ *[MOs:1.2]*			
ກິດຈະກຳ 2.1	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບການວາງແຜນນຳໃຊ້ທີ່ດິນແບບ ມີສ່ວນຮ່ວມ (PLUP)	ທົ່ວແຂວງ	ຈັດຝຶກອົບຮົມ 6 ຊຸດ ກ່ຽວກັບ PLUP ເຮັດໃຫ້ພະນັກງານ ສາມາດ ຈັດຕັ້ງປະຕິບັດການວາງແຜນນຳໃຊ້ທີ່ດິນດ້ວຍຕົນເອງ
ກິດຈະກຳ 2.2	ຈັດຕັ້ງປະຕິບັດການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຢູ່ ຂັ້ນບ້ານ		ຈັດຕັ້ງປະຕິບັດການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຢູ່ 180 ບ້ານ
ອົງປະກອບຍ່ອຍ 3: ການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ *[MOs:1.2]*			
ກິດຈະກຳ 3.1	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບຂັ້ນຕອນການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ	ທົ່ວແຂວງ	ຈັດຝຶກອົບຮົມ 6 ຊຸດໃຫ້ພະນັກງານ ເຮັດໃຫ້ເຂົາເຈົ້າສາມາດຈັດຕັ້ງ ປະຕິບັດການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນດ້ວຍຕົນເອງ
ກິດຈະກຳ 3.2	ຈັດຕັ້ງປະຕິບັດການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ຄຽງຄູ່ກັບການສ້າງຈິດສຳນຶກ ແລະ ເຜີຍແຜ່ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສືບທອດ, ກົດໝາຍວ່າດ້ວຍ ຄອບຄົວ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ		ສຳເລັດການຂຶ້ນທະບຽນທີ່ດິນ ຢູ່ 100 ບ້ານ ແລະ ອອກໃບຕາດິນໃຫ້ ຄອບຄົວທີ່ໄດ້ຂຶ້ນທະບຽນ
ອົງປະກອບຍ່ອຍ 4: ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາສຳລັບການປູກພືດເສດຖະກິດ ແລະ ການປູກໄມ້ *[MOs:1]*			
ກິດຈະກຳ 4.1	ກວດກາລະອຽດການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາໃນປະຈຸບັນ ສຳລັບການ ປູກພືດເສດຖະກິດ ແລະ ປູກໄມ້ໃນທົ່ວແຂວງ	ທົ່ວແຂວງ	ສຳເລັດການທົບທວນລະອຽດ ກ່ຽວກັບການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາໃນປະຈຸບັນ ລວມທັງນະ�โยบาย, ກົດໝາຍ ແລະ ຂີດຄວາມສາມາດຂອງພະນັກງານ. ສາມາດກຳນົດຊ່ອງว่าง ແລະ ວາງແນວທາງໃນການແກ້ໄຂ.

ກິດຈະກຳ 4.2	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບຂັ້ນຕອນການອະນຸມັດ ແລະ ຕິດຕາມກວດກາການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາ		ຈັດຝຶກອົບຮົມ 6 ຊຸດ ໃຫ້ພະນັກງານ ເຮັດໃຫ້ເຂົາເຈົ້າສາມາດຈັດຕັ້ງປະຕິບັດໄດ້ດ້ວຍຕົນເອງ
ກິດຈະກຳ 4.3	ຄຸ້ມຄອງ ແລະ ຕິດຕາມກວດກາການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາ ຢູ່ ຈຸດທົດລອງຂອງແຂວງຫຼວງພະບາງ		ສຳເລັດສ້າງແຜນຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດ ຢູ່ ຈຸດທົດລອງ
ອົງປະກອບຍ່ອຍ 5: ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງໂຄງການກໍ່ສ້າງພື້ນຖານໂຄງລ່າງ *[MOs:1]*			
ກິດຈະກຳ 5.1	ສ້າງຈິດສຳນຶກໃຫ້ພະນັກງານແຂວງ ແລະ ເມືອງ ກ່ຽວກັບການນຳໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ REDD+	ທົ່ວແຂວງ	ສ້າງຈິດສຳນຶກໃຫ້ພະນັກງານແຂວງ ແລະ ເມືອງ 26 ຊຸດ
ກິດຈະກຳ 5.2	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມກ່ຽວກັບການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMMP) ໃນຂັ້ນຕອນການວາງແຜນໂຄງການກໍ່ສ້າງພື້ນຖານໂຄງລ່າງ		ຝຶກອົບຮົມ 26 ຊຸດ ເຮັດໃຫ້ພະນັກງານລັດສາມາດອອກແບບແຜນຄຸ້ມຄອງ ແລະ ຕິດຕາມກວດກາຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMMP) ສຳລັບໂຄງການກໍ່ສ້າງພື້ນຖານໂຄງລ່າງ
ກິດຈະກຳ 5.3	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບຂັ້ນຕອນການປຶກສາຫາລືແບບມີສ່ວນຮ່ວມ ແລະ ກົນໄກການຮ້ອງທຸກສຳລັບໂຄງການ		ຝຶກອົບຮົມ 26 ຊຸດ ເຮັດໃຫ້ພະນັກງານ ສາມາດດຳເນີນການປຶກສາຫາລື ແລະ ສ້າງກົນໄກການຮ້ອງທຸກໄດ້ດ້ວຍຕົນເອງ
ກິດຈະກຳ 5.4	ທົດລອງວາງແຜນ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ໃນໂຄງການກໍ່ສ້າງເຂື່ອນໄຟຟ້າທີ່ຄັດເລືອກເພື່ອທົດລອງ		ແຜນ ESMMP ຖືກສ້າງຂຶ້ນ ແລະ ທົດລອງຈັດຕັ້ງປະຕິບັດ ຢູ່ ໂຄງການກໍ່ສ້າງເຂື່ອນໄຟຟ້າ

ອົງປະກອບ 2 ການຄຸ້ມຄອງປ່າໄມ້

ການຮັບປະກັນການຄຸ້ມຄອງປ່າໄມ້ແບບຍືນຍົງ ໄດ້ຖືກສະເໜີໃຫ້ເປັນນະ�โยบาย ແລະ ມາດຕະການທີ່ມີລັກສະນະຕັດສິນຊີ້ຂາດ ເພື່ອບັນລຸຈຸດປະສົງລະດັບຄາດໝາຍຂອງ PRAP. ນະ�โยบาย ແລະ ມາດຕະການ ຂອງຂະແໜງປ່າໄມ້ແມ່ນອົງປະກອບຫຼັກຂອງ PRAP ຊຶ່ງໃນນັ້ນລວມມີ: 1) ການກຳນົດຄືນ 3 ປະເພດປ່າ ໃນລະດັບຊາດ, ແຂວງ ແລະ ເມືອງ, 2) ການຄຸ້ມຄອງແບບພູມິທັດໃນເຂດປ່າປ້ອງກັນ, 3) ການຄຸ້ມຄອງປ່າໄມ້ບ້ານ, 4) ການປູກໄມ້ ແລະ ຟື້ນຟູປ່າໄມ້, 5) ການປ້ອງກັນໄຟໄໝ້ລາມປ່າ, 6) ການຄຸ້ມຄອງການປູກໄມ້ສັກແບບຍືນຍົງ ແລະ ປັບປຸງຕ່ອງໂສ້ມູນຄ່າ, 7) ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງການຂຸດຄົ້ນໄມ້ທີ່ຜິດກົດໝາຍ ແລະ 8) ການຈ່າຍຄ່າບໍລິການສິ່ງແວດລ້ອມ/ລະບົບນິເວດປ່າໄມ້. ເນື່ອງຈາກວ່າເນື້ອທີ່ ແລະ ອັດຕາຂອງການທຳລາຍປ່າໄມ້ຂ້ອນຂ້າງສູງ ເຂດປ່າປ້ອງກັນ ແລະ ເນື້ອທີ່ປ່າໄມ້ທີ່ຍັງບໍ່ທັນຈັດສັນ (ນອກ 3 ປະເພດປ່າ) ຈຶ່ງຖືເປັນເຂດບູລິມະສິດສຳລັບການຈັດຕັ້ງປະຕິບັດນະ�โยบาย ແລະ ມາດຕະການ (PAMs) ເພື່ອຄຸ້ມຄອງປ່າໄມ້.

ອົງປະກອບຍ່ອຍ1: ການກຳນົດ/ກວດກາຄືນ 3 ປະເພດປ່າໃນລະດັບຊາດ,ແຂວງ ແລະ ເມືອງ,ແບບພູມິທັດ

ການຄຸ້ມຄອງ 3 ປະເພດປ່າແບບຍືນຍົງ ຢູ່ ແຂວງຫຼວງພະບາງ ຜ່ານມາກໍໄດ້ຮັບການຊຸກຍູ້ສົ່ງເສີມຢ່າງເປັນປົກກະຕິ. ເຖິງຢ່າງໃດກໍດີ, ຂະແໜງການຕ່າງໆທີ່ນຳໃຊ້ທີ່ດິນລວມທັງຂະແໜງກະສິກຳ, ເຂື່ອນໄຟຟ້າ, ບໍ່ແຮ່ ຜ່ານມາກໍໄດ້ວາງແຜນ ແລະ ດຳເນີນກິດຈະການໃນ 3 ປະເພດປ່າມາແລ້ວ ແລະ ກິດຈະກຳເຫຼົ່ານັ້ນກໍເປັນສາເຫດຂອງການທຳລາຍປ່າໄມ້ພາຍໃນແຂວງ. ການກຳນົດຂອບເຂດຂອງ 3 ປະເພດປ່າບໍ່ຈະແจ້ງ ໂດຍສະເພາະຂອບເຂດປ່າປ້ອງກັນ ຈຶ່ງເປັນອຸປະສັກອັນໃຫຍ່ຫຼວງໃນການວາງແຜນຄຸ້ມຄອງແບບປະສົມປະສານໃນລະດັບແຂວງ ແລະ ເມືອງ. ໃນປີ 2015, ສະພາແຫ່ງຊາດໄດ້ສະເໜີໃຫ້ບັນດາກະຊວງກ່ຽວຂ້ອງທົບທວນ ແລະ ກຳນົດຄືນ 3 ປະເພດປ່າໃນຂອບເຂດທົ່ວປະເທດ ເນື່ອງຈາກວ່າການຈັດສັນໃນປະຈຸບັນຍັງບໍ່ຖືກຕ້ອງຕາມສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ. ສະນັ້ນ, ຈຶ່ງມີແຜນສະໜັບສະໜູນ: 1) ຈັດຕັ້ງຄະນະຮັບຜິດຊອບແຕ່ລະປະເພດປ່າ ແນໃສ່ເພື່ອຮັບປະກັນໃຫ້ມີໜ່ວຍງານຮັບຜິດຊອບຄຸ້ມຄອງຢ່າງຄັກແນ່ ແລະ 2) ທົບທວນ/ກຳນົດຄືນ 3 ປະເພດປ່າ ໂດຍສົມທົບປຶກສາຫາລືກັບຂະແໜງການອື່ນທີ່ນຳໃຊ້ທີ່ດິນ.
ຂໍ້ມູນດ້ານພູມສັນຖານຂອງ 3 ປະເພດປ່າ ໂດຍສະເພາະປ່າປ້ອງກັນ ບໍ່ສອດຄ່ອງກັນ ຢູ່ ຂັ້ນສູນກາງ, ແຂວງ ແລະ ເມືອງ ຊຶ່ງເປັນອຸປະສັກໜຶ່ງໃນການສ້າງແຜນນຳໃຊ້ທີ່ດິນ ແລະ ແຜນຄຸ້ມຄອງປ່າໄມ້ແບບປະສົມປະສານ ຕະຫຼອດຮອດຂອດການປະສານງານກັບຂະແໜງການກ່ຽວຂ້ອງທີ່ນຳໃຊ້ທີ່ດິນແມ່ນຫຍຸ້ງຍາກພໍສົມຄວນ. ໜ່ວຍງານຄຸ້ມຄອງ ແລະ ຖານຂໍ້ມູນຂ່າວສານປ່າໄມ້ ຢູ່ ພະແນກກະສິກຳ ແລະ ປ່າໄມ້ແຂວງໄດ້ຖືກສ້າງຂຶ້ນ ເພື່ອຄຸ້ມຄອງຮັກສາຂໍ້ມູນກ່ຽວກັບພູມສັນຖານ ແລະ ເນື້ອທີ່ປ່າໄມ້ໃນທົ່ວແຂວງ ແລະ ມີແຜນສ້າງພະນັກງານ ພ້ອມຈັດຊື້ອຸປະກອນ ເພື່ອຄຸ້ມຄອງຂໍ້ມູນຂ່າວສານດັ່ງກ່າວ.

ອົງປະກອບຍ່ອຍ 2 ການຄຸ້ມຄອງປ່າໄມ້ແບບພູມິທັດໃນເຂດປ່າປ້ອງກັນ

ນະ�โยบาย ແລະ ມາດຕະການໜຶ່ງທີ່ສຳຄັນ ແມ່ນການເພີ່ມທະວີການຄຸ້ມຄອງປ່າປ້ອງກັນ. ເນື້ອທີ່ປ່າປ້ອງກັນຂອງແຂວງຫຼວງພະບາງ ກວມ 61.4% ຂອງເນື້ອທີ່ທັງໝົດຂອງແຂວງ ຫຼື 60.4% ຂອງເນື້ອທີ່ປ່າໄມ້ທັງໝົດໃນປະຈຸບັນ. ຍ້ອນເນື້ອທີ່ປ່າປ້ອງກັນມີຢ່າງຫຼວງຫຼາຍ ຈຶ່ງມີການເຄື່ອນໄຫວຂອງຫຼາຍໆກິດຈະກຳໃນຫຼາຍຂະແໜງການທີ່ແຕກຕ່າງກັນເຊັ່ນ: ກະສິກຳ, ບໍ່ແຮ່, ເຂື່ອນໄຟຟ້າ ເປັນຕົ້ນ ໃນນັ້ນບາງກິດຈະກຳແມ່ນໄດ້ຂຶ້ນແຜນ ແລະ ບາງກິດຈະກຳແມ່ນດຳເນີນແລ້ວ. ສະນັ້ນ, ການເຊື່ອມໂຍງເຂົ້າກັບຂະແໜງການຕ່າງໆທີ່ກ່ຽວຂ້ອງຕ້ອງໄດ້ລະມັດລະວັງ ເພື່ອຮັບປະກັນວິທີການ ແລະ ຈຸດໃດທີ່ຈະຈັດຕັ້ງປະຕິບັດກິດຈະກຳເພື່ອຫຼຸດຜ່ອນການທຳລາຍປ່າໄມ້ໄດ້. ການວາງແຜນຄຸ້ມຄອງປ່າປ້ອງກັນແບບພູມິທັດ ແມ່ນມີຄວາມຈຳເປັນເພື່ອຮັບປະກັນໃຫ້ການປະສານງານ ແລະ ການເຊື່ອມໂຍງເຂົ້າກັນຂອງຂະແໜງການກ່ຽວຂ້ອງ ສາມາດດຳເນີນໄປໄດ້ຢ່າງກົມກຽວກັນ ໂດຍສະເພາະໃນຂັ້ນຕອນຂອງການວາງແຜນ. ຄະນະກຳມະການປະສານງານຈາກຂະແໜງການກ່ຽວຂ້ອງ ສຳລັບປ່າປ້ອງກັນ ຕ້ອງໄດ້ຮັບການຈັດຕັ້ງຂຶ້ນ ເພື່ອຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຕົວຈິງໃນເຂດປ່າປ້ອງກັນທີ່ເປັນບູລິມະສິດ.

ອົງປະກອບຍ່ອຍ 3 ການຄຸ້ມຄອງປ່າໄມ້ບ້ານ

ຂະບວນການພັດທະນາປ່າໄມ້ບ້ານຢູ່ ສປປ ລາວ ແມ່ນໄດ້ລະບຸໄວ້ໃນນິຕິກຳກ່ຽວກັບການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ. ລັດຖະບານມີນະ�โยบายຊຸກຍູ້ສົ່ງເສີມການວາງແຜນຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ ຢູ່ ຂັ້ນບ້ານ , ການຈັດສັນ ແລະ ມອບດິນ-ມອບປ່າໂດຍມີເປົ້າໝາຍຊຸກຍູ້ການຄຸ້ມຄອງຊັບພະຍາກອນທຳມະຊາດ ລວມທັງທີ່ດິນປ່າໄມ້ໂດຍແມ່ນປະຊາຊົນເປັນເຈົ້າການ. ສາເຫດຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມ�โຊມນັ້ນ ສ່ວນໃຫຍ່ແມ່ນຕິດພັນກັບການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງທ້ອງຖິ່ນ. ສະນັ້ນ, ການຄຸ້ມຄອງປ່າໄມ້ໂດຍປະຊາຊົນເປັນເຈົ້ານັ້ນຈຶ່ງແມ່ນບູລິມະສິດໜຶ່ງຂອງ PAM ພາຍໃຕ້ກອບຂອງ PRAP. ແຂວງຫຼວງພະບາງ ແມ່ນແຂວງທົດລອງໜຶ່ງສຳລັບວຽກງານມອບດິນ-ມອບປ່ານັບແຕ່ຊຸມປີ 1990 ເປັນຕົ້ນມາຊຶ່ງອົງການ SIDA, JICA ແລະ SDC ເຄີຍໃຫ້ການສະໜັບສະໜູນຊ່ວຍເຫຼືອໃນການວາງແຜນນຳໃຊ້ທີ່ດິນ ແລະ ຄຸ້ມຄອງປ່າໄມ້ບ້ານ ລວມທັງການປັບປຸງຊີວິດການເປັນຢູ່ໃນຫຼາຍທົດສະຫວັດຜ່ານມາ.

�โຄງການຄຸ້ມຄອງປ່າໄມ້ບ້ານ ຄາດວ່າຈະເລີ່ມລົງມື ຢູ່ ເມືອງໂພນໄຊ, ແຂວງຫຼວງພະບາງ ໃນປີ 2018 �โດຍການສະໜັບສະໜູນຈາກອົງການ kfw ຂອງເຢັຍລະມັນ. ແນວຄວາມຄິດຂອງ�โຄງການດັ່ງກ່າວ ແມ່ນຈະສ້າງຕົວແບບ ແລະ ແນວທາງ ເພື່ອເພີ່ມທະວີການຄຸ້ມຄອງປ່າໄມ້ບ້ານ ແນໃສ່ເພື່ອປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ �โດຍອີງໃສ່ບົດຮຽນ ແລະ ປະສົບການຜ່ານມາ ໃນການຄຸ້ມຄອງປ່າໄມ້ບ້ານ ຢູ່ ພາຍໃນແຂວງ.

ອົງປະກອບຍ່ອຍ 4 ການປູກໄມ້ ແລະ ການຟື້ນຟູປ່າ

ການຊຸກຍູ້ສົ່ງເສີມປູກໄມ້ ແລະ ຟື້ນຟູປ່າໃນເຂດປ່າໄມ້ທີ່ເສື່ອມ�โຊມ ແມ່ນກິດຈະກຳໜຶ່ງທີ່ເປັນບູລິມະສິດໃນແຜນພັດທະນາເສດຖະກິດ ແລະ ສັງຄົມຂອງແຂວງ. ເຖິງຢ່າງໃດກໍດີ, ການກຳນົດຂອບເຂດປ່າເສື່ອມ�โຊມເພື່ອປູກໄມ້ບໍ່ຈະແຈ້ງ ອາດເຮັດໃຫ້ມີການບຸກລຸກເຂົ້າໃນເຂດປ່າໄມ້ອີກ. ເພື່ອຊຸກຍູ້ວຽກງານປູກໄມ້ຟື້ນຟູປ່າໃຫ້ໄດ້ຮັບຜົນ ຕ້ອງສ້າງສະພາບແວດລ້ອມທີ່ເອື້ອອຳນວຍຊຶ່ງ PRAP ຈະຊ່ວຍສະໜັບສະໜູນການປະເມີນຄວາມເປັນໄປໄດ້ໃນການຟື້ນຟູບູລະນະປ່າໄມ້ ແລະ ຊຸກຍູ້�โດຍທາງກົງໃນການປູກໄມ້ຟື້ນຟູປ່າໃນເຂດປ່າໄມ້ທີ່ເສື່ອມ�โຊມ.

ອົງປະກອບຍ່ອຍ 5 ການປ້ອງກັນໄຟໄໝ້ລາມປ່າ

ອົງໃສ່ຜົນຂອງການປຶກສາຫາລື ຢູ່ ລະດັບແຂວງ ແລະ ເມືອງ ບັນຫາໄຟໄໝ້ລາມປ່າໃນແຕ່ລະປີ ແມ່ນບັນຫາໜຶ່ງທີ່ຈະຕ້ອງໄດ້ປ້ອງກັນ ເພື່ອຊ່ວຍຫຼຸດຜ່ອນການເຮັດໃຫ້ປ່າໄມ້ເສື່ອມ�โຊມ. ຮອດທ້າຍລະດູແລ້ງຂອງທຸກໆປີ ແລະ ເຂົ້າສູ່ລະດູການປູກຝັງ ຕ້ອງໄດ້ສ້າງຈິດສຳນຶກໃຫ້ປະຊາຊົນໃນການປ້ອງກັນບໍ່ໃຫ້ເກີດໄຟໄໝ້ລາມປ່າ ແລະ ສອນວິທີເຮັດແລວກັນໄຟ �โດຍສະເພາະຈຸດທີ່ຫຼໍ່ແຫຼມ. ການກວດກາລາດຕະເວນຂອບເຂດປ່າໄມ້ຂອງບ້ານແມ່ນມີຄວາມຈຳເປັນ ເພື່ອປ້ອງກັນໄຟປ່າ. ການສ້າງຈິດສຳນຶກກ່ຽວກັບການປ້ອງກັນໄຟໄໝ້ລາມປ່າ ແລະ ການສ້າງລະບົບຕິດຕາມກວດກາ ແມ່ນຈຳເປັນຕ້ອງໄດ້ມີແຜນສະໜັບສະໜູນ.

ອົງປະກອບຍ່ອຍ 6 ການຄຸ້ມຄອງສວນປູກໄມ້ສັກ ແລະ ການປັບປຸງຕ່ອງ�โສ້ມູນຄ່າ

ສວນປູກໄມ້ສັກເພີ່ມຂຶ້ນຢ່າງໄວວາເລີ່ມແຕ່ປີ 1990 ເປັນຕົ້ນມາ ພາຍຫຼັງທີ່ລັດຖະບານມີນະ�โยบายທົບທວນສິດຖືຄອງ ແລະ ນຳໃຊ້ທີ່ດິນ ແລະ ຊຸກຍູ້ສົ່ງເສີມການປູກໄມ້ສັກເພື່ອທົດແທນການຖາງປ່າເຮັດໄຮ່ແບບເລື່ອນລອຍ. ການຊຸກຍູ້ສົ່ງເສີມປູກໄມ້ສັກ ກໍມີທ່າແຮງໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດຊົນນະບົດໃຫ້ດີຂຶ້ນ. ແຕ່ປີ 2008 ເປັນຕົ້ນມາ, �โຄງການຄຸ້ມຄອງໄມ້ສັກຫຼວງພະບາງ (LPTP) ກໍມີການຊຸກຍູ້ສົ່ງເສີມປູກ ແລະ ຈັດສັນຄຸ້ມຄອງໄມ້ສັກ ຢູ່ ແຂວງຫຼວງພະບາງ ຕະຫຼອດມາ. ເພື່ອເພີ່ມລາຍຮັບໃຫ້ຊາວກະສິກອນປູກໄມ້ສັກ �โຄງການໄດ້ຊ່ວຍແນະນຳໃນການຈັດຕັ້ງເປັນກຸ່ມ ເພື່ອເຂົ້າຫາຕະຫຼາດທີ່ມີການຮັບຮອງໄດ້ງ່າຍຂຶ້ນ. ອົງການສາກົນ ອອກໃບຢັ້ງຢືນປ່າໄມ້ ຫຼື FSC ກໍໄດ້ທົດລອງຈັດສັນສວນປູກໄມ້ສັກ ເພື່ອອອກໃບຢັ້ງຢືນ ແລະ ໄດ້ປະສົບຜົນສຳເລັດໃນລະດັບໜຶ່ງທີ່ໜ້າເພິ່ງພໍໃຈ ເຮັດໃຫ້ສວນປູກໄມ້ສັກໄດ້ຮັບການຈັດສັນຄຸ້ມຄອງຢ່າງຖືກຕ້ອງຕາມຫຼັກວິຊາການ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ ແລະ ປັບປຸງດີຂຶ້ນ. ນອກນັ້ນ, �โຄງການຍັງສ້າງຈິດສຳນຶກໃຫ້ພະນັກງານ ແລະ ຊາວກະສິກອນປູກໄມ້ສັກ ກ່ຽວກັບການຄຸ້ມຄອງ

ປ່າໄມ້ ແລະ ສິ່ງແວດລ້ອມ, ການອອກໃບຢັ້ງຢືນ FSC, ຕະຫຼາດໄມ້ສັກ ແລະ ການຈຳໜ່າຍ. PRAP ສະໜັບສະໜູນຍົກລະດັບຕົວແບບທີ່ໂຄງການ LPTP ໄດ້ສ້າງຂຶ້ນ ໂດຍແຜ່ຂະຫຍາຍອອກໄປສູ່ເມືອງອື່ນໆດ້ວຍການສະໜັບສະໜູນດ້ານເຕັກນິກວິຊາການ ແລະ ງົບປະມານ ເພື່ອຊຸກຍູ້ສິ່ງເສີມຫົວໜ່ວຍທຸລະກິດຂະໜາດນ້ອຍໃນການເພີ່ມມູນຄ່າໃຫ້ຜະລິດຕະພັນໄມ້ສັກປູກ.

ອົງປະກອບຍ່ອຍ 7: ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງການຂຸດຄົ້ນໄມ້ທີ່ຜິດກົດໝາຍ

ການຕັດໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍແມ່ນສາເຫດສຳຄັນໜຶ່ງຂອງການທຳລາຍປ່າໄມ້. ໃນກອງປະຊຸມປຶກສາຫາລືໄດ້ຍົກບັນຫາການຕັດໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ສະແດງຄວາມເປັນຫ່ວງຕໍ່ບັນຫາດັ່ງກ່າວ ໂດຍສະເພາະໃນບາງໂຄງການສ້າງເຂື່ອນໄຟຟ້າ ມີການຕັດເກີນຈຳນວນທີ່ທາງການອະນຸມັດເປັນຕົ້ນແມ່ນຕັດນອກເຂດນ້ຳຖ້ວມ. ຄຳສັ່ງເລກທີ 15/ນຍ ລົງວັນທີ 13 ພຶດສະພາ 2016 ແລະ ຄະນະກຳມະການຮັບຜິດຊອບຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ຢູ່ ຂັ້ນແຂວງ ຊຶ່ງມາຈາກຫຼາຍຂະແໜງການ ໄດ້ຮັບການສ້າງຕັ້ງຂຶ້ນເພື່ອເພີ່ມທະວີການບັງຄັບໃຊ້ກົດໝາຍສຳລັບການຂຸດຄົ້ນໄມ້. ກົດຈະກຳທີ່ມີລັກສະນະສະເພາະໃນບັນດານະໂຍບາຍ ແລະ ມາດຕະການ (PAM) ຊຶ່ງສອດຄ່ອງກັບແຜນການ 5 ປີ ຂອງກົມກວດກາປ່າໄມ້ ມີການສະໜັບສະໜູນວຽກງານສ້າງຄວາມເຂັ້ມແຂງໃຫ້ອຳນາດການປົກຄອງທ້ອງຖິ່ນ ແລະ ທີມງານລາດຕະເວນຊຶ່ງມາຈາກປ່າໄມ້ບ້ານ ເພື່ອກວດສອບ ແລະ ຕິດຕາມກວດກາການຂຸດຄົ້ນໄມ້ໃຫ້ຖືກລະບຽບ ລວມທັງການປຸງແຕ່ງ ແລະ ຈຳໜ່າຍໄມ້.

ອົງປະກອບຍ່ອຍ 8: ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້

ການສະໜອງທຶນໃຫ້ຂະແໜງປ່າໄມ້ແບບຍາວນານ ເປັນປັດໄຈສຳຄັນໜຶ່ງເພື່ອຜ່ານຜ່າອຸປະສັກທາງດ້ານການເງິນ ໂດຍສະເພາະແມ່ນການຂາດແຄນງົບປະມານ ຢູ່ ສປປ ລາວ ເວົ້າລວມ ໃນນັ້ນ ຫຼວງພະບາງ ກໍແມ່ນແຂວງໜຶ່ງທີ່ພົບພໍ້ກັບບັນຫາຂໍ້ຫຍຸ້ງຍາກດັ່ງກ່າວ. ທິດທາງໃນການກຳນົດນະ�โยบายເພື່ອຜ່ານຜ່າຂໍ້ຫຍຸ້ງຍາກດັ່ງກ່າວ ທາງລັດຖະບານກໍມີທິດທາງທີ່ຊັດເຈນແລ້ວ. ດຳລັດເລກທີ 333/ນຍ ກ່ຽວກັບປ່າປ້ອງກັນໄດ້ລະບຸໄວ້ວ່າ ທຸກພາກສ່ວນທີ່ນຳໃຊ້ປ່າໄມ້ເຊັ່ນ: ໂຄງການເຂື່ອນໄຟຟ້າ ແລະ ບໍລິສັດທ່ອງທ່ຽວທຳມະຊາດ ຕ້ອງໄດ້ປະກອບສ່ວນດ້ານທຶນຮອນເຂົ້າໃນກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້. ແຕ່ກໍມີບາງກໍລະນີທີ່ກ້າວກະໂດດເຊັ່ນ: ບາງໂຄງການສ້າງເຂື່ອນໄຟຟ້າ ແລະ ບໍລິສັດນ້ຳປາປາ ໄດ້ຕື່ນຕົວຈ່າຍຄ່າບໍລິການລະບົບນິເວດປ່າໄມ້ ເພື່ອປະກອບສ່ວນດ້ານທຶນຮອນໃນການຄຸ້ມຄອງເຂດຮັກສາແຫຼ່ງນ້ຳ. ເຖິງຢ່າງໃດກໍດີ, ກໍລະນີທີ່ໂດດເດັ່ນດັ່ງນີ້ກໍບໍ່ຄ່ອຍມີ ສ່ວນຫຼາຍໂຄງການສ້າງເຂື່ອນໄຟຟ້າ, ບໍລິສັດນ້ຳປາປາ ແລະ ບໍລິສັດທ່ອງທ່ຽວທຳມະຊາດ ບໍ່ປະກົດມີແຜນຈ່າຍຄ່າບໍລິການລະບົບນິເວດປ່າໄມ້ (PFES) ໂດຍນຳໃຊ້ກົນໄກນີ້ເລີຍ. ການສຶກສາຄວາມເປັນໄປໄດ້ ກ່ຽວກັບກົນໄກ PFES ຢູ່ ຫຼວງພະບາງ ໄດ້ຖືກດຳເນີນ ແລະ ມີແຜນຊຸກຍູ້ທົດລອງຈັດຕັ້ງປະຕິບັດກົດຈະກຳກ່ຽວກັບກົນໄກ PFES ກັບວິສາຫະກິດຕ່າງໆເປັນຕົ້ນແມ່ນບໍລິສັດນ້ຳປາປາ, ໂຄງການສ້າງເຂື່ອນໄຟຟ້າ ແລະ ບໍລິສັດທ່ອງທ່ຽວທຳມະຊາດ.

ອົງປະກອບ 2: ການຄຸ້ມຄອງປ່າໄມ້

	ນະໂຍບາຍ ແລະ ມາດຕະການ (PAMs)	ລະດັບ	ຄາດໝາຍ
ອົງປະກອບຍ່ອຍ 1: ການກຳນົດ/ກວດກາຄືນ 3 ປະເພດປ່າ ໃນລະດັບຊາດ, ແຂວງ ແລະ ເມືອງແບບພູມີທັດ *[MOs:1.2]*			
ກິດຈະກຳ 1.1	ຈັດຕັ້ງຄະນະກຳມະການຄຸ້ມຄອງ 3 ປະເພດປ່າ ໂດຍມາຈາກຂະແໜງການຕ່າງໆທີ່ກ່ຽວຂ້ອງ	ທົ່ວແຂວງ	ຄະນະກຳມະການຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ລະດັບຊາດ ແຂວງ ແລະ ເມືອງ ຈຳນວນ 24 ແຫ່ງ ໄດ້ຮັບການສ້າງຕັ້ງຂຶ້ນ
ກິດຈະກຳ 1.2	ປະເມີນລະອຽດເນື້ອທີ່ດິນ, ເນື້ອທີ່ສຳປະທານ, ແຫຼ່ງນ້ຳ, ເຂດເຊື່ອມຕໍ່ຊີວະນາງພັນ ແລະ ການບໍລິການລະບົບນິເວດປ່າໄມ້ອື່ນໆທີ່ຢູ່ພາຍໃນ ແລະ ອ້ອມຂ້າງ 3 ປະເພດປ່າ		ສຳເລັດການປະເມີນປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ລະດັບຊາດ, ແຂວງ ແລະ ເມືອງ ຈຳນວນ 24 ແຫ່ງ
ກິດຈະກຳ 1.3	ສ້າງແຜນທີ່ເນື້ອທີ່/ການນຳໃຊ້ທີ່ດິນໃນ 3 ປະເພດປ່າ ອີງໃສ່ຜົນຂອງການປະເມີນໃນ ກິດຈະກຳ 1.2		ສຳເລັດສ້າງແຜນທີ່ການນຳໃຊ້ທີ່ດິນຂອງປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ລະດັບຊາດ, ແຂວງ ແລະ ເມືອງ ຈຳນວນ 24 ແຫ່ງ
ກິດຈະກຳ 1.4	ກອງປະຊຸມປຶກສາຫາລື ໂດຍການເຂົ້າຮ່ວມຂອງຂະແໜງການກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ ເພື່ອຕົກລົງເປັນເອກະພາບ		ຕົກລົງເປັນເອກະພາບກ່ຽວກັບຂອບເຂດຂອງປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ລະດັບຊາດ, ແຂວງ ແລະ ເມືອງ ຈຳນວນ 24 ແຫ່ງ
ກິດຈະກຳ 1.5	ຈັດຊື້ອຸປະກອນຮັບໃຊ້ຫ້ອງການ, ຊອບແວ ແລະ ເຄື່ອງ GPS ເພື່ອສ້າງລະບົບຄຸ້ມຄອງຂໍ້ມູນຂ່າວສານກ່ຽວກັບປ່າໄມ້ລວມທັງ 3 ປະເພດປ່າ ແລະ ເອກະສານທາງການອື່ນໆ		ສະໜອງອຸປະກອນທີ່ຈຳເປັນໃຫ້ພາກສ່ວນຄຸ້ມຄອງຂໍ້ມູນຂ່າວສານ ຢູ່ ພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
ກິດຈະກຳ 1.6	ສະໜັບສະໜູນດ້ານວິຊາການ ເພື່ອເກັບຮັກສາ ແລະ ຄຸ້ມຄອງຂໍ້ມູນ		ພະນັກງານແຂວງ ແລະ ເມືອງສາມາດຄຸ້ມຄອງຂໍ້ມູນຂ່າວສານປ່າໄມ້ ຢູ່ ແຂວງຫຼວງພະບາງ
ອົງປະກອບຍ່ອຍ 2: ການຄຸ້ມຄອງປ່າໄມ້ແບບພູມີທັດໃນເຂດປ່າປ້ອງກັນ *[MOs:1,2,3,4]*			
ກິດຈະກຳ 2.1	ທົດລອງຈັດຕັ້ງປະຕິບັດການຄຸ້ມຄອງແບບພູມີທັດໃນເຂດປ່າປ້ອງກັນທີ່ເປັນບູລິມະສິດ	ພື້ນທີ່ປ່າປ້ອງກັນ	ແຜນຄຸ້ມຄອງປ່າປ້ອງກັນແບບພູມີທັດຖືກສ້າງຂຶ້ນ ສຳລັບພື້ນທີ່ປ່າປ້ອງກັນ 3 ແຫ່ງ ຢູ່ ແຂວງຫຼວງພະບາງແຫ່ງ
ກິດຈະກຳ 2.2	ຈັດຕັ້ງປະຕິບັດ ແລະ ຍົກລະດັບການຄຸ້ມຄອງປ່າໄມ້ແບບພູມີທັດ ໃນແຕ່ລະເຂດປ່າປ້ອງກັນ ແລະ 3 ປະເພດປ່າທີ່ຢູ່ອ້ອມຂ້າງ	ພື້ນທີ່ປ່າປ້ອງກັນ	ແຜນຄຸ້ມຄອງປ່າປ້ອງກັນແບບພູມີທັດຖືກສ້າງຂຶ້ນ, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ສຳລັບພື້ນທີ່ປ່າປ້ອງກັນ 18 ແຫ່ງ ຢູ່ ແຂວງຫຼວງພະບາງ
ອົງປະກອບຍ່ອຍ 3: ການຄຸ້ມຄອງປ່າໄມ້ບ້ານ *[MOs:1,2,3,4,5]*			
ກິດຈະກຳ 3.1	ສະໜັບສະໜູນດ້ານເຕັກນິກວິຊາການ ສຳລັບກົນໄກສະໜອງທຶນແບບຍາວນານ ເພື່ອຄຸ້ມຄອງປ່າໄມ້ບ້ານ	ທົ່ວແຂວງ	ກົນໄກສະໜອງທຶນແບບຍາວນານ ເພື່ອຄຸ້ມຄອງປ່າໄມ້ບ້ານ ໄດ້ຮັບການສ້າງຂຶ້ນ
ກິດຈະກຳ 3.2	ສະໜັບສະໜູນດ້ານເຕັກນິກວິຊາການ ເພື່ອເພີ່ມທາງເລືອກໃນການດຳລົງຊີວິດ		ທາງເລືອກໃນການດຳລົງຊີວິດ ດ້ວຍກິດຈະກຳທີ່ຕິດພັນກັບປ່າໄມ້ໂດຍປະຊາຊົນ

	ດ້ວຍກິດຈະກຳທີ່ຕິດພັນກັບປ່າໄມ້ໂດຍປະຊາຊົນເປັນເຈົ້າການ		ເປັນເຈົ້າການຖືກກຳນົດຂຶ້ນ
ກິດຈະກຳ 3.3	ສະໜັບສະໜູນດ້ານເຕັກນິກວິຊາການ ເພື່ອເພີ່ມມູນຄ່າໃຫ້ຜະລິດຕະພັນປ່າໄມ້ບ້ານ	ທົ່ວແຂວງ	ຕົວແບບການເພີ່ມມູນຄ່າໃຫ້ຜະລິດຕະພັນປ່າໄມ້ບ້ານໄດ້ຮັບການສ້າງຂຶ້ນ
ກິດຈະກຳ 3.4	ສະໜັບສະໜູນດ້ານເຕັກນິກວິຊາການ ເພື່ອຮັກສາ ແລະ ປັບປຸງກົນໄກການຈ່າຍຄ່າບໍລິການລະບົບນິເວດ, ຄຸນຄ່າທາງຊີວະນາໆພັນ, ການບໍລິການເຂດຮັກສາແຫຼ່ງນ້ຳ ແລະ ປະລິມານສະສົມຂອງການກອນປ່າໄມ້ ໂດຍຜ່ານກິດຈະກຳທີ່ຕິດພັນກັບປ່າໄມ້ໂດຍປະຊາຊົນເປັນເຈົ້າການ		ຕົວແບບຂອງກິດຈະກຳທີ່ຕິດພັນກັບປ່າໄມ້ ໂດຍປະຊາຊົນເປັນເຈົ້າການ ເພື່ອ ຮັກສາ ແລະ ປັບປຸງກົນໄກການຈ່າຍຄ່າບໍລິການລະບົບນິເວດ, ຄຸນຄ່າທາງຊີວະ ນາໆພັນ, ການບໍລິການເຂດຮັກສາແຫຼ່ງນ້ຳ ແລະ ປະລິມານສະສົມຂອງການກອນ ປ່າໄມ້ ໄດ້ຮັບການສະເໜີ
ກິດຈະກຳ 3.5	ຈັດຕັ້ງປະຕິບັດ ແລະ ຍົກລະດັບຕົວແບບການຄຸ້ມຄອງປ່າໄມ້ບ້ານ		ແຜນຄຸ້ມຄອງປ່າໄມ້ບ້ານໄດ້ຮັບການພັດທະນາ ແລະ ຈັດຕັ້ງປະຕິບັດ ຢູ່ 50 ບ້ານ
ອົງປະກອບຍ່ອຍ 4: ການປູກໄມ້ ແລະ ການຟື້ນຟູປ່າ *[MOs:3]*			
ກິດຈະກຳ 4.1	ການປະເມີນພື້ນທີ່ໆມີເງື່ອນໄຂບູລະນະຟື້ນຟູໃຫ້ເປັນປ່າໃນເຂດທີ່ດິນປ່າໄມ້ທີ່ເສື່ອມໂຊມ	3 ປະເພດປ່າ	ກຳນົດພື້ນທີ່ໆມີເງື່ອນໄຂປູກໄມ້ຟື້ນຟູປ່າ ແລະ ປ່າຟື້ນຟູທຳມະຊາດ ເພື່ອຫຼີກຫຼ່ຽງການທຳລາຍປ່າໄມ້ຈາກການປູກໄມ້ອຸດສາຫະກຳຂອງລັດ ແລະ ເອກະຊົນທີ່ບໍ່ແທດເໝາະ
ກິດຈະກຳ 4.2	ການຈັດຕັ້ງປະຕິບັດຟື້ນຟູປ່າທຳມະຊາດໃນເຂດປ່າເສື່ອມໂຊມ	3 ປະເພດປ່າ	ດຳເນີນກິດຈະກຳຟື້ນຟູປ່າທຳມະຊາດໃນເນື້ອທີ່ 2 .000 ເຮັກຕາ ໃນເຂດປ່າປ້ອງກັນ
ກິດຈະກຳ 4.3	ສະໜັບສະໜູນທຶນເພື່ອໃຫ້ປະຊາຊົນຈັດຕັ້ງປະຕິບັດປູກໄມ້ຟື້ນຟູປ່າໃນເຂດປ່າເສື່ອມໂຊມ	6.250 ເຮັກຕາ ໃນເຂດປ່າປ້ອງກັນ	ສະໜອງທຶນໃຫ້ທ້ອງຖິ່ນໂດຍກົງເພື່ອສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກຳບູລະນະຟື້ນຟູປ່າທຳມະຊາດ ແລະ ປູກປ່າໃນເນື້ອທີ່ 6.250 ເຮັກຕາ ຂອງປ່າເສື່ອມໂຊມ
ອົງປະກອບຍ່ອຍ 5: ການປ້ອງກັນໄຟໄໝ້ລາມປ່າ *[MOs:2]*			
ກິດຈະກຳ 5.1	ສ້າງຈິດສຳນຶກກ່ຽວກັບການປ້ອງກັນໄຟໄໝ້ລາມປ່າ ຢູ່ ຂັ້ນບ້ານ	ທົ່ວແຂວງ	ດຳເນີນການສ້າງຈິດສຳນຶກ 8 ຄັ້ງ ໃນແຕ່ລະເມືອງ (1 ຄັ້ງ/ປີ)
ກິດຈະກຳ 5.2	ສ້າງລະບົບເພື່ອຕິດຕາມກວດກາໄຟໄໝ້ລາມປ່າ ແລະ ທົດລອງລະບົບໃນພື້ນທີ່ຄັດເລືອກເພື່ອທົດລອງ		ລະບົບຕິດຕາມກວດກາເພື່ອປ້ອງກັນໄຟປ່າຖືກອອກແບບ
ກິດຈະກຳ 5.3	ການຈັດຕັ້ງປະຕິບັດການຕິດຕາມກວດກາປ່າໄມ້ ເພື່ອປ້ອງກັນໄຟໄໝ້ລາມປ່າ		ລະບົບຕິດຕາມກວດກາເພື່ອປ້ອງກັນໄຟປ່າຖືກຈັດຕັ້ງປະຕິບັດ
ອົງປະກອບຍ່ອຍ 6: ການຄຸ້ມຄອງສວນປູກໄມ້ສັກ ແລະ ການປັບປຸງຕ່ອງໂສ້ມູນຄ່າ *[MOs:4,5]*			
ກິດຈະກຳ 6.1	ການປະເມີນພື້ນທີ່ປູກໄມ້ສັກ ເພື່ອຍົກລະດັບການຄຸ້ມຄອງສວນປູກແບບຍືນຍົງ ເພື່ອໃຫ້ໄດ້ຮັບການຢັ້ງຢືນ	10 ເມືອງ	ກຳນົດພື້ນທີ່ໆມີເງື່ອນໄຂໃນການຊຸກຍູ້ສົ່ງເສີມເພື່ອອອກໃບຢັ້ງຢືນ
ກິດຈະກຳ 6.2	ສະໜັບສະໜູນເຕັກນິກວິຊາການ ເພື່ອເພີ່ມທະວີຄວາມເຂັ້ມແຂງໃຫ້ກຸ່ມຊາວກະສິກອນປູກໄມ້ສັກ ແລະ ເຄືອຂ່າຍຂອງເຂົາເຈົ້າ		ຈັດຕັ້ງກຸ່ມຊາວກະສິກອນປູກໄມ້ສັກໃນ 40 ບ້ານ

ກິດຈະກຳ 6.3	ສະໜັບສະໜູນເຕັກນິກວິຊາການ ເພື່ອຈັດຕັ້ງປະຕິບັດການຄຸ້ມຄອງສວນປູກໄມ້ສັກ ໃຫ້ຖືກຕ້ອງຕາມຫຼັກວິຊາການ		ດຳເນີນການຄຸ້ມຄອງສວນປູກໄມ້ສັກຕາມຫຼັກວິຊາການ ຢູ່ 40 ບ້ານ
ກິດຈະກຳ 6.4	ສະໜັບສະໜູນເຕັກນິກວິຊາການ ເພື່ອຊຸກຍູ້ສິ່ງເສີມການປັບປຸງໃຫ້ທັນສະໄໝ ໃນການເພີ່ມມູນຄ່າໃຫ້ການປຸງແຕ່ງຜະລິດຕະພັນຈາກໄມ້ສັກ		ການປຸງແຕ່ງຜະລິດຕະພັນໄມ້ສັກໄດ້ຮັບການປັບປຸງ
ກິດຈະກຳ 6.5	ສະໜັບສະໜູນເຕັກນິກວິຊາການ ເພື່ອຊຸກຍູ້ສິ່ງເສີມວິສາຫະກິດຂະໜາດນ້ອຍ ໃນການເພີ່ມມູນຄ່າໃຫ້ຜະລິດຕະພັນຈາກໄມ້ສັກ		ວິສາຫະກິດຂະໜາດນ້ອຍທີ່ນຳໃຊ້ໄມ້ສັກໄດ້ຮັບການພັດທະນາ ຢູ່ 40 ບ້ານ
ກິດຈະກຳ 6.6	ຈັດຊື້ວັດຖຸອຸປະກອນ ເພື່ອຊຸກຍູ້ສິ່ງເສີມການຄຸ້ມຄອງສວນປູກໄມ້ສັກໃຫ້ມີຄວາມຍືນຍົງ ແລະ ປັບປຸງຕ່ອງໂສ້ມູນຄ່າ		ພະນັກງານແຂວງ ແລະ ເມືອງ ມີອຸປະກອນພຽງພໍ ເພື່ອຄຸ້ມຄອງສວນປູກໄມ້ສັກແບບຍືນຍົງ
ອົງປະກອບຍ່ອຍ 7: ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງການຂຸດຄົ້ນໄມ້ທີ່ຜິດກົດໝາຍ *[MOs: 2]*			
ກິດຈະກຳ 7.1	ສ້າງຈິດສຳນຶກ ແລະ ເຜີຍແຜ່ນະໂຍບາຍຕ່າງໆກ່ຽວກັບປ່າໄມ້, ກົດໝາຍ ແລະ ຂໍ້ກຳນົດອື່ນໆ ຢູ່ ຂັ້ນເມືອງ ແລະ ກຸ່ມບ້ານ ໃນເຂດທີ່ເປັນບູລິມະສິດ	ທົ່ວແຂວງ	ສ້າງຈິດສຳນຶກໃຫ້ທຸກໆເມືອງໃນແຕ່ລະປີ
ກິດຈະກຳ 7.2	ສ້າງລະບົບຕິດຕາມກວດກາການຂຸດຄົ້ນໄມ້ທີ່ຜິດກົດໝາຍ		ລະບົບຕິດຕາມກວດກາການຂຸດຄົ້ນໄມ້ທີ່ຜິດກົດໝາຍໄດ້ຖືກສ້າງຂຶ້ນ
ກິດຈະກຳ 7.3	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມກ່ຽວກັບການກວດກາໄມ້ຢູ່ ຈຸດດ່ານກວດກາ, ສະໜາມໄມ້, ໂຮງງານປຸງແຕ່ງ ແລະ ໂຮງງານ/ຮ້ານເຟີນິເຈີ		ຈັດຝຶກອົບຮົມ 3 ຊຸດ ເຮັດໃຫ້ພະນັກງານສາມາດດຳເນີນການກວດກາໄມ້/ຂຸດຄົ້ນໄມ້ ດ້ວຍຕົນເອງ
ກິດຈະກຳ 7.4	ຕິດຕາມ ແລະ ກວດກາລາດຕະເວນບ່ອນຂຸດຄົ້ນໄມ້, ການຂົນສົ່ງໄມ້ ຢູ່ ສະໜາມ 2 ແລະ ເສັ້ນທາງລຳລຽງໄມ້, ທາງບົກ ແລະ ທາງນ້ຳ ແລະ ຈຸດທີ່ຫຼໍ່ແຫຼມ		ພະນັກງານດຳເນີນການຕິດຕາມກວດກາການຂຸດຄົ້ນໄມ້ທີ່ຜິດກົດໝາຍ ຢູ່ ບ່ອນຂຸດຄົ້ນໄມ້ ແລະ ຢູ່ ຕາມດ່ານກວດກາ
ກິດຈະກຳ 7.5	ສະໜັບສະໜູນການກວດກາໂຮງງານປຸງແຕ່ງໄມ້, ໂຮງງານເຟີນິເຈີ, ສາງເກັບມ້ຽນໄມ້ ແລະ ເຄື່ອງປ່າຂອງດົງ		ພະນັກງານແຂວງ ແລະ ເມືອງ ດຳເນີນການກວດກາໄມ້ທີ່ຜິດກົດໝາຍ ຢູ່ ໂຮງງານ ແລະ ສາງເກັບມ້ຽນຕ່າງໆ
ກິດຈະກຳ 7.6	ສະໜັບສະໜູນການຕິດຕາມກວດກາເກີນຈຳນວນ (ໂກຕາ) ທີ່ອະນຸມັດໃນເຂດອ່າງເກັບນ້ຳຂອງໂຄງການເຂື່ອນໄຟຟ້າ		ພະນັກງານແຂວງ ແລະ ເມືອງ ດຳເນີນການກວດກາການຂຸດຄົ້ນໄມ້ໃນເຂດບ່ອນນ້ຳຈະຖ້ວມຂອງໂຄງການເຂື່ອນໄຟຟ້າ ເພື່ອໃຫ້ຖືກຕ້ອງຕາມສັນຍາ
ກິດຈະກຳ 7.7	ຈັດຊື້ອຸປະກອນຮັບໃຊ້ຫ້ອງການ, ເຄື່ອງແທບເລັດ (tablet), GPS ແລະ ເຄື່ອງມືທີ່ຈຳເປັນ ເພື່ອຮັບໃຊ້ວຽກງານການນຳໃຊ້ກົດໝາຍ		ພະນັກງານແຂວງ ແລະ ເມືອງ ມີອຸປະກອນພຽງພໍ ເພື່ອດຳເນີນການກວດກາຄວບຄຸມການຂຸດຄົ້ນໄມ້ທີ່ຜິດກົດໝາຍ
ກິດຈະກຳ 7.8	ຕິດຕາມກວດກາລາດຕະເວນບ່ອນລັກລອບຕັດໄມ້ໃນເຂດປ່າປ້ອງກັນ		ພະນັກງານແຂວງ ແລະ ເມືອງ ດຳເນີນການຕິດຕາມກວດກາ ການລັກລອບຕັດໄມ້ໃນເຂດປ່າປ້ອງກັນ
ອົງປະກອບຍ່ອຍ 8: ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້ *[MOs:1,2,3,4]*			
ກິດຈະກຳ 8.1	ການປະເມີນເງື່ອນໄຂການຈ່າຍຄ່າບໍລິການລະບົບນິເວດປ່າໄມ້ (PFES) ຢູ່ ແຂວງ	ທົ່ວແຂວງ	ດຳເນີນການສຶກສາຄວາມເປັນໄປໄດ້ຂອງ PFES ໃນຂະແໜງນ້ຳປາປາ, ເຂື່ອນ

	ຫຼວງພະບາງ		ໄຟຟ້າ ແລະ ທ່ອງທ່ຽວທຳມະຊາດ ຢູ່ ແຂວງຫຼວງພະບາງ
ກິດຈະກຳ 8.2	ທົດລອງສົ່ງເສີມກິດຈະກຳ ກ່ຽວກັບ PFES ທີ່ຕິດພັນກັບການນຳໃຊ້ທີ່ດິນປ່າໄມ້ ເຊັ່ນ: ບໍລິສັດນ້ຳປາປາ, ເຂື່ອນໄຟຟ້າ, ທ່ອງທ່ຽວທຳມະຊາດ ແລະ ອື່ນໆ		ທົດລອງຈັດຕັ້ງປະຕິບັດກິດຈະກຳໜຶ່ງ ກ່ຽວກັບ PFES ຢູ່ ພື້ນທີ່ເປົ້າ ໝາຍພາຍໃນແຂວງ

ອົງປະກອບ 3: ການຄຸ້ມຄອງທາງສັງຄົມ(ຊີວິດການເປັນຢູ່)

ໃນກອງປະຊຸມປຶກສາຫາລືເພື່ອສ້າງ PRAP ທຸກໆເມືອງ ແລະ ກຸ່ມບ້ານທີ່ຈັດກອງປະຊຸມສະເໜີໃຫ້ສະໜັບສະໜູນກິດຈະກຳຫຼາຍຢ່າງ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ສາມາດທົດແທນການຖາງປ່າເຮັດໄຮ່ເປັນອາຊີບຕົ້ນຕໍ ຊຶ່ງເປັນສາເຫດຫຼັກຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ຢູ່ ພາຍໃນແຂວງ. ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງຊຸກຍູ້ສິ່ງເສີມການປູກຝັງ-ລ້ຽງສັດ (ດ້ວຍຮູບແບບ ປູກ 2 ລ້ຽງ 1 ຫຼື ປູກ 1 ລ້ຽງ 2), ປູກພືດເສດຖະກິດໄລຍະສັ້ນ, ກາງ ແລະ ຍາວ ອີງໃສ່ທ່າແຮງ ແລະ ສະພາບເງື່ອນໄຂຂອງທ້ອງຖິ່ນ. ການຊຸກຍູ້ສິ່ງເສີມກິດຈະກຳເຫຼົ່ານັ້ນ ຕ້ອງອີງໃສ່ການວາງແຜນນຳໃຊ້ທີ່ດິນ ແລະ ການຕົກລົງເຫັນດີຂອງທ້ອງຖິ່ນ ເພື່ອຫຼຸດຜ່ອນຄວາມກົດດັນຕໍ່ປ່າໄມ້.

ອົງປະກອບຍ່ອຍ 1: ການປູກພືດເສດຖະກິດແບບຍືນຍົງຢູ່ເຂດພູດອຍ

ລະບົບການປູກພືດເສດຖະກິດ ແມ່ນໄດ້ຖືກບັນຈຸໄວ້ໃນ PRAP ແລະ ກິດຈະກຳຕ່າງໆ ແມ່ນແນໃສ່ປັບປຸງຍົກລະດັບ ຜະລິດຕະພາບໃຫ້ສູງຂຶ້ນ, ປັບປຸງຮອບວຽນຂອງການປູກພືດໃຫ້ປົກກະຕິ, ຫຼຸດຜ່ອນການເສື່ອມໂຊມຂອງດິນ ແລະ ກະຈາຍລາຍໄດ້ໃຫ້ທົ່ວເຖິງ. ນອກນັ້ນ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ຍັງຊຸກຍູ້ສິ່ງເສີມກະສິກຳສະອາດ ແລະ ປອດສານພິດ ໂດຍນຳໃຊ້ເຕັກນິກວິຊາການທີ່ເປັນມິດກັບສິ່ງແວດລ້ອມ ລວມທັງການນຳໃຊ້ຝຸ່ນຄອກ/ຝຸ່ນປົ່ມ ແລະ ປູກພືດແບບປະສົມປະສານ ເພື່ອປັບປຸງດິນ ແລະ ປ້ອງກັນການເຊາະເຈື່ອນ.

ອົງປະກອບຍ່ອຍ 2: ການລ້ຽງສັດ ແລະ ປູກຫຍ້າອາຫານສັດ

ການລົງທຶນເພື່ອລ້ຽງສັດ ແລະ ປູກຫຍ້າ ຖືກກຳນົດເປັນກິດຈະກຳໜຶ່ງທີ່ສຳຄັນ ເພື່ອປັບປຸງຊີວິດການເປັນຢູ່ຂອງຊາວຊົນນະບົດໃຫ້ດີຂຶ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ ຢູ່ ແຂວງຫຼວງພະບາງເວົ້າລວມ. PRAP ຊຸກຍູ້ການຝຶກອົບຮົມວິຊາການ ແລະ ສະໜັບສະໜູນທຶນຮອນ ໂດຍກົງໃຫ້ປະຊາຊົນສາມາດລົງທຶນໃສ່ການລ້ຽງສັດ ແລະ ປູກຫຍ້າເພື່ອເປັນອາຫານສັດ. ສ່ວນການປັບປຸງຕ່ອງໂສ້ມູນຄ່າຂອງການລ້ຽງສັດນັ້ນ ລວມມີກິດຈະກຳຕ່າງໆເຊັ່ນ: ການຝຶກອົບຮົມຄວາມຮູ້ພື້ນຖານກ່ຽວກັບການດຳເນີນທຸລະກິດໃຫ້ກຸ່ມຜູ້ຜະລິດຂະໜາດນ້ອຍ ແລະ ຄວາມຮູ້ດ້ານການຕະຫຼາດ ແນໃສ່ເພື່ອໃຫ້ເຂົາເຈົ້າສາມາດຜະລິດເປັນສິນຄ້າ ລວມທັງບໍລິການ ແລະ ພື້ນຖານການບັນຊີ, ການຕະຫຼາດ, ການຜະລິດຕາມສັນຍາ ແລະ ການສ້າງແຜນດຳເນີນທຸລະກິດເປັນກຸ່ມ ແລະ ສ່ວນບຸກຄົນ ເພື່ອໃຫ້ສາມາດເຂົ້າເຖິງສິນເຊື່ອຈາກຫຼາຍແຫຼ່ງ.

ອົງປະກອບຍ່ອຍ 3: ການພັດທະນາທ່ອງທ່ຽວທຳມະຊາດໂດຍທ້ອງຖິ່ນມີສ່ວນຮ່ວມ

ການທ່ອງທ່ຽວ ຢູ່ ແຂວງຫຼວງພະບາງ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນການພັດທະນາເສດຖະກິດຂອງແຂວງ ແລະ ສ້າງວຽກເຮັດງານທຳໃຫ້ປະຊາຊົນທັງໃນຕົວເມືອງກໍຄືຊົນນະບົດ. ການຊຸກຍູ້ສິ່ງເສີມການທ່ອງທ່ຽວ ແມ່ນບູລິມະສິດໜຶ່ງໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໂດຍສະເພາະການທ່ອງທ່ຽວທຳມະຊາດແມ່ນມີທ່າແຮງ ສາມາດບັນລຸຈຸດປະສົງໃນການຊຸກຍູ້ຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ເຮັດໃຫ້ຊຸມຊົນທ້ອງຖິ່ນໄດ້ຮັບການພັດທະນາ ແລະ ອະນຸລັກຮັກສາປ່າໄມ້ໄປພ້ອມໆກັນ. ການທ່ອງທ່ຽວທຳມະຊາດ ສາມາດສ້າງໂອກາດໃຫ້ຊຸມຊົນທ້ອງຖິ່ນມີລາຍຮັບ ແລະ ເປັນແຮງຈູງໃຈໃນການອະນຸລັກຮັກສາປ່າໄມ້, ຜູ້ທີ່ມາທ່ຽວຊົມສາມາດເກັບກ່ຽວປະສົບການກ່ຽວກັບລະບົບນິເວດ ນຳໄປສູ່ການອະນຸລັກຮັກສາສິ່ງແວດລ້ອມ ແລະ ມີຜົນປະໂຫຍດທາງດ້ານເສດຖະກິດຮ່ວມກັນ. PRAP ສະໜັບສະໜູນການສຶກສາຄວາມເປັນໄປໄດ້ໃນການພັດທະນາແຫຼ່ງທ່ອງທ່ຽວທຳມະຊາດ ແລະ ສະໜັບສະໜູນດ້ານເຕັກນິກວິຊາການໃນການທົດລອງຈັດຕັ້ງປະຕິບັດກິດຈະກຳໂດຍໃຫ້ທ້ອງຖິ່ນເປັນເຈົ້າການ ສົມທົບກັບຂະແໜງການອື່ນໆລວມທັງພາກເອກະຊົນ.

ອີງປະກອບ 3: ການຄຸ້ມຄອງທາງສັງຄົມ (ຊີວິດການເປັນຢູ່)

	ນະໂຍບາຍ ແລະ ມາດຕະການ (PAMs)	ລະດັບ	ຄາດໝາຍ
ອີງປະກອບຍ່ອຍ 1: ການປູກພືດເສດຖະກິດແບບຍືນຍົງຢູ່ເຂດພູດອຍ *[MOs:1,2,5]*			
ກິດຈະກຳ 1.1	ດຳເນີນການຄົ້ນຄ້ວາ ເພື່ອກຳນົດຮູບແບບການປູກພືດເສດຖະກິດແບບຍືນຍົງ ລວມທັງການກະສິກຳ-ປ່າໄມ້ແບບປະສົມປະສານ ແລະ ການຂະຫຍາຍການຜະລິດກະສິກຳ	ທົ່ວແຂວງ	ສາມາດກຳນົດຮູບແບບການປູກພືດເສດຖະກິດແບບຍືນຍົງ
ກິດຈະກຳ 1.2	ການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານສົ່ງເສີມກ່ຽວກັບຕົວແບບການຜະລິດກະສິກຳແບບຍືນຍົງ ແລະ ປັບປຸງຮູບແບບຕ່າງໆຂອງການຜະລິດກະສິກຳໃຫ້ດີຂຶ້ນ	ທົ່ວແຂວງ	ຝຶກອົບຮົມ 10 ຊຸດ ເຮັດໃຫ້ພະນັກງານສາມາດຊຸກຍູ້ສົ່ງເສີມຕົວແບບການຜະລິດກະສິກຳແບບຍືນຍົງໄດ້ດ້ວຍຕົນເອງ
ກິດຈະກຳ 1.3	ສະໜອງທຶນຮອນໃຫ້ປະຊາຊົນໂດຍກົງ (ເຄື່ອງມື, ຝຸ່ນ, ແນວພັນ) ເພື່ອທຳການຜະລິດ	8.514 ເຮັກຕາ	ຊຸກຍູ້ສົ່ງເສີມຕົວແບບການຜະລິດກະສິກຳແບບຍືນຍົງ ສາມາດບັນລຸ 1/ 3 ຂອງເນື້ອທີ່ຜະລິດກະສິກຳເປົ້າໝາຍ (25.542 ເຮັກຕາ) ໃນແຜນພັດທະນາເສດຖະກິດ-ສັງຄົມ 2015 - 2020
ກິດຈະກຳ 1.4	ພັດທະນາ ແລະ ສະໜັບສະໜູນສະຫະກອນກະເສດ	ທົ່ວແຂວງ	ສ້າງສະຫະກອນກະເສດເພື່ອໃຫ້ຊາວກະສິກອນເປັນເອກະລາດໃນການເຂົ້າຫາຕະຫຼາດ ເພື່ອຂາຍຜະລິດຕະພັນຂອງເຂົາເຈົ້າ
ອີງປະກອບຍ່ອຍ 2: ການລ້ຽງສັດ ແລະ ປູກຫຍ້າອາຫານສັດ *[MOs:1,2,5]*			
ກິດຈະກຳ 2.1	ການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານສົ່ງເສີມກ່ຽວກັບເຕັກນິກການລ້ຽງສັດ	ເມືອງໂພນໄຊ ແລະ ພູຄູນ	ຈັດຝຶກອົບຮົມ 3 ຊຸດ ເຮັດໃຫ້ພະນັກງານສາມາດຊຸກຍູ້ສົ່ງເສີມເຕັກນິກການລ້ຽງສັດທີ່ຖືກຕ້ອງຕາມຫຼັກວິຊາການ
ກິດຈະກຳ 2.2	ສະໜອງທຶນຮອນໃຫ້ປະຊາຊົນໂດຍກົງ (ເຄື່ອງມື, ຝຸ່ນ, ແນວພັນ) ເພື່ອປູກຫຍ້າ	4.800 ເຮັກຕາ	ປັບປຸງການປູກຫຍ້າໃນເນື້ອທີ່ 4.800 ເຮັກຕາ
ກິດຈະກຳ 2.3	ສະໜອງທຶນຮອນ ແລະ ແນວພັນສັດໃຫ້ປະຊາຊົນໂດຍກົງ ເພື່ອປັບປຸງການລ້ຽງສັດ	4.800 ຄອບຄົວ	4.800 ຄອບຄົວ ໄດ້ນຳໃຊ້ເຕັກນິກວິຊາການໃນການລ້ຽງສັດ
ກິດຈະກຳ 2.4	ສະໜັບສະໜູນດ້ານເຕັກນິກວິຊາການເພື່ອເຂົ້າຫາແຫຼ່ງສິນເຊື່ອ	ເມືອງໂພນໄຊ ແລະ ພູຄູນ	ຈັດຝຶກອົບຮົມ 24 ຊຸດ ໃຫ້ຫົວໜ່ວຍລ້ຽງສັດເປັນສິນຄ້າ
ອີງປະກອບຍ່ອຍ 3: ການພັດທະນາທ່ອງທ່ຽວທຳມະຊາດໂດຍທ້ອງຖິ່ນມີສ່ວນຮ່ວມ *[MOs:1,2,5]*			
ກິດຈະກຳ 3.1	ປະເມີນແຫຼ່ງທ່ອງທ່ຽວທີ່ມີເງື່ອນໄຂ ເພື່ອຊຸກຍູ້ທ່ອງທ່ຽວທຳມະຊາດ	ເມືອງຫຼວງພະບາງ, ງອຍ ແລະ ນ້ຳບາກ	ດຳເນີນການສຶກສາຄວາມເປັນໄປໄດ້ຂອງກິດຈະກຳທີ່ມີເງື່ອນໄຂ ກ່ຽວກັບການທ່ອງທ່ຽວທຳມະຊາດໂດຍທ້ອງຖິ່ນມີສ່ວນຮ່ວມ ຢູ່ 2 ເມືອງ (ຫຼວງພະບາງ ແລະ ງອຍ)

ກິດຈະກຳ 3.2	ການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານສົ່ງເສີມ ກ່ຽວກັບວຽກງານທ່ອງທ່ຽວທຳມະຊາດໂດຍທ້ອງຖິ່ນມີສ່ວນຮ່ວມ	ເມືອງຫຼວງພະບາງ, ງອຍ ແລະ ນ້ຳບາກ	ຈັດຝຶກອົບຮົມ 3 ຊຸດ ກ່ຽວກັບວຽກງານທ່ອງທ່ຽວທຳມະຊາດໂດຍທ້ອງຖິ່ນມີ ສ່ວນ ຮ່ວມ
ກິດຈະກຳ 3.3	ສະໜອງທຶນຮອນໂດຍກົງ (ປ້າຍ, ກິດຈະກຳປັບປຸງຊີວິດການເປັນຢູ່) ເພື່ອຊຸກຍູ້ສົ່ງເສີມການທ່ອງທ່ຽວທຳມະຊາດ	ເມືອງຫຼວງພະບາງ, ງອຍ ແລະ ນ້ຳບາກ	ຊຸກຍູ້ສົ່ງເສີມການທ່ອງທ່ຽວທຳມະຊາດໂດຍທ້ອງຖິ່ນມີສ່ວນຮ່ວມ ຢູ່ 30 ບ້ານ

4.4. ການວິເຄາະຜົນປະໂຫຍດ ແລະ ຄວາມສ່ຽງຂອງນະໂຍບາຍ ແລະ ມາດຕະການ (PAMs)

ການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການ ແມ່ນເພື່ອແກ້ໄຂບັນຫາຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ທີ່ໄດ້ຄົ້ນຄ້ວາ ແລະ ປຶກສາຫາລືໃນກອງປະຊຸມ ຢູ່ ຂັ້ນແຂວງ , ເມືອງ ແລະ ກຸ່ມບ້ານໃນໄລຍະຜ່ານມາ. ກອງປະຊຸມຂັ້ນເມືອງ ແລະ ກຸ່ມບ້ານ ໄດ້ຄົ້ນຄ້ວາ ແລະ ປຶກສາຫາລື ກ່ຽວກັບຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນ ພາຍຫຼັງຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການ ລວມທັງວິທີແກ້ໄຂ ຄວາມສ່ຽງຕາມແນວຄວາມຄິດຂອງທ້ອງຖິ່ນ. ຕາຕະລາງລຸ່ມນີ້ ໄດ້ສັງລວມຜົນປະໂຫຍດ ແລະ ຄວາມສ່ຽງທີ່ບໍ່ແມ່ນການກາກບອນປ່າໄມ້ ແລະ ມາດຕະການເພື່ອແກ້ໄຂ.

4.4.1. ຜົນປະໂຫຍດທີ່ບໍ່ໄດ້ຈາກການກາກບອນປ່າໄມ້ທີ່ຕິດພັນກັບ PAMs

	PAMs ທີ່ສະເໜີ	ຜົນປະໂຫຍດທີ່ບໍ່ແມ່ນການກາກບອນ (ດ້ານສັງຄົມ)	ຜົນປະໂຫຍດທີ່ບໍ່ແມ່ນການກາກບອນ (ດ້ານສິ່ງແວດລ້ອມ)
1.	ການຄຸ້ມຄອງທີ່ດິນແບບຄົບວົງຈອນ	· ສິດນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດໄດ້ຮັບການຊີ້ແຈງຢາກຖືກຕ້ອງ ແລະ ຊັດເຈນ. · ຮັບປະກັນການເຂົ້າເຖິງແຫຼ່ງຊັບພະຍາກອນທຳມະຊາດ. · ການມີສ່ວນຮ່ວມຂອງທ້ອງຖິ່ນເພີ່ມຂຶ້ນ, ປະຊາຊົນສາມາດສະ ແດງຄວາມຄິດຄວາມເຫັນຂອງເຂົາເຈົ້າອອກມາໃນການຕັດສິນບັນຫາ. · ຮັບປະກັນການເປັນເຈົ້າຂອງໃນການຄຸ້ມຄອງປ່າໄມ້. · ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການລົງທຶນ ໂດຍປາດສະຈາກຂໍ້ຂັດແຍ່ງທາງດ້ານສັງຄົມ ແລະ ສິ່ງແວດ ລ້ອມ. · ສັງຄົມມີຄວາມສະຫງົບ.	· ປົກປັກຮັກສາປ່າໄມ້/ຊັບພະຍາ ກອນປ່າໄມ້ເພີ່ມຂຶ້ນ ລວມທັງເຄື່ອງ ປ່າຂອງດົງ. · ຊີວະນາໆພັນໄດ້ຮັບການປົກປັກ ຮັກສາ/ບູລະນະ. · ແຫຼ່ງນ້ຳໄດ້ຮັບການປົກປັກຮັກສາ. · ຫຼຸດຜ່ອນຄວາມສ່ຽງຕໍ່ໄພທຳມະ ຊາດເຊັ່ນ: ນ້ຳຖ້ວມ, ໄພແຫ້ງແລ້ງ, ການເຊາະເຈື່ອນ, ດິນຖະລົ່ມ.
2.	ການຄຸ້ມຄອງປ່າໄມ້	· ເພີ່ມຈິດສຳນຶກໃນການປະຕິບັດລະບຽບກົດໝາຍໃນການນຳ ໃຊ້ທີ່ດິນ ແລະ ປ່າໄມ້. · ຮັບປະກັນການນຳໃຊ້ໄມ້ໄດ້ຍາວນານຈາກປ່າປູກ. · ການນຳໃຊ້ໄມ້ປູກເພີ່ມຂຶ້ນ. · ຮັບປະກັນທາງດ້ານສະບຽງອາຫານ ແລະ ລາຍຮັບຈາກ ຊັບພະຍາກອນປ່າໄມ້.	ຄືຂ້າງເທິງ
3.	ການຄຸ້ມຄອງທາງສັງ ຄົມ (ຊີວິດການເປັນຢູ່)	· ລາຍຮັບເພີ່ມຂຶ້ນ, ຊີວິດການເປັນຢູ່ດີຂຶ້ນ. · ຫຼຸດຜ່ອນຄວາມທຸກຍາກ. · ຄຸນນະພາບດິນໄດ້ຮັບການປັບປຸງດີຂຶ້ນ.	· ສິ່ງເສດເຫຼືອທີ່ກໍ່ມົນລະພິດໜ້ອຍ ລົງໃນທຳມະຊາດ, ລະບົບນິເວດ ແລະ ດິນ.

4.4.2. ຄວາມສ່ຽງທີ່ຕິດພັນກັບ PAMs ແລະ ມາດຕະການແກ້ໄຂ

	PAMs ທີ່ສະເໜີ	ຄວາມສ່ຽງທາງດ້ານສັງຄົມ	ຄວາມສ່ຽງທາງດ້ານ ສິ່ງແວດລ້ອມ	ມາດຕະການແກ້ໄຂ
1.	ການຄຸ້ມຄອງທີ່ດິນແບບ ຄົບວົງຈອນ	· ກໍ່ໃຫ້ເກີດຂໍ້ຂັດແຍ່ງທາງສັງຄົມ ກ່ຽວກັບທີ່ດິນ ແລະ ປ່າໄມ້. · ທີ່ດິນບໍ່ພຽງພໍສຳລັບຄວາມຕ້ອງ ການຕົວຈິງ ແລະ ຄວາມຕ້ອງ	· ຍ້ອນບ່ອນທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າເສື່ອມ ໂຊມ.	· ຊຸກຍູ້ໃຫ້ທຸກພາກສ່ວນໃນ ສັງຄົມມີສ່ວນຮ່ວມໃນການ ຕັດສິນບັນຫາ. · ໃຫ້ນັກລົງທຶນປະຕິບັດກົດ

		ການດິນເພີ່ມຂຶ້ນ. · ນາຍທຶນສືບຕໍ່ສວຍໂອກາດຍາດເອົາດິນ. · ກຸ່ມຄົນທີ່ດ້ອຍໂອກາດອາດເສັຍຜົນປະໂຫຍດ ຫຼື ບໍ່ໃຫ້ເຂົ້າມາມີສ່ວນຮ່ວມ.		ລະບຽບໃຫ້ເຄັ່ງຄັດ. · ຄວນມີກົນໄກການຮ້ອງທຸກ.
2.	ການຄຸ້ມຄອງປ່າໄມ້	· ການຈຳກັດເຂົ້າຫາຊັບພະຍາກອນປ່າໄມ້ຍິ່ງເຮັດໃຫ້ຄອບຄົວທຸກຍາກທຸກໄປຕື້ມໂດຍສະເພາະຄອບຄົວທີ່ອາໄສປ່າໃນການດຳລົງຊີວິດ. · ກໍ່ໃຫ້ເກີດຂໍ້ຂັດແຍ່ງໃນສັງຄົມກ່ຽວກັບພື້ນທີ່ປ່າໄມ້.	· ຍ້ານບ່ອນທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າເສື່ອມໂຊມ. · ປ່າທຳມະຊາດຈະຖືກທົດແທນດ້ວຍປ່າປູກ.	· ທົບທວນ, ດັດປັບນະໂຍບາຍ, ມາດຕະການ ແລະ ກົດລະບຽບໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ. · ຄວນມີກົນໄກການຮ້ອງທຸກ ຊຸກຍູ້ໃຫ້ທຸກພາກສ່ວນໃນສັງຄົມມີສ່ວນຮ່ວມໃນການຕັດສິນບັນຫາ.
3.	ການຄຸ້ມຄອງທາງສັງຄົມ (ຊີວິດການເປັນຢູ່)	· ກຸ່ມທີ່ດ້ອຍໂອກາດບໍ່ໄດ້ຮັບການສະໜັບສະໜູນ (ເປັນຕົ້ນແມ່ນກຸ່ມຊົນເຜົ່າສ່ວນນ້ອຍ ແລະ ຜູ້ທີ່ທຸກຍາກ). · ຄວາມຕ້ອງການຜະລິດຕະພັນກະສິກຳ ແລະ ລາຄາບໍ່ໝັ້ນຄົງ.	· ທາງເລືອກໃນການດຳລົງຊີວິດແບບໃໝ່ອາດກໍ່ໃຫ້ເກີດຜົນກະທົບໃນທາງລົບຕໍ່ສິ່ງແວດລ້ອມທຳມະຊາດ.	· ສຶກສາດ້ວຍຄວາມລະມັດລະວັງ ເພື່ອຫຼີກຫຼ່ຽງຜົນກະທົບໃນທາງລົບຕໍ່ສິ່ງແວດລ້ອມທຳມະຊາດ. · ເລືອກຮູບແບບການດຳລົງຊີວິດໃຫ້ແທດເໝາະກັບທ້ອງຖິ່ນ.

4.5. ການວິເຄາະກົດໝາຍ, ກົດລະບຽບ ແລະ ນິຕິກຳອື່ນໆ

ໃນບັນດາສົນທິສັນຍາສາກົນຕ່າງໆ, ສປປ ລາວ ໄດ້ເຊັນສົນທິສັນຍາຂອງສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC, 1995), ຂໍ້ຕົກລົງວ່າດ້ວຍການຮ່ວມມືເພື່ອການພັດທະນາ ເຂດອ່າງໂຕ່ງແມ່ນ້ຳຂອງຕອນລຸ່ມແບບຍືນຍົງໃນ ປີ 1995, ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍທາງຊີວະນາງພັນ (CBD, 1996), ສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານການກາຍເປັນທະເລຊາຍ (UNCCD, 1996), ຂໍ້ຕົກລົງອາຊຽນກ່ຽວກັບໝອກຄວັນອາຍພິດລະຫວ່າງປະເທດ (2002), ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍສັດປ່າ ແລະ ພືດທີ່ໃກ້ຈະສູນພັນ (CITES, 2004) ແລະ ສົນທິສັນຍາ ຣາມຊາ ວ່າດ້ວຍດິນທາມ (2010). ການລາຍງານ ແລະ ສື່ສານກ່ຽວກັບບັນດາຂໍ້ຕົກລົງ ຕ່າງໆທີ່ກ່າວມາຂ້າງເທິງນັ້ນແມ່ນເປັນຄວາມຮັບຜິດຊອບຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ໃນວຽກງານການຫຼຸດຜ່ອນແລະການປັບຕົວຕໍ່ການການປ່ຽນແປງດິນຟ້າອາກາດ, ສປປ ລາວ ໄດ້ສົ່ງແຜນການຫຼຸດຜ່ອນ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດແຫ່ງຊາດ (INDC) ໃຫ້ UNFCCC ໃນເດືອນກັນຍາ 2015 ຊຶ່ງລວມເອົາຫຼາຍຫົວຂໍ້ທີ່ກ່ຽວຂ້ອງກັບການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ, ການຟື້ນຟູປ່າໄມ້ ແລະ ການເພີ່ມການປັບຕົວ. ອີກດ້ານໜຶ່ງ, ໂດຍຜ່ານຈຸດປະສານງານຂອງ UNFCCC ຢູ່ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ສປປ ລາວ ມີແຜນການທີ່ຈະສະເໜີເອກະສານການສື່ສານແຫ່ງຊາດຄັ້ງທີ 3 ໃຫ້ແກ່ UNFCCC ໃນປີ 2018 ແລະ ການລາຍງານຄວາມຄືບໜ້າສອງປີ ຄັ້ງທີ 1.

ກ່ຽວກັບສົນທິສັນຍາສາກົນວ່າດ້ວຍການຄ້າຂາຍສັດປ່າ ແລະ ພືດທີ່ໃກ້ຈະສູນພັນ (CITES), ສປປ ລາວ ມີຄວາມຕັ້ງໃຈສ້າງສາຍ

ພົວພັນຮ່ວມມືກັບເຄືອຂ່າຍການປະຕິບັດກົດໝາຍວ່າດ້ວຍສັດນ້ຳ-ສັດປ່າຂອງອາຊຽນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການກວດກາສິນຄ້າຢູ່ດ່ານພາສີ ແລະ ຫຼຸດຜ່ອນປະລິມານການຄ້າຂາຍສັດປ່າຂ້າມຊາຍແດນ. ໃນເຄືອຂ່າຍການປະຕິບັດກົດໝາຍວ່າດ້ວຍສັດນ້ຳ-ສັດປ່າຂອງ ສປປ ລາວ ມີພາກໜຶ່ງໄດ້ລະບຸເຖິງການຈັດຕັ້ງປະຕິບັດເຄືອຂ່າຍການປະຕິບັດກົດໝາຍສັດນ້ຳ-ສັດປ່າຂອງອາຊຽນຊຶ່ງເປັນຄວາມຮັບຜິດຊອບຂອງກົມກວດກາປ່າໄມ້ ແລະ ໃນນັ້ນແມ່ນມີຫຼາຍພາກສ່ວນທີ່ມີຄວາມກ່ຽວຂ້ອງກັບການປະສານງານ ແລະ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້ ແລະ ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ແຜນຍຸດທະສາດ ແລະ ກິດຈະກຳຕ່າງໆທີ່ກ່ຽວຂ້ອງ. ກົມກວດກາປ່າໄມ້ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2008 ຊຶ່ງເປັນສະຖາບັນຮັບຜິດຊອບເຮັດໜ້າທີ່ໃນການສຶບສວນ ແລະ ປະຕິບັດກິດຈະກຳຕ່າງໆພາຍໃຕ້*ກົດໝາຍປ່າໄມ້ ເລກທີ 06/NA ປີ2007* ແລະ*ກົດໝາຍສັດນ້ຳ-ສັດປ່າ ເລກທີ 07/NA ປີ2007*. ກົມກວດກາປ່າໄມ້ປະຕິບັດໜ້າທີ່ຕາມພາລະບົດບາດ *ເລກທີ 1894/ກປ 2012* ແລະ ເປັນເສນາທິການໃຫ້ແກ່ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ກ່ຽວກັບການປະຕິບັດກົດໝາຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ປະຕິບັດນິຕິກຳອື່ນໆທີ່ກ່ຽວຂ້ອງ. ກົມກວດກາປ່າໄມ້ ແລະ ບັນດາຫ້ອງການສາຍຕັ້ງຂຶ້ນແຂວງ (ກອງກວດກາປ່າໄມ້ແຂວງຢູ່ໃນພະແນກກະສິກຳ ແລະ ປ່າໄມ້ແຂວງ). ຢູ່ລະດັບເມືອງກໍມີໜ່ວຍງານກວດກາປ່າໄມ້ເມືອງທີ່ຢູ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເຮັດໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆດັ່ງທີ່ໄດ້ລະບຸໄວ້ໃນພາກທີ 4 ທີ່ໄດ້ລະບຸກ່ຽວກັບການປະຕິບັດກົດໝາຍ.

ການເຄົາລົບສິດໃນການຖືຄອງດິນ ແລະ ຊັບພະຍາກອນ ແລະ ບັນດາມາດຕະການທີ່ກ່ຽວຂ້ອງກັບວຽກງານປ່າໄມ້ ແລະ ວຽກງານກະສິກຳ ແມ່ນໄດ້ລະບຸໄວ້ໃນພາກທີ 4, ຕາມລັດຖະທຳມະນູນ, *ກົດໝາຍຊັບສິນສະບັບປີ 1990, ກົດໝາຍທີ່ດິນເລກທີ 04/NA 2003* (ປັດຈຸບັນແມ່ນຢູ່ໃນການປັບປຸງຢູ່)ແມ່ນເປັນນິຕິກຳທີ່ສຳຄັນທີ່ສຸດ .ລັດຖະທຳມະນູນແຫ່ງສປປລາວສະບັບປີ 1991 ໄດ້ມີການປັບປຸງໃນປີ 2003 ແລະ ຫຼ້າສຸດແມ່ນໄດ້ມີການປັບປຸງຄືນໃໝ່ໃນປີ 2015 ຊຶ່ງເປັນ ນິຕິກຳທີ່ເປັນພື້ນຖານໃຫ້ແກ່ການກຳນົດທຸກໆກົດໝາຍ ແລະ ກົດລະບຽບພາຍໃນ ສປປ ລາວ. ຕາມລັດຖະທຳມະນູນ ດິນ, ຊັບພະຍາກອນເທິງໜ້າດິນ ແລະ ໃຕ້ດິນເຊັ່ນ: ປ່າໄມ້ ແລະ ແຮ່ທາດຕ່າງໆ ໃນ ສປປ ລາວ ແມ່ນເປັນຊັບສົມບັດຂອງວົງຄະນະຍາດແຫ່ງຊາດ; "ລັດປົກປ້ອງສິດຖືຄອງຊັບສິນ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບຜົນປະໂຫຍດ ແລະ ສິດໂອນກຳມະສິດ) ແລະ ສິດໃນການສືບທອດຂອງບຸກຄົນ ແລະ ນິຕິບຸກຄົນ. ດິນແມ່ນມູນມໍລະດົກແຫ່ງຊາດ ແລະ ລັດຮັບປະກັນສິດໃນການນຳໃຊ້, ໂອນກຳມະສິດ ແລະ ສືບທອດຕາມກົດໝາຍ" (ລັດຖະທຳມະນູນ, ມາດຕາ 17). ລັດຖະທຳມະນູນສະບັບປັບປຸງປີ 2015 ໄດ້ຮຽກຮ້ອງໃຫ້ມີການສ້າງຕັ້ງສະພາປະຊາຊົນແຂວງທີ່ມີໜ້າທີ່ຮັບຜິດຊອບໃນການຕິດຕາມການປະຕິບັດໜ້າທີ່ວຽກງານຂອງອຳນາດການປົກຄອງທ້ອງຖິ່ນພ້ອມທັງການອະນຸມັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ.

ກົດໝາຍຊັບສິນປີ 1990 ໄດ້ກຳນົດ ແລະ ນິຍາມ 5 ຮູບແບບຂອງຊັບສິນ: ຊັບສິນຂອງລັດ; ຊັບສິນລວມໝູ່; ຊັບສິນສ່ວນບຸກຄົນ; ຊັບສິນເອກະຊົນ (ຊັບສິນເປັນຂອງຫົວໜ່ວຍທຸລະກິດເອກະຊົນຊຶ່ງບໍ່ແມ່ນຊັບສິນຂອງສ່ວນບຸກຄົນ ຫຼື ລວມໝູ່); ແລະຊັບສິນສ່ວນຕົວ (ຊັບສິນໃຊ້ສ່ວນຕົວ). ກົດໝາຍຊັບສິນຍັງໄດ້ກຳນົດການເປັນເຈົ້າຂອງທີ່ດິນ, ຊັບພະຍາກອນໃນດິນ, ນ້ຳ, ປ່າໄມ້ ແລະ ສັດປ່າທັງໝົດ ແມ່ນເປັນກຳມະສິດຂອງລັດ, ຊຶ່ງລັດອາດຈະມອບສິດໃນການຄອບຄອງ, ນຳໃຊ້, ໂອນກຳມະສິດ ແລະ ສືບທອດໃຫ້ພາກສ່ວນອື່ນໆ. ໃນປີ 2012 ຄະນະກຳມະທິການການວາງແຜນເສດຖະກິດ ແລະ ການເງິນຂອງສະພາແຫ່ງຊາດ, ໄດ້ປະກາດກ່ຽວກັບເປົ້າໝາຍຂອງລັດຖະບານໃນການປະຕິຮູບທີ່ດິນໃນທົ່ວປະເທດ ແລະ ບູລິມະສິດຄວາມຕ້ອງການເພີ່ມການຄຸ້ມຄອງທີ່ດິນໃນຂັ້ນທ້ອງຖິ່ນ ຊຶ່ງການເຂົ້າເຖິງທີ່ດິນຂອງປະຊາຊົນໃນເຂດຊົນນະບົດແມ່ນເປັນພື້ນຖານອັນຈຳເປັນສຳລັບການຫຼຸດຜ່ອນຄວາມທຸກຍາກ. ໃນເວລານັ້ນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແມ່ນຖືກສ້າງຕັ້ງຂຶ້ນ ສ່ວນໜຶ່ງແມ່ນເພື່ອຮັບຜິດຊອບຕໍ່ວຽກງານກ່ຽວກັບທີ່ດິນທັງໝົດທີ່ອີງການຄຸ້ມຄອງທີ່ດິນແຫ່ງຊາດເປັນຜູ້ຮັບຜິດຊອບໃນເມື່ອກ່ອນ.

ຕັ້ງແຕ່ປີ 2012, ສປປ ລາວ ໄດ້ມີການກະກຽມນະ�โยบายທີ່ດິນແຫ່ງຊາດ ແລະ ໃນເດືອນສິງຫາ 2016 ຮ່າງນະໂຍບາຍທີ່ດິນແຫ່ງຊາດດັ່ງກ່າວໄດ້ຖືກນຳສະເໜີ ແລະ ປຶກສາຫາລືໃນກອງປະຊຸມແຫ່ງຊາດທີ່ເປັນປະທານໂດຍທ່ານຮອງນາຍົກລັດຖະມົນຕີປະລິນຍາເອກ ສອນໄຊ ສີພັນດອນ ແລະ ມີຜູ້ຕາງໜ້າຈາກ 18 ກະຊວງ, ສະພາ ແຫ່ງຊາດ, ອົງການຈັດຕັ້ງທຽບເທົ່າກະຊວງ, ສະຖາບັນການສຶກສາ, ພ້ອມດຽວກັນນັ້ນກໍມີຜູ້ຕາງໜ້າຈາກອົງການຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງທາງສັງຄົມເຂົ້າຮ່ວມ. ພາຍຫຼັງສຳເລັດກອງປະຊຸມດັ່ງກ່າວ, ຄາດວ່າຮ່າງນະໂຍບາຍທີ່ດິນແຫ່ງຊາດສະບັບສຸດທ້າຍຈະໄດ້ຮັບການຈັດເຂົ້າໃນວາລະກອງປະຊຸມຂອງສະພາແຫ່ງຊາດຄັ້ງຕໍ່ໄປ. ແນວໃດກໍຕາມ, ຫຼັງຈາກນັ້ນກໍໄດ້ມີການຕັດສິນໃຈວ່າລັດຖະບານ ສປປ ລາວ ຈະບໍ່ມີການປັບປຸງນະໂຍບາຍທີ່ດິນແຫ່ງຊາດອີກ, ແຕ່ຈະສະເໜີ

ໃຫ້ກົມການເມືອງສູນກາງພັກເປັນຜູ້ອອກມະຕິຕົກລົງຕໍ່ກັບນະໂຍບາຍທີ່ດິນແຫ່ງຊາດດັ່ງກ່າວ.

ເມື່ອໃດທີ່ນະໂຍບາຍທີ່ດິນແຫ່ງຊາດໄດ້ຮັບການອະນຸມັດ, ລັດຖະບານ ສປປ ລາວ ຈະສືບຕໍ່ປັບປຸງກົດໝາຍທີ່ດິນປີ 2003 ເພື່ອສະທ້ອນໃຫ້ເຫັນເຖິງການປ່ຽນແປງໃນນະໂຍບາຍທີ່ດິນແຫ່ງຊາດ ເພື່ອສ້າງເປັນລະບຽບການໃນການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະເປັນຜູ້ປັບປຸງກົດໝາຍທີ່ດິນແລ້ວສົ່ງໃຫ້ສະພາແຫ່ງຊາດພິຈາລະນາ. ໃນເມື່ອກົດໝາຍທີ່ດິນໄດ້ຮັບການປັບປຸງແລ້ວ, ກົດໝາຍປ່າໄມ້ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງກັບຊັບພະຍາກອນທຳມະຊາດອື່ນໆກໍຈະຕ້ອງໄດ້ຮັບການປັບປຸງ ແລະ ເຮັດໃຫ້ສອດຄ່ອງກັບກົດໝາຍທີ່ດິນ. ກະຊວງກະສິກຳ ແລະ ປ່າໄມ້ ມີແຜນທີ່ຈະສະເໜີກົດໝາຍປ່າໄມ້ສະບັບປັບປຸງໃຫ້ແກ່ລັດຖະບານພິຈາລະນາໃນເດືອນກັນຍາ 2017, ແຕ່ຍັງບໍ່ມີຂໍ້ມູນລະອຽດວ່າກົດໝາຍດັ່ງກ່າວຈະຖືກສົ່ງໃຫ້ແກ່ສະພາແຫ່ງຊາດເມື່ອໃດ[6]. ກະຊວງກະສິກຳ ແລະ ປ່າໄມ້ ໄດ້ສ້າງຕັ້ງຄະນະກຳມະການຮັບຜິດຊອບການປັບປຸງກົດໝາຍຢ່າງເປັນທາງການແລ້ວຊຶ່ງແມ່ນຮອງລັດຖະມົນຕີ ທ່ານ ທອງພັດ ວົງມະນີ ເປັນປະທານຄະນະກຳມະການດັ່ງກ່າວ.

ກົດໝາຍທີ່ດິນເລກທີ *04/NA 2003* (ກຳລັງປັບປຸງ) ເປັນເຄື່ອງມືຫຼັກທາງດ້ານນິຕິກຳໃນການຄຸ້ມຄອງບໍລິຫານ, ການປົກປັກຮັກສາ ແລະ ນຳໃຊ້ທີ່ດິນຢູ່ໃນ ສປປ ລາວ. ມາດຕາ 3 ຂອງກົດໝາຍທີ່ດິນໄດ້ເນັ້ນເຖິງ ມາດຕາ 17 ຂອງລັດຖະທຳມະນູນທີ່ວ່າດິນແມ່ນເປັນຊັບສິນຂອງວົງຄະນະຍາດແຫ່ງຊາດ ແລະ ລັດເປັນສູນກາງໃນການຄຸ້ມຄອງບໍລິຫານ, ລວມທັງການຈັດສັນຕ່າງໆ. ດິນສາມາດເປັນດິນລັດ, ຊັບສິນຂອງລັດ, ຊັບສິນສ່ວນລວມ ຫຼື "ເປັນກຳມະສິດ" ຫຼື ສິດນຳໃຊ້ໂດຍບຸກຄົນ, ຊຸມຊົນ ຫຼື ອົງການຈັດຕັ້ງຕ່າງໆ. ອີງຕາມ*ກົດໝາຍທີ່ດິນເລກທີ 04/NA 2003*, ທີ່ດິນທັງໝົດແມ່ນຈະຕ້ອງໄດ້ຮັບການຈັດແບ່ງປະເພດ. ໃນນັ້ນແມ່ນໄດ້ແບ່ງເປັນ 8 ປະເພດທີ່ດິນມີດັ່ງລຸ່ມນີ້:

- ທີ່ດິນກະສິກຳ;
- ທີ່ດິນປ່າໄມ້;
- ທີ່ດິນບໍລິເວນນ້ຳ;
- ທີ່ດິນອຸດສາຫະກຳ;
- ທີ່ດິນຄົມມະນາຄົມ;
- ທີ່ດິນວັດທະນະທຳ;
- ທີ່ດິນປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ;
- ທີ່ດິນປຸກສ້າງ.

ປະເພດທີ່ດິນແມ່ນໄດ້ກຳນົດຂອບເຂດຂອງການນຳໃຊ້, ລວມທັງການຈັດສັນໃຫ້ລັດ, ບຸກຄົນ ຫຼື ເພື່ອເຊົ່າ, ສຳປະທານ ຫຼື ພັດທະນາພື້ນຖານໂຄງລ່າງ. ການຫັນປ່ຽນຈາກທີ່ດິນປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ ແມ່ນສາມາດເຮັດໄດ້ຖ້າວ່າຫາກຈຳເປັນຕ້ອງໃຊ້ດິນດັ່ງກ່າວເພື່ອຈຸດປະສົງອື່ນ ແລະ ເຫັນວ່າບໍ່ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ ແລະ ຈະຕ້ອງໄດ້ຮັບອະນຸຍາດຈາກອຳນາດການປົກຄອງກ່ຽວຂ້ອງກ່ອນ[7] (ມາດຕາ 14).

ດິນທີ່ຖືກກຳນົດໃຫ້ເປັນທີ່ດິນກະສິກຳ ແລະ ດິນປ່າໄມ້, ຊຶ່ງອາດເປັນທີ່ດິນປ່າໄມ້ ຫຼື ເປັນພື້ນທີ່ທີ່ຖືກຖາກຖາງ ແມ່ນມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງຕາມກົດໝາຍກະສິກຳ ເລກທີ 01 - 98 /NA ແລະ ກົດໝາຍປ່າໄມ້ ເລກທີ 06/NA 2007[8]. ກະຊວງກະສິກຳ ແລະ ປ່າໄມ້ ມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງທີ່ດິນປ່າໄມ້, *ກົດໝາຍທີ່ດິນເລກທີ 04/NA 2003*[9], ແລະ ກຳນົດທີ່ດິນແຕ່ລະປະເພດເພື່ອເປົ້າໝາຍໃນການຄຸ້ມຄອງເຊັ່ນ: ເພື່ອປ້ອງກັນ ປ່າປ້ອງກັນ ແລະ ປ່າສະຫງວນ (ຫຼື ເພື່ອການພັດທະນາ ປ່າ

[6]ໃນປີ 2014 ຮ່າງປັບປຸງກົດໝາຍປ່າໄມ້ສະບັບສຸດທ້າຍທີ່ໄດ້ຮັບການສະໜັບສະໜູນຢ່າງຈິ່ງຈັງຈາກຄູ່ຮ່ວມພັດທະນາ ແລະ ໄດ້ສະເໜີຕໍ່ສະພາ ແຫ່ງຊາດ, ແຕ່ວ່າ ບໍ່ໄດ້ຮັບປຶກສາຫາລືໃນກອງປະຊຸມສະພາ ເພາະຍັງຄານະໂຍບາຍທີ່ດິນແຫ່ງຊາດ

[7]ພາກສ່ວນທີ່ຮັບຜິດຊອບໃນການອະນຸມັດການຫັນປ່ຽນການນຳໃຊ້ດິນແມ່ນຂຶ້ນກັບຂະໜາດຂອງດິນ

[8] DOFI & DOF - Forest Legality Compendium 2015

[9]ປ່າໄມ້ໃນ ສປປ ລາວ ແບ່ງອອກເປັນສາມປະເພດ: (i) ປ່າຜະລິດ; (ii) ປ່າສະຫງວນ ແລະ (iii) ປ່າປ້ອງກັນ. ປ່າຜະລິດກວມເອົາ 34% (3.2 ລ້ານ ຮຕ) ຂອງພື້ນທີ່ປ່າໄມ້ທັງໝົດ. ປ່າປ້ອງກັນກວມເອົາ 29% (2.8 ລ້ານ ຮຕ)ແລະ ປ່າສະຫງວນແຫ່ງຊາດກວມເອົາ (ປ່າສະຫງວນ, ບາງບ່ອນກໍກວມເອົາພື້ນທີ່ທີ່ບໍ່ມີປ່າໄມ້) ມີປະມານ 5.3 ລ້ານ ຮຕ (37%) ຂອງເນື້ອທີ່ລວມທັງໝົດ. ເນວໃດກໍຕາມ, ມີຫຼາຍພື້ນທີ່ທີ່ໝາຍເປັນປ່າປ້ອງກັນ, ແຕ່ຫັດຖືກໃຊ້ເປັນພື້ນທີ່ກະສິກຳ ແລະ ຍັງລວມທັງພື້ນທີ່ໃນເມືອງ ແລະ ພື້ນທີ່ທີ່ໄດ້ຖືກຫັນເປັນດິນປະເພດອື່ນແລ້ວ.

ຜະລິດ) ໂດຍອີງຕາມ*ກົດໝາຍປ່າໄມ້ເລກທີ 06/NA2007* [10]. ນອກຈາກນີ້, ຍັງມີພື້ນທີ່ປ່າໄມ້ທີ່ຍັງບໍ່ທັນໄດ້ມີການຈັດປະເພດ. ເຖິງຢ່າງໃດກໍຕາມ, ປະຈຸບັນນີ້ແມ່ນຍັງບໍ່ທັນມີກົດລະບຽບໃນການຄຸ້ມຄອງພື້ນທີ່ດັ່ງກ່າວນັ້ນເທື່ອ. ທີ່ດິນປ່າໄມ້ທີ່ນອນຢູ່ໃນສາມປະເພດປ່າ (ກົດໝາຍປ່າໄມ້ມາດຕາ 13) ແມ່ນລວມມີທັງປ່າຕົກໜາ, ປ່າເສື່ອມโซม, ດິນເປົ່າຫວ່າງ ແລະ ປ່າຊົມໃຊ້ຂອງບ້ານ ແລະ ຕ້ອງໄດ້ມີການພັດທະນາແຜນຈັດສັນປ່າໄມ້ເພື່ອກຳນົດປະເພດການນຳໃຊ້ທີ່ໄດ້ຮັບອະນຸມັດຢ່າງເປັນທາງການ. ຫຼັງຈາກທີ່ມີການຈັດປະເພດປ່າໄມ້, ຈັດສັນ ແລະ ແບ່ງເຂດທີ່ດິນປ່າໄມ້ສຳເລັດແລ້ວແມ່ນລັດຖະບານຈະໄດ້ມອບໃຫ້ອຳນາດການປົກຄອງແຂວງ, ຫຼັງຈາກນັ້ນກໍຈະສືບຕໍ່ມອບໃຫ້ອຳນາດການປົກຄອງເມືອງ ຊຶ່ງອຳນາດການປົກຄອງຂັ້ນເມືອງຈະສືບຕໍ່ມອບໃຫ້ອຳນາດການປົກຄອງຂັ້ນບ້ານເປັນຜູ້ຄຸ້ມຄອງ. ອີງໃສ່ການພັດທະນາແຜນການມອບດິນ-ມອບປ່າ (ມາດຕາ 82, *ກົດໝາຍປ່າໄມ້ເລກທີ 06/NA 2007),* ດິນປ່າໄມ້ແມ່ນສາມາດຈັດສັນໃຫ້ບຸກຄົນ, ຄົວເຮືອນ ແລະ ອົງການຈັດຕັ້ງຕ່າງໆນຳໃຊ້. ສິດໃນການນຳໃຊ້ທີ່ດິນປ່າໄມ້ແມ່ນໄດ້ລະບຸໄວ້ໃນ*ກົດໝາຍທີ່ດິນເລກທີ 04/NA 2003* ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ[11].

ກົດໝາຍປ່າໄມ້ເລກທີ 06/NA 2007 ໄດ້ກຳນົດພື້ນທີ່ປ່າໄມ້ທຳມະຊາດເປັນຊັບສິນຂອງວົງຄະນະຍາດແຫ່ງຊາດ, ຊຶ່ງລັດເປັນຕົວແທນ, ໃນນີ້ແມ່ນລວມທັງທີ່ດິນປ່າໄມ້ບ້ານ. ເຖິງຢ່າງໃດກໍຕາມ, ປ່າປູກແມ່ນຊັບສິນຂອງສ່ວນບຸກຄົນ ຫຼື ອົງການຈັດຕັ້ງ. *ຍຸດທະສາດປ່າໄມ້ 2020* ໄດ້ລະບຸຢ່າງຊັດເຈນວ່າລັດມີນະ�โยบายຕໍ່ການມີສ່ວນຮ່ວມໃນການຈັດສັນຄຸ້ມຄອງພື້ນທີ່ປ່າຜະລິດ, ປ່າປ້ອງກັນ ແລະ ປ່າສະຫງວນ ແລະ ເພີ່ມການມີສ່ວນຮ່ວມຂອງປະຊາຊົນໃນການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ບ້ານແບບຍືນຍົງໂດຍຜ່ານການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ການມອບດິນມອບປ່າ. *ກົດໝາຍປ່າໄມ້ເລກທີ 06/NA 2007* ໄດ້ກຳນົດພັນທະຂອງປະຊາຊົນທ້ອງຖິ່ນຕໍ່ການຄຸ້ມຄອງປ່າ ແລະ ຊັບພະຍາກອນປ່າໄມ້ ແລະ ຮ່າງກົດໝາຍປ່າໄມ້ສະບັບທີ່ກຳລັງມີການປັບປຸງໄດ້ລະບຸເຖິງການມີສ່ວນຮ່ວມຂອງປະຊາຊົນໃນການຄຸ້ມຄອງທຸກປະເພດປ່າໄມ້ ຊຶ່ງທຸກມາດຕາຂອງກົດໝາຍດັ່ງກ່າວທີ່ເວົ້າເຖິງການຈັດສັນຄຸ້ມຄອງປ່າໄມ້ແມ່ນລ້ວນແລ້ວແຕ່ໄດ້ລະບຸເຖິງການມີສ່ວນຮ່ວມຂອງປະຊາຊົນໃນນັ້ນແມ່ນລວມທັງການມີສ່ວນຮ່ວມໃນການຄຸ້ມຄອງ, ການວາງແຜນຄຸ້ມຄອງປ່າໄມ້ ແລະ ການຄຸ້ມຄອງທີ່ດິນປ່າໄມ້.

ດັ່ງນັ້ນ, ອີງໃສ່ບັນດານະ�โยบาย ແລະ ມາດຕະການທີ່ກ່ຽວຂ້ອງກັບຂະແໜງການປ່າໄມ້ ແລະ ນະ�โยบาย ແລະ ມາດຕະການລວມທີ່ໄດ້ລະບຸໃນພາກທີ 4 ຂອງແຜນປະຕິບັດງານ REDD+ ຂັ້ນແຂວງ ຂອງແຂວງຫຼວງພະບາງແມ່ນໄດ້ກຳນົດເອົາການວາງແຜນນຳໃຊ້ທີ່ດິນ ແລະ ການມອບດິນມອບປ່າແບບມີສ່ວນຮ່ວມ[12], ພ້ອມ ທັງການຄຸ້ມຄອງປ່າໄມ້ບ້ານເປັນກົດຈະກຳຫຼັກເພື່ອຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ. ການຄຸ້ມຄອງປ່າໄມ້ບ້ານແມ່ນເປັນໜຶ່ງໃນບັນດາບູລິມະສິດຫຼັກຂອງລັດຖະບານ[13] ໂດຍແມ່ນກະຊວງກະສິກຳ ແລະ ປ່າໄມ້, ໂດຍສະເພາະແມ່ນກົມປ່າໄມ້ເປັນເສນາທິການໃຫ້ແກ່ລັດຖະບານ. ຮ່າງກົດໝາຍປ່າໄມ້ທີ່ກຳລັງໄດ້ຮັບການປັບປຸງແມ່ນໄດ້ລະບຸເຖິງພາລະບົດບາດ ແລະ ການມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ຂອງປະຊາຊົນ. ການຄຸ້ມຄອງປ່າໄມ້ບ້ານແມ່ນໝາຍເຖິງການຄຸ້ມຄອງ, ການອະນຸລັກ, ການພັດທະນາ ແລະ ການນຳໃຊ້ພື້ນທີ່ປ່າໄມ້ແບບຍືນຍົງພາຍໃນຂອບເຂດຂອງບ້ານທີ່ທາງລັດຖະບານໄດ້ຈັດສັນໃຫ້. ດິນປ່າໄມ້ບ້ານແມ່ນໄດ້ຖືກຈັດແບ່ງເປັນປ່າສະຫງວນຂອງບ້ານ, ປ່າປ້ອງກັນຂອງບ້ານ, ປ່າຊົມໃຊ້ຂອງບ້ານ ແລະ ປ່າອື່ນໆຕາມແຜນການຈັດສັນຄຸ້ມຄອງປ່າໄມ້ (ກົດໝາຍປ່າໄມ້ມາດຕາ 3 ສະບັບປັບປຸງໃໝ່ປີ 2014). ອົງການຈັດຕັ້ງ, ຄົວເຮືອນ ແລະ ບຸກຄົນເປັນເຈົ້າຂອງປ່າໄມ້ ແລະ ດິນປ່າໄມ້ຕາມການແບ່ງປັນຂອງລັດເພື່ອຄຸ້ມຄອງ, ອະນຸລັກ, ພັດທະນາ ແລະ ນຳໃຊ້ຕາມກົດໝາຍ ແລະ ກົດລະບຽບການຕ່າງໆທີ່ກ່ຽວຂ້ອງ (ມາດຕາ 17, *ກົດໝາຍປ່າໄມ້ເລກທີ 06/NA 2007*). ລັດສົ່ງເສີມໃຫ້ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆຊ່ວຍກັນປົກປັກຮັກສາ ແລະ ພັດທະນາທຸກປະເພດປ່າໄມ້, ເພື່ອຟື້ນຟູປ່າໄມ້ທຳມະຊາດ, ປູກໄມ້ ແລະ ເຄື່ອງປ່າຂອງດົງໃນເຂດປ່າເສື່ອມโซม, ເຂດປ່າຖືກທຳລາຍຢ່າງຮ້າຍແຮງ ແລະ ດິນເປົ່າຫວ່າງໃຫ້ກາຍເປັນປ່າໄມ້ຄືນໃໝ່ເພື່ອປ້ອງກັນສິ່ງແວດລ້ອມ ແລະ ຊີວະນາໆພັນເພື່ອເພີ່ມການເກັບກັກກາກບອນປ່າໄມ້ ແລະ ການບໍລິການລະບົບນິເວດວິທະຍາ.

ນອກຈາກລັດຖະທຳມະນູນ, *ກົດໝາຍທີ່ດິນເລກທີ 04/NA ປີ 2003* ແລະ *ກົດໝາຍປ່າໄມ້ເລກທີ 06/NA ປີ 2007* ແລ້ວ, ຍັງມີນິຕິກຳອື່ນໆທີ່ກ່ຽວຂ້ອງກັບການຄຸ້ມຄອງບໍລິຫານທີ່ດິນເຊັ່ນ*ກົດໝາຍສົ່ງເສີມການລົງທຶນເລກທີ 02/NA 2009, ດຳລັດຂອງນາຍົກລັດຖະ*

---

[10]ປ່າໄມ້ໃນ ສປປ ລາວ ໄດ້ຮັບການຈັດເປັນສາມປະເພດປ່າຄື: (i) ປ່າຜະລິດ; (ii) ປ່າສະຫງວນ, ແລະ (iii) ປ່າປ້ອງກັນ.

[11] DOFI & DOF - Forest Legality Compendium 2015

[12]ການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ແບບມີສ່ວນຮ່ວມ ໃນລະດັບບ້ານ ແລະ ກຸ່ມບ້ານ 2010. JICA, SIDA, GTZ

[13]ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ່ 8

ມົນຕີເລກທີ 192/PM ປີ 2005 ວ່າດ້ວຍການຊົດເຊີຍ ແລະ ການຕັ້ງຖິ່ນຖານໃໝ່, ດຳລັດຂອງນາຍົກລັດຖະມົນຕີເລກທີ່ 88/PM ປີ 2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍທີ່ດິນ, ດຳລັດຂອງນາຍົກລັດຖະມົນຕີເລກທີ 135/PM ປີ 2009 ວ່າດ້ວຍການເຊົ່າ ແລະ ສຳປະທານທີ່ດິນ. ກະຊວງແຜນການ ແລະ ການລົງທຶນ ມີພາລະບົດບາດໜ້າທີ່ໃນການດຳເນີນຂະບວນການສະເໜີການລົງທຶນເພື່ອສຳປະທານທີ່ດິນເພື່ອປູກໄມ້ອຸດສາຫະກຳຕາມນະ�โยบายການລົງທຶນ ແລະ ການສຳປະທານທີ່ດິນ.

ໃນຂະນະທີ່ແຜນປະຕິບັດງານ REDD+ ຂັ້ນແຂວງ ໄດ້ຖືກພັດທະນາເພື່ອໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຂອງແຂວງ ແລະ ແຜນຍຸດທະສາດຂອງຂະແໜງການຕ່າງໆ, ແຜນປະຕິບັດງານ REDD+ ຂັ້ນແຂວງຈະຕ້ອງໄດ້ເຊື່ອມ�โยงກັບແຜນພັດທະນາເສດຖະກິດ-ສັງຄົມແຕ່ປີ 2016-2020 ແລະ 2021-2025 ຂອງ ແຂວງ ແລະ ເມືອງ. ອົງປະກອບຂອງແຜນປະຕິບັດງານ REDD+ ຂັ້ນແຂວງ ແມ່ນຕ້ອງໄດ້ລວມເຂົ້າໃນຂະບວນການວາງແຜນ (ຕົວຢ່າງ: ການວາງແຜນນຳໃຊ້ທີ່ດິນ ແລະ ແຜນຄຸ້ມຄອງປ່າໄມ້ບ້ານ) ແລະ ຕ້ອງໄດ້ເຊື່ອມ�โยง ແຜນປະຕິບັດງານ REDD+ ຂັ້ນແຂວງ ເຂົ້າກັບແຜນການປະຈຳປີ ແລະ ແຜນການ 5 ປີ ຂອງແຂວງ ແລະ ເມືອງ.

5. ແຜນຈັດຕັ້ງປະຕິບັດ

ຕາຕະລາງ 13 ລຸ່ມນີ້ ແມ່ນແຜນຈັດຕັ້ງປະຕິບັດຂອງແຕ່ລະປີ ຊົ່ວໄລຍະຂອງ PRAP (2018-2025), ໃນນັ້ນລວມທັງລາຍລະອຽດຂອງກິດຈະກຳ ແລະ ພາກສ່ວນຮັບຜິດຊອບຈັດຕັ້ງປະຕິບັດ.

ຕາຕະລາງ 13: ແຜນຈັດຕັ້ງປະຕິບັດPRAP

ອົງປະກອບ ແລະ ກິດຈະກຳ		ແຜນຈັດຕັ້ງປະຕິບັດປະຈຳປີ								ພາກສ່ວນຮັບຜິດຊອບ
		ປີ 1	ປີ 2	ປີ 3	ປີ 4	ປີ 5	ປີ 6	ປີ 7	ປີ 8	
ອົງປະກອບ 1: ການຄຸ້ມຄອງທີ່ດິນແບບກົງວົງຈອນ										
ອົງປະກອບຍ່ອຍ 1: ການປັບປຸງການວາງແຜນນຳໃຊ້ທີ່ດິນຂັ້ນແຂວງ ແລະ ເມືອງ *[MOs:1.2]*										
ກິດຈະກຳ 1.1	ສ້າງກົນໄກການປະສານງານກ່ຽວກັບທີ່ດິນ ໂດຍປະກອບມີກຳມະການຈາກຂະແໜງການປ່າໄມ້									ຄຸ້ມຄອງທີ່ດິນ/ພຊສ ຄຸ້ມຄອງທີ່ດິນ/ພກປ
ກິດຈະກຳ 1.2	ສະໜັບສະໜູນດ້ານວິຊາການເພື່ອເຊື່ອມໂຍງ 3 ປະເພດປ່າ ເຂົ້າໃນແຜນຈັດສັນທີ່ດິນຂັ້ນແຂວງ, ແຜນນຳໃຊ້ທີ່ດິນ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ									ຄະນະກຳມະການວາງແຜນນຳໃຊ້ທີ່ດິນ ຄຸ້ມຄອງທີ່ດິນ/ພຊສ
ກິດຈະກຳ 1.3	ຈັດຊື້ຈັດຫາເຄື່ອງມືອຸປະກອນ ເພື່ອສະໜັບສະໜູນການປັບປຸງວຽກງານວາງແຜນນຳໃຊ້ທີ່ດິນ									ຄະນະກຳມະການວາງແຜນນຳໃຊ້ທີ່ດິນ ຄຸ້ມຄອງທີ່ດິນ/ພຊສ
ກິດຈະກຳ 1.4	ຈັດຕັ້ງປະຕິບັດການປັບປຸງວຽກງານວາງແຜນນຳໃຊ້ທີ່ດິນຂັ້ນແຂວງ ແລະ ເມືອງ									ຄະນະກຳມະການວາງແຜນນຳໃຊ້ທີ່ດິນ ຄຸ້ມຄອງທີ່ດິນ/ພຊສ
ອົງປະກອບຍ່ອຍ 2: ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມຢູ່ຂັ້ນບ້ານ *[MOs:1.2]*										
ກິດຈະກຳ 2.1	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP)									ຄຸ້ມຄອງທີ່ດິນ/ພຊສ ພກປ
ກິດຈະກຳ 2.2	ຈັດຕັ້ງປະຕິບັດການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຢູ່ ຂັ້ນບ້ານ									ຄຸ້ມຄອງທີ່ດິນ/ພຊສ ພກປ
ອົງປະກອບຍ່ອຍ 3: ການຂຶ້ນທະບຽນທີ່ດິນກະສິກຳ ແລະ ທີ່ດິນປ່າໄມ້ແລະອອກໃບຕາດິນ *[MOs:1.2]*										
ກິດຈະກຳ 3.1	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບຂັ້ນຕອນການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ									ຄຸ້ມຄອງທີ່ດິນ/ພຊສ
ກິດຈະກຳ 3.2	ຈັດຕັ້ງປະຕິບັດການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ຄຽງຄູ່ກັບການສ້າງຈິດສຳນຶກ ແລະ ເຜີຍແຜ່ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສືບທອດ, ກົດໝາຍວ່າດ້ວຍຄອບຄົວ ແລະ ກົດ									ຄຸ້ມຄອງທີ່ດິນ/ພຊສ

	ໝາຍອື່ນໆທີ່ກ່ຽວຂ້ອງ									
ອົງປະກອບຍ່ອຍ 4: ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາສຳລັບການປູກພືດເສດຖະກິດແລະການປູກໄມ້ *[MOs:1]*										
ກິດຈະກຳ 4.1	ກວດກາລະອຽດການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາໃນປະຈຸບັນ ສຳລັບການປູກພືດເສດຖະກິດ ແລະ ປູກໄມ້ໃນທົ່ວແຂວງ									ພາກ ສິ່ງແວດລ້ອມ, ຄຸ້ມຄອງທີ່ດິນ/ພຊສ
ກິດຈະກຳ 4.2	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບຂັ້ນຕອນການອະນຸມັດ ແລະ ຕິດຕາມກວດກາການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາ									ພາກ ສິ່ງແວດລ້ອມ, ຄຸ້ມຄອງທີ່ດິນ/ພຊສ
ກິດຈະກຳ 4.3	ຄຸ້ມຄອງ ແລະ ຕິດຕາມກວດກາການສຳປະທານທີ່ດິນ ແລະ ການຜະລິດຕາມສັນຍາ ຢູ່ ຈຸດທົດລອງຂອງແຂວງຫຼວງພະບາງ									ພາກ ສິ່ງແວດລ້ອມ, ຄຸ້ມຄອງທີ່ດິນ/ພຊສ
ອົງປະກອບຍ່ອຍ 5: ການນຳໃຊ້ກົດໝາຍແລະການຄຸ້ມຄອງໂຄງການກໍ່ສ້າງພື້ນຖານໂຄງລ່າງ *[MOs:1]*										
ກິດຈະກຳ 5.1	ສ້າງຈິດສຳນຶກໃຫ້ພະນັກງານແຂວງ ແລະ ເມືອງ ກ່ຽວກັບການນຳໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ REDD+									ສິ່ງແວດລ້ອມ, ຄຸ້ມຄອງທີ່ດິນ/ພຊສ
ກິດຈະກຳ 5.2	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມກ່ຽວກັບການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMMP) ໃນຂັ້ນຕອນການວາງແຜນໂຄງການກໍ່ສ້າງພື້ນຖານໂຄງລ່າງ									ສິ່ງແວດລ້ອມ, ຄຸ້ມຄອງທີ່ດິນ/ພຊສ ພາກ
ກິດຈະກຳ 5.3	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບຂັ້ນຕອນການປຶກສາຫາລືແບບມີສ່ວນຮ່ວມ ແລະ ກົນໄກການຮ້ອງທຸກສຳລັບໂຄງການ									ສິ່ງແວດລ້ອມ, ຄຸ້ມຄອງທີ່ດິນ/ພຊສ ພາກ
ກິດຈະກຳ 5.4	ທົດລອງວາງແຜນ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ໃນໂຄງການກໍ່ສ້າງເຂື່ອນໄຟຟ້າທີ່ຄັດເລືອກເພື່ອທົດລອງ									ສິ່ງແວດລ້ອມ, ຄຸ້ມຄອງທີ່ດິນ/ພຊສ ພາກ

ອົງປະກອບ ແລະ ກິດຈະກຳ		ແຜນຈັດຕັ້ງປະຕິບັດປະຈຳປີ						ພາກສ່ວນຮັບຜິດຊອບ		
		ປີ 1	ປີ 2	ປີ 3	ປີ 4	ປີ 5	ປີ 6	ປີ 7	ປີ 8	
ອົງປະກອບ 2: ການຄຸ້ມຄອງປ່າໄມ້										
ອົງປະກອບຍ່ອຍ 1: ການກຳນົດ/ກວດກາຄືນ 3 ປະເພດປ່າໃນລະດັບຊາດ, ແຂວງ ແລະ ເມືອງແບບພູມີທັດ *[MOs:1.2]*										
ກິດຈະກຳ 1.1	ຈັດຕັ້ງຄະນະກຳມະການຄຸ້ມຄອງ 3 ປະເພດປ່າ ໂດຍມາຈາກຂະແໜງການຕ່າງໆທີ່ກ່ຽວຂ້ອງ									ສິ່ງແວດລ້ອມ, ຄຸ້ມຄອງທີ່ດິນ/ພຊສ ພກປ ຫ້ອງວ່າການແຂວງ,ຫ້ອງວ່າການເມືອງ, ພກປ, ຫກປ ເມືອງ
ກິດຈະກຳ 1.2	ປະເມີນລະອຽດເນື້ອທີ່ດິນ, ເນື້ອທີ່ສຳປະທານ, ແຫຼ່ງນ້ຳ, ເຂດເຊື່ອມຕໍ່ຊີວະນາງພັນ ແລະ ການບໍລິການລະບົບນິເວດປ່າໄມ້ ອື່ນໆທີ່ຢູ່ພາຍໃນ ແລະ ອ້ອມຂ້າງ 3 ປະເພດປ່າ									ຄະນະກຳມະການຄຸ້ມຄອງ 3 ປະເພດປ່າ, ພກປ, ຫກປ ເມືອງ
ກິດຈະກຳ 1.3	ສ້າງແຜນທີ່ເນື້ອທີ່/ການນຳໃຊ້ທີ່ດິນໃນ 3 ປະເພດປ່າ ອີງໃສ່ຜົນຂອງການປະເມີນໃນກິດຈະກຳ 1.2									ຄະນະກຳມະການຄຸ້ມຄອງ 3 ປະເພດປ່າ, ພກປ, ຫກປ ເມືອງ
ກິດຈະກຳ 1.4	ກອງປະຊຸມປຶກສາຫາລື ໂດຍການເຂົ້າຮ່ວມຂອງຂະແໜງການກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ ເພື່ອຕົກລົງເປັນເອກະພາບ									ຄະນະກຳມະການຄຸ້ມຄອງ 3 ປະເພດປ່າ, ພກປ, ຫກປ ເມືອງ
ກິດຈະກຳ 1.5	ຈັດຊື້ອຸປະກອນຮັບໃຊ້ຫ້ອງການ, ຊອບແວ ແລະ ເຄື່ອງ GPS ເພື່ອສ້າງລະບົບຄຸ້ມຄອງຂໍ້ມູນຂ່າວສານກ່ຽວກັບປ່າໄມ້ລວມທັງ 3 ປະເພດປ່າ ແລະ ເອກະສານທາງການອື່ນໆ									ຄະນະກຳມະການຄຸ້ມຄອງ 3 ປະເພດປ່າ, ພກປ, ຫກປ ເມືອງ
ກິດຈະກຳ 1.6	ສະໜັບສະໜູນດ້ານວິຊາການ ເພື່ອເກັບຮັກສາ ແລະ ຄຸ້ມຄອງຂໍ້ມູນ									ຄະນະກຳມະການຄຸ້ມຄອງ 3 ປະເພດປ່າ, ພກປ, ຫກປ ເມືອງ
ອົງປະກອບຍ່ອຍ 2: ການຄຸ້ມຄອງປ່າໄມ້ແບບພູມີທັດໃນເຂດປ່າປ້ອງກັນ *[MOs:1,2,3,4]*										
ກິດຈະກຳ 2.1	ທົດລອງຈັດຕັ້ງປະຕິບັດການຄຸ້ມຄອງລະດັບມະຫາພາກໃນເຂດປ່າປ້ອງກັນທີ່ເປັນບູລິມະສິດ									ຄະນະກຳມະການຄຸ້ມຄອງປ່າປ້ອງກັນ, ພກປ, ຫກປ ເມືອງ
ກິດຈະກຳ 2.2	ຈັດຕັ້ງປະຕິບັດ ແລະ ຍົກລະດັບການຄຸ້ມຄອງປ່າໄມ້ລະດັບມະຫາພາກໃນແຕ່ລະເຂດປ່າປ້ອງກັນ ແລະ 3 ປະເພດປ່າທີ່ຢູ່ອ້ອມຂ້າງ									ຄະນະກຳມະການຄຸ້ມຄອງປ່າປ້ອງກັນ, ພກປ, ຫກປ ເມືອງ

ອົງປະກອບຍ່ອຍ 3: ການຄຸ້ມຄອງປ່າໄມ້ບ້ານ *[MOs:1,2,3,4,5]*										
ກິດຈະກຳ 3.1	ສະໜັບສະໜູນດ້ານເຕັກນິກວິຊາການ ສຳລັບກົນໄກສະໜອງທຶນແບບຍາວນານ ເພື່ອຄຸ້ມຄອງປ່າໄມ້ບ້ານ									ພກປ ຫກປ ເມືອງ
ກິດຈະກຳ 3.2	ສະໜັບສະໜູນດ້ານເຕັກນິກວິຊາການ ເພື່ອເພີ່ມທາງເລືອກໃນການດຳລົງຊີວິດ ດ້ວຍກິດຈະກຳທີ່ຕິດພັນກັບປ່າໄມ້ໂດຍປະຊາຊົນເປັນເຈົ້າການ									ພກປ ຫກປ ເມືອງ
ກິດຈະກຳ 3.3	ສະໜັບສະໜູນດ້ານເຕັກນິກວິຊາການ ເພື່ອເພີ່ມມູນຄ່າໃຫ້ຜະລິດຕະພັນປ່າໄມ້ບ້ານ									ພກປ ຫກປ ເມືອງ
ກິດຈະກຳ 3.4	ສະໜັບສະໜູນດ້ານເຕັກນິກວິຊາການ ເພື່ອຮັກສາ ແລະ ປັບປຸງກົນໄກການຈ່າຍຄ່າບໍລິການລະບົບນິເວດ, ຄຸນຄ່າທາງຊີວະນາໆພັນ, ການບໍລິການເຂດຮັກສາແຫຼ່ງນ້ຳ ແລະ ປະລິມານສະສົມຂອງການກອບປ່າໄມ້ ໂດຍຜ່ານກິດຈະກຳທີ່ຕິດພັນກັບປ່າໄມ້ ໂດຍປະຊາຊົນເປັນເຈົ້າການ									ພກປ ຫກປ ເມືອງ
ກິດຈະກຳ 3.5	ຈັດຕັ້ງປະຕິບັດ ແລະ ຍົກລະດັບຕົວແບບການຄຸ້ມຄອງປ່າໄມ້ບ້ານ									ພກປ ຫກປ ເມືອງ
ອົງປະກອບຍ່ອຍ 4: ການປູກໄມ້ແລະການຟື້ນຟູປ່າ *[MOs:3]*										
ກິດຈະກຳ 4.1	ການປະເມີນພື້ນທີ່ໆມີເງື່ອນໄຂບູລະນະຟື້ນຟູໃຫ້ເປັນປ່າໃນເຂດທີ່ດິນປ່າໄມ້ທີ່ເສື່ອມ�โຊມ									ພກປ ຫກປ ເມືອງ
ກິດຈະກຳ 4.2	ການຈັດຕັ້ງປະຕິບັດຟື້ນຟູປ່າທຳມະຊາດໃນເຂດປ່າເສື່ອມโຊມ									ພກປ ຫກປ ເມືອງ
ກິດຈະກຳ 4.3	ສະໜັບສະໜູນທຶນຮອນ ເພື່ອໃຫ້ປະຊາຊົນຈັດຕັ້ງປະຕິບັດປູກໄມ້ຟື້ນຟູປ່າໃນເຂດປ່າເສື່ອມโຊມ									ພກປ ຫກປ ເມືອງ
ອົງປະກອບຍ່ອຍ 5: ການປ້ອງກັນໄຟໄໝ້ລາມປ່າ *[MOs:2]*										
ກິດຈະກຳ 5.1	ສ້າງຈິດສຳນຶກກ່ຽວກັບການປ້ອງກັນໄຟໄໝ້ລາມປ່າ ຢູ່ ຂົ້ນບ້ານ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ

ກິດຈະກຳ 5.2	ສ້າງລະບົບເພື່ອຕິດຕາມກວດກາໄຟໄໝ້ລາມປ່າ ແລະ ທົດລອງລະບົບໃນພື້ນທີ່ຄັດເລືອກເພື່ອທົດລອງ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ
ກິດຈະກຳ 5.3	ການຈັດຕັ້ງປະຕິບັດການຕິດຕາມກວດກາປ່າໄມ້ ເພື່ອປ້ອງກັນໄຟໄໝ້ລາມປ່າ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ
ອົງປະກອບຍ່ອຍ 6: ການຄຸ້ມຄອງສວນປູກໄມ້ສັກ ແລະ ການປັບປຸງຕ່ອງໂສ້ມູນຄ່າ *[MOs:4,5]*										
ກິດຈະກຳ 6.1	ການປະເມີນພື້ນທີ່ປູກໄມ້ສັກ ເພື່ອຍົກລະດັບການຄຸ້ມຄອງສວນປູກແບບຍືນຍົງ ເພື່ອໃຫ້ໄດ້ຮັບການຢັ້ງຢືນ									ພກປ ຫກປ ເມືອງ
ກິດຈະກຳ 6.2	ສະໜັບສະໜູນເຕັກນິກວິຊາການ ເພື່ອເພີ່ມທະວີຄວາມເຂັ້ມ ແຂງໃຫ້ກຸ່ມຊາວກະສິກອນປູກໄມ້ສັກ ແລະ ເຄືອຂ່າຍຂອງເຂົາເຈົ້າ									ພກປ ຫກປ ເມືອງ
ກິດຈະກຳ 6.3	ສະໜັບສະໜູນເຕັກນິກວິຊາການ ເພື່ອຈັດຕັ້ງປະຕິບັດການຄຸ້ມຄອງສວນປູກໄມ້ສັກໃຫ້ຖືກຕ້ອງຕາມຫຼັກວິຊາການ									ພກປ ຫກປ ເມືອງ
ກິດຈະກຳ 6.4	ສະໜັບສະໜູນເຕັກນິກວິຊາການ ເພື່ອຊຸກຍູ້ສິ່ງເສີມການ ແລະ ປັບປຸງໃຫ້ທັນສະໄໝ ໃນການເພີ່ມມູນຄ່າໃຫ້ການປຸງແຕ່ງຜະລິດຕະພັນຈາກໄມ້ສັກ									ພກປ ຫກປ ເມືອງ
ກິດຈະກຳ 6.5	ສະໜັບສະໜູນເຕັກນິກວິຊາການ ເພື່ອຊຸກຍູ້ສິ່ງເສີມວິສາຫະກິດຂະໜາດນ້ອຍ ໃນການເພີ່ມມູນຄ່າໃຫ້ຜະລິດຕະພັນຈາກໄມ້ສັກ									ພກປ ຫກປ ເມືອງ
ກິດຈະກຳ 6.6	ຈັດຊື້ວັດຖຸອຸປະກອນ ເພື່ອຊຸກຍູ້ສິ່ງເສີມການຄຸ້ມຄອງສວນປູກໄມ້ສັກໃຫ້ມີຄວາມຍືນຍົງ ແລະ ປັບປຸງຕ່ອງໂສ້ມູນຄ່າ									ພກປ ຫກປ ເມືອງ
ອົງປະກອບຍ່ອຍ 7: ການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງການຂຸດຄົ້ນໄມ້ທີ່ຜິດກົດໝາຍ *[MOs: 2]*										
ກິດຈະກຳ 7.1	ສ້າງຈິດສຳນຶກ ແລະ ເຜີຍແຜ່ນະໂຍບາຍຕ່າງໆກ່ຽວກັບປ່າໄມ້, ກົດໝາຍ ແລະ ຂໍ້ກຳນົດອື່ນໆ ຢູ່ ຂັ້ນເມືອງ ແລະ ກຸ່ມບ້ານ ໃນເຂດທີ່ເປັນບູລິມະສິດ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ
ກິດຈະກຳ 7.2	ສ້າງລະບົບຕິດຕາມກວດກາການຂຸດຄົ້ນໄມ້ທີ່ຜິດກົດໝາຍ									ກວດກາປ່າໄມ້ແຂວງ
ກິດຈະກຳ 7.3	ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມກ່ຽວກັບການກວດກາໄມ້ ຢູ່ ຈຸດ									ກວດກາປ່າໄມ້ແຂວງ

	ດ່ານກວດກາ, ສະໜາມໄມ້, ໂຮງງານປຸງແຕ່ງ ແລະ ໂຮງງານ/ຮ້ານເຟີນິເຈີ									ພກປ ແລະ ຫກປ ເມືອງ
ກິດຈະກຳ 7.4	ຕິດຕາມ ແລະ ກວດກາລາດຕະເວນບ່ອນຂຸດຄົ້ນໄມ້, ການຂົນສົ່ງໄມ້ ຢູ່ ສະໜາມ 2 ແລະ ເສັ້ນທາງລຳລຽງໄມ້, ທາງບົກ ແລະ ທາງນ້ຳ ແລະ ຈຸດ ທີ່ຫຼໍ່ແຫຼມ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ
ກິດຈະກຳ 7.5	ສະໜັບສະໜູນການກວດກາໂຮງງານປຸງແຕ່ງໄມ້, ໂຮງງານເຟີນິເຈີ, ສາງ ເກັບມ້ຽນໄມ້ ແລະ ເຄື່ອງປ່າຂອງດົງ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ
ກິດຈະກຳ 7.6	ສະໜັບສະໜູນການຕິດຕາມກວດກາເກີນຈຳນວນ (ໂກຕາ) ທີ່ອະນຸມັດ ໃນເຂດອ່າງເກັບນ້ຳຂອງໂຄງການເຂື່ອນໄຟຟ້າ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ
ກິດຈະກຳ 7.7	ຈັດຊື້ອຸປະກອນຮັບໃຊ້ຫ້ອງການ, ເຄື່ອງແທບເລັດ (tablet), GPS ແລະ ເຄື່ອງມືທີ່ຈຳເປັນ ເພື່ອຮັບໃຊ້ວຽກງານການນຳໃຊ້ກົດໝາຍ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ
ກິດຈະກຳ 7.8	ຕິດຕາມກວດກາລາດຕະເວນບ່ອນລັກລອບຕັດໄມ້ໃນເຂດປ່າປ້ອງກັນ									ກວດກາປ່າໄມ້ແຂວງ ພກປ ແລະ ຫກປ ເມືອງ
ອົງປະກອບຍ່ອຍ 8: ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້ *[MOs:1,2,3,4]*										
ກິດຈະກຳ 8.1	ການປະເມີນເງື່ອນໄຂການຈ່າຍຄ່າບໍລິການລະບົບນິເວດປ່າໄມ້ (PFES) ຢູ່ ແຂວງຫຼວງພະບາງ									ພກປ ພຊສ
ກິດຈະກຳ 8.2	ທົດລອງສິ່ງເສີມກິດຈະກຳ ກ່ຽວກັບ PFES ທີ່ຕິດພັນກັບການນຳໃຊ້ທີ່ ດິນປ່າໄມ້ເຊັ່ນ: ບໍລິສັດນ້ຳປາປາ, ເຂື່ອນໄຟຟ້າ, ທ່ອງທ່ຽວທຳມະຊາດ ແລະ ອື່ນໆ									ພກປ ພຊສ

ອົງປະກອບ ແລະ ກິດຈະກຳ	ແຜນຈັດຕັ້ງປະຕິບັດປະຈຳປີ								ພາກສ່ວນຮັບຜິດຊອບ
	ປີ 1	ປີ 2	ປີ 3	ປີ 4	ປີ 5	ປີ 6	ປີ 7	ປີ 8	
ອົງປະກອບ 3: ການຄຸ້ມຄອງທາງສັງຄົມ(ຊີວິດການເປັນຢູ່)									

ອົງປະກອບຍ່ອຍ 1: ການປູກພືດເສດຖະກິດແບບຍືນຍົງຢູ່ເຂດພູດອຍ *[MOs:1,2,5]*										
ກິດຈະກຳ 1.1	ດຳເນີນການຄົ້ນຄ້ວາ ເພື່ອກຳນົດຮູບແບບການປູກພືດເສດຖະກິດແບບຍືນຍົງ ລວມທັງການກະສິກຳ-ປ່າໄມ້ແບບປະສົມປະສານ ແລະ ການຂະຫຍາຍການຜະລິດກະສິກຳ									ປູກຝັງ, ສົ່ງເສີມ, ພັດທະນາທີ່ດິນກະສິກຳ/ພກປ
ກິດຈະກຳ 1.2	ການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານສົ່ງເສີມ ກ່ຽວກັບຕົວແບບການຜະລິດກະສິກຳແບບຍືນຍົງ ແລະ ປັບປຸງຮູບແບບຕ່າງໆ ຂອງການຜະລິດກະສິກຳໃຫ້ດີຂຶ້ນ									ປູກຝັງ, ສົ່ງເສີມ, ພັດທະນາທີ່ດິນກະສິກຳ/ພກປ
ກິດຈະກຳ 1.3	ສະໜອງທຶນຮອນໃຫ້ປະຊາຊົນໂດຍກົງ (ເຄື່ອງມື, ຝຸ່ນ, ແນວພັນ) ເພື່ອທຳການຜະລິດ									ປູກຝັງ, ສົ່ງເສີມ/ພກປ
ກິດຈະກຳ 1.4	ພັດທະນາ ແລະ ສະໜັບສະໜູນສະຫະກອນກະເສດ									ສົ່ງເສີມ/ພກປ
ອົງປະກອບຍ່ອຍ 2: ການລ້ຽງສັດແລະປູກຫຍ້າອາຫານສັດ*[MOs:1,2,5]*										
ກິດຈະກຳ 2.1	ການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານສົ່ງເສີມ ກ່ຽວກັບເຕັກນິກການລ້ຽງສັດ									ລ້ຽງສັດ/ພກປ
ກິດຈະກຳ 2.2	ສະໜອງທຶນຮອນໃຫ້ປະຊາຊົນໂດຍກົງ (ເຄື່ອງມື, ຝຸ່ນ, ແນວພັນ) ເພື່ອປູກຫຍ້າ									ລ້ຽງສັດ/ພກປ
ກິດຈະກຳ 2.3	ສະໜອງທຶນຮອນ ແລະ ແນວພັນສັດໃຫ້ປະຊາຊົນໂດຍກົງ ເພື່ອປັບປຸງການລ້ຽງສັດ									ລ້ຽງສັດ/ພກປ
ກິດຈະກຳ 2.4	ສະໜັບສະໜູນດ້ານເຕັກນິກວິຊາການເພື່ອເຂົ້າຫາແຫຼ່ງສິນເຊື່ອ									ລ້ຽງສັດ/ພກປ
ອົງປະກອບຍ່ອຍ 3: ການພັດທະນາທ່ອງທ່ຽວທຳມະຊາດໂດຍທ້ອງຖິ່ນມີສ່ວນຮ່ວມ *[MOs:1,2,5]*										
ກິດຈະກຳ 3.1	ປະເມີນແຫຼ່ງທ່ອງທ່ຽວທີ່ມີເງື່ອນໄຂ ເພື່ອຊຸກຍູ້ທ່ອງທ່ຽວທຳມະຊາດ									ຫ້ອງການທ່ອງທ່ຽວ, ພກປ, ຫກປ ເມືອງ

ກິດຈະກຳ 3.2	ການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານສົ່ງເສີມ ກ່ຽວກັບວຽກງານທ່ອງທ່ຽວທຳມະຊາດໂດຍທ້ອງຖິ່ນເປັນເຈົ້າການ									ຫ້ອງການທ່ອງທ່ຽວ, ພກປ, ຫກປ ເມືອງ
ກິດຈະກຳ 3.3	ສະໜອງທຶນຮອນໂດຍກົງ (ປ້າຍ, ກິດຈະກຳປັບປຸງຊີວິດການເປັນຢູ່) ເພື່ອຊຸກຍູ້ສົ່ງເສີມການທ່ອງທ່ຽວທຳມະຊາດ									ຫ້ອງການທ່ອງທ່ຽວ, ພກປ, ຫກປ ເມືອງ

6. ການສ້າງແຜນດຳເນີນງານ ແລະ ແຜນການເງິນ

6.1. ການກະກຽມອົງການຈັດຕັ້ງປະຕິບັດ ແລະ ການຈັດຕັ້ງປະຕິບັດ

ຄວາມຮັບຜິດຊອບທັງໝົດໃນການຈັດຕັ້ງປະຕິບັດ PRAP ແມ່ນ ຄະນະຊີ້ນຳ REDD+ ຂັ້ນແຂວງ ມີສິດໜ້າທີ່ໃນການ ຊີ້ນຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ REDD+ ພາຍໃນແຂວງ. ຄະນະດັ່ງກ່າວມາຈາກຫຼາຍພາກສ່ວນກ່ຽວຂ້ອງຂອງແຂວງ ໂດຍມີ ທ່ານຮອງເຈົ້າແຂວງ ຜູ້ຮັບຜິດຊອບຊີ້ນຳວຽກງານເສດຖະກິດຂອງແຂວງເປັນປະທານ. ຄະນະຊີ້ນຳ REDD+ ຂັ້ນແຂວງ ມີໜ້າທີ່ ຊີ້ນຳ ລວມ ໂດຍມີ ຫ້ອງການ REDD+ ປະຈຳແຂວງ ພາຍໃນ ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນເສນາທິການໃນການປະສານງານກັບ ທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງ. ສະນັ້ນ , ຫ້ອງການ REDD+ ປະຈຳແຂວງ ຈຶ່ງມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງ , ຈັດຕັ້ງ ປະຕິບັດ ແລະ ຕິດຕາມກວດກາພາກສ່ວນຕ່າງໆທີ່ຈັດຕັ້ງປະຕິບັດ PRAP ຕາງໜ້າໃຫ້ຄະນະຊີ້ນຳ REDD+ ຂັ້ນແຂວງ.

ການກຳນົດນະໂຍບາຍ ແລະ ມາດຕະການໃນພາກ 5 ແມ່ນກວມເອົາຫຼາຍຂະແໜງການກ່ຽວຂ້ອງໃນຫຼາຍ ລະດັບເຊັ່ນ: ລະດັບຊາດ, ແຂວງ ແລະ ເມືອງ. ເວົ້າລວມແລ້ວ ອົງການຈັດຕັ້ງລັດ ຢູ່ ຂັ້ນສູນກາງ ຈະເປັນຜູ້ຮັບຜິດຊອບໃນການຄົ້ນຄ້ວານະໂຍບາຍ ແລະ ມາດຕະການ , ທົບ ທວນ ແລະ ເຊື່ອມເຂົ້າໃນຂະບວນການວາງແຜນຂອງແຂວງ ແລະ ສ້າງຂີດຄວາມສາມາດໃຫ້ອົງການຈັດຕັ້ງກ່ຽວຂ້ອງ ຢູ່ ຂັ້ນແຂວງ ຊຶ່ງອົງ ການຈັດຕັ້ງເຫຼົ່ານີ້ມີໜ້າທີ່ຜັນຂະຫຍາຍເປັນແຜນການຂອງແຂວງ ໂດຍກວມເອົາຫຼາຍໜ້າວຽກເຊັ່ນ: ການຮ່ວມມືປະສານງານ, ການສະໜັບ ສະໜູນດ້ານວິຊາການ, ການສ້າງຄວາມເຂັ້ມແຂງ ແລະ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການທີ່ກຳນົດ. ອົງການຈັດຕັ້ງຂັ້ນ ເມືອງຈະເປັນຜູ້ປະຕິບັດຕົວຈິງ ແລະ ຕິດຕາມກວດກາພາຍໃຕ້ການຊີ້ນຳຂອງແຂວງ. ເນື່ອງຈາກວ່າຂີດຄວາມສາມາດຂອງພະນັກງານທີ່ສັງ ກັດນຳອົງການຈັດຕັ້ງຕ່າງໆຂອງລັດຍັງມີຂໍ້ຈຳກັດນັບແຕ່ຂັ້ນເມືອງໄປຫາຂັ້ນແຂວງ ຕະຫຼອດຮອດຂໍ້ຈຳກັດດ້ານການເງິນ ຈຶ່ງຈຳເປັນຕ້ອງໄດ້ ຝຶກອົບຮົມ ແນໃສ່ເພື່ອຮັບປະກັນປະສິດທິພາບຂອງການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການຂອງ PRAP. ນອກຈາກການສ້າງ ຄວາມເຂັ້ມແຂງໃນຫຼາຍລະດັບແລ້ວ ການຍາດແຍ່ງການຊ່ວຍເຫຼືອດ້ານງົບປະມານການເງິນ ແລະ ການສະໜັບສະໜູນດ້ານວິຊາການຈາກ ພາຍນອກຍັງມີຄວາມຈຳເປັນ ຊຶ່ງຄາດວ່າຄວນຊຸກຍູ້ໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມ.

ສະເພາະພະແນກກະສິກຳ ແລະ ປ່າໄມ້ແຂວງ ມີໜ້າທີ່ສຳຄັນຕົ້ນຕໍໃນການວາງແຜນ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິ ບັດແຜນພັດທະນາຕ່າງໆຂອງແຂວງ, ເຊື່ອມໂຍງ PRAP ເຂົ້າກັບແຜນດັ່ງກ່າວ ແລະ ສະຫຼຸບລາຍງານຄວາມຄືບໜ້າ ແລະ ຜົນກະທົບຂອງ ການຈັດຕັ້ງປະຕິບັດ ໂດຍການສະໜັບສະໜູນຈາກຫ້ອງການ REDD+ ປະຈຳແຂວງ.

6.1.1. ພາກສ່ວນຮັບຜິດຊອບໃນການຄຸ້ມຄອງບໍລິຫານPRAP

ອົງການຈັດຕັ້ງ	ຫ້ອງການ REDD+ ຂັ້ນແຂວງ ເປັນເສນາໃຫ້ຄະນະຊີ້ນຳ REDD+ ຂັ້ນແຂວງ
ພາລະບົດບາດ ແລະ ໜ້າທີ່ ຮັບຜິດຊອບ	ເປັນຫ້ອງການຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ພາຍໃຕ້ການ ຊີ້ນຳຂອງຄະນະ ຊີ້ນຳ REDD+ ຂັ້ນແຂວງ ມີໜ້າທີ່ຮັບຜິດຊອບໃນການບໍລິຫານຄຸ້ມຄອງ ແລະ ປະສານງານກັບ ທຸກພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກ່ຽວກັບ REDD+ ພາຍໃນແຂວງ.
ການພົວພັນດ້ານການຈັດຕັ້ງ ແລະ ຂໍ້ຜູກພັນ ລະຫວ່າງອົງການຈັດຕັ້ງ ແລະ ແຜນງານ ER ຊຶ່ງຄາດວ່າ ຈະເຊັນສັນຍາຈ່າຍເງິນຄ່າຫຼຸດ ຜ່ອນການປ່ອຍອາຍພິດເຮືອນ ແກ້ວ ກັບກອງທຶນການບອນ FCPF	ພະແນກກະສິກຳ ແລະ ປ່າໄມ້ ແມ່ນອົງການຈັດຕັ້ງຂອງລັດ ຢູ່ ຂັ້ນແຂວງ ຂຶ້ນກັບການ ຊີ້ນຳຂອງ ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບສ້າງເອກະສານ ERPD. ສັນຍາ ERPA ກັບກອງ ທຶນການບອນ FCPF ຈະແມ່ນກະຊວງການເງິນເປັນຜູ້ລົງນາມ.
ຜູ້ຕິດຕໍ່ພົວພັນ	ທ່ານ ຊ້າງ ຊະນະຜົນ
ຕຳແໜ່ງ	ຫົວໜ້າຫ້ອງການ REDD+ ຂັ້ນແຂວງ

ບ່ອນພົວພັນ	ພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ
ໂທລະສັບ	+856-71-254378
E-mail	xang_xanaphon@yahoo.com
ເວັບໄຊ	

6.1.2. ສະຖາບັນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ PRAP

ອົງການຈັດຕັ້ງກ່ຽວຂ້ອງ	**ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບໃນPRAP**
ລະດັບຊາດ	
ກະຊວງກະສິກຳ ແລະ ປ່າໄມ້	ຮັບຜິດຊອບດ້ານນະໂຍບາຍ, ຊີ້ນຳວຽກງານກະສິກຳ ແລະ ປ່າໄມ້.
ກົມປ່າໄມ້	ກົມປ່າໄມ້ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບໃນການກຳນົດນະໂຍບາຍ, ຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນປ່າໄມ້ໃນທົ່ວປະເທດ. ຄົ້ນຄ້ວາ ແລະ ທົບທວນນະໂຍບາຍ ໃຫ້ສອດຄ່ອງກັບເປົ້າໝາຍຂອງ PRAP. ສ້າງຄວາມເຂັ້ມແຂງ ແລະ ສະໜັບສະໜູນດ້ານວິຊາການ ເພື່ອຊ່ວຍ ພະແນກ ກປ ໃນການຈັດຕັ້ງປະຕິບັດ PRAP.
ພະແນກ REDD+, ກົມປ່າໄມ້, ກະຊວງ ກປ	ຮັບຜິດຊອບການຈັດຕັ້ງປະຕິບັດ ແລະ ການປະສານງານວຽກງານ REDD+ ໃນທົ່ວປະເທດ. ຊ່ວຍຊຸກຍູ້ ຫ້ອງການ REDD+ ປະຈຳແຂວງ ໃນການສ້າງຄວາມເຂັ້ມແຂງ, ທົບທວນ ແລະ ປັບປຸງນະ�โยบายທີ່ກ່ຽວຂ້ອງຂອງຫ້ອງການດັ່ງກ່າວໃນລະດັບແຂວງ.
ກົມກວດກາປ່າໄມ້	ຮັບຜິດຊອບກວດກາການບັງຄັບໃຊ້ກົດໝາຍປ່າໄມ້, ກົດໝາຍສັດນ້ຳ-ສັດປ່າ ແລະ ຂໍ້ກຳນົດກົດລະບຽບອື່ນໆທີ່ກ່ຽວຂ້ອງ. ສະໜັບສະໜູນດ້ານວິຊາການ ແລະ ສ້າງຄວາມເຂັ້ມແຂງໃຫ້ພາກສ່ວນກວດກາປ່າໄມ້ແຂວງໃນການບັງຄັບໃຊ້ກົດໝາຍ ເພື່ອຈັດຕັ້ງປະຕິບັດ PRAP.
ພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ, ກົມປ່າໄມ້	ຮັບຜິດຊອບສ້າງນະໂຍບາຍ, ຄູ່ມືແນະນຳ ແລະ ສະໜັບສະໜູນດ້ານວິຊາການ ໃນການຄຸ້ມຄອງ ປ່າໄມ້ຂັ້ນບ້ານ ແລະ ເຄື່ອງປ່າຂອງດົງ. ສ້າງຄວາມເຂັ້ມແຂງໃຫ້ ພະແນກ ກປ ແຂວງ ໃນການ ຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ບ້ານ.
ກົມປູກຝັງ	ຂຶ້ນກັບກະຊວງ ກປ ຮັບຜິດຊອບສ້າງນະໂຍບາຍ, ຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນ ຕ່າງໆດ້ານກະສິກຳໃນທົ່ວປະເທດ. ຄົ້ນຄ້ວາ ແລະ ທົບທວນນະໂຍບາຍໃຫ້ສອດຄ່ອງກັບເປົ້າ ໝາຍຂອງ PRAP. ສ້າງຄວາມເຂັ້ມແຂງ ແລະ ສະໜັບສະໜູນດ້ານວິຊາການ ເພື່ອຊ່ວຍ ພະ ແນກ ກປ ໃນການຈັດຕັ້ງປະຕິບັດ PRAP.
ກົມຄຸ້ມຄອງ ແລະ ພັດທະນາທີ່ ດິນກະສິກຳ	ຂຶ້ນກັບກະຊວງ ກປ ຮັບຜິດຊອບການວາງແຜນ ແລະ ຄຸ້ມຄອງທີ່ດິນກະສິກຳ. ສ້າງຄວາມ ເຂັ້ມແຂງ ແລະ ສະໜັບສະໜູນດ້ານວິຊາການໃຫ້ ພະແນກ ກປ ເພື່ອຈັດຕັ້ງປະຕິບັດແຜນນຳໃຊ້ ທີ່ດິນ ແລະ ຈັດສັນທີ່ດິນອີງຕາມ PRAP.
ກົມພັດທະນາຊົນນະບົດ ແລະ ສະຫະກອນ	ຂຶ້ນກັບກະຊວງ ກປ ຮັບຜິດຊອບວຽກງານສົ່ງເສີມກະສິກຳ ແລະ ການພັດທະນາສະຫະກອນ ກະເສດໃນລະດັບທ້ອງຖິ່ນ ທັງເປັນຜູ້ໃຫ້ບໍລິການດ້ານວິຊາການ ແລະ ສ້າງຄວາມເຂັ້ມແຂງໃຫ້ ພະແນກ ກປ ເພື່ອຈັດຕັ້ງປະຕິບັດ PRAP.
ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ	ເປັນສະຖາບັນແຫ່ງຊາດ ຮັບຜິດຊອບຄົ້ນຄ້ວາດ້ານນະໂຍບາຍ, ເຕັກນິກວິຊາການ ແລະ ການ ຕະຫຼາດ ສຳລັບຂະແໜງກະສິກຳ ແລະ ປ່າໄມ້. ສະໜັບສະໜູນການທົບທວນ ແລະ ຄົ້ນຄ້ວາຕົວ ແບບດ້ານກະສິກຳ ເພື່ອຈັດຕັ້ງປະຕິບັດຕາມທິດທາງຂອງ PRAP.
ກົມຄຸ້ມຄອງທີ່ດິນ, ກະຊວງຊັບ ພະຍາກອນທຳມະຊາດ ແລະ ສິ່ງ	ຮັບຜິດຊອບການວາງແຜນນຳໃຊ້ທີ່ດິນ, ສະໜັບສະໜູນດ້ານວິຊາການ ໃຫ້ຂະແໜງຄຸ້ມຄອງທີ່ ດິນຂອງ ພະແນກ ຊສ ໃນການຈັດຕັ້ງປະຕິບັດ PRAP.

ແວດລ້ອມ	
ກົມຄຸ້ມຄອງສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ	ຮັບຜິດຊອບແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMMP) ຂອງບັນດາໂຄງການພັດທະນາພື້ນຖານໂຄງລ່າງ. ສະໜັບສະໜູນດ້ານວິຊາການ ໃຫ້ຂະແໜງຄຸ້ມຄອງສິ່ງແວດລ້ອມ ຂອງ ພະແນກ ຊສ ໃນການຈັດຕັ້ງປະຕິບັດ ESMMP ພາຍໃຕ້ການຂອງ PRAP.
ກະຊວງການເງິນ	ຮັບຜິດຊອບຄຸ້ມຄອງ ແລະ ຈັດສັນງົບປະມານຈາກແຫຼ່ງທຶນທັງພາຍໃນ ແລະ ພາຍນອກ. ຊ່ວຍໃນການອອກແບບ, ສ້າງ ແລະ ຈັດຕັ້ງປະຕິບັດແຜນງົບປະມານ ໃນການລົງທຶນດ້ານກະສິກຳ ແລະ ປ່າໄມ້.
ລະດັບແຂວງ	
ຄະນະຊີ້ນຳ REDD+ ຂັ້ນແຂວງ	ມາຈາກຫຼາຍຂະແໜງການ ຮັບຜິດຊອບກິດຈະກຳກ່ຽວກັບ REDD+ ພາຍໃນແຂວງ ລວມທັງຮັບຜິດຊອບລວມການຈັດຕັ້ງປະຕິບັດ PRAP.
ຫ້ອງການ REDD+ ປະຈຳແຂວງ	ເປັນເສນາທິການໃຫ້ຄະນະຊີ້ນຳ REDD+ ຂັ້ນແຂວງ ໃນການປະຕິບັດໜ້າທີ່ປະຈຳໃນແຕ່ລະວັນໃນການຄຸ້ມຄອງ ແລະ ປະສານງານກັບທຸກພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ PRAP.
ຫ້ອງວ່າການແຂວງ	ຮັບຜິດຊອບກຳນົດເປົ້າໝາຍ ແລະ ຍຸດທະສາດການພັດທະນາຂອງແຂວງ. ແນະນຳຂັ້ນຕອນຂອງ PRAP ເພື່ອໃຫ້ພາກສ່ວນກ່ຽວຂ້ອງຂັ້ນແຂວງຈັດຕັ້ງປະຕິບັດໃຫ້ບັນລຸເປົ້າໝາຍ.
ພະແນກ ກປ ແຂວງ	ຂຶ້ນກັບ ກະຊວງ ກປ, ບົດບາດ ແລະ ໜ້າທີ່ຮັບຜິດຊອບຄ້າຍຄືກະຊວງ ແຕ່ຢູ່ໃນລະດັບແຂວງ ຕົ້ນຕໍແມ່ນປະສານງານການຈັດຕັ້ງປະຕິບັດກິດຈະກຳຂອງ PRAP.
ຂະແໜງປູກຝັງ, ພະແນກ ກປ	ຂຶ້ນກັບ ກົມປູກຝັງ, ສະໜັບສະໜູນດ້ານວິຊາການ, ປະສານງານ ແລະ ສ້າງຄວາມເຂັ້ມແຂງໃຫ້ຫ້ອງການ ກປ ເມືອງ ເພື່ອຄຸ້ມຄອງການຈັດຕັ້ງປະຕິບັດ PAMs.
ຂະແໜງຄຸ້ມຄອງທີ່ດິນກະສິກຳ, ພະແນກ ກປ	ຂຶ້ນກັບ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ສະໜັບສະໜູນດ້ານວິຊາການ, ປະສານງານ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານໃນການວາງແຜນນຳໃຊ້ທີ່ດິນ ພາຍໃຕ້ການຂອງ PRAP.
ຂະແໜງປ່າໄມ້, ພະແນກ ກປ	ຂຶ້ນກັບ ກົມປ່າໄມ້, ຮັບຜິດຊອບຄຸ້ມຄອງ ແລະ ປົກປັກຮັກສາ 3 ປະເພດປ່າ ຢູ່ ຂັ້ນແຂວງ. ປະຕິບັດໜ້າທີ່ໃນການຄຸ້ມຄອງ PAMs ກ່ຽວກັບປ່າໄມ້.
ຂະແໜງສົ່ງເສີມກະສິກຳ ແລະ ປ່າໄມ້, ພະແນກ ກປ	ຂຶ້ນກັບພະແນກ ກປ, ຮັບຜິດຊອບສົ່ງເສີມວຽກງານກະສິກຳ ແລະ ປ່າໄມ້. ຊຸກຍູ້ຫ້ອງການ ກປ ເມືອງ ແລະ ຊຸມຊົນທ້ອງຖິ່ນ ໃນການສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມ ໃນການຮັບເອົາຮູບແບບການຜະລິດກະສິກຳ-ປ່າໄມ້ແບບໃໝ່.
ຂະແໜງແຜນການ, ພະແນກ ກປ	ຮັບຜິດຊອບການວາງແຜນ ແລະ ຕິດຕາມກວດກາກິດຈະກຳຂອງ ພະແນກ ກປ ແນໃສ່ເພື່ອປະກັນໃຫ້ບັນລຸຕາມແຜນຂອງ PRAP. ຕິດຕາມກວດກາ ແລະ ປະເມີນຜົນ PRAP.
ຂະແໜງລ້ຽງສັດ ແລະ ການປະມົງ, ພະແນກ ກປ	ຮັບຜິດຊອບສ້າງຄວາມເຂັ້ມແຂງ ແລະ ສະໜັບສະໜູນດ້ານວິຊາການໃນການພັດທະນາຮູບແບບການລ້ຽງສັດພາຍໃນແຂວງຕາມກອບຂອງ PRAP.
ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ, ພຊສ	ຂຶ້ນກັບກົມຄຸ້ມຄອງທີ່ດິນ, ຮັບຜິດຊອບຈັດຕັ້ງປະຕິບັດອົງປະກອບ 1: ການຄຸ້ມຄອງທີ່ດິນແບບປະສົມປະສານ ພາຍໃຕ້ການຂອງ PRAP.
ຂະແໜງຄຸ້ມຄອງສິ່ງແວດລ້ອມ, ພຊສ	ຂຶ້ນກັບກົມຄຸ້ມຄອງທີ່ດິນ, ຮັບຜິດຊອບຈັດຕັ້ງປະຕິບັດ ESMMPພາຍໃຕ້ການຂອງ PRAP.
ພະແນກການເງິນ	ຂຶ້ນກັບກະຊວງການເງິນ, ຮັບຜິດຊອບຄຸ້ມຄອງ ແລະ ຈັດສັນງົບປະມານຈາກພາຍໃນ ແລະ ພາຍນອກ. ຊ່ວຍໃນການອອກແບບ, ສ້າງ ແລະ ຈັດຕັ້ງປະຕິບັດແຜນງົບປະມານ ສຳລັບການລົງທຶນ

	ດ້ານກະສິກຳ ແລະ ປ່າໄມ້ຂອງ PRAP.
ພາກເອກະຊົນ	ບໍ່ທັນກຳນົດເທື່ອ ແຕ່ອີງໃສ່ແຜນການຂອງແຂວງ ແລະ ລະບຽບຫຼັກການດ້ານການເງິນຂອງ PAM ພາກເອກະຊົນຈະມີບົດບາດສະໜັບສະໜູນດ້ານການເງິນໃຫ້ PAM ແລະ ພັດທະນາຕົວແບບສຳລັບການລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້.
ລະດັບເມືອງ	
ຫ້ອງການ ກປ ເມືອງ	ຂຶ້ນກັບ ພະແນກ ກປ ແລະ ກະຊວງ ກປ, ຮັບຜິດຊອບການຈັດຕັ້ງປະຕິບັດກິດຈະກຳຕົວຈິງ ເປັນຕົ້ນແມ່ນ ການຄຸ້ມຄອງ PAM ຢູ່ ຂັ້ນເມືອງ ທັງເປັນໃຈກາງໃນການປະສານງານກັບ ທ້ອງຖິ່ນ.
ຫ້ອງການ ຊສ	ຂຶ້ນກັບ ພຊສ ແລະ ກຊສ, ຮັບຜິດຊອບການຈັດຕັ້ງປະຕິບັດຕົວຈິງກ່ຽວກັບການຄຸ້ມຄອງທີ່ດິນ ແບບປະສົມປະສານ ຢູ່ ຂັ້ນເມືອງ ທັງເປັນໃຈກາງໃນການປະສານງານກັບທ້ອງຖິ່ນ.
ລະດັບກຸ່ມບ້ານ	
ກຸ່ມບ້ານ	ຮັບຜິດຊອບຈັດຕັ້ງປະຕິບັດຕົວຈິງການຄຸ້ມຄອງປ່າໄມ້, ສິ່ງແວດລ້ອມ ແລະ ສັງຄົມ ຢູ່ ຂັ້ນບ້ານ ທັງເປັນໃຈກາງໃນການປະສານງານກັບຊຸມຊົນທ້ອງຖິ່ນ.

6.2. ງົບປະມານສຳລັບການຈັດຕັ້ງປະຕິບັດ PRAP

ງົບປະມານທັງໝົດຂອງ PRAP ໄລຍະ 8 ປີ (2018-2025) ແມ່ນ $20.14 ລ້ານ ເທົ່າກັບ 161.09 ຕື້ກີບ (ຕາຕະລາງ 14). ໃນນີ້ $3.73ລ້ານ ແມ່ນສຳລັບການຄຸ້ມຄອງທີ່ດິນແບບຄົບວົງຈອນ (ອົງປະກອບ 1) , $11.16ລ້ານ ສຳລັບການຄຸ້ມຄອງປ່າໄມ້ (ອົງປະກອບ 2) ແລະ $5.25 ລ້ານ ສຳລັບການຄຸ້ມຄອງທາງສັງຄົມ-ຊີວິດການເປັນຢູ່ (ອົງປະກອບ 3).

ຕາຕະລາງ 14: ງົບປະມານທັງໝົດຂອງPRAP

PRAP	ງົບປະມານ (USD)		
ອົງປະກອບ	2018 - 2020	2021 - 2025	ລວມ
ອົງປະກອບ 1: ການຄຸ້ມຄອງທີ່ດິນແບບຄົບວົງຈອນ	$1,852,500	$1,874,500	$3,727,000
ອົງປະກອບ2: ການຄຸ້ມຄອງປ່າໄມ້	$5,233,499	$5,925,751	$11,159,250
ອົງປະກອບ 3: ການຄຸ້ມຄອງທາງສັງຄົມ (ຊີວິດການເປັນຢູ່)	$1,777,706	$3,471,669	$5,249,375
ລວມ	$8,863,705	$11,271,920	$20,135,625

6.3. ແຫຼ່ງທຶນ

ໃນຂະນະທີ່ PRAP ຈະປະກອບສ່ວນເຂົ້າໃນແຜນງານ ER, ແຫຼ່ງທຶນແມ່ນມີຄວາມຕ້ອງການ ເພື່ອປະກອບສ່ວນໃນການຈັດຕັ້ງປະຕິບັດ PRAP ເພື່ອຮັບປະກັນໃຫ້ການຊຳລະອີງຕາມຜົນງານ ຊຶ່ງມີຄວາມສຳຄັນທີສຸດໃນໄລຍະເລີ່ມຈັດຕັ້ງປະຕິບັດ PRAP ກ້າວໄປສູ່ການໄດ້ຮັບການຊຳລະອີງຕາມຜົນງານ. ແຫຼ່ງທຶນທີ່ມີຈຳກັດຂອງແຂວງ ເປັນອຸປະສັກອັນໃຫຍ່ຫຼວງສຳລັບການຈັດຕັ້ງປະຕິບັດ PRAP ຈຶ່ງຈຳເປັນ ການສະໜັບສະໜູນທຶນຈາກພາຍນອກ ເພື່ອຈັດຕັ້ງປະຕິບັດ PRAP.

ຕາຕະລາງ 2: ໂຄງການ ແລະ ແຫຼ່ງທຶນ ເພື່ອຈັດຕັ້ງປະຕິບັດPRAP

ແຫຼ່ງທຶນ/ໂຄງການ	ມາຈາກ	ຄາດຄະເນ ງົບປະມານ	ອົງປະກອບ
ກອງທຶນພັດທະນາຊັບພະຍາກອນປ່າໄມ້	ກົມປ່າໄມ້/ກປ		1,2
ກອງທຶນປົກປັກຮັກສາສິ່ງແວດລ້ອມ	ກຊສ		1,2,3
ໂຄງການ F-REDD	JICA	$ 100, 000	1, 2
ໂຄງການ LENS2 ສ້າງຄວາມເຂັ້ມແຂງ	EPF/ກຊສ ທະນາຄານໂລກ	$ 150, 000	1
